# ຄູ່ມືຄູ

# ວັນນະຄະດີ

## ຊັ້ນມັດທະຍົມສຶກສາ ປີທີ 1



ກະຊວງສຶກສາທິການ

ສະຖາບັນຄົ້ນຄວ້າ ວິທະຍາສາດ ການສຶກສາ

ຫ້າມຂາຍ

2010

ຄູ່ມືຄູ

# ວັນນະຄະດີ

## ຊັ້ນມັດທະຍົມສຶກສາປີທີ 1


ຮຽບຮຽງໂດຍ: ຄຳຜຸຍ ພົນລືຊາ
ພວງແສງ ແກ້ວຄູນບໍລິສັກ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ຮສ. ຄຳສອນ ທອງມີໄຊ
ແຫວນເພັດ ສີສຸລາດ

ອອກແບບ ແລະ ເຂົ້າໜ້າໂດຍ: ບຸນຊູ ຈັນທະວົງ



ກະຊວງສຶກສາທິການ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2010



ຫ້ອງສະໝຸດ ຮັກອ່ານ 21

# ສາລະບານ


ໜ້າ

ແນະນຳການສອນລວມ 1

ພາກທີ I. ວັນນະຄະດີພື້ນເມືອງລາວ

ບົດທີ 1 ວັນນະຄະດີພື້ນເມືອງລາວໂດຍສັງເຂບ 13

ບົດທີ 2 ຄຳຫວາຍ 20

ບົດທີ 3 ຄຳສຸພາສິດ 36

ບົດທີ 4 ນິທານອັດສະຈັນ 62

ບົດທີ 5 ນິທານຊອບຫົວ 81

ບົດທີ 6 ນິທານສັດ 100

ພາກທີ II. ວັນນະຄະດີຕ່າງປະເທດ

ບົດທີ 7 ວັນນະຄະດີໄທ 118

ບົດທີ 8 ວັນນະຄະດີກຳປູເຈຍ 124

ບົດທີ 9 ວັນນະຄະດີມຽນມາ 131

# ແນະນຳການສອນລວມ

ວິຊາວັນນະຄະດີເປັນວິຊາໜຶ່ງທີ່ມີທີ່ຕັ້ງສຳຄັນໃນໂຄງການຫຼັກສູດການຮຽນ-ການສອນສຳລັບຊັ້ນມັດທະຍົມປີທີໜຶ່ງ. ການຮຽນວັນນະຄະດີໃນຊັ້ນມັດທະຍົມປີທີໜຶ່ງຕົ້ນຕໍແມ່ນຮຽນກ່ຽວກັບວັນນະຄະດີພື້ນເມືອງລາວ. ການຮຽນວັນນະຄະດີພື້ນເມືອງແມ່ນການຮຽນປະເພດວັນນະຄະດີທີ່ກຳເນີດເກີດຂຶ້ນກ່ອນໝູ່, ເກີດຂຶ້ນແຕ່ສະໄໝບູຮານ ແລະ ຂະຫຍາຍຕົວຜ່ານຫຼາຍລະບອບສັງຄົມຈົນເຖິງປັດຈຸບັນນີ້. ສະນັ້ນ, ວັນນະຄະດີພື້ນເມືອງຈຶ່ງເປັນປະເພດວັນນະຄະດີທີ່ໄດ້ສັງລວມປັນຍາຄວາມຮູ້ໃນການອອກແຮງງານ, ການຕໍ່ສູ້ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ.

ວັນນະຄະດີພື້ນເມືອງໃຊ້ພາສາຄຳເວົ້າເປັນພາຫະນະຕົ້ນຕໍ ໃນການພັນລະນາທາດແທ້ອັນດີເດັ່ນຂອງສັງຄົມເພື່ອສົ່ງຕໍ່ຄວາມຮູ້ສຶກນຶກຄິດຂອງຄົນກ່ຽວກັບສັງຄົມ ແລະ ເສດຖະກິດ, ຜ່ານຫຼາຍຍຸກສະໄໝ. ດັ່ງນັ້ນ, ວັນນະຄະດີຈຶ່ງກາຍເປັນສູນລວມຄວາມຮູ້ສຶກນຶກຄິດຂອງມະນຸດ, ສະແດງໃຫ້ເຫັນເຖິງການພັດທະນາດ້ານອາລົມຈິດຂອງນັກປະພັນຍຸກສະໄໝຕ່າງໆ. ສິ່ງສຳຄັນຢ່າງໜຶ່ງ, ວັນນະຄະດີຍັງແມ່ນສິລະປະຂອງການໃຊ້ພາສາ, ພາສາຂອງວັນນະຄະດີແມ່ນພາສາທີ່ໄດ້ຮັບການພັດທະນາໃນລະດັບທີ່ດີ. ດັ່ງນັ້ນ, ການຮຽນວັນນະຄະດີພື້ນເມືອງຈະຊ່ວຍຊຸກຍູ້ຄວາມຮູ້ຄວາມສາມາດໃນການໃຊ້ພາສາແກ່ພວກເຮົາ. ນອກຈາກນັ້ນຍັງມີວັນນະຄະດີຕ່າງປະເທດທີ່ພວກເຮົາໄດ້ກຳນົດໄວ້ໃນປຶ້ມແບບຮຽນຫົວນີ້ເຊິ່ງໄດ້ແກ່ວັນນະຄະດີໄທ, ກຳປູເຈຍ, ມຽນມາກໍລ້ວນແຕ່ມີຄວາມສຳຄັນເພາະມັນຊ່ວຍໃຫ້ນັກຮຽນເຫັນໄດ້ຄວາມເປັນມາ, ການກຳເນີດ ການຂະຫຍາຍຕົວຂອງວັນນະຄະດີປະເທດອ້ອມຂ້າງພວກເຮົາ.

## I. ຈຸດປະສົງ

ການສິດສອນ ແລະ ຮ່ຳຮຽນວິຊາວັນນະຄະດີໃນຊັ້ນມັດທະຍົມປີທີໜຶ່ງມີຈຸດປະສົງຢາກໃຫ້ນັກຮຽນຮຽນຮູ້ກ່ຽວກັບປະເພດ, ຄວາມໝາຍ, ການກຳເນີດ, ເນື້ອໃນ ແລະ ສິລະປະຂອງວັນນະຄະດີພື້ນເມືອງໂດຍຜ່ານຄຳຫວາຍ, ຄຳສຸພາສິດ ແລະ ນິດເລື່ອງຕ່າງໆ. ໃນວັນນະຄະດີພື້ນເມືອງລາວ ແລະ ວັນນະຄະດີຕ່າງປະເທດ. ນອກຈາກນີ້ຍັງນຳເອົາບົດຮຽນຄວາມຮູ້ທີ່ໄດ້ຈາກການຮຽນວັນນະຄະດີພື້ນເມືອງມານຳໃຊ້ເຂົ້າໃນການດຳລົງຊີວິດເພື່ອການພັດທະນາຄົນ ແລະ ການພັດທະນາຊາດ ໃຫ້ມີຄວາມຈະເລີນກ້າວໜ້າສືບໄປ.

## ຈຸດປະສົງການຮຽນ-ການສອນວິຊາວັນນະຄະດີຊັ້ນມັດທະຍົມປີທີໜຶ່ງ.

### 1) ດ້ານຄວາມຮູ້:

- ສ້າງໃຫ້ນັກຮຽນມີຄວາມຮູ້ກ່ຽວກັບຄວາມໝາຍ, ການກຳເນີດຂະຫຍາຍຕົວ, ເນື້ອໃນ ແລະ ສິລະປະການແຕ່ງຂອງວັນນະຄະດີພື້ນເມືອງປະເພດຕ່າງໆເຊັ່ນ: ຄຳຫວາຍ, ຄຳສຸພາສິດ, ນິທານອັດສະຈັນ, ນິທານຊວນຫົວ ແລະ ນິທານສັດ. ນອກຈາກນີ້ຍັງໃຫ້ນັກຮຽນຮຽນຮູ້ວັນນະຄະດີຕ່າງປະເທດຈຳນວນໜຶ່ງເຊັ່ນ: ວັນນະຄະດີໄທ, ກຳປູເຈຍ ແລະ ມຽນມາ.

- ການຮຽນວິຊາວັນນະຄະດີຊັ້ນມັດທະຍົມປີທີໜຶ່ງນີ້ຊ່ວຍໃຫ້ນັກຮຽນຮຽນຮູ້ ແລະ ສຳຜັດກັບຄຳສຸພາສິດ, ຄຳຫວາຍ ແລະ ບົດເລື່ອງພື້ນເມືອງຕ່າງໆ; ພ້ອມທັງເຮັດບົດວິພາກ ເພື່ອໃຫ້ນັກຮຽນເຫັນໄດ້ຄຸນຄ່າທາງດ້ານເນື້ອໃນ, ສິລະປະຂອງວັນນະຄະດີພື້ນເມືອງຕ່າງໆ.

- ນອກຈາກນີ້ການຮຽນວັນນະຄະດີໃນຊັ້ນນີ້ຍັງສົ່ງເສີມໃຫ້ນັກຮຽນຮຽນຮູ້ຫຼາຍຢ່າງເຊັ່ນ: ຮູ້ຈັກໃຊ້ເວລາວ່າງໃຫ້ເປັນປະໂຫຍດດ້ວຍການອ່ານບົດເລື່ອງ, ການກອບຕ່າງໆທີ່ຄູກຳນົດໃຫ້, ນັກຮຽນອ່ານເພີ່ມນອກຫ້ອງຮຽນ ຫຼື ປຶ້ມປະເພດຕ່າງໆທີ່ນັກຮຽນມີຄວາມສົນໃຈ. ຮູ້ຈັກເຮັດວຽກເປັນໝູ່ຄະນະ, ມີວິໄນໃນຕົນເອງເຄົາລົບກົດໝາຍສັງຄົມ, ຮັບຜິດຊອບຕໍ່ຕົນເອງ ແລະ ສ່ວນລວມ, ມີຄວາມເສຍສະຫຼະຕໍ່ສ່ວນລວມ ເພື່ອເຮັດວຽກຮ່ວມກັບຄົນອື່ນໆ, ຮູ້ຈັກແກ້ໄຂບັນຫາດ້ວຍສັນຕິວິທີຢ່າງມີຫຼັກການ ແລະ ເຫດຜົນ, ສາມາດນຳເອົາຄວາມຮູ້ ແລະ ທັກສະມາເປັນພື້ນຖານເພື່ອປັບປຸງການດຳລົງຊີວິດທັງສ່ວນຕົວ ແລະ ຄອບຄົວໂດຍຮຽນຮູ້ຈາກການອ່ານປຶ້ມ ແລະ ການພິຈະລະນາທັດສະນະຂອງຜູ້ແຕ່ງກໍຄືພຶດຕິກຳຂອງຕົວລະຄອນ.

### 2) ດ້ານທັກສະ.

ນັກຮຽນໄດ້ຟັງເລື່ອງທັງຄຳລິລິດ ແລະ ຄຳກອນ, ຝຶກຟັງຈື່ຈຳເນື້ອໃນຄວາມສຳຄັນຂອງບົດວັນນະຄະດີພື້ນເມືອງຕ່າງໆ, ຟັງການວິພາກ ແລະ ມີວິຈາລະນະຍານກ່ຽວກັບຕົວລະຄອນ ແລະ ການເຄື່ອນໄຫວຂອງຕົວລະຄອນເປັນຕົ້ນ.

ນັກຮຽນສາມາດຝຶກການສົນທະນາ ແລະ ຕອບຄຳຖາມໃນບົດວັນນະຄະດີທີ່ນັກຮຽນຄົ້ນຄວ້າດ້ວຍຕົນເອງ. ນັກຮຽນຈະຝຶກການເລົ່ານິທານ, ການສະແດງລະຄອນດ້ວຍພາສາຄຳເວົ້າທີ່ຊັດເຈນ, ແຈ່ມແຈ້ງ ສາມາດສື່ສານໃຫ້ຄົນຟັງເຂົ້າໃຈຄວາມໝາຍຖືກຕ້ອງ.

ນັກຮຽນຝຶກອ່ານວັນນະຄະດີທັງອ່ານອອກສຽງທີ່ເປັນຄຳລິລິດ ແລະ ຄຳກອນລວມທັງຝຶກອ່ານໃນໃຈ, ການຝຶກທັກສະການອ່ານ ຝຶກອ່ານເລື່ອງໃນປຶ້ມແບບຮຽນໃນຊັ້ນຮຽນ ແລະ ຝຶກອ່ານປຶ້ມທີ່ຄູກຳນົດໃຫ້ອ່ານນອກເວລາ.

ນັກຮຽນໄດ້ຝຶກຂຽນຕອບຄຳຖາມ ສະແດງຄວາມຄິດເຫັນໃນການຂຽນຄຳຫວາຍ, ຄຳສຸພາສິດ, ຂຽນລາຍງານການສຶກສາຄົ້ນຄວ້າຕາມເນື້ອໃນຂອງບົດຮຽນ, ຄູຈະຈັດເປັນ ກິດຈະກຳການຮຽນການສອນທີ່ຕໍ່ເນື່ອງຈາກການອ່ານບົດວັນນະຄະດີພື້ນເມືອງຕ່າງໆ ເຊັ່ນ: ການຂຽນສະຫຼຸບເຫດການໃນເລື່ອງ, ຂຽນສະຫຼຸບຫຍໍ້ເລື່ອງ ແລະ ຂຽນສະຫຼຸບຄວາມ ໝາຍຂອງຄຳສຸພາສິດ, ຄຳຫວາຍ ແລະ ຂຽນຄະຕິຕ່າງໆທີ່ຖອດມາຈາກຄຳສຸພາສິດ ແລະ ເລື່ອງຕ່າງໆ.

**3) ດ້ານທັດສະນະຄະຕິ.**

ນັກຮຽນຄວນມີທັດສະນະທີ່ດີຕໍ່ວັນນະຄະດີພື້ນເມືອງເຊິ່ງຄູຈະເສີມສ້າງທັດສະນະ ຄະຕິທີ່ດີແກ່ນັກຮຽນໄດ້ໂດຍສອນໃຫ້ນັກຮຽນສົນໃຈ, ມີຄວາມຊື່ນຊົມ ແລະ ເຫັນປະໂຫຍດ ຫຼື ຄວາມສຳຄັນຂອງວັນນະຄະດີພື້ນເມືອງ ດ້ວຍການໃຊ້ອຸປະກອນການສອນ, ກິດຈະກຳ ຕ່າງໆໃຫ້ເໝາະສົມກັບໄວຂອງນັກຮຽນ ຈັດເນື້ອໃນວັນນະຄະດີພື້ນເມືອງໃຫ້ເໝາະສົມ ກັບຊັ້ນຮຽນ ຫຼື ອາດຈະຈັດກິດຈະກຳເສີມຫຼັກສູດອື່ນໆທີ່ສົ່ງເສີມ ຫຼື ສະໜອງຄວາມຮູ້, ຄວາມຖະໜັດ ເພື່ອສະໜອງໃຫ້ນັກຮຽນນຳໃຊ້ເຂົ້າໃນການເຮັດວຽກງານ ແລະ ການດຳລົງ ຊີວິດໃນປັດຈຸບັນ.

ຢາກສ້າງທັດສະນະຄະຕິທີ່ດີແກ່ນັກຮຽນຄູຄວນສ້າງບັນຍາກາດ ຫຼື ສະພາບການ ຮຽນ-ການສອນວັນນະຄະດີທີ່ສົ່ງເສີມໃຫ້ນັກຮຽນມີຜົດຕິກຳການຮຽນຮູ້ສິ່ງຕ່າງໆໃຫ້ແທດ ເໝາະກັບສະພາບແວດລ້ອມທາງສັງຄົມໃນປັດຈຸບັນ.

ເນື້ອໃນຂອງວັນນະຄະດີມີຄຸນຄ່າໃນຖານະທີ່ເປັນຫຼັກຊ່ວຍເຝິກຝົນທັກສະພາສາ, ລວມທັງເປັນບົດຮຽນທີ່ໃຫ້ຄວາມຮູ້ ແລະ ສ້າງທັດສະນະຄະຕິທີ່ດີຕໍ່ນັກຮຽນ. ຖ້າຫາກນັກ ຮຽນສາມາດພັດທະນາການຮຽນຮູ້ທັງ 3 ດ້ານ ດ້ວຍການເຝິກຫັດຢ່າງສະໝ່ຳສະເໝີກໍຈະ ກາຍເປັນນິດໄສທີ່ດີ ເໝາະກັບຄວາມປະສົງເຊິ່ງຈະສົ່ງເສີມໃຫ້ນັກຮຽນມີບຸກຄະລິກທີ່ດີ, ນິດ ໄສທີ່ດີ.

ນອກຈາກນີ້ການຮຽນວັນນະຄະດີຍັງຊ່ວຍໃຫ້ນັກຮຽນມີນ້ຳໃຈຮັກຊາດ, ຮັກວັດທະນະ ທຳສິລະປະວັນນະຄະດີຂອງຊາດ. ດັ່ງນັ້ນ, ການສອນວັນນະຄະດີ ຄູຈຶ່ງຕ້ອງກຳນົດເປົ້າໝາຍ ວ່າ ຈະສອນເພື່ອໃຫ້ນັກຮຽນມີການຮຽນຮູ້ທັງສາມດ້ານຄື: ທັກສະ, ຄວາມຮູ້ ແລະ ທັດສະ ນະຄະຕິ. ພ້ອມກັນນັ້ນຄູສ້າງໃຫ້ນັກຮຽນມີໂອກາດພັດທະນາບຸກຄະລິກ ລັກສະນະທີ່ດີຂອງ ຕົນ. ເປົ້າໝາຍຂອງການຮຽນຮູ້ວັນນະຄະດີຂອງນັກຮຽນດັ່ງກ່າວມານີ້ຈະຊ່ວຍໃຫ້ຄູສອນ ວັນນະຄະດີໄດ້ຜົນດີ.

## II. ເນື້ອໃນການຮຽນ-ການສອນວັນນະຄະດີຊັ້ນມັດທະຍົມປີທີໜຶ່ງ.

ການຮຽນວິຊາວັນນະຄະດີໃນຊັ້ນນີ້ຈະໄດ້ຮຽນສອງພາກ ພາກທີໜຶ່ງແມ່ນວັນນະຄະດີພື້ນເມືອງລາວ ແລະ ພາກທີສອງແມ່ນວັນນະຄະດີຕ່າງປະເທດ.

ວັນນະຄະດີພື້ນເມືອງລາວປະກອບມີຫົກບົດຄື: ວັນນະຄະດີພື້ນເມືອງໂດຍສັງເຂບ, ຄຳທວາຍ, ຄຳສຸພະສິດ, ນິທານອັດສະຈັນ, ນິທານຊ່ວນຫົວ, ນິທານສັດ. ໃນພາກນີ້ຈະໄດ້ຮຽນເນື້ອໃນສຳຄັນຄື: ຄວາມໝາຍ, ການກຳເນີດຂະຫຍາຍຕົວ, ເນື້ອໃນ ແລະ ສິລະປະ; ພ້ອມທັງການວິພາກຄຳສຸພະສິດ, ຄຳທວາຍ ແລະ ບົດເລື່ອງຕ່າງໆ.

ວັນນະຄະດີຕ່າງປະເທດປະກອບມີສາມບົດຄື: ວັນນະຄະດີໄທ, ວັນນະຄະດີກຳປູເຈຍ, ວັນນະຄະດີມຽນມາ. ໃນພາກນີ້ຈະໄດ້ຮຽນເນື້ອໃນສຳຄັນຄື: ສະພາບປະຫວັດສາດ, ສະພາບວັນນະຄະດີ ແລະ ວິພາກບົດເລື່ອງທີ່ສຳຄັນຈຳນວນໜຶ່ງຂອງປະເທດດັ່ງກ່າວ.

## III. ວິທີສິດສອນ ແລະ ກິດຈະກຳການຮຽນ-ການສອນ

### 1) ວິທີສິດສອນ

ກ. ການສອນວັນນະຄະດີທົ່ວໄປ.

- ການສອນວັນນະຄະດີ ໂດຍໃຫ້ອິດສະຫຼະໃນການສະແດງຄວາມຄິດເຫັນກ່ຽວກັບການຄົ້ນຄິດຫາຄວາມໝາຍຂອງສັບ, ຄວາມໝາຍເນື້ອໃນບົດເລື່ອງ ແລະ ການວິຈານຄວາມອອນຊອນຂອງສິລະປະການໃຊ້ຖ້ອຍຄຳໃນບົດກາບກອນ, ຖ້າຄູສອນວັນນະຄະດີ ໂດຍບັງຄັບ ຫຼື ສອນໃຫ້ນັກຮຽນຈື່ຈຳດ້ວຍການທ່ອງຂຶ້ນໃຈ ແບບວ່າບົດເລື່ອງນັ້ນເກີດຂຶ້ນຢູ່ໃສ, ເມື່ອໃດ, ໃຜເປັນຜູ້ແຕ່ງ ເປັນຫຍັງຈຶ່ງຂຽນແນວນັ້ນ ຫຼື ສັບນີ້ມີຄວາມໝາຍແນວໃດ, ມັນປ່ຽນຮູບມາຈາກຄຳສັບໃດ, ຕົວລະຄອນມີລັກສະນະຊາດຂອງລາວແນວໃດ ເທົ່ານີ້ເປັນການສອນທີ່ບໍ່ສາມາດສົ່ງເສີມຫົວຄິດປັນຍາຂອງນັກຮຽນໄດ້ ແລະ ບໍ່ໄດ້ໃຊ້ລັກສະນະຂອງເດັກໄວຮຸ່ນໃຫ້ເປັນປະໂຫຍດໃນການສອນວັນນະຄະດີ.
- ການສອນວັນນະຄະດີ ໂດຍຄູໃຫ້ຄວາມສົນໃຈຕໍ່ນັກຮຽນເຊັ່ນ: ຈັດກິດຈະກຳທີ່ເປີດໂອກາດໃຫ້ນັກຮຽນສະແດງຄວາມຄິດເຫັນຢ່າງເປີດເຜີຍກົງໄປກົງມາ. ເມື່ອຄູຫາກສັງເກດເຫັນວ່ານັກຮຽນມີສ່ວນຮ່ວມໃນການສອນເຮັດໃຫ້ນັກຮຽນມີຄວາມຮູ້ສຶກວ່າ ຕົນເອງມີຄວາມສຳຄັນພ້ອມກັບຮຽນຮູ້ວ່າການສະແດງຄວາມຄິດເຫັນໃຫ້ຄົນອື່ນຟັງໄດ້ຕ້ອງມີຫຼັກການ ແລະ ເຫດຜົນປະກອບໃຫ້ເປັນທີ່ເຊື່ອຖື.
- ການສອນວັນນະຄະດີ ໂດຍການຈັດກິດຈະກຳເຝິກນັກຮຽນໃຫ້ຮູ້ຈັກເຮັດວຽກເປັນໝູ່ຄະນະ ເພື່ອເຝິກຄວາມຮັບຜິດຊອບຄວາມເສຍສະຫຼະ ແລະ ໃຫ້ຮູ້ຈັກໃຊ້ເວລາວ່າງໃຫ້ເປັນປະໂຫຍດ. ວຽກທີ່ມອບໃຫ້ນັກຮຽນເຮັດເປັນໝູ່ຄະນະຄູຄວນຍຶດຖືຫຼັກວ່າໃຫ້ນັກຮຽນເຮັດຕາມຄວາມສົນໃຈ ແລະ ຕາມຄວາມສາມາດ, ບໍ່ຄວນໃຫ້ວຽກທີ່ຍາກເກີນຄວາມສາມາດຂອງນັກຮຽນ ຫຼື ໃຫ້ວຽກ

ຕາມລຳພັງ ໂດຍທີ່ຄູບໍ່ຄ່ອຍໃຫ້ການແນະນຳ ຈຶ່ງຈະເຮັດໃຫ້ນັກຮຽນຮູ້ສຶກວ່າເປັນພາລະທີ່ໜ້າເບື່ອໜ່າຍ ແລະ ຜົນງານທີ່ເຮັດກໍບົກພ່ອງ.

ນອກຈາກນີ້ ການມອບໝາຍວຽກໃຫ້ນັກຮຽນເຮັດຄວນເປັນເລື່ອງທີ່ນັກຮຽນສາມາດຄົ້ນຫາເນື້ອໃນ ແລະ ສ້າງຄວາມເຂົ້າໃຈຮ່ວມກັບເພື່ອນໃນກຸ່ມໄດ້ດີ, ລວມທັງເປັນວຽກທີ່ເຊື່ອມສຳພັນກັບປະສົບການຈາກຄວາມຮູ້ເກົ່າຂອງນັກຮຽນໃນເລື່ອງວັນນະຄະດີເຊັ່ນ: ຂໍ້ຄວາມກິດຈະກຳເຊິ່ງນັກຮຽນສາມາດນຳໄປໃຊ້ໃຫ້ເປັນປະໂຫຍດໃນວິຊາ ພາສາລາວ ຫຼື ວິຊາອື່ນໄດ້ດີສິ່ງທີ່ສຳຄັນຄືຄູຕ້ອງມີເວລາອະທິບາຍເພີ່ມເຕີມວຽກທີ່ນັກຮຽນເຮັດມາ ຫຼື ຄູອາດຈະຊັກຖາມສິ່ງທີ່ນັກຮຽນໄດ້ຮ່ວມເຮັດວຽກກັບຄົນອື່ນ ເພື່ອໃຫ້ນັກຮຽນເຫັນຄຸນຄ່າຂອງການເຮັດວຽກເປັນໝູ່ຄະນະໄດ້ຢ່າງຈະແຈ້ງ.

- ການສອນວັນນະຄະດີໂດຍເຝິກໃຫ້ນັກຮຽນໃຊ້ວິຈາລະນະຍານຂອງຕົນເອງດ້ວຍການໃຫ້ນັກຮຽນໄດ້ສະແດງຄວາມຮູ້ ຫຼື ໃຊ້ປະສົບການຕ່າງໆມາອະທິບາຍ ຫຼື ຍົກຕົວຢ່າງປະກອບບົດຮຽນໄດ້ເອງ ເຊິ່ງຈະເຮັດໃຫ້ນັກຮຽນມີທັດສະນະຄະຕິທີ່ດີຕໍ່ວັນນະຄະດີ ແລະ ເຫັນຄຸນຄ່າຂອງວັນນະຄະດີວ່າ ບໍ່ແມ່ນສິ່ງທີ່ຫ້າສະໄໝຄືກັບຄວາມເຂົ້າໃຈຜິດໃນເມື່ອກ່ອນ.

ຕົວຢ່າງ: ການຈັດກິດຈະກຳການສອນວັນນະຄະດີເຊິ່ງສ້າງໃຫ້ນັກຮຽນມີຄວາມສົນໃຈເຊັ່ນ: ແອບໃຫ້ນັກຮຽນວິຈານສັບໃໝ່ໆ ປະເມີນຄ່າຄວາມອອນຊອນຄວາມສວຍງາມຂອງວັນນະຄະດີກໍຄືກັບພຶດຕິກຳຂອງຕົວລະຄອນໃນວັນນະຄະດີ ແລະ ປຽບທຽບກັບຊີວິດປັດຈຸບັນດ້ວຍເຫດຜົນທີ່ເຊື່ອຖືໄດ້ເປັນຕົ້ນ.

- ການສອນວັນນະຄະດີໂດຍພະຍາມຫາວິທີສອນທີ່ສົ່ງເສີມການມີເຫດຜົນ ໂດຍໃຫ້ນັກຮຽນສະແດງລົດນິຍົມຂອງຕົນອອກ, ຄູຄວນຖືວ່າມັນເປັນລົດນິຍົມສ່ວນຕົວຂອງເຂົາເຊິ່ງບໍ່ຂັດແຍ້ງກັບຄູ. ແຕ່ຄູກໍຄວນແນໃສ່ວິທີການສະແດງເຫດຜົນຂອງນັກຮຽນວ່າ ຄວນສະແດງອອກແນວໃດ, ຫາກນັກຮຽນສະແດງອອກບໍ່ເໝາະສົມຄູຄວນແນະນຳໄປໃນທາງທີ່ຖືກຕ້ອງດ້ວຍວິທີແນະນຳເປັນຫຼັກການ ໃຫ້ນັກຮຽນສາມາດນຳເອົາໄປໃຊ້ໄດ້.

ຖ້າຫາກນັກຮຽນມີລົດນິຍົມຄືກັບຄູ ຫຼື ສະແດງຄວາມເຫັນຄັດຄ້ານຄູຄວນຮັບຟັງ ແລະ ພິຈາລະນາວ່າເຫດຜົນຂອງນັກຮຽນນັ້ນສະແດງໃຫ້ເຫັນວ່ານັກຮຽນເຂົ້າໃຈບົດ ແລະ ສາມາດປະເມີນຄ່າຄວາມອອນຊອນຕາມລົດນິຍົມຂອງຕົນເອງໄດ້ເທົ່າໃດ ຄູຄວນສວຍໂອກາດແບບນີ້ ເພື່ອແນະນຳວິທີ ຫຼັກການງ່າຍດາຍໃນການວິພາກວັນນະຄະດີ ເພື່ອໃຫ້ນັກຮຽນມີຫຼັກເກນທີ່ຈະນຳໄປໃຊ້ໃນການອ່ານ ແລະ ວິພາກວັນນະຄະດີເລື່ອງອື່ນໆຕໍ່ໄປ.

ສະຫຼຸບຄວາມວ່າ:ການສອນວັນນະຄະດີທີ່ສົ່ງເສີມການຂະຫຍາຍຕົວຂອງນັກຮຽນແມ່ນການໃຊ້ຫຼັກເກນການສອນທີ່ເປັນເຫດຜົນ, ເປັນຄວາມຈິງທີ່ນັກຮຽນສາມາດນຶກອອກ ແລະ ປຽບທຽບໄດ້ຈາກປະສົບການຂອງຕົນໂດຍຜ່ານຄູເປັນຜູ້ແນະນຳບອກຫຼັກການຕ່າງໆ ທີ່ນຳໄປສູ່

ການພັດທະນາຄວາມຄິດທີ່ລິເລີ່ມສ້າງສັນຄວາມຮູ້ເລື່ອງວັນນະຄະດີຕະຫຼອດຈົນເກີດຄວາມຊາບຊຶ້ງໃນວັນນະຄະດີ, ຄູຄວນສອນວັນນະຄະດີໂດຍມີຄວາມຫວັງໃຫ້ນັກຮຽນເຫັນໄດ້ຄຸນຄ່າທີ່ຈະນຳປະໂຫຍດຈາກວັນນະຄະດີມາໃຊ້ໃນຊີວິດຂອງຕົນ. ນອກຈາກນີ້ການສອນວັນນະຄະດີຕາມແບບວິທີດັ່ງກ່າວຍັງຕ້ອງເຮັດໃຫ້ນັກຮຽນມີຄວາມເຂົ້າໃຈວ່າວັນນະຄະດີ ບໍ່ແມ່ນເລື່ອງຂອງຄວາມງາມໃນຝັນ ແຕ່ຫາກເປັນຄວາມຈິງຂອງຊີວິດ ທີ່ສຳພັນກັບຊີວິດຕົວຈິງຂອງນັກຮຽນນັ້ນເອງ.

ຂ. ການສອນວັນນະຄະດີໃນສະໄໝສັງຄົມປັດຈຸບັນ

ສະພາບສັງຄົມເປັນສິ່ງແວດລ້ອມທີ່ມີອິດທິພົນຕໍ່ການສອນ ທັງໃນດ້ານສົ່ງເສີມໃຫ້ນັກຮຽນມີປະສົບການໃນການຮຽນຮູ້ຢ່າງເຕັມຄວາມສາມາດ ຫຼື ເປັນອຸປະສັກທີ່ຂັດຂວາງເຮັດໃຫ້ການສອນວັນນະຄະດີປະສົບບັນຫາ.

- ບັນຫາການສອນວັນນະຄະດີ ແລະ ການແກ້ໄຂບັນຫາ, ບັນຫາທີ່ກ່ຽວກັບການຮຽນ-ການສອນວັນນະຄະດີປັດຈຸບັນມີຫຼາຍປະການເຊັ່ນ: ບັນຫາກ່ຽວກັບຄູຜູ້ສອນ, ບັນຫາກ່ຽວກັບນັກຮຽນ ฯลฯ ເພື່ອໃຫ້ນັກຮຽນເຂົ້າໃຈວ່າ ສິ່ງແວດລ້ອມມີອິດທິພົນຕໍ່ການຮຽນ-ການສອນວັນນະຄະດີແນວໃດແດ່ ແລະ ໃນຖານະເປັນຄູສອນວັນນະຄະດີຈະມີວິທີການແກ້ໄຂບັນຫາຕ່າງໆໄແນວໃດເຊັ່ນບາງບັນຫາລຸ່ມນີ້:
  - ນັກຮຽນຊັ້ນມັດທະຍົມສຶກສາສ່ວນຫຼວງຫຼາຍ ມີຄວາມມຸ່ງຫວັງຢາກຮຽນຕໍ່ໃນຊັ້ນວິທະຍາໄລ ຫຼື ມະຫາວິທະຍາໄລ, ແຕ່ນັກຮຽນສ່ວນໜຶ່ງອາດຈະຫັນໄປທາງດ້ານວິຊາຊີບອື່ນໆ ແລະ ບາງຄົນກໍອອກໄປປະກອບອາຊີບເລີຍ ໂດຍທີ່ການຮຽນຮູ້ວັນນະຄະດີບໍ່ໄດ້ສົ່ງເສີມການສຶກສາຕໍ່ ຫຼື ການປະກອບອາຊີບໂດຍກົງ, ນັກຮຽນບາງຄົນ ຈຶ່ງເຫັນວ່າການຮຽນວັນນະຄະດີບໍ່ມີປະໂຫຍດ, ບໍ່ແມ່ນວິຊາຫຼັກ ເພື່ອການສອບເສັງເຂົ້າຮຽນຕໍ່ ຫຼື ນຳໄປປະກອບອາຊີບເປັນຕົ້ນ. ນັກຮຽນຈຳພວກດັ່ງກ່າວ ຈຶ່ງປ່ອຍປະລະເລີຍ ແລະ ບໍ່ສົນໃຈຮຽນວັນນະຄະດີຄືກັບວິຊາອື່ນ.
  - ໂດຍທົ່ວໄປບົດປະພັນວັນນະຄະດີເປັນເລື່ອງທີ່ປະດິດແຕ່ງຂຶ້ນ ເພື່ອໃຫ້ຜູ້ອ່ານ ເຊິ່ງຈະຕ້ອງອ່ານຢ່າງພິນິດພິຈາລະນາ ແລະ ຕີລາຄາຄວາມໝາຍຂອງມັນ. ສະນັ້ນ ວັນນະຄະດີຈຶ່ງເປັນເລື່ອງທີ່ຍາກແດ່ ສຳລັບນັກຮຽນ ທີ່ບໍ່ທັນມີຄວາມຮູ້ພຽງພໍ, ຂາດປະສົບການ ແລະ ຍັງຢູ່ໃນໄວເຍົາປະກອບກັບເນື້ອໃນບົດວັນນະຄະດີບາງບົດບໍ່ສອດຄ່ອງກັບສະພາບຊີວິດ ແລະ ສັງຄົມປັດຈຸບັນ, ດັ່ງນັ້ນ ນັກຮຽນຈຶ່ງບໍ່ມັກຮຽນວັນນະຄະດີ ແລະ ຖືວ່າການຮຽນວັນນະຄະດີບໍ່ມີປະໂຫຍດ.

ການແກ້ໄຂບັນຫາດັ່ງກ່າວ ຄູຕ້ອງໃຊ້ເນື້ອໃນວັນນະຄະດີເປັນໃຈກາງແລ້ວຈັດກິດຈະກຳເຝິກທັກສະທັງສີ່ໃນການໃຊ້ພາສາລາວ, ນອກຈາກນີ້ຄູຄວນຊີ້ແຈງໃຫ້ນັກຮຽນເຫັນຄວາມ

ສຳຄັນຂອງການຮຽນວັນນະຄະດີວ່າ ວັນນະຄະດີແມ່ນສື່ສຳພັນປະເພດໜຶ່ງລະຫວ່າງມະນຸດດ້ວຍກັນ, ຜູ້ຮຽນວັນນະຄະດີຄືຜູ້ຮູ້ຈັກຊີວິດຂອງເພື່ອນຮ່ວມສັງຄົມ, ຮ່ວມຊາດທີ່ໃຊ້ພາສາດຽວກັນ. ເນື້ອໃນວັນນະຄະດີທີ່ນຳມາສອນ ແລະ ຮຽນໃນຊັ້ນມັດທະຍົມປີທີໜຶ່ງບໍ່ແມ່ນຈະເປັນສິ່ງທີ່ຫຍຸ້ງຍາກເກີນຄວາມສາມາດໃນການຮຽນຮູ້ຂອງນັກຮຽນເພາະຍັງມີຄູເປັນຜູ້ແນະນຳ ແລະ ອະທິບາຍໃຫ້ນັກຮຽນຢູ່ສະເໝີ.

- ສື່ການຮຽນຕ່າງໆເຊັ່ນ: ສິ່ງພິມ, ວິທະຍຸ, ໂທລະພາບ ແລະ ຮູບເງົາ ມີອິດທິພົນໃນດ້ານສິ່ງເສີມ ແລະ ເປັນອຸປະສັກທີ່ເຮັດໃຫ້ເກີດບັນຫາໃນການສອນວັນນະຄະດີ, ອິດທິພົນຂອງສື່ຕໍ່ນັກຮຽນມີທັງໃນດ້ານການກຳນົດເປົ້າໝາຍແຫ່ງຊີວິດ, ຄວາມປະພຶດ, ອາລົມຈິດ, ລັດນິຍົມ ແລະ ທັດສະນະຄະຕິ ໂດຍສະເພາະແມ່ນສື່ປະເພດສິ່ງພິມມີອິດທິພົນຕໍ່ນັກຮຽນຫຼາຍກວ່າສິ່ງອື່ນ ເພາະວ່າສິ່ງພິມໄດ້ເຜີຍແຜ່ຄວາມຄິດເຫັນກ່ຽວກັບລັດນິຍົມ, ຄວາມປະພຶດ ແລະ ອື່ນໆ ເຊິ່ງນັກຮຽນອາດຈະນຳໄປປຽບທຽບກັບເນື້ອໃນວັນນະຄະດີ, ນັກຮຽນຈຶ່ງມີຄວາມເຫັນວ່າວັນນະຄະດີມີເນື້ອໃນເພີ້ຝັນຫຼ້າສະໄໝ ແລະ ສະທ້ອນໃຫ້ເຫັນຄວາມເຊື່ອທີ່ງົມງວາຍລວມທັງລັດນິຍົມທີ່ບໍ່ເໝາະສົມກັບຍຸກສະໄໝປັດຈຸບັນເຊັ່ນ: ຄຳສຸພາສິດເພື່ອສັ່ງສອນຄົນໄປຕາມຄວາມນິຍົມສະໄໝກ່ອນທີ່ໃຊ້ຄຳຜະຫຍາເພື່ອໂອ້ລົມກັນລະຫວ່າງບ່າວ-ສາວ ...

ດັ່ງນັ້ນ ຄູຜູ້ສອນຈຳເປັນຕ້ອງຊີ້ໃຫ້ນັກຮຽນເຂົ້າໃຈເຖິງລັກສະນະຂອງວັນນະຄະດີເຊິ່ງເປັນມໍລະດົກວັດທະນະທຳຂອງຊາດ ແລະ ເປັນການບັນທຶກຄວາມຈິງຂອງຊີວິດສັງຄົມຕະຫຼອດເຖິງການໃຊ້ພາສາໃນຍຸກສະໄໝໃໝ່ຂອງຜູ້ແຕ່ງ, ນັກຮຽນຈຶ່ງຄວນຮຽນວັນນະຄະດີເພື່ອຮູ້ ແລະ ເຂົ້າໃຈຄວາມນຶກຄິດອາລົມຈິດຂອງຄົນລາວສະໄໝກ່ອນ, ລວມເຖິງການຮຽນຮູ້ສິລະປະການແຕ່ງ ເຊິ່ງສະທ້ອນໃຫ້ເຫັນວິທີການໃຊ້ພາສາຂັ້ນສູງຂອງບັນພະບຸລຸດອັນຈະເປັນພື້ນຖານຄວາມຮູ້ໃນການອ່ານວັນນະຄະດີເລື່ອງອື່ນໆ ເມື່ອເຂົ້າເຈົ້າເຕີບໃຫຍ່ຕໍ່ໄປ.

ຜ່ານມາມີຫຼາຍຄົນເຂົ້າໃຈວ່າວັນນະຄະດີພື້ນເມືອງເປັນເລື່ອງທີ່ເກົ່າແກ່ຫຼ້າສະໄໝຈຶ່ງບໍ່ໃສ່ໃຈຄົ້ນຄວ້າຮ່ຳຮຽນ. ແຕ່ຕາມຄວາມເປັນຈິງພວກເຮົາສາມາດນຳເອົາວັນນະຄະດີພື້ນເມືອງມາປັບປຸງມາໃຊ້ໃນຍຸກສະໄໝປັດຈຸບັນນີ້ໄດ້. ຕົວຢ່າງ: ນິທານ "ຊຽງໜ້ຽງ" ສາມາດສ້າງເປັນລະຄອນຕະຫຼົກອອກໂທລະພາບ, ສ້າງເປັນຮູບເງົາກະຕູນ ຫຼື ເປັນປຶ້ມອ່ານທົ່ວໄປ. ນິທານ "ກາກັບໂຖນ້ຳ" ສາມາດສ້າງເປັນລະຄອນສັດອອກໂທລະພາບ, ສ້າງເປັນຮູບເງົາກະຕູນ, ສ້າງເປັນປຶ້ມອ່ານສຳລັບເດັກ. ເລື່ອງດັ່ງກ່າວນັ້ນ ເມື່ອສ້າງເປັນລະຄອນຕະຫຼົກ, ເປັນຮູບເງົາກະຕູນ, ເປັນປຶ້ມອ່ານໄດ້ແລ້ວກໍສາມາດຕອບສະໜອງຄວາມຕ້ອງການຂອງສັງຄົມ ແລະ ສາມາດສ້າງລາຍໄດ້ໃຫ້ແກ່ພວກເຮົາ.

ສັງຄົມປັດຈຸບັນ ມີຄວາມກ້າວໜ້າໃນດ້ານວິທະຍາສາດ ແລະ ເຕັກໂນໂລຊີ ຄູຈຶ່ງຕ້ອງປັບປຸງຕົນເອງໃຫ້ທັນກັບຄວາມປ່ຽນແປງຢ່າງໄວວາຂອງສັງຄົມ. ໃນການສອນວັນນະຄະດີນັ້ນ

ຄູຄວນປັບປຸງຕົນເອງໃນແຕ່ລະດ້ານຄື:

- ຄູຕ້ອງອ່ານວັນນະຄະດີໃຫ້ຫຼາຍ ເພື່ອເຂົ້າໃຈຢ່າງເລິກເຊິ່ງ ຈຶ່ງຈະສາມາດອະທິບາຍ ແລະ ແກ້ໄຂຄວາມເຂົ້າໃຈຜິດຂອງນັກຮຽນໄດ້ໄວ ແລະ ຄ່ອງແຄ້ວ.
- ຄູຄວນພະຍາຍາມສົນໃຈໃນການອ່ານ ແລະ ການວິຈານວັນນະຄະດີໃນແງ່ມຸມຕ່າງໆ ເຊັ່ນ: ແງ່ມຸນດ້ານປະຫວັດສາດ, ວັດທະນະທຳ, ພາສາ, ສິລະປະ, ຈິດຕະວິທະຍາ, ມະນຸດວິທະຍາ, ສັງຄົມວິທະຍາ ເຊິ່ງຈະເຮັດໃຫ້ຄູເຫັນແງ່ມຸມໃໝ່ໆໃນວັນນະຄະດີເຊິ່ງເປັນປະໂຫຍດຕໍ່ການສອນໄດ້.
- ຄູຄວນພະຍາຍາມອ່ານບົດປະພັນວັນນະຄະດີໃໝ່ໆ ບົດວັນນະຄະດີຕ່າງປະເທດຢູ່ຕະຫຼອດເວລາ ເພື່ອຄູຈະໄດ້ມີຄວາມຮູ້ຮອບຕົວນຳໄປໃຊ້ປຽບທຽບແນວຄິດ ແລະພຶດຕິກຳທີ່ຕ່າງກັນ ຫຼື ຄືກັນໄດ້ເພື່ອຊ່ວຍໃຫ້ເຂົ້າໃຈວັນນະຄະດີລາວຢ່າງເລິກເຊິ່ງແລ້ວ ນຳໄປໃຊ້ປະກອບການສິດສອນໄດ້. ນອກຈາກນີ້ ຍັງຊ່ວຍໃຫ້ຄູເຂົ້າໃຈຄວາມຄິດ, ຄວາມຕ້ອງການຂອງນັກຮຽນໃນການອ່ານປຶ້ມນອກຫ້ອງຮຽນອີກດ້ວຍ.
- ຄູຕ້ອງປັບປຸງຄວາມຄິດຂອງຕົນເອງ ເພື່ອບໍ່ໃຫ້ມີຊ່ອງວ່າງທາງຄວາມຄິດ, ຄູຄວນປັບປຸງຕົນເອງໃຫ້ເປັນຄົນທັນສະໄໝ, ທັນເຫດການ ແລະ ທັນພາວະຄວາມປ່ຽນແປງຂອງສັງຄົມດ້ານການອ່ານສິ່ງພິມຕ່າງໆຫຼາຍສະບັບເພື່ອໃຫ້ຂໍ້ມູນປຽບທຽບຄວາມຮັບຮູ້ເກົ່າ ແລະ ຄວາມຮັບຮູ້ໃໝ່, ຈາກນັ້ນຄູຈຶ່ງເປັນຜູ້ມີແນວຄວາມຄິດໃໝ່ໆ ແລະ ທັນສະໄໝ.
- ຄູສອນວັນນະຄະດີຄວນມີທັກສະການສອນແບບຕ່າງໆຢ່າງອຸດົມສົມບູນເຊັ່ນ: ການສອນແບບບັນຍາຍ, ການສອນແບບສຶກສາຄົ້ນຄວ້າ, ການສອນແບບອະພິປາຍ ฯลฯ ແລະ ສາມາດນຳການສອນແບບຕ່າງໆ ມາໃຊ້ໃນການສອນວັນນະຄະດີໄດ້ຢ່າງເໝາະສົມຕັ້ງແຕ່ການນຳເຂົ້າສູ່ບົດຮຽນ ຈົນເຖິງຂັ້ນກວດກາຕີລາຄາ ແລະ ປະເມີນຜົນ.

ນອກຈາກນີ້ ຄູຄວນມີຄວາມສາມາດໃນການສະແດງ ເພື່ອນຳມາໃຊ້ໃນການສອນແຕ່ລະບົດເຊັ່ນ: ແບບບັນຍາຍກິດຈະກຳກຸ່ມ, ການຫຼິ້ນລະຄອນ, ຮ້ອງເພງ, ຟ້ອນເປັນຕົ້ນ ເຊິ່ງຈະເຮັດໃຫ້ນັກຮຽນເຂົ້າໃຈ ແລະ ມີຈິນຕະນາການກ່ຽວກັບເນື້ອໃນວັນນະຄະດີ ນັກຮຽນມີຄວາມສະໜຸກສະໜານສົນໃຈຮຽນວັນນະຄະດີຫຼາຍຂຶ້ນ. ຄູຄວນປັບປຸງວິທີສອນຈາກການບອກວັນນະຄະດີມາເປັນການແນະນຳ ເພື່ອໃຫ້ນັກຮຽນເຫັນສິ່ງທີ່ເຂົາບໍ່ສາມາດເຫັນເຜາະນັກຮຽນຍັງຢູ່ໃນໄວເຍົາເຊັ່ນ:

- ການສອນເລື່ອງ ຄວາມດີ-ຄວາມຊົ່ວ ໂດຍອີງຕາມບົດລະຄອນໃນເລື່ອງຕ່າງໆມາເປັນຂໍ້ມູນວິໄຈຄວາມດີ-ຄວາມຊົ່ວໃຫ້ນັກຮຽນຮູ້, ຄູຄວນສອນໃຫ້ນັກຮຽນເຂົ້າໃຈວ່າຕົວລະຄອນທີ່ສະແດງໃຫ້ເຫັນຄວາມດີ-ຄວາມຊົ່ວເຮັດໃຫ້ວັນນະຄະດີມີຄວາມມ່ວນຊື່ນ, ຜູ້ອ່ານມີຄວາມສະໜຸກສະໜານ.

- ການສອນໃຫ້ນັກຮຽນມີຈິນຕະນາການກ່ຽວກັບການອ່ານວັນນະຄະດີ, ຄູຄວນຊ່ວຍໃຫ້ນັກຮຽນຜູ້ທີ່ບໍ່ມີຈິນຕະນາການສຳນຶກອອກ, ກ່ອນຈະໄດ້ແນວນັ້ນຄູຄວນສອນໃຫ້ນັກຮຽນຄິດສ້າງຈິນຕະນາການດ້ວຍຕົນເອງ ເພື່ອຈະໄດ້ເກີດຄວາມຊາບຊຶ້ງໃນບົດພັນລະນາດັ່ງກ່າວໄດ້.

- ການສອນນັກຮຽນໃຫ້ຮູ້ຈັກສັງເກດ ຈົນສາມາດເຫັນໄດ້ເອງວ່າ ວັນນະຄະດີມີອົງປະກອບອັນໃດແດ່ທີ່ພາໃຫ້ບົດປະພັນວັນນະຄະດີມີລົດຊາດ ແລະ ມີຊີວິຊີວາເຊັ່ນ: ຄູຄວນແນະນຳໃຫ້ນັກຮຽນສັງເກດການໃຊ້ສຳນວນໂວຫານ ເຊິ່ງສະແດງບຸກຄະລິລັກສະນະຂອງຕົວລະຄອນ ເຊິ່ງເຮັດໃຫ້ຕົວລະຄອນເປັນຕົວຂອງຕົວເອງ ຫຼື ໃຫ້ສັງເກດ ການພັນລະນາທຳມະຊາດເຊິ່ງເຮັດໃຫ້ເກີດອາລົມຫວັ່ນໄຫວໄປຕາມຕົວລະຄອນ.

ຄູຄວນສອນໃຫ້ນັກຮຽນສັງເກດເບິ່ງອົງປະກອບຂອງວັນນະຄະດີເຊິ່ງຜູ້ແຕ່ງເລືອກໃຊ້ໄດ້ເໝາະກັບເນື້ອໃນລັກສະນະນິດໄສຕົວລະຄອນແຕ່ລະສະໄໝ, ວັນນະຄະດີທີ່ມີອົງປະກອບຕ່າງໆສອດຄ່ອງເໝາະສົມກັບເຮັດໃຫ້ວັນນະຄະດີເລື່ອງນັ້ນມ່ວນ ແລະ ມີຄຸນຄ່າທີ່ເປັນອຳມະຕະສືບຕໍ່ມາໃຫ້ນັກຮຽນໄດ້ຮ່ຳຮຽນ ແລະ ຄົ້ນຫາຄຸນຄ່າຂອງວັນນະຄະດີ.

ສະຫຼຸບໄດ້ວ່າ ການສອນວັນນະຄະດີ ໃນສະພາບປັດຈຸບັນໃຫ້ມີຜົນດີຕໍ່ການສອນ ແລະ ການຮຽນຮູ້ຄູຈະຕ້ອງສຶກສາເພື່ອສະແຫວງຫາວິທີແກ້ໄຂ ພ້ອມທັງປັບປຸງຕົນເອງທັງດ້ານຄວາມຮູ້, ຄວາມຄິດ ແລະ ການສອນ.

## 2) ກິດຈະກຳການຮຽນ ການສອນວັນນະຄະດີ

### ກ. ການສອນຄວາມເປັນມາຂອງວັນນະຄະດີ

ຄູຕັ້ງຄຳຖາມຖາມນັກຮຽນກ່ຽວກັບຄວາມໝາຍຂອງວັນນະຄະດີພື້ນເມືອງແຕ່ລະປະເພດຕາມປຶ້ມແບບຮຽນເພື່ອໃຫ້ນັກຮຽນຕອບ. ຈາກນັ້ນ, ຄູສະຫຼຸບຄຳຕອບຂອງນັກຮຽນ, ພ້ອມທັງອະທິບາຍໃຫ້ນັກຮຽນເຂົ້າໃຈກ່ຽວກັບຄວາມໝາຍຂອງວັນນະຄະດີພື້ນເມືອງລາວແຕ່ລະປະເພດໃຫ້ແຈ້ງ ແລະ ຊັດເຈນ.

ຄູຕັ້ງຄຳຖາມຖາມນັກຮຽນກ່ຽວກັບການກຳເນີດ ແລະ ຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວແຕ່ລະປະເພດຕາມປຶ້ມແບບຮຽນເພື່ອໃຫ້ນັກຮຽນຕອບ. ຈາກນັ້ນ, ຄູສະຫຼຸບຄຳຕອບຂອງນັກຮຽນພ້ອມທັງອະທິບາຍໃຫ້ນັກຮຽນເຂົ້າໃຈຢ່າງຈະແຈ້ງກ່ຽວກັບການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ ແລະ ວັນນະຄະດີຕ່າງປະເທດ.

ຄູອະທິບາຍພ້ອມທັງຕັ້ງຄຳຖາມເພື່ອສົນທະນາກັບນັກຮຽນກ່ຽວກັບເນື້ອໃນຂອງບົດຮຽນແຕ່ລະຂໍ້ໃນແຕ່ລະບົດຕາມປຶ້ມແບບຮຽນ. ຈາກນັ້ນຄູຕ້ອງສະຫຼຸບເນື້ອໃນສຳຄັນຂອງບົດຮຽນແຕ່ລະຂໍ້ໃຫ້ສັ້ນກະທັດຮັດເພື່ອໃຫ້ນັກຮຽນເຂົ້າໃຈງ່າຍ ແລະ ຈື່ຈຳໄດ້ໄວ.

ຄູພາບັກຮຽນຈຳແນກການໃຊ້ສັບພາສາ, ວິທີການປະດິດແຕ່ງຄຳຫວາຍ, ຄຳສຸພາສິດ ແລະ ບົດນິທານຕ່າງໆ ດ້ວຍການຕັ້ງຄຳຖາມສົນທະນາກັບນັກຮຽນກ່ຽວກັບສິລະປະການແຕ່ງວັນນະຄະດີແຕ່ລະປະເພດບົດເພື່ອໃຫ້ນັກຮຽນເຂົ້າໃຈວິທີການປະດິດແຕ່ງວັນນະຄະດີພື້ນເມືອງປະເພດຕ່າງໆ.

**ຂ. ການສອນອ່ານ ແລະ ອະທິບາຍສັບ**

ການສອນບົດຮຽນແຕ່ລະບົດນັບທັງວັນນະຄະດີລາວ ແລະ ຕ່າງປະເທດ. ຄູຄວນແນະນຳໃຫ້ນັກຮຽນອ່ານເນື້ອໃນບົດຮຽນແຕ່ລະບົດພ້ອມທັງບົດຕົວຢ່າງເຊັ່ນ: ຄຳຫວາຍ, ຄຳສຸພາສິດພ້ອມທັງບົດເລື່ອງຕ່າງໆຕາມແຕ່ລະບົດໃນປຶ້ມແບບຮຽນແລ້ວໝາຍຄຳສັບ ແລະ ປະໂຫຍກທີ່ບໍ່ເຂົ້າໃຈ. ຈາກນັ້ນຄູຄວນອະທິບາຍຄຳສັບທີ່ນັກຮຽນບໍ່ເຂົ້າໃຈໃຫ້ຈະແຈ້ງຈຶ່ງເຂົ້າສູ່ການສອນເນື້ອໃນ ແລະ ວິພາກບົດ.

**ຄ. ການສອນວິພາກ**

ການສອນວິພາກບົດ, ແຕ່ລະບົດໃນປຶ້ມແບບຮຽນຄູຄວນແນະນຳໃຫ້ນັກຮຽນອ່ານບົດເລື່ອງຕ່າງໆທີ່ຈະນຳມາວິພາກນັ້ນຫຼາຍເທື່ອເພື່ອຊອກຫາຄວາມໝາຍແປນ, ຄວາມໝາຍເລິກ, ເນື້ອໃນແຕ່ລະຕອນ, ເນື້ອໃນລວມຂອງບົດເລື່ອງ, ຊອກຫາຕົວລະຄອນ, ການເຄື່ອນໄຫວຂອງຕົວລະຄອນໂດຍຜ່ານສຳນວນພາສາໃນບົດວິພາກນັ້ນໆ.

**ງ. ແນະນຳກ່ຽວກັບການເຮັດບົດຝຶກຫັດ**

ການເຮັດບົດຝຶກຫັດແມ່ນການເສີມສ້າງຄວາມຮູ້, ຄວາມສາມາດ ແລະຝຶກທັກສະຕ່າງໆໃຫ້ແກ່ນັກຮຽນໄດ້ມີວິທີການຮຽນຮູ້ດ້ວຍຕົນເອງ. ດັ່ງນັ້ນ, ຄູຄວນເອົາໃຈໃສ່ການເຮັດຝຶກຫັດໃຫ້ແກ່ນັກຮຽນນັບທັງເຮັດບົດຝຶກຫັດຢູ່ໃນຫ້ອງ, ຄູຕ້ອງເປັນຜູ້ກຳນົດຫົວຂໍ້ບົດຝຶກຫັດໃຫ້ຊັດເຈນ ແລະ ວາງຈຸດປະສົງຄາດໝາຍໃຫ້ລະອຽດ. ການເຮັດບົດຝຶກຫັດແຕ່ລະຄັ້ງຄູຕ້ອງກວດບົດ ແລະ ສິ່ງບົດຝຶກຫັດ. ພ້ອມທັງແກ້ໄຂບັນຫາຕ່າງໆໃນບົດຝຶກຫັດໃຫ້ຈະແຈ້ງເປັນເອກະພາບ.

**ຈ. ແນະນຳກ່ຽວກັບການອ່ານບົດອ່ານເພີ່ມ**

ໃນບົດຮຽນວິຊາວັນນະຄະດີແຕ່ລະບົດຈະມີບົດອ່ານເພີ່ມເຊິ່ງບົດອ່ານເພີ່ມໃນແຕ່ລະບົດ ນັ້ນໄດ້ມີເນື້ອໃນກ່ຽວຂ້ອງ ແລະ ສະໜັບສະໜູນເນື້ອໃນຂອງບົດຮຽນແຕ່ລະບົດ. ດັ່ງນັ້ນຄູຄວນຈັດເປັນກິດຈະກຳການອ່ານບົດອ່ານເພີ່ມຢູ່ເຮືອນເພື່ອໃຫ້ນັກຮຽນມີຄວາມຮູ້ກ້ວາງຂວາງຂຶ້ນຕື່ມ.

### 3) ບາງຈຸດທີ່ຄວນເອົາໃຈໃສ່ໃນການແຕ່ງບົດສອນ

**ກ. ຂັ້ນນຳເຂົ້າສູ່ບົດຮຽນ**

ກ່ອນເຂົ້າສູ່ບົດຮຽນແຕ່ລະບົດຄູຄວນກວດກາບົດຮຽນເກົ່າ ແລະ ຕັ້ງຄຳຖາມທົດສອບຄວາມຮູ້ໃນບົດຮຽນໃໝ່ຈາກນັກຮຽນເພື່ອກຳນົດວິທີສອນ ແລະ ສິ່ງຄວາມຮູ້ໃນບົດດັ່ງກ່າວໃຫ້ແທດເໝາະກັບຄວາມຮັບຮູ້ ແລະ ຄວາມຕ້ອງການຂອງນັກຮຽນ.

**ຂ. ຂັ້ນຕອນສອນ**

ກ່ອນຂຶ້ນຫ້ອງສອນແຕ່ລະບົດ, ແຕ່ລະຄັ້ງຄູຕ້ອງແຕ່ງບົດສອນໂດຍອີງໃສ່ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູປະສົມປະສານກັບຄວາມຮູ້ຄວາມສາມາດຂອງຕົນເອງ ແລະ ສະພາບການຕົວຈິງຂອງນັກຮຽນແລ້ວຈັດບົດສອນໃຫ້ເປັນລະບົບ, ນັບທັງຫົວຂໍ້ ແລະ ເນື້ອໃນ.

ເວລາດຳເນີນການສິດສອນຄູຄວນອະທິບາຍເນື້ອໃນບົດຮຽນແຕ່ລະຂໍ້ໃຫ້ລະອຽດເພື່ອໃຫ້ນັກຮຽນເຂົ້າໃຈງ່າຍພ້ອມກັນນັ້ນຄູຕ້ອງຕັ້ງຄຳຖາມເພື່ອສົນທະນາກັບນັກຮຽນ ແລະ ຊອກຫາກິດຈະກຳຕ່າງໆທີ່ແທດເໝາະກັບເນື້ອໃນບົດຮຽນແຕ່ລະບົດເພື່ອເສີມຂະຫຍາຍສະຕິປັນຍາ ແລະ ຄວາມສາມາດຂອງນັກຮຽນໃຫ້ດີຂຶ້ນເລື້ອຍໆ.

**ຄ. ຂັ້ນຕອນສະຫຼຸບ**

ຫຼັງຈາກການສິດສອນບົດຮຽນແຕ່ລະບົດ, ຄູຕ້ອງສະຫຼຸບຄືນເນື້ອໃນສຳຄັນຕົ້ນຕໍຂອງແຕ່ລະຂໍ້ໃນແຕ່ລະບົດໃຫ້ລະອຽດຈະແຈ້ງ ເພື່ອໃຫ້ນັກຮຽນໄດ້ຈົດກ່າຍ ແລະ ນຳໄປຄົ້ນຄວ້າໃຫ້ເຂົ້າໃຈຢ່າງເລິກເຊິ່ງ.

## IV. ການນຳໃຊ້ສື່ປະກອບການສອນ

ອຸປະກອນການສອນຕົ້ນຕໍເຊິ່ງຄູຕ້ອງມີຄື: ປຶ້ມແບບຮຽນ, ຄູ່ມືຄູ ແຜນການຮຽນ-ການສອນ, ບົດສອນທີ່ຄູແຕ່ງ. ນອກຈາກນີ້ຍັງມີປຶ້ມຕຳລາຕ່າງໆທີ່ກ່ຽວຂ້ອງກັບການຮຽນ-ການສອນແຕ່ລະບົດເຊັ່ນ: ປຶ້ມການກອນພື້ນເມືອງລາວ, ນິທານພື້ນເມືອງລາວຕ່າງໆ, ແຜນທີ່, ຮູບພາບ, ຮູບແຕ້ມ ຫຼື ແຜ່ນຊີດີທີ່ກ່ຽວພັນກັບບົດຮຽນແຕ່ລະບົດ.

## V. ການວັດ ແລະ ປະເມີນຜົນ

ຫຼັງຈາກການສິດສອນ ແລະ ການເຮັດກິດຈະກຳໃນແຕ່ລະບົດສຳເລັດລົງຄູຄວນວັດ ແລະ ປະເມີນຜົນໂດຍຜ່ານການຕອບຄຳຖາມໃນເວລາສົນທະນາບົດຮຽນແຕ່ລະຂໍ້ຂອງນັກຮຽນ ແລະ ການເຮັດກິດຈະກຳຕ່າງໆເຊັ່ນ: ກິດຈະກຳກຸ່ມ, ການກວດກາ, ການເຮັດບົດວິພາກ, ການສະແດງລະຄອນ, ການຂຽນຫຍໍ້ເຫດການ, ການຂຽນຫຍໍ້ເລື່ອງ ແລະ ອື່ນໆ.

## VI. ຂໍ້ແນະນຳກ່ຽວກັບຫຼັກສູດທ້ອງຖິ່ນ

ປຶ້ມແບບຮຽນ ແລະ ຄູ່ມືຄູ ສະບັບນີ້ເປັນຫຼັກສູດລວມໃຫ້ແກ່ນັກຮຽນຊັ້ນມັດທະຍົມປີທີໜຶ່ງໃນຂອບເຂດທົ່ວປະເທດ. ດັ່ງນັ້ນ, ມັນອາດຈະບໍ່ແທດເໝາະກັບແຕ່ລະທ້ອງຖິ່ນປານໃດ. ຍ້ອນແນວນັ້ນ, ຄູແຕ່ລະທ້ອງຖິ່ນຄວນມີວິທີການຄົ້ນຄວ້າບົດຮຽນ, ແຕ່ງຕຳລາສອນໃຫ້ສອດຄ່ອງກັບສະພາບແວດລ້ອມຂອງແຕ່ລະໂຮງຮຽນໃນແຕ່ລະທ້ອງຖິ່ນ. ດ້ວຍວິທີຊອກຫາຜູມປັນຍາຂອງຊາວບ້ານເຊັ່ນ: ຄຳທວາຍ, ຄຳສຸພາສິດ ແລະ ນິທານພື້ນເມືອງຕ່າງໆຂອງແຕ່ລະທ້ອງຖິ່ນມາປະກອບການຮຽນການສອນ ແລະ ການຈັດກິດຈະກຳເພື່ອເຮັດໃຫ້ການຮຽນການສອນມີບັນຍາກາດ ແລະ ມີຜົນສຳເລັດດີ.

## VII. ການເຄື່ອນໄຫວນອກຫຼັກສູດ

ການສອນວິຊາວັນນະຄະດີໃນຊັ້ນມັດທະຍົມປີທີໜຶ່ງນີ້ຄູຄວນຈັດກິດຈະກຳເຄື່ອນໄຫວອຽງງານນອກຫຼັກສູດເຊັ່ນ: ສິລະປະ, ທັດສະນະສຶກສາຕາມສະຖານທີ່ສຳຄັນທາງທຳມະຊາດ ແລະ ສັງຄົມຂອງແຕ່ລະທ້ອງຖິ່ນ. ນອກຈາກນີ້, ຄູຄວນພານັກຮຽນໄປເກັບກຳຄຳທວາຍ, ຄຳສຸພາສິດ, ນິທານຕ່າງໆນຳປະຊາຊົນຢູ່ຕາມບ້ານທີ່ໃກ້ຄຽງຕາມຄວາມເໝາະສົມ.

# ແນະນຳການສອນແຕ່ລະບົດ

## ພາກທີ I

## ວັນນະຄະດີພື້ນເມືອງລາວ

### ບົດທີ 1

### ວັນນະຄະດີພື້ນເມືອງລາວໂດຍສັງເຂບ

ເວລາ 6 ຊົ່ວໂມງ

**I. ຈຸດປະສົງ**

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.
- ອະທິບາຍຄວາມສຳຄັນ, ຄຸນຄ່າ ແລະ ຄຸນປະໂຫຍດຂອງວັນນະຄະດີພື້ນເມືອງລາວ.
- ຈຳແນກໄດ້ກ່ຽວກັບປະເພດວັນນະຄະດີພື້ນເມືອງລາວ.

**II. ເນື້ອໃນຕົ້ນຕໍ.**

- ຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.
- ຄວາມສຳຄັນ, ຄຸນຄ່າ ແລະ ຄຸນປະໂຫຍດຂອງວັນນະຄະດີພື້ນເມືອງລາວ.
- ປະເພດຂອງວັນນະຄະດີພື້ນເມືອງລາວ.

**III. ສື່ການຮຽນ-ການສອນ**

- ປຶ້ມແບບຮຽນ ແລະ ຄູ່ມືຄູ ວິຊາວັນນະຄະດີຊັ້ນມັດທະຍົມປີທີ່ໜຶ່ງ.
- ປຶ້ມນິທານສຳລັບເດັກ.
- ແຜ່ນຊີດີໜັງກະຕູນກ່ຽວກັບນິທານພື້ນເມືອງ.
- ແຜ່ນຊີດີຂັບລຳພື້ນເມືອງຕ່າງໆ (ຖ້າມີ).

**IV. ກິດຈະກຳການຮຽນ-ການສອນ**

**ການນຳເຂົ້າສູ່ບົດຮຽນ.**

ກ່ອນການສອນບົດຮຽນບົດນີ້ ຄູຄວນທົດສອບຄວາມຮູ້ຂອງນັກຮຽນກ່ຽວກັບວັນນະຄະດີພື້ນເມືອງລາວ ດ້ວຍວິທີຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

1) ນັກຮຽນເຄີຍໄດ້ຮຽນວັນນະຄະດີພື້ນເມືອງແລ້ວບໍ?

2) ນັກຮຽນຮູ້ນິທານພື້ນເມືອງເລື່ອງໃດ?

- ຄູໃຫ້ເວລານັກຮຽນສະແດງຄວາມຄິດເຫັນ, ສົນທະນາກັນເພື່ອຕອບຄຳຖາມຈາກນັ້ນຄູສະ

ຫຼຸບຄຳຕອບຂອງນັກຮຽນ ພ້ອມທັງແນະນຳໃຫ້ນັກຮຽນເຂົ້າໃຈ ຄຳວ່າວັນນະຄະດີພື້ນເມືອງ. ຈາກນັ້ນຄູເລີ່ມເຂົ້າສູ່ການຮຽນ ການສອນບົດນີ້ຄື:

## 1. ການສອນຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.

### 1.1. ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ.

- ກ່ອນຈະສອນຂໍ້ນີ້ ຄູຄວນຕັ້ງຄຳຖາມ ຖາມນັກຮຽນວ່າ: ວັນນະຄະດີພື້ນເມືອງລາວແມ່ນວັນນະຄະດີແນວໃດ?

- ໃຫ້ນັກຮຽນຕອບຄຳຖາມ.

- ຄູສະຫຼຸບຄຳຕອບຂອງນັກຮຽນພ້ອມທັງໄຈ້ແຍກໃຫ້ເຫັນວ່າວັນນະຄະດີພື້ນເມືອງລາວແມ່ນວັນນະຄະດີລາວປະເພດໜຶ່ງເຊິ່ງປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດແຕ່ງຂຶ້ນດ້ວຍປາກເປົ່າ ແລະ ເລົ່າສືບກັນມາແຕ່ສະໄໝບູຮານ, ມັນສ່ອງແສງປາກົດການທຳມະຊາດ, ສັງຄົມ ແລະ ແນວຄິດຈິດໃຈ, ຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າ.

- ຄູໃຫ້ນັກຮຽນຍົກນິທານພື້ນເມືອງຂຶ້ນມາເລົ່າສູ່ຄູ ແລະ ໝູ່ຟັງ,

- ຄູສະຫຼຸບຄືນ ນິທານທີ່ນັກຮຽນເລົ່າ. ພ້ອມທັງອະທິບາຍເນື້ອໃນຄວາມໝາຍຂອງນິທານເພື່ອໃຫ້ນັກຮຽນເຂົ້າໃຈ.

### 1.2 ການສອນການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.

- ຄູອະທິບາຍການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.

- ຄູຕັ້ງຄຳຖາມ ຖາມນັກຮຽນວ່າ:

1) ວັນນະຄະດີພື້ນເມືອງລາວມີກົກເຄົ້າການກຳເນີດແນວໃດ?

2) ວັນນະຄະດີພື້ນເມືອງລາວມີການຂະຫຍາຍຕົວຄືແນວໃດ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນ.

- ຄູສະຫຼຸບຄຳຕອບຂອງນັກຮຽນ ແລ້ວ ອະທິບາຍລະອຽດເພື່ອໃຫ້ນັກຮຽນເຂົ້າໃຈກ່ຽວກັບກົກເຄົ້າການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງຕາມປຶ້ມແບບຮຽນ.

## 2. ການສອນຄວາມສຳຄັນ, ຄຸນຄ່າ ແລະ ຄຸນປະໂຫຍດຂອງວັນນະຄະດີພື້ນເມືອງລາວ.

### 2.1. ຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວ.

- ຄູອະທິບາຍຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວໃຫ້ນັກຮຽນຟັງ.

- ຄູຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

- ວັນນະຄະດີພື້ນເມືອງລາວມີຄວາມສຳຄັນແນວໃດ ຕໍ່ການດຳເນີນຊີວິດຂອງຄົນເຮົາ?

- ໃຫ້ນັກຮຽນຊອກນິທານໃດໜຶ່ງມາເລົ່າສູ່ຄູ ແລະ ໝູ່ຟັງ. (ຖ້ານັກຮຽນບໍ່ສາມາດເລົ່າໄດ້

ໃຫ້ຄູເລົ່າສູ່ນັກຮຽນຟັງ).

- ເລື່ອງດັ່ງກ່າວມີຄວາມສຳຄັນຕໍ່ການດຳລົງຊີວິດແນວໃດ?

- ເມື່ອນັກຮຽນຕອບ ຫຼື ສົນທະນາໝົດແລ້ວ ຄູສະຫຼຸບຄຳຕອບຂອງນັກຮຽນແລ້ວເນັ້ນໜັກຈຸດສຳຄັນໃຫ້ລະອຽດຈະແຈ້ງກ່ຽວກັບຄວາມສຳຄັນຂອງວັນນະຄະດີພື້ນເມືອງຕໍ່ການດຳລົງຊີວິດຂອງຄົນເຮົາຄື:

- ວັນນະຄະດີພື້ນເມືອງລາວມີຄວາມສຳຄັນຕໍ່ການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີຂຽນ. ມີຄວາມສຳຄັນຕໍ່ການດຳລົງຊີວິດ, ການຕໍ່ສູ້ຕ້ານກັບໄພທຳມະຊາດ, ສັງຄົມ. ມີຄຸນຄ່າທາງດ້ານເນື້ອໃນ ແລະ ສິລະປະ, ສາມາດສະໜອງຄວາມຮູ້ດ້ານການປະດິດແຕ່ງວັນນະຄະດີ. ໃຫ້ຄວາມຮູ້ດ້ານປະຫວັດສາດ. ເປັນເອກະສານສຳຄັນໃນການຄົ້ນຄວ້າປະຫວັດສາດ (ໃຫ້ຄູອະທິບາຍລະອຽດຕາມປຶ້ມແບບຮຽນ).

**2.2. ການສອນຄຸນຄ່າຂອງວັນນະຄະດີພື້ນເມືອງ.**

- ຄູອະທິບາຍກ່ຽວກັບຄຸນຄ່າຂອງວັນນະຄະດີພື້ນເມືອງລາວ.
- ຄູຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

1) ວັນນະຄະດີພື້ນເມືອງມີຄຸນຄ່າຄືແນວໃດຕໍ່ການດຳລົງຊີວິດຂອງຄົນເຮົາ?

2) ຄຸນຄ່າສຶກສາອົບຮົມດ້ານແນວຄິດ ແລະ ຄຸນສົມບັດສະແດງອອກແນວໃດ?

- ຄູໃຫ້ນັກຮຽນ ສະແດງຄວາມຄິດເຫັນ.

ຈາກນັ້ນຄູສະຫຼຸບຄຳຕອບຂອງນັກຮຽນ ແລ້ວອະທິບາຍໃຫ້ນັກຮຽນເຂົ້າໃຈວ່າ ວັນນະຄະດີພື້ນເມືອງມີຄຸນຄ່າຕໍ່ການດຳລົງຊີວິດຂອງຄົນເຮົາຄື:

- ມີຄຸນຄ່າສຶກສາອົບຮົມດ້ານແນວຄິດ ແລະ ຄຸນສົມບັດທີ່ດີໃຫ້ແກ່ຄົນເຮົາ.
- ມີຄຸນຄ່າປຸກລະດົມນ້ຳໃຈຮັກຊາດ, ຮັກມະນຸດ, ຮັກຄວາມເປັນທຳ.
- ວັນນະຄະດີພື້ນເມືອງຍັງເປັນບົດຮຽນແຫ່ງຊີວິດຂອງປະຊາຊົນ.

**2.3. ການສອນຄຸນປະໂຫຍດຂອງວັນນະຄະດີພື້ນເມືອງ.**

- ຄູອະທິບາຍຄຸນປະໂຫຍດຂອງວັນນະຄະດີພື້ນເມືອງລາວ
- ຄູຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

1) ວັນນະຄະດີພື້ນເມືອງມີຄຸນປະໂຫຍດແນວໃດຕໍ່ການດຳລົງຊີວິດຂອງຄົນເຮົາ?

2) ວັນນະຄະດີພື້ນເມືອງລາວມີຄຸນປະໂຫຍດໃນການພັດທະນາຄວາມຮູ້, ຄວາມສາມາດໃຫ້ແກ່ຄົນເຮົາ ແນວໃດ?

- ຄູໃຫ້ນັກຮຽນມີສ່ວນຮ່ວມໃນການຄົ້ນຄິດ ເພື່ອສະແດງຄວາມຄິດເຫັນ.

ຈາກນັ້ນ ຄູສະຫຼຸບຄຳຕອບຂອງນັກຮຽນ ແລະ ອະທິບາຍໃຫ້ນັກຮຽນເຂົ້າໃຈກ່ຽວກັບຄຸນປະໂຫຍດຂອງວັນນະຄະດີພື້ນເມືອງຄື:

ວັນນະຄະດີພື້ນເມືອງລາວມີຄຸນປະໂຫຍດຕໍ່ການພັດທະນາຊາດ. ມີຄຸນປະໂຫຍດໃນການພັດທະນາຄວາມຮູ້, ຄວາມສາມາດໃຫ້ແກ່ຄົນໃນຍຸກສະໄໝປັດຈຸບັນ. ໃຫ້ຄູອະທິບາຍລະອຽດຕາມປຶ້ມແບບຮຽນ.

## 3. ການສອນປະເພດຂອງວັນນະຄະດີພື້ນເມືອງລາວ.

- ຄູອະທິບາຍກ່ຽວກັບປະເພດຂອງວັນນະຄະດີພື້ນເມືອງລາວຕາມປຶ້ມແບບຮຽນ.

ຄູຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

1) ວັນນະຄະດີພື້ນເມືອງລາວມີຈັກປະເພດ? ຄືປະເພດໃດແດ່?

2) ວັນນະຄະດີພື້ນເມືອງລາວ ປະເພດຄຳຮ້ອຍກອງ ແລະ ຄຳຮ້ອຍແກ້ວແຕກຕ່າງກັນແນວໃດ?

- ຄູໃຫ້ເວລານັກຮຽນສົນທະນາກັນເພື່ອຕອບຄຳຖາມ. ເມື່ອນັກຮຽນຕອບຄຳຖາມແລ້ວ ຄູກ່າວຄຳຊົມເຊີຍ, ສະຫຼຸບຄວາມຄິດເຫັນຂອງນັກຮຽນຄືນ ແລະ ອະທິບາຍຈຸດທີ່ນັກຮຽນບໍ່ທັນເຂົ້າໃຈ.

- ຄູໃຫ້ໂອກາດນັກຮຽນຖາມຄືນຈຸດທີ່ຍັງບໍ່ທັນເຂົ້າໃຈ

- ຄູຈັດນັກຮຽນເປັນກຸ່ມຕາມຄວາມເໝາະສົມ, ຈາກນັ້ນຄູໃຫ້ນັກຮຽນຄົ້ນຄວ້າບົດຮຽນຕາມເນື້ອໃນທີ່ຮຽນມາຄື:

- ຄູໃຫ້ຄຳຖາມແກ່ນັກຮຽນຕາມຫົວຂໍ້ຂອງບົດຮຽນໂດຍແບ່ງໃຫ້ແຕ່ລະກຸ່ມຕາມຄວາມເໝາະສົມດັ່ງນີ້:

+ ຄົ້ນຄວ້າກ່ຽວກັບຄວາມໝາຍຂອງວັນນະຄະດີພື້ນເມືອງລາວ.

+ ຄົ້ນຄວ້າກ່ຽວກັບການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.

+ ຄົ້ນຄວ້າກ່ຽວກັບຄຸນຄ່າ ແລະ ປະໂຫຍດຂອງວັນນະຄະດີພື້ນເມືອງລາວ.

+ ຄົ້ນຄວ້າກ່ຽວກັບປະເພດຂອງວັນນະຄະດີພື້ນເມືອງລາວ.

- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມຂຶ້ນລາຍງານ.

- ແຕ່ລະກຸ່ມປະກອບຄຳຄິດຄຳເຫັນເພື່ອໃຫ້ເນື້ອໃນສົມບູນຂຶ້ນ.

- ຄູຊີ້ແຈ້ງຄືນຜົນຂອງການຄົ້ນຄວ້າລາຍງານແຕ່ລະກຸ່ມ.

- ຄູສະຫຼຸບເນື້ອໃນໃຈຄວາມຂອງຄຳຖາມແຕ່ລະກຸ່ມຄືນໃຫ້ຊັດເຈນ.

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນຕື່ມອີກ.

- ຖ້ານັກຮຽນມີຂໍ້ຂ້ອງໃຈຄູຄວນອະທິບາຍຄືນເພື່ອໃຫ້ນັກຮຽນເຂົ້າໃຈບົດຮຽນຢ່າງເລິກເຊິ່ງ.

* ตอบคำถามท้ายบົດໃນປຶ້ມແບບຮຽນ

1. ວັນນະຄະດີພື້ນເມືອງລາວ ແມ່ນວັນນະຄະດີປະເພດໜຶ່ງທີ່ປະດິດແຕ່ງຂຶ້ນດ້ວຍປາກເປົ່າ ແລະ ເລົ່າສືບກັນມາແຕ່ສະໄໝບູຮານຈົນເຖິງປະຈຸບັນ. ມັນສ່ອງແສງປາກົດການທຳມະຊາດ, ສັງຄົມ, ແນວຄິດຈິດຕະສາດ ແລະ ຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າ.

- ວັນນະຄະດີພື້ນເມືອງກຳເນີດເກີດຂຶ້ນຕັ້ງແຕ່ສະໄໝບໍ່ທັນມີຕົວໜັງສື ແລະ ຂະຫຍາຍຕົວຕັ້ງແຕ່ກ່ອນມາຈົນເຖິງປັດຈຸບັນ, ເຊິ່ງແມ່ນປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດແຕ່ງຈາກເຫດການທຳມະຊາດ, ສັງຄົມ ທີ່ພົວພັນ ກັບການດຳລົງຊີວິດຂອງເຂົາເຈົ້າ.

2. ວັນນະຄະດີພື້ນເມືອງມີຄວາມສຳຄັນຕໍ່ການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີຂຽນ ຂອງລາວສະໄໝກ່ອນກໍຄືປັດຈຸບັນ, ມັນມີຄວາມສຳຄັນທີ່ສຸດຕໍ່ການດຳລົງຊີວິດ, ການຕໍ່ສູ້ຕ້ານໄພທຳມະຊາດ ແລະ ສັງຄົມ.

- ວັນນະຄະດີພື້ນເມືອງຍັງມີຄຸນຄ່າສະໜອງຄວາມຮູ້ດ້ານການປະດິດແຕ່ງວັນນະຄະດີ, ທາງດ້ານປະຫວັດສາດ ແລະ ຄວາມຮູ້ກ່ຽວກັບຄວາມອຸດົມຮັ່ງມີຂອງປະເທດຊາດບ້ານເມືອງ.

- ວັນນະຄະດີພື້ນເມືອງມີຄຸນຄ່າສຶກສາອົບຮົມແນວຄິດຄຸນສົມບັດ, ປຸກລະດົມນ້ຳໃຈຮັກຊາດ, ຮັກມະນຸດ, ຮັກຄວາມເປັນທຳ ແລະ ສຶກສາໃຫ້ຄົນເຮົາມີຄວາມດຸໝັ່ນພາກພຽນໃນການອອກແຮງງານ.

- ເນື້ອໃນ ແລະ ສິລະປະຂອງວັນນະຄະດີພື້ນເມືອງ ມີຄຸນປະໂຫຍດສາມາດນຳມາໃຊ້ໃນຍຸກສະໄໝປັດຈຸບັນເຊັ່ນ: ການປະດິດແຕ່ງເລື່ອງ, ກາບກອນ ສະໄໝປັດຈຸບັນລ້ວນແຕ່ອາໄສຫຼັກການ ແລະ ວິທີປະດິດແຕ່ງຈາກວັນນະຄະດີພື້ນເມືອງ.)

3. ວັນນະຄະດີພື້ນເມືອງລາວມີ 3 ປະເພດຄື:

- ປະເພດຄຳຮ້ອຍແກ້ວ ແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງ ເຊິ່ງປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດແຕ່ງຂຶ້ນດ້ວຍການພັນລະນາເຫດການ ແລະ ການເຄື່ອນໄຫວຂອງຕົວລະຄອນເພື່ອສ່ອງແສງວິຖີການດຳລົງຊີວິດ ແນວຄິດຈິດຕະສາດຂອງຄົນລາວເຊັ່ນ: ເທບນິຍາຍ, ພື້ນສືບ, ນິທານອັດສະຈັນ, ນິທານຊອນຫົວ, ນິທານສັດ.

- ປະເພດຄຳຮ້ອຍກອງ ແມ່ນວັນນະຄະດີພື້ນເມືອງລາວປະເພດໜຶ່ງເຊິ່ງແມ່ນປະຊາຊົນຜູ້ອອກແຮງງານ ລາວເປັນຜູ້ປະດິດແຕ່ງຂຶ້ນດ້ວຍກາບກອນມີການສຳພັດເກາະກ່ຽວກັນເຊັ່ນ: ຄຳໂອມ, ຄຳທອງ, ຄຳສຸພາສິດ, ຄຳພະຫຍາ, ຂັບລຳ ແລະ ເຊີ້ງ.

- ປະເພດການສະແດງຢູ່ເທິງເວທີ ແມ່ນວັນນະຄະດີພື້ນເມືອງປະເພດໜຶ່ງເຊິ່ງປະຊາຊົນຜູ້ອອກແຮງງານ ລາວເປັນຜູ້ປະດິດແຕ່ງຂຶ້ນດ້ວຍວິທີນຳເອົາບົດເລື່ອງ ແລະ ກາບກອນພື້ນເມືອງມາປະສົມກັບສິລະປະເທິງເວທີເຊັ່ນ: ແສງ, ສີ, ສຽງ ແລະ ທ່າທີກິລິຍາຂອງຕົວລະຄອນແລ້ວສະແດງຕາມສະຖານທີ່ຕ່າງໆເຊັ່ນ: ລຳເລື່ອງ, ລະຄອນກ້ອມ, ລະຄອນເວົ້າ, ລະຄອນຕຸກກະຕາ, ລະຄອນໃບ້, ລະຄອນເພງ ແລະ ອື່ນໆ

ຄູແນະນຳໃຫ້ນັກຮຽນອ່ານບົດຮຽນບົດຕໍ່ໄປເພື່ອສ້າງຄວາມເຂົ້າໃຈ, ຄວາມຮັບຮູ້ ແລະ ເພື່ອສະດວກໃນການສຶດສອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດຈາກ:

- ການອະທິບາຍຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.
- ການອະທິບາຍຄວາມສຳຄັນ, ຄຸນຄ່າ ແລະ ຄຸນປະໂຫຍດຂອງວັນນະຄະດີພື້ນເມືອງລາວ.
- ການຈຳແນກໄດ້ກ່ຽວກັບປະເພດຂອງວັນນະຄະດີພື້ນເມືອງລາວ.



ພິທີແຫ່ທຳ

# ບົດທີ 2

# ຄຳທວາຍ

ເວລາ 8 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ ການກຳເນີດ ແລະ ການຂະຫຍາຍຕົວຂອງຄຳທວາຍໄດ້.
- ອະທິບາຍເນື້ອໃນ ແລະ ຄຸນຄ່າຂອງຄຳທວາຍໄດ້.
- ອະທິບາຍດ້ານສິລະປະການປະດິດແຕ່ງຄຳທວາຍໄດ້.
- ອະທິບາຍລັກສະນະ ແລະ ຈຸດພິເສດຂອງຄຳທວາຍໄດ້.
- ຊອກຫາຈຸດພິເສດຂອງວັດຖຸ, ສັດ, ຄົນ, ເຄື່ອງໃຊ້ຕ່າງໆເພື່ອສ້າງເປັນຄຳທວາຍໄດ້.
- ຈັດຄຳທວາຍຕ່າງໆເປັນກຸ່ມຕາມເນື້ອໃນສ່ອງແສງຂອງຄຳທວາຍໄດ້.
- ວິພາກຄຳທວາຍໄດ້.

## II. ເນື້ອໃນຕົ້ນຕໍ.

- ຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງຄຳທວາຍ.
- ເນື້ອໃນຂອງຄຳທວາຍທີ່ເວົ້າເຖິງຄົນ ແລະ ສັດ.
- ເນື້ອໃນຂອງຄຳທວາຍທີ່ເວົ້າເຖິງພືກສາຊາດ ແລະ ເຄື່ອງໃຊ້.
- ເນື້ອໃນຂອງຄຳທວາຍທີ່ເວົ້າເຖິງການອອກແຮງງານ.
- ວິພາກຄຳທວາຍ.

## III. ສື່ການຮຽນ-ການສອນ.

- ປຶ້ມແບບຮຽນ ແລະ ຄູ່ມືຄູ ວິຊາວັນນະຄະດີຊັ້ນມັດທະຍົມປີທີໜຶ່ງ
- ປຶ້ມການກອນພື້ນເມືອງລາວ ໂດຍສະເພາະແມ່ນຄຳທວາຍ.

- ວັດຖຸເຄື່ອງໃຊ້ຕ່າງໆທີ່ກ່ຽວຂ້ອງກັບຄຳທວາຍ.

## IV. ກິດຈະກຳການຮຽນ-ການສອນ

### ການນຳເຂົ້າສູ່ບົດຮຽນ

ກ່ອນນຳເຂົ້າສູ່ບົດຮຽນບົດນີ້ຄູອາດຖາມຄວາມຮູ້ພື້ນຖານກ່ຽວກັບຄຳທວາຍກັບນັກຮຽນດ້ວຍວິທີໃຫ້ນັກຮຽນຍົກຄຳທວາຍໃດໜຶ່ງທີ່ເຂົາເຈົ້າຮູ້ຜ່ານມາມາທວາຍ ແລະ ຕອບກັນ, ທັງນີ້ກໍເພື່ອສ້າງຄວາມສົນໃຈໃຫ້ແກ່ນັກຮຽນ ຫຼື ຄູອາດຈະເປັນຜູ້ຕັ້ງຄຳທວາຍໃຫ້ນັກຮຽນຕອບ.

### 1. ການສອນຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງຄຳທວາຍ.

#### 1.1. ຄວາມໝາຍຂອງຄຳທວາຍ.

- ຄູຕັ້ງຄຳຖາມສົນທະນາກ່ຽວກັບຄຳທວາຍກັບນັກຮຽນ.
- ຄູອະທິບາຍຄວາມໝາຍຂອງຄຳທວາຍຕາມປຶ້ມແບບຮຽນ.

ຄູຂຽນຄວາມໝາຍຂອງຄຳທວາຍໃສ່ກະດານ ຫຼື ອ່ານໃຫ້ນັກຮຽນຈົດກ່ຽວກັບຄວາມໝາຍຂອງຄຳທວາຍດັ່ງນີ້:

ຄຳທວາຍ ແມ່ນວັນນະຄະດີພື້ນເມືອງປະເພດໜຶ່ງ, ເຊິ່ງແມ່ນປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດແຕ່ງຂຶ້ນດ້ວຍວິທີຍົກເອົາຈຸດພິເສດ, ລັກສະນະສະເພາະຂອງຄົນ, ສັດ, ວັດຖຸສິ່ງຂອງ ແລະ ພືດພັນຕ່າງໆມາທວາຍໂດຍໃຊ້ການປຽບທຽບ ຫຼື ເວົ້າແບບເຊື່ອງບັງຄວາມໝາຍ, ເພື່ອໃຫ້ຜູ້ຖືກທວາຍຄົ້ນຄິດແລ້ວແກ້ຕອບຄຳທວາຍດັ່ງກ່າວ.

- ຄູຍົກເອົາຄຳທວາຍໃດໜຶ່ງຂຶ້ນມາແລ້ວອະທິບາຍໃຫ້ນັກຮຽນເຂົ້າໃຈກ່ຽວກັບຈຸດພິເສດ, ລັກສະນະສະເພາະຂອງຄົນ, ສັດ ແລະ ພືດມາທວາຍເພື່ອປຽບທຽບຫຼືເວົ້າເຊື່ອງບັງຄວາມໝາຍ.

ຕົວຢ່າງ: ຄຳທວາຍທີ່ວ່າ:

ຍາມຍັງນ້ອຍເປັນຍັກໂຂໂນ ໃຫຍ່ເຕັມໂຕເຂົ້າຫໍຜາສາດ
ໝົດຊາດແລ້ວຂຶ້ນເມືອງສະຫວັນ ຍັກກຸມພັນແກ່ຄໍໄປຂ້າ ແມ່ນຫຍັງ?

ຄຳທວາຍນີ້ເພິ່ນໄດ້ຍົກເອົາຈຸດພິເສດຂອງໂຕມ້ອນທີ່ມີຮູບຮ່າງຄືກັບບ້ຽ, ໂຕມ້ອນມັນກິນໃບມອນເປັນອາຫານ ເພິ່ນໄດ້ປຽບທຽບໂຕມ້ອນໃສ່ຍັກ. ເມື່ອມັນໃຫຍ່ເຕັມໂຕມັນໄດ້ສານຮັງເປັນຝັກຫຼອກແລ້ວໂຕມ້ອນໄດ້ເຂົ້າໄປຢູ່ທາງໃນຂອງຝັກຫຼອກເຊິ່ງເປັນເຮືອນຂອງໂຕມ້ອນ. ເພິ່ນໄດ້ປຽບທຽບຝັກຫຼອກເປັນຫໍຜາສາດ, ເມື່ອໂຕມ້ອນເຂົ້າຢູ່ໃນຝັກຫຼອກໃນໄລຍະໜຶ່ງ, ໂຕມ້ອນໄດ້ກາຍເປັນໂຕດັກແດ້ ນອນມິດຢູ່ໃນຝັກຫຼອກ. ໄລຍະນີ້ ເພິ່ນໄດ້ປຽບທຽບໂຕດັກແດ້ໄດ້ຂຶ້ນເມືອງສະຫວັນ. ຕໍ່ມາຄົນໄດ້ນຳເອົາຝັກຫຼອກ

ໄປສາວເອົາໄໝ, ຄົນໄດ້ເອົາຝັກຫຼອກຈຸ່ມລົງໜ້ຳຮ້ອນເພິ່ນປຽບທຽບຄົນເປັນຍັກກຸມພັນຂ້າໂຕດັກແດ້ຢູ່ໃນຝັກຫຼອກ.

ດັ່ງນັ້ນ ຜູ້ແຕ່ງຄຳທວາຍ ຈຶ່ງໄດ້ຍົກເອົາຈຸດພິເສດຂອງໂຕມ້ອນ, ຝັກຫຼອກ, ຄົນມາສ້າງເປັນຄຳທວາຍທີ່ມີຄວາມໝາຍປຽບທຽບດັ່ງນີ້:

| | |
|---|---|
| ຍາມຍັງນ້ອຍເປັນຍັກໂຂໂນ | ແມ່ນໂຕມ້ອນ |
| ໃຫຍ່ເຕັມໂຕເຂົ້າທໍ່ຜາສາດ | ແມ່ນໂຕມ້ອນເຂົ້າຢູ່ໃນຝັກຫຼອກ |
| ໜົດຊາດແລ້ວຂຶ້ນເມືອງສະຫວັນ | ແມ່ນໂຕດັກແດ້ຢູ່ໃນຝັກຫຼອກ |
| ຍັກກຸມພັນແກ່ຄໍໄປຂ້າ | ແມ່ນຄົນເອົາຝັກຫຼອກຈຸ່ມລົງໜ້ຳ |
| ຮ້ອນເພື່ອສາວໄໝ | |

**1.2. ການສອນການກຳເນີດ ແລະ ການຂະຫຍາຍຕົວຂອງຄຳທວາຍ.**

- ຄູອະທິບາຍການກຳເນີດ ແລະ ການຂະຫຍາຍຕົວຂອງຄຳທວາຍຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

1) ຄຳທວາຍໄດ້ມີການກຳເນີດຄືແນວໃດ?

2) ຄຳທວາຍໄດ້ຂະຫຍາຍຕົວຄືແນວໃດ?

- ຄູໃຫ້ນັກຮຽນ 2-3 ຄົນຕອບຄຳຖາມ.

- ຄູສະຫຼຸບຄຳຕອບຂອງນັກຮຽນແລ້ວບັນຍາຍໃຫ້ນັກຮຽນເຂົ້າໃຈເຖິງການກຳເນີດ ແລະ ການຂະຫຍາຍຕົວຂອງຄຳທວາຍຕາມປຶ້ມແບບຮຽນ.

## 2. ການສອນເນື້ອໃນຂອງຄຳທວາຍ

### 2.1. ຄຳທວາຍທີ່ເວົ້າເຖິງຄົນ ແລະ ສັດ

- ຄູອະທິບາຍໃຫ້ນັກຮຽນເຂົ້າໃຈວ່າ ລັກສະນະພິເສດຂອງຄົນ ແລະ ສັດກໍສາມາດສ້າງເປັນຄຳທວາຍໄດ້ (ໃຫ້ຄູອະທິບາຍລະອຽດຕາມປຶ້ມແບບຮຽນ) ຈາກນັ້ນ ຄູຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄ້ວາດັ່ງນີ້:

1) ຈົ່ງຊອກຫາຄຳທວາຍທີ່ເວົ້າເຖິງລັກສະນະພິເສດຂອງຄົນ ແລະ ສັດ?

2) ຈຸດພິເສດຂອງຄົນ ແລະ ສັດ ສະແດງອອກໃນຄຳທວາຍຄືແນວໃດ?

- ຄູໃຫ້ນັກຮຽນສົນທະນາກັນເພື່ອຕອບຄຳຖາມ, ເມື່ອນັກຮຽນຕອບຄຳຖາມແລ້ວຄູສະຫຼຸບຄຳຕອບຂອງນັກຮຽນ.
- ຄູຍົກເອົາຄຳທວາຍໃດໜຶ່ງ ທີ່ເວົ້າເຖິງຄົນ ແລະ ສັດມາເປັນຕົວຢ່າງແລ້ວອະທິບາຍໃຫ້ນັກຮຽນເຂົ້າໃຈເຊັ່ນ:

* ຄຳທວາຍທີ່ເວົ້າເຖິງຄົນ.

ກົກພໍ່ກຳ ລຳພໍ່ກອດ ຍອດດຳປົກແມ່ນຫຍັງ?

ຕອບ:

ກົກພໍ່ກຳ ແມ່ນ ແຄ່ງ.

ລຳພໍ່ກອດ ແມ່ນ ເລົ້າຄີງ

ຍອດດຳປົກ ແມ່ນ ຜົມ

ຄຳຫວ່າຍນີ້ເພິ່ນໄດ້ຍົກເອົາຈຸດພິເສດຂອງຄົນຄື:

- ແຄ່ງຂອງຄົນໃຫຍ່ພໍ່ກຳ.

- ເລົ້າຄີງຂອງຄົນໃຫຍ່ພໍ່ກອດ.

- ຍອດດຳປົກຂອງຄົນຄືຜົມ.

ຈາກນັ້ນ ຄູຄວນຍົກເອົາຄຳຫວ່າຍຫຼາຍຄຳທີ່ເວົ້າເຖິງຈຸດພິເສດ, ລັກສະນະສະເພາະຂອງຄົນ ຂຶ້ນມາເປັນຕົວຢ່າງແລ້ວອະທິບາຍໃຫ້ນັກຮຽນເຂົ້າໃຈ.

* ຄຳຫວ່າຍທີ່ເວົ້າເຖິງສັດ

ຄຳຫວ່າຍທີ່ເວົ້າເຖິງການເຄື່ອນໄຫວ ຫຼື ຮູບຮ່າງ, ລັກສະນະຂອງສັດເຊັ່ນ:

ເຫຼັກຊີແດງ ແທງຕະຝັ່ງແມ່ນຫຍັງ?.

ຄຳຫວ່າຍນີ້ເພິ່ນໄດ້ຍົກເອົາຈຸດພິເສດຂອງ ອ່ຽນ, ຂີ້ກະເດືອນ ທີ່ມີຮູບຮ່າງຄືເຫຼັກຊີ ແລະ ສາມາດບຸ່ນ ຫຼື ຊີເຂົ້າໃນພື້ນດິນ ຫຼື ຕະຝັ່ງໄດ້.

- ຜູ້ແຕ່ງຄຳຫວ່າຍຈຶ່ງຍົກເອົາຈຸດພິເສດດັ່ງກ່າວມາສ້າງເປັນຄຳຫວ່າຍ, ດັ່ງນັ້ນ, ຄຳຫວ່າຍນີ້ ຈຶ່ງມີຄວາມໝາຍວ່າ: (ອ່ຽນ ແລະ ຂີ້ກະເດືອນ)

- ຄູອາດຈະຍົກເອົາຄຳຫວ່າຍຫຼາຍໆຄຳທີ່ເວົ້າເຖິງຈຸດພິເສດຂອງສັດມາເປັນຕົວຢ່າງເພື່ອອະທິບາຍ ໃຫ້ນັກຮຽນເຂົ້າໃຈຕື່ມ.

**2.2. ການສອນຄຳຫວ່າຍທີ່ເວົ້າເຖິງພືກສາຊາດ ແລະ ເຄື່ອງໃຊ້.**

- ຄູຄວນອະທິບາຍຕາມປຶ້ມແບບຮຽນເພື່ອໃຫ້ນັກຮຽນເຂົ້າໃຈວ່າ: ພືກສາຊາດ ແລະ ເຄື່ອງໃຊ້ກໍສາມາດມາສ້າງເປັນຄຳຫວ່າຍໄດ້.

- ຄູຕັ້ງຄຳຖາມ ໃຫ້ນັກຮຽນຄົ້ນຄວ້າ:

1) ຈົ່ງຍົກເອົາຄຳຫວ່າຍທີ່ເວົ້າເຖິງພືກສາຊາດ ແລະ ເຄື່ອງໃຊ້?

2) ຄູໃຫ້ນັກຮຽນຍົກເອົາຄຳຫວ່າຍ 2-3 ຄຳ ມາຫວ່າຍແລ້ວແກ້-ຕອບກັນ.

3) ຄູສະຫຼຸບຄຳຕອບຂອງນັກຮຽນ ພ້ອມທັງຍົກເອົາຄຳຫວ່າຍມາເປັນຕົວຢ່າງຄື:

ບັກນ້ອຍໆ ເອົາຂີ້ຟອຍຮອງນັ່ງແມ່ນຫຍັງ?.

ຄຳຫວ່າຍຄຳນີ້ ຜູ້ແຕ່ງໄດ້ສັງເກດເຫັນຈຸດພິເສດຂອງຜັກບົ່ວ, ຜັກຫຽມ ທີ່ເປັນພືດຊະນິດໜຶ່ງ, ເພິ່ນຫຽບຫົວຜັກບົ່ວ, ຜັກຫຽມວ່າແມ່ນບັກນ້ອຍໆ, ຮາກຂອງມັນຫຽບໃສ່ຟອຍເຊິ່ງບັກນ້ອຍໆ ເອົາມາຮອງນັ່ງ. ຜູ້ແຕ່ງໄດ້ອີງໃສ່ຈຸດພິເສດຂອງຜັກບົ່ວ-ຜັກຫຽມຈຶ່ງໄດ້ສ້າງເປັນຄຳຫວ່າຍ.

ດັ່ງນັ້ນຄຳທວາຍ ນີ້ມີຄວາມໝາຍວ່າຜັກບົ່ວ ແລະ ຜັກທຽມ.

ນອກຈາກນີ້ ຄູຄວນຍົກເອົາຄຳທວາຍຈຳນວນໜຶ່ງທີ່ເວົ້າເຖິງພືກສາຊາດມາອະທິບາຍໃຫ້ນັກຮຽນເຂົ້າໃຈເຖິງລັກສະນະ ແລະ ຈຸດພິເສດຂອງພືກສາຊາດຊະນິດຕ່າງໆ ກໍສາມາດສ້າງເປັນຄຳທວາຍໄດ້ເຊັ່ນ:

- ເຕົ້ານ້ຳນ້ອຍ ທ້ອຍຢູ່ປາຍຫຼັກ
ຕັກກໍເຕັມ ບໍ່ຕັກກໍເຕັມ ແມ່ນຫຍັງ? (ໝາກພ້າວ)
- ຕ່ຳອໍ້ປ້ ມີຂໍ້ສູ່ຕາ ແມ່ນຫຍັງ? (ໝາກນັດ)
- ນອກນີ້ຄູມີຄຳທວາຍອື່ນໆອີກທີ່ກ່ຽວກັບເຄື່ອງໃຊ້ໃນຊີວິດປະຈຳວັນຂອງຄົນເຮົາກໍສາມາດສ້າງເປັນຄຳທວາຍເຊັ່ນ:
- ໝູແມ່ມານ ຄານລົງນ້ຳ ແມ່ນຫຍັງ? (ໄຊໃສ່ປາ)
- ໂຕຫຍັງບໍ່ມີຂົນ ຮູ້ເກືອກບວກ? (ບ່ວງ)
- ອີ່ມະລຸງພຸງຜົ້ວ ຜິວບໍ່ມີເຫຼືອຕາຍແຕ່ລູກຖີ່ ແມ່ນຫຍັງ? (ແຫ)
- ຄູຄວນອະທິບາຍລັກສະນະພິເສດຂອງເຄື່ອງໃຊ້ແຕ່ລະຊະນິດທີ່ຜູ້ແຕ່ງສາມາດນຳມາສ້າງເປັນຄຳທວາຍໄດ້.
- ຄູໃຫ້ນັກຮຽນເລືອກເອົາວັດຖຸໃດໜຶ່ງເຊັ່ນ: ປຶ້ມ, ບິກ, ຜັດລົມ ຫຼື ອຸປະກອນຕ່າງໆທີ່ມີໃນຫ້ອງຮຽນຍົກຂຶ້ນມາເພື່ອຊອກຫາຈຸດພິເສດຂອງວັດຖຸນັ້ນແລ້ວສ້າງເປັນຄຳທວາຍເຊັ່ນ: ບິກເຮົາຕ້ອງຊອກຫາຈຸດພິເສດຂອງບິກທາງດ້ານຄຸນປະໂຫຍດ, ຮູບຮ່າງຄື: ບິກ ມັນມີຮູບຮ່າງກົມໆຄືກັບທຽນມີຄຸນປະໂຫຍດສຳລັບຂຽນໜັງສື. ດັ່ງນັ້ນ, ເຮົາອາດສ້າງເປັນຄຳທວາຍວ່າ: ແມ່ນຫຍັງນ້ອຍໆກົມໆຄືກັບທຽນຂຽນອອກເປັນຮອຍ ດັ່ງນີ້ເປັນຕົ້ນ.

**2.3. ການສອນຄຳທວາຍທີ່ເວົ້າເຖິງການອອກແຮງງານ.**

- ຄູອະທິບາຍໃຫ້ນັກຮຽນເຂົ້າໃຈວ່າ: ຜ່ານການອອກແຮງງານ ເຂົາເຈົ້າໄດ້ສັງເກດເຄື່ອງມື, ຮູບພາບ ຂອງການອອກແຮງງານມາປຽບທຽບກັບສິ່ງໃດສິ່ງໜຶ່ງ ທີ່ເຫັນວ່າຄ້າຍຄືກັນເພື່ອເຊື່ອງຊ້ອນຄຳຕອບເອົາໄວ້ເຊັ່ນຄຳທວາຍທີ່ວ່າ:

- ແມ່ມັນຮ້ອງກິກໆ ລູກມັນຕົກຍ່ອາໆ ແມ່ນຫຍັງ? (ຟັນໄມ້)

ຄຳທວາຍນີ້ຄູຄວນອະທິບາຍ ຄຳວ່າ ແມ່ມັນຮ້ອງກິກໆ ເຊິ່ງຜູ້ແຕ່ງຄຳທວາຍໄດ້ຍົກເອົາສຽງຂວານ ຫຼື ພ້າທີ່ຟັນໄມ້ແລ້ວ ມີສຽງດັງກິກໆ. ຄຳວ່າລູກມັນຕົກຍ່ອາໆ ແມ່ນຂີ້ພ້າ ຫຼື ຂີ້ຂວານທີ່ຕົກລົງດິນຍ່ອາໆ. ດັ່ງນັ້ນ, ຄຳຕອບຂອງຄຳທວາຍນີ້ແມ່ນການຟັນໄມ້.

- ຜີບ້າໄປກ່ອນ ຫູໜວກຢູ່ກາງ ຕາຟາງນຳກົ້ນແມ່ນຫຍັງ?.
- ຄູພານັກຮຽນຈຳແນກຄວາມໝາຍຂອງຄຳທວາຍຄດັ່ງທີ່ກ່າວມານັ້ນ (ຄຳຕອບຕາມປຶ້ມແບບຮຽນ).

- ຄູຈັດນັກຮຽນເປັນກຸ່ມຕາມຄວາມເໝາະສົມແລ້ວເອົາຄຳຖາມໃຫ້ນັກຮຽນຄົ້ນຄວ້າເພື່ອຂຶ້ນລາຍງານ.

- ຄູໃຫ້ນັກຮຽນແຕ່ລະກຸ່ມຕອບຄຳທວາຍທີ່ໃຫ້ໄປແລ້ວນັ້ນມາລາຍງານເຖິງຈຸດພິເສດ ຫຼື ລັກສະນະສະເພາະຂອງສິ່ງທີ່ທວາຍນັ້ນວ່າເພິ່ນອີງໃສ່ຈຸດພິເສດ ແລະ ລັກສະນະອັນໃດຂອງສິ່ງນັ້ນມາທວາຍ.

- ຄູໃຫ້ນັກຮຽນເລືອກເອົາວັດຖຸໃດໜຶ່ງ ແລ້ວຊອກຫາຈຸດພິເສດ ຫຼື ລັກສະນະສະເພາະໃດໜຶ່ງຂອງວັດຖຸນັ້ນມາສ້າງເປັນຄຳທວາຍ.

## 3. ການສອນວິພາກ.

### 3.1 ການຈັດກຸ່ມເນື້ອໃນຂອງຄຳທວາຍ.

- ຄູແນະນຳນັກຮຽນເອົາຄຳທວາຍໃນບົດອ່ານເພີ່ມ ມາຈັດກຸ່ມຕາມເນື້ອໃນ.
- ຄູຕັ້ງຄຳຖາມຕາມກຸ່ມຂອງເນື້ອໃນດັ່ງນີ້:

1) ຄຳທວາຍທີ່ເວົ້າເຖິງຄົນ ແລະ ສັດ.

2) ຄຳທວາຍທີ່ເວົ້າເຖິງພືກສາຊາດ ແລະ ເຄື່ອງໃຊ້.

3) ຄຳທວາຍທີ່ເວົ້າເຖິງການອອກແຮງງານ.

ເມື່ອນັກຮຽນຈັດກຸ່ມຕາມເນື້ອໃນຄຳທວາຍແລ້ວຂຶ້ນລາຍງານ.

- ຄູສະຫຼຸບ ແລ້ວຫາຄຳຕອບທີ່ຖືກຕ້ອງດັ່ງນີ້:

1) ຄຳທວາຍທີ່ເວົ້າເຖິງຄົນ ແລະ ສັດ

+ ຄຳທວາຍທີ່ເວົ້າເຖິງຄົນ

ຕົວຢ່າງ:

- ສອງຜູ້ເຖົ້າລຽບເລົ້າບໍ່ເຫັນກັນ ແມ່ນ ຫູ.
- ໜ້ານ້ອຍໆຍິງລອດໄປໄກ ແມ່ນ ຕາ.
- ໄມ້ນ້ອຍໆຖິ້ມຢູ່ກາງທາງ ຊ້າງຢຽບບໍ່ຫັກ ແມ່ນ ເສັ້ນຜົມ.
- ຫີບລັບ ຈັບກະຕໍ ແມ່ນ ເລັບມື.

+ ຄຳທວາຍທີ່ເວົ້າເຖິງສັດ.

ຕົວຢ່າງ:

- ນັກນ້ອຍໆນຸ່ງເສື້ອລາຍປັກ ລັກກິນຂອງອາດຍາກໍໄດ້ ແມ່ນ ແມງວັນ.
- ຄົນສາມແສນຫາມແກ່ນໄມ້ດູ ແມ່ນ ບ້ວງກ.
- ບໍ່ມີຫົວ ບໍ່ມີຫາງ ໄຕ່ທາງໆບໆ ແມ່ນ ກະປູ.
- ດອກໜຶ່ງບານໃນຖ້ຳ ສອງຕີນຢັນຄູ້ເຂົ່າ ແມ່ນ ໂຕຈິ່ນາຍ.

2) ຄຳທວາຍທີ່ເວົ້າເຖິງພຶກສາຊາດ ແລະ ເຄື່ອງໃຊ້.

+ ຄຳທວາຍທີ່ເວົ້າເຖິງພຶກສາຊາດ.

ຕົວຢ່າງ:

- ກິກມັນທ່ໍລຳທຽນ ໝາກມັນລຽນນຳ້ານ ແມ່ນ ຮວງເຂ້ົາ.
- ກິກມັນຕາຍ ປາຍມັນຕາກ ໝາກມັນໄດ້ສີ່ຊ້ຳຫ້ຳແສນ ແມ່ນ ກິກໝາກຄໍ້.
- ຜູ້ເປັນອ້າຍນັ່ງລຸ່ມ ຜູ້ເປັນນ້ອງນັ່ງເທິງ ແມ່ນ ໝາກຫຸ່ງ.
- ເດັກນ້ອຍໆໝອຍອອກຈອມຂວັນ ແມ່ນ ໝາກສາລີ.

+ ຄຳທວາຍທີ່ເວົ້າເຖິງເຄື່ອງໃຊ້.

ຕົວຢ່າງ:

- ກິກມັນຢູ່ຟາກນີ້ ປາຍມັນຊີ້ຟາກນັ້ນ ແມ່ນ ຄັນເບັດ.
- ກິນແຕ່ໄສ້ ເອົາໜັງໄວ້ເຮັດແນວ ແມ່ນ ຕີບເຂ້ົາ.
- ຫົວຖືກຸບ ເອົາຕີນຈຸ່ມນ້ຳ ແມ່ນ ມວຍໜ້ຶງເຂ້ົາ.
- ຕັ້ງພ້ໍ້ ຢອງຕໍ່ກັ້ງແດດ ແມ່ນ ຄັນຮົ່ມ

3) ຄຳທວາຍທີ່ເວົ້າເຖິງການອອກແຮງງານ.

ຕົວຢ່າງ:

- ຊ້ຳງຂົ້ນພູ ພັບຫູ ວາບໆ ແມ່ນ ຄົນຕ່ຳຫູກ.
- ແມ່ມັນຮ້ອງອີ່ໆ ລູກມັນພີອັ້ນລັ້ນ ແມ່ນ ຄົນເຂັນຝ້າຍ.
- ກິນຟາກນີ້ໄປຂີ້ຟາກນັ້ນ ແມ່ນ ຫຼາອົ້ວຝ້າຍ.

**3.2 ສິລະປະຂອງຄຳທວາຍ.**

- ຄູບັນຍາຍສິລະປະການແຕ່ງຄຳທວາຍ ໂດຍອີງຕາມປຶ້ມແບບຮຽນ.
- ຄູຍົກເອົາຄຳທວາຍໃດໜຶ່ງທີ່ມີການສຳຜັດກັນ ຢູ່ໃນປຶ້ມແບບຮຽນມາອະທິບາຍໃຫ້ນັກຮຽນເຂ້ົາໃຈ.
- ຄູຄວນໃສ່ໃຈເນັ້ນໜັກໃຫ້ນັກຮຽນຮູ້ວ່າຮູບແບບການປະດິດແຕ່ງຄຳທວາຍມີຫຼາຍວິທີຄື:

+ ວິທີປຽບທຽບ.

+ ວິທີໃຊ້ຄຳຖາມໂດຍກົງ.

+ ວິທີປິ້ນຄວາມ.

ໃຫ້ຄູອະທິບາຍ ແລະ ຍົກຕົວຢ່າງຕາມປຶ້ມແບບຮຽນ.

* ຕອບຄຳຖາມທ້າຍບົດໃນປຶ້ມແບບຮຽນ

1.ຄຳທວາຍ ແມ່ນວັນນະຄະດີພື້ນເມືອງປະເພດໜຶ່ງທີ່ເວົ້າເຖິງຈຸດພິເສດ,ລັກສະນະສະເພາະຂອງຄົນ,

ສັດ, ວັດຖຸເຄື່ອງໃຊ້ ແລະ ພືດຕ່າງໆມາຫວາຍໂດຍໃຊ້ການປຽບທຽບ ຫຼື ເວົ້າແບບເຊື່ອງບັງຄວາມໝາຍ ເພື່ອໃຫ້ຜູ້ຖືກຫວາຍຄົ້ນຄິດແລ້ວແກ້ ຫຼື ຕອບຄຳຫວາຍດັ່ງກ່າວ.

2. ຄຳຫວາຍໄດ້ກຳເນີດເກີດມາຈາກການອອກແຮງງານຂອງຄົນເຮົາແຕ່ສະໄໝບູຮານ. ສະນັ້ນ, ການຂະຫຍາຍຕົວຂອງຄຳຫວາຍໄດ້ຕິດພັນສະໜິດແໜ້ນກັບທຳມະຊາດ ແລະ ສະພາບແວດລ້ອມຂອງຄົນເຮົາ. ເມື່ອຊີວິດດ້ານເສດຖະກິດ ແລະ ສັງຄົມມີການພັດທະນາຂຶ້ນ, ສະພາບແວດລ້ອມຂອງຄົນເຮົາກໍມີການປ່ຽນແປງໄປນຳ ເນື້ອໃນຂອງຄຳຫວາຍກໍຫັນປ່ຽນ ແລະ ຂະຫຍາຍຕົວໄປນຳຢ່າງບໍ່ຢຸດຢັ້ງ.

3. ພືກສາຊາດ ແລະ ເຄື່ອງໃຊ້ເປັນສິ່ງທີ່ຕິດພັນຢ່າງສະໜິດແໜ້ນ ກັບການດຳລົງຊີວິດຂອງຄົນເຮົາ ດັ່ງນັ້ນຜູ້ແຕ່ງ ຄຳຫວາຍໄດ້ອີງໃສ່ຈຸດພິເສດຂອງພືກສາຊາດ ແລະ ເຄື່ອງໃຊ້ ເພື່ອມາສ້າງເປັນຄຳຫວາຍ

ຕົວຢ່າງ:

- ໄກ່ແມ່ແດງນອນສະແຄງຢູ່ປາຍໄມ້ ແມ່ນຫຍັງ? (ປີ້ກ້ວຍ)
- ອີ່ມະລຸງພຸງພົ້ວ ຜົວບໍ່ມີເຫຼືອຕາຍແຕ່ລູກຖີ່ ແມ່ນຫຍັງ? (ແຫ)

4. ຄຳຫວາຍທີ່ເວົ້າເຖິງການອອກແຮງງານກໍແມ່ນໄດ້ມາຈາກການສັງເກດເຄື່ອງມື, ຮູບພາບຂອງການອອກແຮງງານໂດຍເອົາເຄື່ອງມື ຫຼື ຮູບພາບມາປຽບທຽບກັບສິ່ງໃດສິ່ງໜຶ່ງທີ່ເຫັນວ່າຄ້າຍຄືກັນເພື່ອເຊື່ອງຊ້ອນຄຳຕອບເອົາໄວ້ເຊັ່ນ ຄຳຫວາຍທີ່ວ່າ: ແມ່ມັນຮ້ອງອີ່ໆ ລູກມັນພີອ້ັນລັ້ນໆ ແມ່ນການເຍັນຝ້າຍ ແລະ ອື່ນໆ.

5. ສິລະປະຂອງຄຳຫວາຍ ສ້າງຂຶ້ນດ້ວຍວິທີປຽບທຽບໂດຍອີງໃສ່ຈຸດພິເສດ, ລັກສະນະສະເພາະຂອງວັດຖຸສິ່ງຂອງ, ສັດ, ຄົນ ແລະ ພືດ, ແບບໃຊ້ຄຳຖາມໂດຍກົງ ແລະ ແບບປິ້ນຄວາມໝາຍ.


* ຄູແນະນຳໃຫ້ນັກຮຽນອ່ານບົດຮຽນບົດຕໍ່ໄປ ຕາມປຶ້ມແບບຮຽນເພື່ອສ້າງຄວາມເຂົ້າໃຈ ແລະ ສະດວກໃນການສອນບົດຕໍ່ໄປ.

## V. ການວັດ ແລະ ປະເມີນຜົນ.

ສັງເກດຈາກ:

- ການອະທິບາຍຄວາມໝາຍ ການກຳເນີດ ແລະ ການຂະຫຍາຍຕົວຂອງຄຳຫວາຍ.
- ການອະທິບາຍເນື້ອໃນ ແລະ ຄຸນຄ່າຂອງຄຳຫວາຍ.
- ການອະທິບາຍດ້ານສິລະປະການປະດິດແຕ່ງຄຳຫວາຍ.
- ການອະທິບາຍລັກສະນະ ແລະ ຈຸດພິເສດຂອງຄຳຫວາຍ.
- ການຊອກຫາຈຸດພິເສດຂອງວັດຖຸ, ສັດ, ຄົນ, ເຄື່ອງໃຊ້ຕ່າງໆເພື່ອສ້າງເປັນຄຳຫວາຍ.

- ภาบจัดลำหวายต่างๆเป็นภุ่มตามเมื้อใบส่องแสงของลำหวาย.
- ภาบวิผาภลำหวาย.



ໜ້ງສືໃบลาบ

**ແກ້ຄຳຫວາຍໃນບົດອ່ານເພີ່ມ.**

1. ສອງໂຕລີງຊີງກັນໄປກ່ອນ ແມ່ນ ຕີນ.
2. ນ້ອຍໆທໍ່ຝາມືຟືໄປທົ່ວທົ່ງກ້ວາງ ແມ່ນ ຕາເວັນ.
3. ສູງກ່ວາຟ້າ ແມ່ນ ໜ້າຜາກ.
4. ຜູ້ເຫັນບໍ່ເອົາ ແມ່ນຕາ.
5. ຜ້ເອົາບໍ່ກິນ ແມ່ນມື.
6. ຜູ້ກິນບໍ່ຂີ້ ແມ່ນປາກ.
7. ຜູ້ຂີ້ບໍ່ເໝັນ ແມ່ນກົ້ນ.
8. ນ້ອຍອ່ອງແອ່ງແອວກໍ່ແມງໄຍ ລົງຂັ້ນໄດເອົາຫົວລົງກ່ອນ ແມ່ນໝາ.
9. ໂຕຫຍັງຕຸ້ຍຜີ ດຸດດິນກໍໄດ້ ຫາງສັ້ນກິດດິດ ຮ້ອງດັງອູດອີດ ກິນອີ່ມແລ້ວນອນໃນຄອກຂອງມັນ ແມ່ນ ໝູ.
10. ເຮືອນເສົາດຽວມີສີ່ແສນຫ້ອງ ແຕ່ລະຫ້ອງມີຜູ້ເຝົ້າເຮືອນ ແມ່ນຮັ້ງເຜິ້ງ ຮັ້ງຕໍ່.
11. ບໍ່ມີຕີນຮູ້ຂຶ້ນຜາ ແມ່ນງູ,
    ບໍ່ມີຕາຮູ້ຂຶ້ນໄມ້ ແມ່ນເຄືອເຂົາ,
    ບໍ່ມີໄສ້ຮູ້ກິນຄົນ ແມ່ນປີງ, ຫາກ.
    ບໍ່ມີຂົນຮູ້ເກືອກບວກ ແມ່ນບ່ວງ.
12. ຍາມຍັງນ້ອຍ ນຸ່ງເສື້ອຍາວ ໃຫຍ່ເປັນສາວນຸ່ງເສື້ອສັ້ນ ເມື່ອເຖົ້າມາ ພັດນຸ່ງເສື້ອສີເຫຼືອງ ແມ່ນ ໝາກເຂືອ.
13. ກົກຫວາຍ ປາຍເຊືອກ ແມ່ນ ຄີນ (ຫ້າງເອົານົກ).
14. ບັກນ້ອຍໆນຸ່ງເສື້ອລາຍປັກ ລັກກິນຂອງອາດຍາກໍໄດ້ ແມ່ນແມງວັນ.
15. ກົ່ງໂຄ້ງໂນ້ງ ຂ້າມທົ່ງສາມແສນ ແມ່ນ ຮຸ່ງກິນນ້ຳ.
16. ກົກມັນຢູ່ດິນດາກ ຮາກມັນຢູ່ດິນພຽງ ໃບມັນປົນຢູ່ນຳຊຽງສິກໃໝ່ ແມ່ນໃບລານ.
17. ກົກມັນຢູ່ຟາກນີ້ ປາຍມັນຊີ້ຟາກນັ້ນ ແມ່ນຄັນເບັດ.
18. ກົກມັນຕາຍ ປາຍມັນຕາກ ໝາກມັນໄດ້ສີ່ຊ້າຫ້າແສນ ແມ່ນກົກໝາກຄໍ້.
19. ກົກມັນໃຫຍ່ທໍ່ເຮືອ ໃບມັນກິນກັບເກືອກໍໄດ້ ແມ່ນໃບໝາກຂາມ.
20. ກົກມັນທໍ່ລຳທຽນ ໃບມັນທໍ່ກະບຽນ ໝາກມັນລຽນຊາບລາບ ແມ່ນຕົ້ນບົວ, ດອກບົວ.
21. ກົກແດງປາຍແໜ້ ແມ່ນຄວັນໄຟ.
22. ກົກມັນທໍ່ລຳທຽນ ໝາກມັນລຽນນຳກ້ານ ແມ່ນຮວງເຂົ້າ.
23. ກິນຟາກນີ້ ໄປຂີ້ຟາກນັ້ນ ແມ່ນຫຼາອົ້ວຝ້າຍ.
24. ກິນແຕ່ໄສ້ ເອົາໜັງໄວ້ເຮັດແມວ ແມ່ນຕີບເຂົ້າ.

25. ກິນທາງນອກປອກທາງໃນຖີ້ມ ແມ່ນ ໃຕ່ໄກ່.
26. ສຸກບໍ່ຫວານ ແມ່ນ ໝາກຜັດ.
27. ສຸກເຕັມດິນເກັບກິນບໍ່ໄດ້ ແມ່ນແສງແດດ.
28. ສີ່ປີກບິນຕົກ ຫົກຂາເຕັ້ນ ທະຍານໄປເດາະດ່ອງ ແມ່ນຕັກກະແຕນ.
29. ສີ່ຄົນຫາມ ສາມຄົນວີ ສອງຄົນຖືຫອກ ຜູ້ໜຶ່ງຊອກຫາກິນ ແມ່ນຊ້າງ (ສີ່ຂາ ສອງຫູ ໜຶ່ງຫາງ).
30. ສີ່ຫູ ສີ່ຂາຫາກິນກາງນ້ຳ ແມ່ນກະດ້ຽງ.
31. ສີ່ເສົາທອງ ສອງເສົາເຫຼັກ ເບື້ອງໜຶ່ງເກັບຜັກ ເບື້ອງໜຶ່ງກວັກຊູ ແມ່ນຄວາຍ.
32. ສີ່ຕີນຕັ້ງທໍລະນີເຢາະຢ່ອງ ອ້າປາກຂຶ້ນເທິງຟ້າກິນປາ ແມ່ນຮ້ອງໃສ່ປາ.
33. ສະໂລກໂງກ ສະລາກງາກ ກົກມັນຫາກມີຂົນ ແມ່ນເຂົ້າຄວາຍ.
34. ສ້ວຍຄືໃບພູ ມີຮູຢູ່ທາງກາງ ມີຂົນຫຍາບຫຍ້າງ ແມ່ນຫູຄວາຍ.
35. ສັບຜີແມ່ນຫຍັງ ແມ່ນໄກ່ຕອດອຶ່ງ.
36. ສອງຜູ້ເຖົ້າລຽບເລົ້າບໍ່ເຫັນກັນ ແມ່ນໃບຫູ.
37. ສອງອັນໂຕ່ງໂຕ້ຍຢູ່ຫວ່າງຂາຜູ້ຍິງມັກ ແມ່ນໄມ້ຢຽບຫູກ.
38. ສິບຂາມີສອງຕາຢູ້ຂ້າງ ແມ່ນໂຕກະປູ.
39. ຍາມໜຸ່ມນ້ອຍນຸ່ງເສື້ອລາຍ ຍາມຮາມນຸ່ງເສື້ອແໜ້ ເຖົ້າມາແທ້ໆນຸ່ງເສື້ອສີເຫຼືອງ ແມ່ນໝາກອຶ.
40. ຍາມຮ້ອນນອນດຽວ ຍາມໜາວເປັນສ່ຽວກັບຄົນ ແມ່ນຜ້າຫົ່ມ.
41. ຍິງສາມຄົນຜ້າຄຽນຫົວຜືນດຽວ ແມ່ນຄຽງ (ສຳລັບໜຶ້ງເຂົ້າ).
42. ຍິງບໍ່ບາຍຊາຍບໍ່ຕ້ອງຍາມໜາວພວກພີ່ນ້ອງນັ່ງອ້ອມຂ້າງມື ແມ່ນກອງໄຟ.
43. ປາກລາບໄຟ ໄສ້ຈຸ່ມນ້ຳ ແມ່ນຕະກຽງ.
44. ປາກແດງກົ້ນຊຸ່ມ ແມ່ນກອກຢາ.
45. ປິດກໍ້ອ້ອງບໍ່ປິດກໍ້ອ້ອງ ແມ່ນຮ້ອງໃສ່ປາ.
46. ມີລີ້ນບໍ່ມີປາກ ແມ່ນລີ້ນຊັກໂຕະ.
47. ຂຽວສະອຸ້ມເປັນພຸ່ມສະໄຫວບໍ່ມີຮາກບໍ່ມີໃບ ອາໄສຢູ່ໃນນ້ຳ ແມ່ນເທົ້າ.
48. ຄວາຍແມ່ກ້າກິນຫຍ້າອ້ອມໂພນ ແມ່ນມິດຕັດຜົມ.
49. ຄັນບໍ່ຄັນກໍເກົ້າ ເຂົ້າບໍ່ເຂົ້າຄ່ຳເບິ່ງ ແມ່ນຝົນຜ້າ.
50. ຄັນບໍ່ເກົ້າ ແມ່ນຄັນໄຖ, ຄັນນາ.
51. ຄົນສາມແສນຫາມແກນໄມ້ດູ່ ແມ່ນບ້ຶງກີ.
52. ຄົນຕົກກ້າສາມຕາອອກລູກຕາໜຶ່ງ ແມ່ນໝາກຜ້າວອອກໜໍ່.
53. ຄູ່ລູ້ໜ້າຫົວກົມເອິກບ່ອງ ມັນຊິໄປກ່າຍທ້ອງນາງຫຼ້າຜູ້ໃດ ແມ່ນໄມ້ກຳພັ້ນ.
54. ຈັບຂາງ້າງເອົາຂອງແດງຢັດໃສ່ ແມ່ນມິດສະນາກ.

55. ຊື່ແມ່ນສັດ ໂຕແມ່ນໄມ້ ເອົາກະໂປະໆວ່າຫົວ ຂີ່ດີປານມ້າ ແມ່ນກະຕ່າຍຊູດໝາກພ້າວ.
56. ຊຸກໆນ້ຳອອກ ຍອກໆນ້ຳມາ ອ້າປາກຂຶ້ນຕາເຫຼືອກມ້ານ ແມ່ນຄົນຖູແຂ້ວ.
57. ຊ້າງສາມຂາພະຍາຂົ້ນຂີ່ ປີ່ນ້ອຍເສບນຳ ແມ່ນກ້ອນເສົ້າ, ໝໍ້ໝໍ້ງເຂົ້າ, ຫວດເຂົ້າ.
58. ຊ້າງຂົ້ນພູພັບຫູວາບໆ ແມ່ນຟືມ (ເວລາຄົນຕ່ຳຫູກ).
59. ຊ້າງຢູ່ປ່າໆງາເຜົ້າ ແມ່ນເງົ້າຜ້າ.
60. ຊ້າງຢູ່ປ່າໆງາຂາວ ສາວຢູ່ນາລຽນຕົ້ນ ແມ່ນໝໍ່ໄມ້, ຕົ້ນເຂົ້າ.
61. ຊິກງິກຄືຫົວມ້າ ໄປຄ້າບໍ່ເຫັນຮອຍ ແມ່ນເຮືອ.
62. ຊິກງິກສ່ຳດ້ຳມພ້າ ຫຍ້າປົ່ງເຕັມກົກ ແມ່ນເຂົ້າຄວາຍ.
63. ດຳປານໜີ ມີຕາທົ່ວໂຕ ອອກລູກທາງຕີນ ແມ່ນແຫ.
64. ດຳຄືໜີ ແຫ່ງຕີ ແຫ່ງກັດ ແມ່ນສີ່ວ.
65. ດຳຄືໜີ ຕີກົ້ນປາກກັດ ແມ່ນສີ່ວ.
66. ດັງໄຟໃສ່ຈອມຜາ ຕົກລົງຟົດຢູ່ໃນນ້ຳ ແມ່ນປັ້ງສູບຢາ.
67. ດອກກ້ານກົມ ແມ່ນດອກຜັກບົ່ວ.
68. ດອກມັນເກີດກ່ອນຕົ້ນ ຕົ້ນເກີດລຸນຫຼັງ ຕົ້ນມັນມໍລະນັ່ງຕາຍດອກເຊີຍຊອນຕົ້ນ
ແມ່ນດອກກົກກະບຸກ.
69. ດອກເປັນພົ້ວ ແມ່ນດອກຜັກຊີ.
70. ດອກເປັນເບັ້ຽ ແມ່ນດອກຕາເວັນ.
71. ດອກໜຶ່ງນັ້ນ ບານຢູ່ແຄມເຮືອນ ຝູງສັດສາທຸກໂຕກົວຢ້ານ ແມ່ນດອກຕາເສືອ.
72. ດອກໜຶ່ງບານໃນຖ້ຳ ສອງຕີນຢັນຄູ້ເຂົ່ຳ ແມ່ນໂຕຈິ່ນາຍ.
73. ດອກໜຶ່ງບານໃນຖ້ຳ ຝົນຕົກຮຳປີລະເທື່ອ ແມ່ນພະພຸດທະຮູບ.
74. ດອກໜຶ່ງ ບານເຫຼືອແໜ້ ແພ້ແວ້ຢູ່ກ້ອງງ່ຳ ແມ່ນດອກໝາກເຂືອຂື່ນ.
75. ບາດມັນໄປ ຍາວໄດ້ສອງສາມໄຮ່ນາ ບາດກັບມາພໍກຳ ແມ່ນມອງ.
76. ບາດມັນໄປພໍວາ ບາດມັນມາພໍກຳ ແມ່ນແຫ.
77. ບາດມັນໄປທ່ໄຮ່ນາ ບາດມັນມາທ່ກ້ອນເສົ້າ ແມ່ນແຫ.
78. ບັກຂູ້ຫ້ ຂູ້ລູ້ເຂົ້າຫວ່າງຂາ ແມ່ນງົວນ້ອຍກິນນົມແມ່.
79. ບັກຫົວໂລ້ນ ໂຕນ້ຳແຕ່ເດິກ ແມ່ນກະບອຍຕັກນ້ຳ.
80. ບັກໂອ່ງໂລ່ງ ລົງນ້ຳບ່ຈົມ ແມ່ນເຮືອ.
81. ບັກນ້ອຍ ເອົາມືຕ້ອຍກົ້ນ ແມ່ນຕົ້ນກ້ວຍ.
82. ບັກນ້ອຍໆ ຖືແພແດງລອດກ້ອງຕະລ່ຳງ ແມ່ນໄກ່ຜູ້ແດງ.
83. ບັກນ້ອຍໆ ຖືແພແດງລອດປ່ອງ ແມ່ນນ້ຳໝາກ.

84. ບັກນ້ອຍໆ ນອນຫງາຍສັ່ນປິກ ເອົາຕີນຄ້ຳຟ້າ ແມ່ນນົກກະຕັດແຕ້.
85. ບັກນ້ອຍໆ ນອນເໜບ ຊັນຫົວເຍົ່າ ແມ່ນຕັກກະແຕນ.
86. ບັກຫຼົງກິ່ງກິນຫຍ້າໝົດທົ່ງ ແມ່ນກ່ຽວ.
87. ບາດຢືນຂົ້ນພຽງຕະຝັ່ງ ບາດນັ່ງລົງພຽງກອງຂີ້ຄວາຍ ແມ່ນແຫ.
88. ບໍ່ມີກົກ ມີແຕ່ໃບ ແມ່ນໃບພະນຽງໄຖ.
89. ບໍ່ມີກົກ ບໍ່ມີຮາກ ບໍ່ມີໜາກ ມີແຕ່ໃບ ແມ່ນໃບຫູ.
90. ບໍ່ມີກົກ ບໍ່ມີຮາກ ບໍ່ມີໜາກ ບໍ່ມີໃບ ມີແຕ່ເຄືອຊອນໄລ ໄຕ່ໄປຕາມຄ້າງ ແມ່ນເຄືອຫູກ.
91. ບໍ່ມີຫົວ ບໍ່ມີຫາງ ທາງກາງຄາບເຫຍື່ອ ແມ່ນໄມ້ຫີບ.
92. ບໍ່ມີຫູໄຕ່ໄມ້ ບໍ່ມີໄສ້ກິນຄົນ ບໍ່ມີຂົນເກືອກບວກ ແມ່ນງູ, ປີ້, ອ່ຽນ.
93. ບໍ່ມີຕີນ ຮ້ຽ້ນຜາ ແມ່ນ ເຄືອໄມ້.
94. ບົວບໍ່ມີນ້ຳ ມີໜາມອ້ອມຢູ່ ແມ່ນບົວໜາກມີ.
95. ຜູ້ຍິງໄປກາຍ ຜູ້ຊາຍໄປເດ້ຳ ເຂ້ົາບໍ່ເຂ້ົາ ເອົາມືລູບມືຄຳ ແມ່ນຜູ້ຊາຍຝົນພ້າ.
96. ຜູ້ຢູ່ປ່າ ສານກະຕ່າລາຍໆ ແມ່ນໂຕ່ ຫົວເສືອເຮັດຮັ້ງ.
97. ຜູ້ໄປກ່ອນຖາງຫາງ ຜູ້ຢູ່ກາງງ້າງປ໋ອະ ຜູ້ນຳກົ້ນບໍ່ໄຂ້ກໍຄາງ ແມ່ນຄົນໄຖນາ.
98. ຜູ້ເປັນອ້າຍ ນັ່ງລຸ່ມ ຜູ້ເປັນນ້ອງນັ່ງເທິງ ແມ່ນໜາກຫຸ່ງ.
99. ຜູ້ເຮັດບໍ່ໃຊ້ ຜູ້ໃຊ້ບໍ່ຮູ້ ແມ່ນໂລງສົບ.
100. ຜູ້ໃຫຍ່ໄປປັກໜ້ອຍ ເດັກນ້ອຍໄປປັກຫຼາຍ ແມ່ນໜາກຫຍ້າຂວາກ.
101. ຜູ້ເຫັນບໍ່ເອົາ ຜູ້ເອົາບໍ່ກິນ ຜູ້ກິນບໍ່ຂີ້ ຜູ້ຂີ້ບໍ່ເໝັນ ແມ່ນ ຕາ, ມື, ປາກ, ກົ້ນ.
102. ຜູ້ຢູ່ນາປັ້ນຖ້ວຍ ແມ່ນຈູ່ຈີ່ເບ້ົາ.
103. ຢືນຢູ່ກາງຂອງ ແມ່ນກົກກາງຂອງ.
104. ຢູ່ໃນຕູ້ຫຸບຂາ ເອົາຕິດຕົວອອກມາ ຈ່າງຂາອອກ ແມ່ນໂສ້ງນຸ່ງ.
105. ຫົວຖືກຸບ ເອົາຕີນຈຸ່ມນ້ຳ ແມ່ນ ມວຍໜຶ້ງເຂ້ົາ.
106. ຫີນລັບ ຈັບກະຕໍ ແມ່ນເລັບມື.
107. ພະບໍ່ມີຄົນໄຫວ້ຈຳພັນສາຢູ່ກາງທົ່ງ ຍາມຝົນລົງຫຼົ້ນນ້ຳ ຍາມແລ້ງຂົ້ນຢູ່ຖຽງ ແມ່ນພະນຽງໄຖ.
108. ພໍ່ກໍດຳ ແມ່ກໍດຳສ່ຳກັນໄດ້ລູກດ່ອນ ແມ່ນໝ້ໍໜຶ້ງເຂ້ົາ, ຫວດໜຶ້ງເຂ້ົາ, ເຂ້ົາໜຶ້ງ.
109. ພໍ່ເຖ້ົາໜວກຕີກອງ ແມ່ນອຶ່ງ (ເວລາອຶ່ງຮ້ອງໂຕມັນພອງອອກ).
110. ຟາກນັ້ນກໍຫ້ວຍ ຟາກນີ້ກໍຫ້ວຍ ກົກກ້ວຍເກີດຢູ່ກາງທາງ ແມ່ນໂຮງກະບອງ.
111. ໄກ່ຜູ້ແດງ ນອນສະແລງປາຍໄມ້ ແມ່ນໜາກປີ.
112. ໄກ່ແມ່ກ້າ ຫ້າປີກ ຕີນດຽວ ແມ່ນໜາກສ້ານ.
113. ໄກ່ແມ່ຂາວ ຈັບຮາວຊາບລາບ ແມ່ນກະດຸມເສື້ອ.

114. ไກ່ແມ່ດຳ ເອົາໄຟຈູດກິ້ນ ແມ່ນເຕົ້າກາ, ຕົ້ມນ້ຳ.
115. ໄກ່ແມ່ລາຍ ຕາຍຄາຮົ້ວ ແມ່ນໝາກນັດ.
116. ໄກ່ແມ່ລາຍໄປຕາຍແຄມຮ່ອງ ເຊືອກດີດກິ້ນສະດ່ອງໄປໄກ ແມ່ນລູກໜ້າ.
117. ເກັກຈຸບ ບໍ່ໃຫ້ວ່າກຸບເຈັກ ແມ່ນສຽງຍິງໜ້າເກັກ.
118. ໄປກໍປະ ມາກໍຖິ້ມ ແມ່ນຮອຍຕີນ.
119. ເມື່ອມັນໄປທໍ່ທ້ອງຄວາຍ ບາດກັບມາເປັນໄມ້ສີ່ກີບ ແມ່ນກົ່ງຝ້າຍ.
120. ໄມ້ຄັນຫຼາວຖິ້ມຢູ່ກາງ່ໜອງ ຄົນທັ່ງເມືອງປອງເອົາບໍ່ໄດ້ ແມ່ນເຂັມຕົກໜອງ.
121. ໄມ້ຄັນຫຼາວ ຊັດເຂົ້າປ່າອ້ອຍ ຄົນເປັນຮ້ອຍຊອກກໍບໍ່ເຫັນ ແມ່ນເຂັມ.
122. ໄມ້ສີ່ຕ່ອນ ເກີດກ່ອນແຜ່ນດິນ ແມ່ນຂອບເຕົາໄຟ.
123. ໄມ້ແກ່ແດ່ປັກຢູ່ກາງຂອງ ໃຜໄປກໍຕ້ອງ ໃຜມາກໍຕ້ອງ ແມ່ນໄມ້ແຕ້ມປູນ.
124. ໄມ້ລຳດຽວ ມີສີ່ຫ້າປ້ອງ ແຕ່ລະປ້ອງມີນ້ຳຢູ່ໃນ ແມ່ນລຳອ້ອຍ.
125. ຕ່ຳອໍ້ປ້ ເອົາໄມ້ແໜ້ນກິນ ແມ່ນນ້ຳສ້າງ.
126. ຕັ້ງພໍ້ວ໋ ຢອງຕໍ່ກົ້ງແດດ ແມ່ນຄັນຮົ່ມ.
127. ເຂົ້າໜ້ອຍຈຳ ເຂົ້າຫຼາຍບໍ່ຈຳ ແມ່ນຕີບເຂົ້າ.
128. ໂຕຢູ່ນາ ຕາຢູ່ບ້ານ ແມ່ນເຫຼັກຕະປູ.
129. ເຄັມບໍ່ຈືດ ມືດບໍ່ແຈ້ງ ຫາບບໍ່ໜັກ ຕັກບໍ່ເຕັມ ແມ່ນປັນຍາ.
130. ໂງກໆງັນໆ ໄປຮອດຄັນແລ້ວຖອດ ນ້ຳຍ້ອຍຢອດທາງປາຍ ແມ່ນໄຖນາ.
131. ເຊືອກເສັ້ນດຽວ ຈູງຄວາຍໝົດໝູ່ ແມ່ນຫົນທາງ.
132. ແດງໆແພ້ແວ້ ແຍ່ໃສ່ຮູໜັງ ຜູ້ຍິງມັກ ແມ່ນຕຸ້ມຫູ.
133. ເດັກນ້ອຍ ແກ່ເຖືອຫວາຍລອດພຸ່ມ ແມ່ນເຂັມຫຍິບເຄື່ອງ.
134. ເດັກນ້ອຍໆ ໝອຍອອກຈອມຂວັນ ແມ່ນໝາກສາລີ.
135. ເດັກນ້ອຍພາຍເຮືອລອດພຸ່ມ ເກັບຜັກກຸ່ມບໍ່ໄດ້ຈັກກຳ ແມ່ນກະສວຍຕ່ຳຫູກ.
136. ເດັກນ້ອຍໆ ເອົາຂີ້ຝອຍຮອງນັ່ງ ແມ່ນຫົວຜັກທຽມ, ຜັກບົ່ວ.
137. ໃບມັນທໍ່ແປ້ນກີ່ ໝາກມັນຈີ່ກິນເປັນ ແມ່ນໝາກກ້ວຍ.
138. ເຫັນແຕ່ເອົາບໍ່ໄດ້ ລັດສະໝີ ໄສສະຫວ່າງ ແມ່ນພະອາທິດ, ພະຈັນ.
139. ໂຕຢູ່ນາ ຕາຢູ່ນຳກິກໄມ້ ແມ່ນກິກຕາປາ.
140. ໂຕຢູ່ໂຄກ ຂີ້ຢູ່ນ້ຳ ແມ່ນຂີ້ຈູມປວກ (ເວລານ້ຳນອງຈະມີຂີ້ຈູມປວກ).
141. ໂຕຫຍັງສີ່ຕີນກິນກິກ ຫົກຕີນກິນປາຍ ໂຕລາຍກິນກາງເຄິ່ງ ແມ່ນອີ້ນ, ກວາງ, ເມງບີ້ງ.
142. ໂຕໜຶ່ງແຊ່ຢູ່ນ້ຳ ສັ່ນແຄ່ງລີລາ ແມ່ນໄຄຫີນ.
143. ໂຕ່ງໂຕ້ຍຢູ່ຫວ່າງຂາ ຂອງຜູ້ຍິງມັກ ແມ່ນໄມ້ຢຽບຫູກ.

142. ไຫເມືອງມິນ ເອົາຕີນປ້ອນລູກ ແມ່ນໄກ່ແມ່ປ້ອນລູກ.

143. ນ້ອຍຫໍ່ກະຢັ້ງ ຝັ້ງບໍ່ໄດ້ ແມ່ນເງົາຄົນ.

144. ສາວຢູ່ເຮືອນສິ້ນຕົນ ແມ່ນສິ້ນຕີນ.

145. ໄມ້ນ້ອຍໆຖິ້ມຢູ່ກາງທາງ ຊ້າງຢຽບບໍ່ຫັກ ແມ່ນເສັ້ນຜົມ.

146. ໜ້ານ້ອຍໆຍິງລອດໄປໄກ ແມ່ນແສງຕາ.

147. ໜອງນ້ອຍໆ ປາຂວາງອ້ອມຊິບລິບ ແມ່ນຍົນຕາ.

148. ໂຕຫຍັງລາຍໆ ຂະຫຍັນກວາໝູ
ມັນຢູ່ລວມໝູ່ ຕອມດູດເກສອນ
ນ້ຳມັນຫອມຫວານ ຍິ່ງກວ່ານ້ຳອ້ອຍ ແມ່ນເຜິ້ງ.

149. ໂຕຫຍັງມີຫອນ ນອນຄອນຍາມຄ່ຳ.
ຕື່ນເຊົ້າຍັນຮ່ຳ ໃຫ້ຄົນຕື່ນນອນ.
ເມື່ອໂຕນລົ້ງຄອນ ທຳທ່າເກັ່ງແທ້ ແມ່ນໄກ່ຜູ້.

150. ໂຕຫຍັງມັນມັກ ກະຕາກກາງເວັນ
ເຍ່ຍດິນຫາເຫຍື່ອ ເພື່ອລູກຂອງມັນ
ມັນຮ້ອງກຸກໆ ເອີ້ນລູກແລ່ນມາ ພາລູກຍ່າງໄປ ແມ່ນ ໄກ່ແມ່.

151. ໂຕຫຍັງມີປີກ ລອຍນ້ຳກໍເປັນ
ກາງຄືນເຂົ້າລົກ ໄຂ່ອອກຄືໄກ່
ຫາງສັ້ນດິກໆ ດິກນ້ຳຫາຫອຍ ແມ່ນເປັດ.

152. ບໍ່ມີຫົວບໍ່ມີຫາງ ໄຕ່ທ່າງໆບໆ ແມ່ນ ກະປູ.

153. ໂຕສີ່ຕີນກິນໂຕຕີນດຽວ ແມງຫົວຂຽວກິນແມງໜ້າງ້ຳ ແມ່ນຕ່ຳກິນເຫັດ ເປັດກິນຫອຍ.

154. ໄຟໄໝ້ປ່ຳບໍ່ໄໝ້ໜົກປ່ຳ ແມ່ນ ໂພນປອກ.

155. ເອົາເອີ້ນວ່າແມງຜັດບໍ່ເປັນຈີ່ ແມ່ນແມງມີ່.

156. ອີ່ຈັບນອນໃນດອນ ອີ່ທອນນອນໃນນ້ຳ ແມ່ນຈັກຈັ່ນ, ປ່າ.

157. ໜອນທ້ອຍຄ້າງ ປ່າຍໄມ້ຍ່າງຍາຍ ແມ່ນຮັ້ງເຜິ້ງ, ຮັ້ງຕໍ່

158. ຕົ້ນຫຍັງລຳນ້ອຍ ໃບສ້ອຍສີຂຽວ
ແກ່ແລ້ວອອກຮວງ ກ່ອງກົ້ມຊອບງອບ
ສຸກເຫຼືອງດີແລ້ວ ເພິ່ນກ່ຽວມາກິນ ແມ່ນຕົ້ນເຂົ້າ.

159. ສັດຕ່ຳຕັນ ຕີນສັ້ນນັ່ງຂອນ ແມ່ນ ເຫັດທີ່ເກີດຢູ່ຂອນ.

160. ກົກມັນເປັນລໍຊໍ ໃບມັນເປັນກັບແຈ່ວ.

ເດັກນ້ອຍແອ່ວກິນ ເອົາດິນເຮັດຜ້າຫິ່ມ ແມ່ນໝາກຖົ່ວດິນ.

161. ນ້ອຍໆທ່ໍແມ່ໝັດ ບົວລະບັດອອກໃບທ່ໍຈານ ແມ່ນຜັກກາດ.

162. ຜ້າສີ່ແຈຄາຖາກັນຍັກ ແມ່ນມຸ້ງກັນຍຸງ.

163. ໝາເຮືອນທ້າວຊ່າງເລຍ ໝາເຮືອນເຜຍຊ່າງເຫ່ົາ ແມ່ນຍູປັດເຮືອນ, ກອງເຊຍ.

164. ແຕບແຕທ່ໍຝ່າມື ໃຜຖືກໍນົບ ແມ່ນແຄນ.

165. ນ້ຳອອກບໍ່ ປ່າຍໄມ້ແຊ່ງແຊະ ແມ່ນບົ່ວເຫຼ້ົາ.

166. ຟ່າກນີ້ກໍແມ່ນຫົວ ຟ່າກນັ້ນກໍແມ່ນຫົວ ແມ່ນຂົວ.

167. ທ່າງນີ້ກໍພູ ທ່າງນັ້ນກໍພູ ກຳຫູຊັກສັ່ນ ແມ່ນຫວດ.

168. ສ່ວມຂ່າຕ່າດຮ່ວ ກິນຄົນໝົດບ້ານໝົດເມືອງ ແມ່ນກ້ອງຖ່າຍຮູບຂະໜາດຂ່າຕັ້ງ.

169. ທ່າງໃຕ້ກໍຕັ້ງ ທ່າງເທິງກໍຕ່າດ

ປ່າລ່າດແລ່ນ ກ່າງຫ່າດໄຍໆ ແມ່ນກີ່, ເຄືອຫູກ ແລະ ກະສວຍ.

170. ອຸ້ມລຸ້ມທ່ໍຫົວໜີສີດ່ຳ ອອກຫ່າກິນຍ່ວມເຊ້ົ່າ ແມ່ນບ່າດຂອງຄູບ່າ.

171. ເຄືອເຂ້ົ່າກ່າດ ພ່າດຫຼັງອົ້ນ

ອົ້ນພ່າແລ່ນ ນົກແອ່ນພ່າໄປ ແມ່ນຫຼ່າເຂັບຝ້ ່າຍ.

172. ຍ່າເຂັບຂຶ້ນ ປູ່ທົ້ນລົ່ງ ແມ່ນກ່ານຕ່ຳຫູກ.

173. ໜອງກ້ວ່າງໆ ບ່ໍມີໃມ້ຈັກລ່ຳ

ມີແຕ່ປ່າຊ໊ອຄ່ຳ ໂຕດຮ່ວລອຍຫຼົ້ນ ແມ່ນທ້ອງຟ້ ່າ ແລະ ຕ່າເວັນ.

174. ອຸ້ມລຸ້ມທ່ໍໄຂ່ນົກ ຈົກເຂ້ົ່າແມ່ມັນຕອດ ແມ່ນຕົ້ນໝ່າກເຂືອຂື່ນ.

175. ຂ້ີບ່ໍເໜັນ ແມ່ນຂ້ີໄຖ.

176. ໄຟໄໝ້ປ່ໍ່າບ່ໍໄໝ້ເຊືອກໜັ່ງ ແມ່ນທ່ໍ່າ.

# ບົດທີ3
# ຄຳສຸພາສິດ

ເວລາ 8 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍກ່ຽວກັບຄວາມໝາຍ, ລັກສະນະ, ການກຳເນີດ ແລະ ການຂະຫຍາຍ ຂອງຄຳສຸພາສິດໄດ້.
- ອະທິບາຍກ່ຽວກັບເນື້ອໃນ ແລະ ຄວາມໝາຍການສ່ອງແສງຂອງຄຳສຸພາສິດໄດ້.
- ອະທິບາຍກ່ຽວກັບສິລະປະການປະດິດແຕ່ງຄຳສຸພາສິດໄດ້.

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍ, ລັກສະນະ, ການກຳເນີດ ແລະ ການຂະຫຍາຍຕົວຂອງຄຳສຸພາສິດ.
- ຄຳສຸພາສິດທີ່ເວົ້າເຖິງການອອກແຮງງານ, ມາລະຍາດທາງສັງຄົມ. ການຕໍ່ສູ້ຊົນຊັ້ນ, ແລະ ເວົ້າເຖິງຄວາມສາມັກຄີ.
- ສິລະປະການແຕ່ງຄຳສຸພາສິດ.

## III. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາວັນນະຄະດີຊັ້ນມັດທະຍົມປີທີ່ໜຶ່ງ.
- ປຶ້ມການກອນພື້ນເມືອງລາວ ຫຼື ປຶ້ມອື່ນໆທີ່ມີເນື້ອໃນກ່ຽວພັນກັບບົດຮຽນບົດນີ້.

## IV. ກິດຈະກຳການຮຽນ-ການສອນ

**ການນຳເຂົ້າສູ່ບົດຮຽນ**

- ຄູກວດການຽກບ້ານທີ່ໃຫ້ນັກຮຽນໄປເຮັດຢູ່ບ້ານ.
- ຖາມຄືນເນື້ອໃນສຳຄັນຂອງບົດຮຽນບົດທີ2.
- ຄູອາດສະຫຼຸບຄືນ ແລະ ເນັ້ນໜັກຈຸດສຳຄັນຂອງບົດຮຽນທີ່ຮຽນຜ່ານມາ.
- ຄູນຳພານັກຮຽນເຂົ້າສູ່ການຮຽນ-ການສອນດ້ວຍການສົນທະນາກັບນັກຮຽນກ່ຽວກັບຄຳສຸພາສິດເພື່ອສັງເກດເບິ່ງວ່າ ກ່ອນການສອນບົດນີ້ນັກຮຽນມີຄວາມຮັບຮູ້ກ່ຽວກັບຄຳສຸພາສິດໜ້ອຍຫຼາຍສ່ຳໃດ ຫຼື ຄູອາດຈະໃຫ້ນັກຮຽນຍົກຄຳສຸພາສິດຂຶ້ນມາສົນທະນາ.

- ຄູສະຫຼຸບຄຳຕອບຂອງນັກຮຽນ ຈາກນັ້ນຈຶ່ງເລີ່ມເຂົ້າສູ່ການຮຽນບົດທີ 3.

## 1. ການສອນຄວາມໝາຍ, ລັກສະນະ, ການກຳເນີດ ແລະ ການຂະຫຍາຍຕົວຂອງຄຳສຸພາສິດ.

### 1.1. ຄວາມໝາຍ ແລະ ລັກສະນະຂອງຄຳສຸພາສິດ.

- ຄູບັນຍາຍຄວາມໝາຍຂອງຄຳສຸພາສິດຕາມປຶ້ມແບບຮຽນ ຫຼື ຈາກປະສົບການຕົວຈິງຂອງຄູ.
- ຄູຍົກເອົາຄຳສຸພາສິດຄຳໃດຄຳໜຶ່ງຂຽນໃສ່ກະດານ ແລ້ວໃຫ້ນັກຮຽນຊອກຫາຄວາມໝາຍຂອງຄຳສຸພາສິດນັ້ນ.
- ຈາກນັ້ນຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ ແລະ ເນັ້ນໜັກໃຫ້ນັກຮຽນຮູ້ຄວາມໝາຍອັນແທ້ຈິງຂອງຄຳສຸພາສິດ.
- ຄູຕັ້ງຄຳຖາມ ຖາມນັກຮຽນວ່າ ຄຳສຸພາສິດ ໝາຍຄວາມວ່າແນວໃດ?
- ຄູໃຫ້ເວລານັກຮຽນສະແດງຄວາມຄິດເຫັນ ເພື່ອມີສ່ວນຮ່ວມໃນການຕອບຄຳຖາມ.
- ພາຍຫຼັງນັກຮຽນຕອບຄຳຖາມແລ້ວຄູກ່າວຄຳຍ້ອງຍໍຊົມເຊີຍ, ສະຫຼຸບຄຳຄິດເຫັນຂອງເຂົ້າເຈົ້າພ້ອມທັງເນັ້ນໜັກຄຳຕອບຂອງຄຳຖາມທີ່ວ່າ ຄຳສຸພາສິດແມ່ນຄຳເວົ້າທີ່ຈົບງາມ ແລະ ຖືກຕ້ອງ, ເປັນຄຳເວົ້າສັ້ນແຕ່ມີຄວາມໝາຍເລິກເຊິ່ງ.
- ຄູໃຫ້ເວລານັກຮຽນຖາມປັນຫາທີ່ຍັງບໍ່ທັນເຂົ້າໃຈ.
- ຖ້ານັກຮຽນເຂົ້າໃຈແລ້ວ ຄູຕັ້ງຄຳຖາມນັກຮຽນວ່າ ຄຳສຸພາສິດມີລັກສະນະ ແລະ ຈຸດພິເສດຄືແນວໃດ?
- ຄູໃຫ້ນັກຮຽນຕອບຄຳຖາມ.
- ຄູສະຫຼຸບຄຳຕອບຂອງນັກຮຽນແລ້ວອະທິບາຍໃຫ້ນັກຮຽນເຂົ້າໃຈວ່າ: ຄຳສຸພາສິດເປັນປະເພດຄຳກອນທີ່ສັ້ນ ແຕ່ມີເນື້ອໃນຄວາມໝາຍໃນຕົວຂອງມັນຢ່າງຄົບຖ້ວນ. ຟັງແລ້ວສາມາດເຂົ້າໃຈຄວາມໝາຍ ແລະຖອດຖອນມາເປັນຮຽນແຫ່ງຊີວິດ.
- ຄູຍົກຕົວຢ່າງຄຳສຸພາສິດດ້ວຍການຂຽນໃສ່ກະດານ ແລ້ວໄຈ້ແຍກລັກສະນະ ແລະ ຈຸດພິເສດຂອງຄຳສຸພາສິດນັ້ນເພື່ອໃຫ້ນັກຮຽນເຂົ້າໃຈ.

### 1.2. ການສອນ ການກຳເນີດ ແລະ ການຂະຫຍາຍຕົວຂອງຄຳສຸພາສິດ.

- ຄູບັນຍາຍຕາມປຶ້ມແບບຮຽນ ຫຼື ປະສົບການຂອງຄູ.
- ຄູຕັ້ງຄຳຖາມ ຖາມນັກຮຽນວ່າ ຄຳສຸພາສິດກຳເນີດມາຈາກໃສ ແລະ ຂະຫຍາຍຕົວຄືແນວໃດ?
- ໃຫ້ນັກຮຽນມີສ່ວນຮ່ວມໃນການສະແດງຄວາມຄິດເຫັນໃນການຕອບຄຳຖາມ.
- ພາຍຫຼັງນັກຮຽນສະແດງຄວາມຄິດເຫັນແລ້ວ ຄູສະຫຼຸບຄືນ ແລະ ອະທິບາຍໃຫ້ນັກຮຽນຮັບ

ຮູ້ການກຳເນີດ ແລະ ການຂະຫຍາຍຂອງຄຳສຸພາສິດຕາມປຶ້ມແບບຮຽນ.

## 2. ການສອນເນື້ອໃນຂອງຄຳສຸພາສິດ

### 2.1 ຄຳສຸພາສິດທີ່ເວົ້າເຖິງການອອກແຮງງານ

- ຄູບັນຍາຍເນື້ອໃນຕາມປຶ້ມແບບຮຽນ ຈາກນັ້ນຄູຍົກເອົາຄຳສຸພາສິດທີ່ມີເນື້ອໃນເວົ້າເຖິງການອອກແຮງງານ, ເວົ້າເຖິງຄວາມສາມັກຄີ, ເວົ້າເຖິງຄຸນສົມບັດແລ້ວໃຫ້ນັກຮຽນຈຳແນກເນື້ອໃນຂອງຄຳສຸພາສິດນັ້ນວ່າ ຄຳສຸພາສິດໃດມີເນື້ອໃນເວົ້າເຖິງການອອກແຮງງານ.
- ຄູໃຫ້ເວລານັກຮຽນຄົ້ນຄ້ວາຕາມຄວາມເໝາະສົມ, ຈາກນັ້ນໃຫ້ນັກຮຽນສະໜັກໃຈຂຶ້ນຕອບ (ຄູອາດຈະໃຫ້ຄະແນນໄປພ້ອມ).
- ໃຫ້ນັກຮຽນຜູ້ອື່ນໆປະກອບຄຳຄິດຄຳເຫັນເພີ່ມຕື່ມ.
- ຄູຕີລາຄາການຕອບຄຳຖາມ ຫຼື ການສະແດງຄຳຄິດຄຳເຫັນໂດຍການຍ້ອງຍໍຊົມເຊີຍ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ແລະ ອະທິບາຍໃຫ້ນັກຮຽນຮູ້ວ່າ ຄຳໃດແມ່ນຄຳສຸພາສິດທີ່ເວົ້າເຖິງການອອກແຮງງານ.
- ຄູເນັ້ນໜັກຈຸດສຳຄັນພື້ນຖານຂອງຄຳສຸພາສິດເພື່ອໃຫ້ນັກຮຽນເຂົ້າໃຈ ໂດຍອີງຕາມປຶ້ມແບບຮຽນ ແລະ ປະສົບການຕົວຈິງຂອງຄູ.
- ຈາກນັ້ນຄູຍົກຄຳສຸພາສິດຈຳນວນໜຶ່ງ ທີ່ເວົ້າເຖິງການອອກແຮງງານມາໄຈ້ແຍກເນື້ອໃນຄວາມໝາຍອັນແທ້ຈິງຂອງຄຳສຸພາສິດນັ້ນ.

### 2.2 ການສອນຄຳສຸພາສິດທີ່ເວົ້າເຖິງມາລະຍາດທາງສັງຄົມ.

- ຄູອະທິບາຍຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

1) ມາລະຍາດທາງສັງຄົມແມ່ນແນວໃດ?

2) ເປັນຫຍັງປະຊາຊົນຜູ້ອອກແຮງງານຈຶ່ງແຕ່ງຄຳສຸພາສິດ ທີ່ເວົ້າເຖິງມາລະຍາດທາງສັງຄົມ?

- ຄູໃຫ້ເວລານັກຮຽນຄົ້ນຄ້ວາເພື່ອຕອບຄຳຖາມ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ແລ້ວອະທິບາຍໃຫ້ນັກຮຽນເຂົ້າໃຈເຖິງການພົວພັນລະຫວ່າງຄົນກັບຄົນ ເຊິ່ງມັນຈຳເປັນຕ້ອງມີຄຸນສົມບັດ ຫຼື ມາລະຍາດທີ່ດີຕໍ່ກັນ.
- ຄູຕັ້ງຄຳຖາມ ຖາມນັກຮຽນວ່າ: ມາລະຍາດທີ່ດີນັ້ນສະແດງອອກຄືແນວໃດ? ແລະ ສະແດງຕໍ່ຜູ້ໃດ?

- ຄູຖາມຄວາມສະໝັກໃຈຂອງນັກຮຽນເພື່ອຕອບຄຳຖາມ.
- ຄູສະຫຼຸບຄືນຄຳຕອບຂອງນັກຮຽນ ແລະ ແນະນຳໃຫ້ນັກຮຽນເຂົ້າໃຈ ເຖິງມາລະຍາດທາງສັງຄົມ ຕາມ ປຶ້ມແບບຮຽນ.
- ຄູຍົກເອົາຄຳສຸພາສິດທີ່ວ່າ: ຄຸນພໍ່ທໍ່ພູເຂົາກ້າ ຄຸນແມ່ທໍ່ຟ້າກັບແຜ່ນດິນ ແລ້ວໃຫ້ນັກຮຽນໄຈ້ແຍກເນື້ອໃນຄວາມໝາຍຂອງຄຳສຸພາສິດນີ້.
- ຄູຈັດນັກຮຽນເປັນກຸ່ມເພື່ອຄົ້ນຄ້ວາຄວາມໝາຍຂອງຄຳສຸພາສິດນີ້.
- ຄູໃຫ້ຕາງໜ້າກຸ່ມ ຫຼື ເປັນບຸກຄົນຂຶ້ນລາຍງານຕາມຄວາມເໝາະສົມ.
- ຄູໃຫ້ສະມາຊິກກຸ່ມອື່ນໆປະກອບຄຳຄິດຄຳເຫັນເພີ່ມຕື່ມ.
- ຫຼັງຈາກນັກຮຽນໃຫ້ຄຳເຫັນແລ້ວ, ຄູສະຫຼຸບຄືນພ້ອມທັງອະທິບາຍຄວາມໝາຍຂອງຄຳສຸພາສິດດັ່ງກ່າວ ເພື່ອໃຫ້ນັກຮຽນເຂົ້າໃຈ.
- ນອກຈາກນີ້ຄູຄວນຍົກຄຳສຸພາສິດຫຼາຍໆຄຳຕາມປຶ້ມແບບຮຽນທີ່ເວົ້າເຖິງມາລະຍາດທາງສັງຄົມຂຽນໃສ່ກະດານ ແລ້ວຈຳແນກຄວາມໝາຍຂອງຄຳສຸພາສິດນັ້ນເພື່ອໃຫ້ນັກຮຽນເຂົ້າໃຈ.

**2.3 ການສອນຄຳສຸພາສິດທີ່ເວົ້າເຖິງການຕໍ່ສູ້ຊົນຊັ້ນ.**

- ຄູອະທິບາຍຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນວ່າ: ເປັນຫຍັງປະຊາຊົນຜູ້ອອກແຮງງານຈຶ່ງປະດິດແຕ່ງຄຳສຸພາສິດ ທີ່ເວົ້າເຖິງການຕໍ່ສູ້ຊົນຊັ້ນ.
- ຫຼັງຈາກນັກຮຽນຕອບຄຳຖາມແລ້ວ ຄູສະຫຼຸບໂດຍອີງໃສ່ປຶ້ມແບບຮຽນ ເພື່ອສະຫຼຸບເປັນຄຳຕອບ.
- ຄູໃຫ້ນັກຮຽນຈົດເອົາເນື້ອໃນບົດຮຽນໃສ່ປຶ້ມຂອງຕົນເອງ.
- ຄູຍົກເອົາຄຳສຸພາສິດຕາມປຶ້ມແບບຮຽນທີ່ວ່າ ຜູ້ກິນກິນຜ໋ຣາກ ຜູ້ຢາກຢາກພໍ່ຕາຍ.
- ຄູໃຫ້ນັກຮຽນຈຳແນກຄວາມໝາຍຂອງຄຳສຸພາສິດນີ້.
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ.
- ຄູໃຫ້ຕາງໜ້າກຸ່ມ ຫຼື ບຸກຄົນຂຶ້ນລາຍງານ.
- ຄູໃຫ້ສະມາຊິກກຸ່ມອື່ນປະກອບຄຳຄິດຄຳເຫັນເພີ່ມຕື່ມ.
- ຄູສະຫຼຸບຄຳຕອບຂອງແຕ່ລະກຸ່ມ ແລ້ວອະທິບາຍຄວາມໝາຍຂອງຄຳສຸພາສິດໃຫ້ຖືກຕ້ອງ.

**2.4 ການສອນຄຳສຸພາສິດທີ່ເວົ້າເຖິງຄວາມສາມັກຄີ.**

- ຄູອະທິບາຍຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ຄວາມສາມັກຄີແມ່ນແນວໃດ?

2) ເປັນຫຍັງປະຊາຊົນຜູ້ອອກແຮງງານຈຶ່ງປະດິດແຕ່ງຄຳສຸພາສິດທີ່ເວົ້າເຖິງຄວາມສາມັກຄີ.

- ຄູຈັດກຸ່ມນັກຮຽນຕາມຄວາມເໝາະສົມ ແລະ ໃຫ້ແຕ່ລະກຸ່ມຄົ້ນຄ້ວາຕາມຄຳຖາມ ແລ້ວນຳສະເໜີ.
- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານ ແລະ ໃຫ້ກຸ່ມອື່ນໆ ປະກອບຄຳເຫັນ.
- ຄູສະຫຼຸບໂດຍເລັ່ງໃສ່ຈຸດສຳຄັນ ເພື່ອເນັ້ນໜັກໃຫ້ນັກຮຽນຮູ້ເຖິງຄວາມສຳຄັນຂອງຄວາມສາມັກຄີ ທີ່ປະຊາຊົນລາວໄດ້ມີມູນເຊື້ອຄວາມສາມັກຄີມາແຕ່ບູຮານນະການ ແລະ ກໍແມ່ນປັດໃຈສຳຄັນຍິ່ງໃນການຕັດສິນຄວາມສຳເລັດຂອງວຽກງານ, ໄຊຊະນະຕ່າງໆໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ. ດັ່ງນັ້ນ, ປະຊາຊົນຜູ້ອອກແຮງງານຈຶ່ງໄດ້ປະດິດແຕ່ງຄຳສຸພາສິດເພື່ອສັ່ງສອນລູກຫຼານຜູ້ເກີດໃໝ່ໃຫຍ່ລຸນ ສືບທອດມູນເຊື້ອຄວາມສາມັກຄີໃຫ້ນັບມື້ເລີກເຊິ່ງ ແລະ ກ້ວາງຂວາງ.
- ຄູຍົກຄຳສຸພາສິດທີ່ມີເນື້ອໃນເວົ້າເຖິງຄວາມສາມັກຄີ ຂຽນໃສ່ກະດານເຊັ່ນຄຳສຸພາສິດທີ່ວ່າ: ຮົ້ວຫຼາຍຫຼັກຈຶ່ງໝັ້ນ ພີ່ນ້ອງຫຼາຍຊັ້ນຈຶ່ງດີ. ຫຼັງຈາກຍົກຄຳສຸພາສິດຂຶ້ນແລ້ວ ຄູໃຫ້ນັກຮຽນໄຈ້ແຍກຄວາມໝາຍຂອງຄຳສຸພາສິດນີ້.
- ຄູຈັດກຸ່ມນັກຮຽນຕາມຄວາມເໝາະສົມ.
- ຄູແນະນຳໃຫ້ແຕ່ລະກຸ່ມຄົ້ນຄ້ວາໄຈ້ແຍກເນື້ອໃນຂອງຄຳສຸພາສິດຕາມເວລາອັນເໝາະສົມ.
- ຄູໃຫ້ຕາງໜ້າກຸ່ມຂຶ້ນລາຍງານຜົນຂອງການຄົ້ນຄ້ວາໄຈ້ແຍກຄຳສຸພາສິດສູ່ກຸ່ມອື່ນໆຟັງ.
- ແຕ່ລະກຸ່ມປະກອບຄຳຄິດຄຳເຫັນເພື່ອໃຫ້ເນື້ອໃນສົມບູນຂຶ້ນ.
- ຄູຕີລາຄາຄືນຜົນຂອງການຄົ້ນຄ້ວາລາຍງານ ຂອງແຕ່ລະກຸ່ມດີ-ອ່ອນແນວໃດ, ແລ້ວໃຫ້ຄຳຕຳນິຕິຊົມແຕ່ລະກຸ່ມ.
- ຄູສະຫຼຸບເນື້ອໃນໃຈຄວາມຂອງຄຳສຸພາສິດໃຫ້ຊັດເຈນ.

## 3. ການສອນສິລະປະການແຕ່ງຄຳສຸພາສິດ.

- ຄູແນະນຳການປະດິດແຕ່ງຄຳສຸພາສິດຕາມປຶ້ມແບບຮຽນ.
- ຄູຍົກຄຳສຸພາສິດຂຶ້ນມາ ເພື່ອຈຳແນກຮູບແບບປະດິດແຕ່ງດ້ວຍການປຽບທຽບຄວາມໝາຍແປນທີ່ສອດຄ່ອງກັບການດຳລົງຊີວິດຂອງປະຊາຊົນຜູ້ອອກແຮງງານໂດຍກົງ.

ຕົວຢ່າງ: ຢາກກິນເຂົ້າຕ້ອງເຮັດນາ ຢາກກິນປາຕ້ອງລົງນ້ຳ.

ຄຳສຸພາສິດນີ້ມີຄວາມໝາຍໂດຍກົງເພາະວ່ານາເປັນບ່ອນປູກເຂົ້າ, ນ້ຳເປັນທີ່ຢູ່ຂອງປາ. ສະນັ້ນຢາກກິນເຂົ້າຕ້ອງເຮັດນາ, ຢາກກິນປາຕ້ອງໄປຫາຢູ່ນ້ຳ.

- ຄູຍົກຄຳສຸພາສິດທີ່ແຕ່ງຂຶ້ນ ດ້ວຍການປຽບທຽບເຊັ່ນ: ເອົາສັດ, ວັດຖຸຕ່າງໆມາປຽບທຽບໃສ່ຄົນ.

ຕົວຢ່າງ: ຊ້າງເຂົ້ານາ ອາດຍາເຂົ້າບ້ານ.

- ໝູກັດຫູກ ຈຶ່ງຮູ້ຄຸນແມວ.
ລູກແຂວນແອວ ຈຶ່ງຮູ້ຄຸນພໍ່ແມ່.

ຄຳສຸພາສິດທີ່ກ່າວມາຂ້າງເທິງນີ້ ແມ່ນສ້າງຂຶ້ນດ້ວຍການປຽບທຽບຄວາມໝາຍແປນ ແລະ ຄວາມໝາຍເລິກເຊັ່ນ:

- ຊ້າງເຂົ້ານາ ເປັນຄວາມໝາຍແປນ ສະແດງໃຫ້ເຫັນເຖິງການຢຽບຢ່ຳຕົ້ນເຂົ້າໃນນາ.
ອາດຍາເຂົ້າບ້ານ ເປັນຄວາມໝາຍເລິກ ສະແດງໃຫ້ເຫັນເຖິງການຂູດຮີດປະຊາຊົນ.
- ໝູກັດຫູກຈຶ່ງຮູ້ຄຸນແມວ ເປັນຄວາມໝາຍແປນ ຫູກຂາດຍ້ອນໝູກັດ ຈຶ່ງຮູ້ຄຸນແມວລູກແຂວນແອວຈຶ່ງຮູ້ຄຸນພໍ່ແມ່ ເປັນຄວາມໝາຍເລິກ, ເມື່ອລ້ຽງລູກມີຄວາມຫຍຸ້ງຍາກຈຶ່ງຄິດເຖິງບຸນຄຸນຂອງພໍ່ແມ່.

ນອກຈາກນີ້ ການປະດິດແຕ່ງຄຳສຸພາສິດ ຍັງມີຮູບແບບໃຊ້ຄວາມໝາຍກົງກັນຂ້າມກັບຄວາມຈິງເຊັ່ນວ່າ:

ຢາກກິນເຂົ້າ ໃຫ້ປູກໃສ່ພະລານຫີນ
ຢາກມີສິນ ໃຫ້ຂ້າພໍ່ຕີແມ່
ຢາກມີຄົນມາແວ່ ໃຫ້ຂ້າໝູ່ດຽວກັນ.

ຄຳສຸພາສິດດັ່ງກ່າວ ມີຄວາມໝາຍກົງກັນຂ້າມຄື:

- ພະລານຫີນ ເປັນບ່ອນປູກເຂົ້າບໍ່ໄດ້ ແຕ່ພັດແນະນຳໃຫ້ປູກເຂົ້າໃສ່ພະລານຫີນ.
- ການຂ້າພໍ່ແມ່ ເປັນຜູ້ທີ່ມີບາບກຳ ແຕ່ເພີ່ນພັດບອກວ່າ ຢາກມີສິນໃຫ້ຂ້າພໍ່ຕີແມ່.
- ຢາກມີໝູ່ເພື່ອນທີ່ດີ ຕ້ອງຮັກແພງ ແລະ ໃຫ້ຄວາມຊ່ວຍເຫຼືອ ແຕ່ພັດບອກວ່າໃຫ້ຂ້າໝູ່ດຽວກັນ.

ຄຳສຸພາສິດນີ້ມີເນື້ອໃນທີ່ກົງກັນຂ້າມກັບຄວາມເປັນຈິງ.

## 4. ກິດຈະກຳເສີມ

ຄູຈັດກຸ່ມນັກຮຽນຕາມຄວາມເໝາະສົມ ໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າບົດຮຽນຕາມເນື້ອໃນຂອງບົດຮຽນທີ່ຮຽນຜ່ານມາແລ້ວຂຶ້ນນຳສະເໜີ ເຊິ່ງມີສອງວິທີຄື:

* ວິທີທີ1

- ຄູໃຫ້ຄຳຖາມແຕ່ລະກຸ່ມຕ່າງກັນ.

ຕົວຢ່າງ:

+ ກຸ່ມໜຶ່ງ ຄົ້ນຄວ້າກ່ຽວກັບຄວາມໝາຍ, ລັກສະນະຂອງຄຳສຸພາສິດ.
+ ກຸ່ມໜຶ່ງ ຄົ້ນຄວ້າ ການກຳເນີດ ແລະ ການຂະຫຍາຍຕົວຂອງຄຳສຸພາສິດ.
+ ກຸ່ມໜຶ່ງ ຄົ້ນຄວ້າເນື້ອໃນຂອງຄຳສຸພາສິດ.

+ ກຸ່ມໜຶ່ງ ຄົ້ນຄວ້າສິລະປະການປະດິດແຕ່ງຄຳສຸພາສິດ.

- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າເພື່ອຕອບຄຳຖາມ.

- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານຜົນຂອງການຄົ້ນຄວ້າຢູ່ກະດານສູ່ກຸ່ມອື່ນໆຟັງຈົນຄົບແຕ່ລະກຸ່ມ.

- ແຕ່ລະກຸ່ມປະກອບຄຳຄິດຄຳເຫັນເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນ.

- ຄູຕີລາຄາຄືນຜົນຂອງການຄົ້ນຄວ້າລາຍງານແຕ່ລະກຸ່ມຄື: ດີ-ອ່ອນແນວໃດ? ແລ້ວໃຫ້ຄຳຊົມເຊີຍແຕ່ລະກຸ່ມ.

- ຄູສະຫຼຸບເນື້ອໃນໃຈຄວາມຂອງຄຳຖາມແຕ່ລະກຸ່ມຄືນໃຫ້ຊັດເຈນ ແລະ ອະທິບາຍໃຫ້ແຕ່ລະກຸ່ມເຂົ້າໃຈຢ່າງເປັນເອກະພາບ.

* ວິທີທີ2

- ຄູແນະນຳໃຫ້ນັກຮຽນອ່ານຄຳສຸພາສິດໃນບົດອ່ານເພີ່ມ ແລ້ວໃຫ້ນັກຮຽນຈັດຄຳສຸພາສິດເປັນກຸ່ມຕາມເນື້ອໃນສ່ອງແສງໃຫ້ໄດ້ຢ່າງລະປະມານ 5 ຄຳ.

1) ຄຳສຸພາສິດທີ່ເວົ້າເຖິງການອອກແຮງງານ.

2) ຄຳສຸພາສິດທີ່ເວົ້າເຖິງມາລະຍາດທາງສັງຄົມ.

3) ຄຳສຸພາສິດທີ່ເວົ້າເຖິງການຕໍ່ສູ້ຊົນຊັ້ນ.

4) ຄຳສຸພາສິດທີ່ເຂົ້າເຖິງຄວາມສາມັກຄີ.

ຫຼັງຈາກນັ້ນ ຄູສະຫຼຸບຕີລາຄາຜົນຂອງການຕອບ ແລະ ອະທິບາຍໃຫ້ນັກຮຽນເຂົ້າໃຈ.

* ຕອບຄຳຖາມທ້າຍບົດໃນປຶ້ມແບບຮຽນ

1. ຄຳສຸພາສິດ ແມ່ນຄຳເວົ້າທີ່ສັ້ນ, ກະທັດຮັດແຕ່ມີເນື້ອໃນຄົບຖ້ວນເຊິ່ງເປັນຄະຕິ, ເປັນຄຳສອນ, ເປັນບົດຮຽນອັນມີຄ່າຂອງການດຳເນີນຊີວິດ ແລະ ການທຳມາຫາກິນຂອງຊາວຜູ້ອອກແຮງງານ.

2. ຄຳສຸພາສິດເກີດຂຶ້ນແຕ່ສະໄໝບູຮານ, ຂະຫຍາຍຕົວຜ່ານຫຼາຍລະບອບສັງຄົມຕ່າງກັນ ທາງດ້ານເນື້ອໃນ ແລະ ສິລະປະ, ຄຳສຸພາສິດ ແມ່ນຄຳເວົ້າ, ແມ່ນແນວຄິດຂອງປະຊາຊົນ. ດັ່ງນັ້ນ ເຮົາເຈົ້າໃຊ້ຄຳສຸພາສິດເຂົ້າໃນການດຳລົງຊີວິດປະຈຳວັນຫຼາຍທີ່ສຸດ.

ຄຳສຸພາສິດ ແມ່ນບົດຮຽນຕົວຈິງຂອງປະຊາຊົນ ທີ່ຖອດຖອນມາໄດ້ ໂດຍຜ່ານຂະບວນວິວັດອັນຍາວນານ ແລະ ຫຼາຍຮູບຫຼາຍສີຂອງການອອກແຮງງານ, ການຕໍ່ສູ້ດັດແປງທຳມະຊາດ ແລະ ສັງຄົມ, ການຝຶກຝົນທັດສະນະຄຸນສົມບັດ ແລະ ສັດຈະທຳຂອງຄົນເຮົາ.

3. ຄົນບູຮານອາໄສການອອກແຮງງານດ້ວຍຕີນມື ເພື່ອລ້ຽງຊີບເຊັ່ນ: ການເຮັດໄຮ່, ເຮັດນາ.

ການອອກແຮງງານດັ່ງກ່າວຕ້ອງໄດ້ອີງໃສ່ດິນຟ້າອາກາດ. ປະຊາຊົນຈຶ່ງຊອກຫາວິທີຕ່າງໆ ເພື່ອຕັກເຕືອນເຊິ່ງກັນ ແລະ ກັນໃຫ້ຮູ້ລະດູການເພີ່ມພູນຜະລິດຜົນທີ່ຈະໄດ້ຮັບຜົນດີ. ດັ່ງຄຳສຸພາສິດທີ່ວ່າ:

- ເດືອນຫົກໃຫ້ຫວ່ານກ້າ ເດືອນຫ້າໃຫ້ແປງໄຖ.
- ຢ່າໄດ້ດຳນາຫຼ້າ ປາຍປີບໍ່ທັນເພິ່ນ.
- ກົກຈະນ້ອຍ ຝົນນັ້ນແຮ່ງບໍ່ມີ.

ນອກນັ້ນຊາວລາວບັນດາເຜົ່າຍັງໄດ້ຕັກເຕືອນສັ່ງສອນກັນໃຫ້ມີຄວາມດຸໝັ່ນຂະຫຍັນພຽນ ໃນການອອກແຮງງານ ເພື່ອນຳເອົາຄວາມອີ່ມໜຳສຳລານມາໃຫ້ແກ່ຄົນເຮົາ, ດັ່ງຄຳສຸພາສິດ ທີ່ວ່າ:

- ໄປຢຽບໜາ ມາຢຽບຂຽດ.
- ໃຫ້ຕື່ນເດິກຄືກາ ຫາກິນຄືໄກ່.
- ໄຮ່ບໍ່ຮົກ ຍ້ອນເຈົ້າຂອງມັນພຽນ
  ໄຮ່ນາພຽງ ຍ້ອນເຈົ້າຂອງມັນໝັ່ນ.

ຄຳສຸພາສິດທີ່ເວົ້າເຖິງບົດຮຽນໃນການອອກແຮງງານມີຢ່າງຫຼວງຫຼາຍທີ່ປະຊາຊົນບັນດາເຜົ່າໄດ້ເອົາເປັນຄະຕິເຕືອນໃຈ, ເປັນຕຳລາອັນປະເສີດໃນການອອກແຮງງານເຮັດວຽກໄຮ່ການນາ, ລ້ຽງສັດປູກຝັງ... ນີ້ສະແດງໃຫ້ເຫັນຄວາມສະຫຼາດຫຼັກແຫຼມ, ຄວາມຊຳນິຊຳນານ ແລະ ຄວາມປີຊາສາມາດເຊິ່ງຊາວຜູ້ອອກແຮງງານລາວເຄີຍມີມາ ແລະ ຖ່າຍທອດຕໍ່ກັນມາແຕ່ບູຮານນະການ.

4. ປະຊາຊົນລາວຍັງໄດ້ເອົາໃຈໃສ່ຕັກເຕືອນໃຫ້ລູກຫຼານຕ້ອງມີຄຸນສົມບັດ ຫຼື ມາລະຍາດທີ່ດີຕໍ່ກັນ, ລູກຕ້ອງຮູ້ນັບຖືພໍ່ແມ່, ຄູບາອາຈານ, ຜູ້ເຖົ້າຜູ້ແກ່, ນັບແຕ່ການປາກເວົ້າ ຫຼື ການກະທຳ. ຄຸນສົມບັດອັນດີທີ່ກ່າວມານີ້ ແມ່ນມູນເຊື້ອອັນດີງາມອັນໜຶ່ງຂອງລາວທີ່ເຊື່ອຖື ແລະ ປະຕິບັດກັນມາ ດັ່ງຄຳສຸພາສິດທີ່ວ່າ:

- ຄຸນພໍ່ທໍ່ພູເຂົ້າກ້າ ຄຸນແມ່ທໍ່ຟ້າກັບແຜ່ນດິນ.
- ນາດີຖາມຫາເຂົ້າປູກ ລູກດີຖາມຫາພໍ່ແມ່.
- ຊິຖິ່ມນ້ຳລາຍ ໃຫ້ຫຼຽວເບິ່ງປ່ອງ
  ຊິເຕັ້ນຂ້າມຮ່ອງ ໃຫ້ຫຼຽວເບິ່ງໜາມ.

5. ໃນໄລຍະຜ່ານມາປະຊາຊົນລາວໄດ້ຖືກຊົນຊັ້ນປົກຄອງຄື: ຊົນຊັ້ນສັກດິນາ, ນາຍທຶນກົດຂີ່ຂູດຮີດ. ເມື່ອເປັນແນວນັ້ນ ປະຊາຊົນຜູ້ຖືກກົດຂີ່ຂູດຮີດຈຶ່ງລຸກຂຶ້ນຕໍ່ສູ້, ວັນນະຄະດີກໍແມ່ນອາວຸດອັນແຫຼມຄົມໃນການຕໍ່ສູ້ຊົນຊັ້ນຂອງຊາວຜູ້ອອກແຮງງານ. ດັ່ງນັ້ນ, ເຂົາເຈົ້າຈຶ່ງໄດ້ປະດິດແຕ່ງຄຳສຸພາສິດກ່າວໂຈມຕີທາດແທ້ອັນຊົ່ວຊ້າຂອງພວກສັກດິນາ ອາດຍາສິດຜູ້ປົກຄອງ, ດັ່ງຄຳສຸພາສິດ

ທີ່ວ່າ:

- ຜູ້ກິນກິນພໍຮາກ ຜູ້ຢາກຢາກພໍຕາຍ.
- ເຫັນວ່າປາກນົກນ້ອຍ ຊ້າງຢ່າຟ້າວຢຽບລົງໜັກ ຫຼາຍເນີ
  ບາດນົກໂຮມແຮງກັນ ຊິຕອດຕາຍໂຕຊ້າງ.

6. ປະຊາຊົນລາວເຄີຍສັ່ງສອນໃຫ້ທຸກຄົນມີຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ນັ້ນແມ່ນມູນເຊື້ອອັນດີງາມ ທີ່ປະຊາຊົນລາວບັນດາເຜົ່າໄດ້ສ້າງຂຶ້ນແລະສືບທອດກັນມາແຕ່ບູຮານນະການ, ເຊິ່ງແມ່ນປັດໄຈທີ່ສຳຄັນຍິ່ງໃນການຕັດສິນຄວາມສຳເລັດ ແລະ ໄຊຊະນະຕ່າງໆໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ດັ່ງຄຳສຸພາສິດທີ່ວ່າ:

- ຮົ້ວຫຼາຍຫຼັກຈຶ່ງໝັ້ນ ພີ່ນ້ອງຫຼາຍຊັ້ນຈຶ່ງດີ
- ພີ່ນ້ອງບໍ່ຫຼາຍ ໃຫ້ຫາສະຫາຍເອົ້າຕື່ມ
- ຜົມບໍ່ຫຼາຍໃຫ້ຕື່ມຊ້ອງ ພີ່ນ້ອງບໍ່ຫຼາຍໃຫ້ຕື່ມສ່ຽວຕື່ມເກີ

7. ) ສິລະປະການແຕ່ງຄຳສຸພາສິດ ເພີ່ນໃຊ້ສັບພາສາທີ່ມີລັກສະນະສາມັນຊົນ, ຮູບແບບການປະດິດແຕ່ງໃຊ້ຫຼາຍຮູບແບບເຊັ່ນ:

- ໃຊ້ການປຽບທຽບ.
- ເຊື່ອງບັງຄວາມໝາຍ.
- ເອົາສັດ, ວັດຖຸມາປຽບທຽບໃສ່ຄົນ.
- ວິທີປະສົມປະສານຄວາມໝາຍແປນ ແລະ ຄວາມໝາຍເລິກ.

(ສ່ວນຕົວຢ່າງໃຫ້ເອົາຕາມຂໍ້ທີສາມຂອງສິລະປະການແຕ່ງຄຳສຸພາສິດໃນປຶ້ມແບບຮຽນ)

* ຄູແນະນຳໃຫ້ນັກຮຽນອ່ານບົດຮຽນບົດຕໍ່ໄປ.

## V. ການວັດ ແລະ ປະເມີນຜົນ

**ສິ່ງເກດຈາກ:**

- ການອະທິບາຍກ່ຽວກັບຄວາມໝາຍ, ລັກສະນະ, ການກຳເນີດ ແລະ ການຂະຫຍາຍຕົວ ຂອງຄຳສຸພາສິດ.
- ການອະທິບາຍກ່ຽວກັບເນື້ອໃນ ແລະ ຄວາມໝາຍການສ່ອງແສງຂອງຄຳສຸພາສິດ.
- ການອະທິບາຍກ່ຽວກັບສິລະປະການປະດິດແຕ່ງຄຳສຸພາສິດ.





ແຫ່ໃບລາບ

## ຕີຄວາມໝາຍຂອງຄຳສຸພາສິດແຕ່ຂໍ້ທີ 1 ຫາຂໍ້ທີ 20 ໃນໜ້າທີ 38-41 ໃນປຶ້ມແບບຮຽນ

1. ມີຄວາມໝາຍວ່າຜູ້ທີ່ມີຄວາມຮູ້, ມີທິສະດີຫຼາຍແຕ່ເຮັດຕົວຈິງບໍ່ໄດ້ຈະບໍ່ມີໃຜຍົກຍ້ອງວ່າດີ.
2. ຄວາມໝາຍແປນ: ແຫວນຄຳທີ່ມີຄວາມງາມເພາະມີຫົວແກ້ວ.

- ຄວາມໝາຍແປນ: ຄົນຜູ້ມີຄວາມຮູ້ຈະມີຄວາມຈະເລີນຮຸ່ງເຮືອງກໍເພາະມີກິລິຍາມາລະຍາດທີ່ດີ.

3. ຄວາມໝາຍແປນ: ການຍິງປືນຕ້ອງແນໃຫ້ຖືກເປົ້າໝາຍ.

- ຄວາມໝາຍເລິກ: ແມ່ຍິງແທ້ຕ້ອງເປັນແມ່ຍິງທີ່ດີ ເຮັດຫຍັງທຳຫຍັງຕ້ອງມີການຄົ້ນຄິດໃຫ້ຖືກຕ້ອງ.

4. ຄວາມໝາຍແປນ: ຊາຍທີ່ດີຕ້ອງແມ່ນຊາຍທີ່ບໍ່ມີຫີນແຮ່ ຫຼື ຂີ້ຕົມປົນ ເວລາເອົາມາກໍ່ເຮືອນກໍ ງາມ ແລະ ໝັ້ນໜຽວ.

- ຄວາມໝາຍເລິກ: ຜູ້ຊາຍທີ່ດີຕ້ອງເປັນຜູ້ທີ່ມີຄວາມຮູ້ຄວາມສາມາດ, ມີຄຸນສົມບັດທັດສະນະທີ່ຖືກຕ້ອງ.

5. ເວົ້າເຖິງຄວາມສາມັກຄີພາຍໃນຄອບຄົວ, ເຮັດຫຍັງຕ້ອງພ້ອມພຽງກັນຈຶ່ງເຮັດໃຫ້ຄອບຄົວມີຄວາມສຸກຄວາມຈະເລີນຕະຫຼອດໄປ.
6. ຄວາມໝາຍເວົ້າເຖິງຄວາມສາມັກຄີ, ເພິ່ນທຽບດວງຈັນຄືກັບການນຳ, ດວງດາວຄືປະຊາຊົນ.
7. ຄວາມໝາຍແປນ: ເວົ້າເຖິງເຈົ້າຂອງໝາບໍ່ຄວນລືມບຸນຄຸນຂອງໝາເພາະມັນເປັນຜູ້ເຝົ້າເຮືອນ.

- ຄວາມໝາຍເລິກ: ສັ່ງສອນໃຫ້ຄົນເຮົາບໍ່ຄວນລືມບຸນຄຸນຂອງຜູ້ມີພະຄຸນຕໍ່ເຮົາ.

8. ຄວາມໝາຍແປນ: ຊີວິດຂອງຄົນເຮົາຖ້າມີແຕ່ຄອງຖ້າບຸນວາດສະໜາມາຊ່ວຍ, ບໍ່ເຮັດບໍ່ສ້າງຈະເຮັດໃຫ້ຊີວິດຄົນເຮົາທຸກຍາກບໍ່ຈະເລີນຮຸ່ງເຮືອງ.

- ຄວາມໝາຍເລິກ: ເວົ້າເຖິງຄວາມອົດທົນຕຸໝັ່ນພາກພຽນ ເຮັດວຽກງານທຸກຢ່າງຈະເຮັດໃຫ້ຊີວິດດີຂຶ້ນ.

9. ຄວາມໝາຍແປນ: ໝົກປາແດກ ແລະ ຈີ່ກະປູແມ່ນວຽກທີ່ງ່າຍແຕ່ຖ້າບໍ່ຮູ້ວິທີກໍເຮັດບໍ່ເປັນ.

- ຄວາມໝາຍເລິກ: ການເຮັດວຽກງານທຸກຢ່າງມັນມີຫຼັກການ, ມີວິທີ ພວກເຮົາຢາກມີຄວາມຮູ້ຕ້ອງໄດ້ສຶກສາຮ່ຳຮຽນນຳຄູ.

10. ຄວາມໝາຍແປນ: ຊີວິດຂອງຄົນເຮົາບໍ່ຄວນເອື່ອຍອີງໃສ່ຜູ້ອື່ນ.

- ຄວາມໝາຍເລິກ: ຕົນເປັນທີ່ເພິ່ງຂອງຕົນ.

11 . ຄວາມໝາຍແປນ: ຢູ່ທ່ານ້ຳຄວນມີເຮືອຫຼາຍລຳເພື່ອເຮັດໃຫ້ການໄປມາສະດວກ. ການໜ່າເຂົ້າກໍເຊັ່ນກັນ ບໍ່ຄວນຈຳກັດຕ້ອງໜ່າເພື່ອແຂກຄົນ.

- ຄວາມໝາຍເລິກ: ເວົ້າເຖິງຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງຄົນເຮົາ.

12 . ຄວາມໝາຍແປນ: ເຮົາຢາກກິນໝາກໄມ້ຕ້ອງອອກແຮງງານປູກຝັງ.

- ຄວາມໝາຍເລິກ: ເຮົາຢາກເປັນຄົນດີມີຄວາມຮູ້ຕ້ອງໄດ້ສຶກສາຮ່ຳຮຽນ.

13 . ຄວາມໝາຍແປນ: ໄມ້ລຳດຽວຍັງຕ່າງປ້ອງ ແຕ່ລະປ້ອງຈະບໍ່ຄືກັນ, ອ້າຍນ້ອງເກີດຮ່ວມພໍ່ແມ່ ດຽວກັນ ຈິດໃຈແຕ່ລະຄົນກໍຕ່າງກັນ.

- ຄວາມໝາຍເລິກ: ຄົນເຮົາຫຼາຍຄົນທີ່ຢູ່ຮ່ວມກັນ ແຕ່ແນວຄິດຈິດໃຈລ້ວນແຕ່ຕ່າງກັນ. ດັ່ງນັ້ນ, ຢາກກະທຳຫຍັງລົງໄປຕ້ອງຄຳນຶງເຖິງຈິດໃຈຂອງຜູ້ອື່ນ.

14 . ຄວາມໝາຍແປນ: ເຫຼັກຂົດ, ເຫຼັກງໍຍັງມີຄຸນຄ່າ ແຕ່ຄົນຄົດລ້ຽວບໍ່ມີຄຸນຄ່າ.

- ຄວາມໝາຍເລິກ: ເວົ້າເຖິງຄວາມຊື່ສັດສຸດຈະຫຼີກຂອງຄົນເຮົາ.

15 . ຄວາມໝາຍແປນ: ການເບິ່ງຊ້າງຕ້ອງເບິ່ງຫາງ.

- ຄວາມໝາຍເລິກ: ການເບິ່ງແມ່ຍິງຕ້ອງເບິ່ງພໍ່ແມ່ ແລະ ຍາດຕິພີ່ນ້ອງ ປູ່ຍ່າຕານາຍ.

16 . ຄວາມໝາຍແປນ: ເງິນຄຳເປັນຂອງຊື້ຂາຍສາມາດຊອກຫາໄດ້, ຈິດໃຈຊື້ຂາຍບໍ່ໄດ້.

- ຄວາມໝາຍເລິກ: ເວົ້າເຖິງຄຸນຄ່າ ແລະ ບົດບາດຂອງຈິດໃຈມີຄວາມສຳຄັນກວ່າເງິນຄຳ.

17 . ຄວາມໝາຍແປນ: ພົບຄົນດີກໍຈະພາເຮົາໄປທາງດີ, ພົບຄົນຊົ່ວກໍຈະພາເຮົາໄປທາງຊົ່ວ.

- ຄວາມໝາຍເລິກ: ສັ່ງສອນໃຫ້ຄົນເຮົາຕ້ອງເລືອກຄົບຫາແຕ່ຄົນທີ່ດີ, ມີຄວາມຮູ້ຄວາມສາມາດ.

18 . ຄວາມໝາຍແປນ: ນົກເຈົ່ຳເປັນນົກທີ່ມີສີຂີ້ເທົ່ຳປົນຂາວ ຢູ່ແບບສະຫງົບສະງຽບ, ນົກຍາງເປັນ ນົກທີ່ມີສີຂາວບໍລິສຸດ ເວລາມັນບິນຄົນເຮົາສາມາດມອງເຫັນໄດ້ຢ່າງຈະແຈ້ງ.

- ຄວາມໝາຍເລິກ: ເວົ້າເຖິງທັດສະນະຄຸນສົມບັດທີ່ດີ.

19. ຄວາມໝາຍແປນ: ໄມ້ລຳດຽວບໍ່ສາມາດລ້ອມຮົ້ວໄດ້, ປະຊາຊົນບໍ່ພ້ອມພຽງກໍບໍ່ສາມາດສ້າງ ບ້ານແປງເມືອງໄດ້.

- ຄວາມໝາຍເລິກ: ເວົ້າເຖິງຄວາມສາມັກຄີ.

20. ຄວາມໝາຍແປນ: ຍິງຮູບຮ້າຍ, ຊາຍຮູບຊາມໝາຍເຖິງຍິງ, ຊາຍທີ່ມີຮູບຮ່າງໜ້າຕາພາຍ ນອກບໍ່ງາມ.

- ຄວາມໝາຍເລິກ: ຄອງວັດພາງາມແມ່ນໝາຍເຖິງແມ່ຍິງທີ່ຮູ້ຮີດຄອງປະເພນີ, ຮູ້ວຽກ ບ້ານການເຮືອນ, ວິຊາພາຮຸ່ງໝາຍເຖິງຜູ້ຊາຍທີ່ມີຄວາມຮູ້ຄວາມສາມາດ, ມີວິຊາອາຊີບ.

## ບົດອ່ານເພີ່ມ

1. ຜີເຮືອນບໍ່ດີຜີປ່າແຊກ.
2. ໂຜດເຕົ່າໃຫ້ເຖິງໜອງ.
3. ຕີນຊ້າງຢຽບປາກນົກ.
4. ສະຫວັນຢູ່ໃນອົກ ນະຮົກຢູ່ໃນໃຈ.
5. ເສນາໜາກຂີ້ກາ.
6. ເຫຼົ້ກ້າຖືກຫີນຊາ.
7. ແຫວນດີ້ອນຫົວຜົວດີ້ອນເມຍ.
8. ຄວາຍເຖົ້າມັກຫຍ້າອ່ອນ.
9. ຊື່ທ່ຊ້າງ ຮ່າງທ່ແມວ.
10. ມັກງ່າຍໄດ້ຍາກລຳບາກໄດ້ດີ.
11. ກິນເຂົ້າໂຕ ຢ່າໂສຄວາມເຜິ່ນ.
12. ກິນຫຼາຍທ້ອງແຕກ ແບກຫຼາຍຫຼັງຫັກ.
13. ກິນໜ່ຳໆບໍ່ລຳເບິ່ງທ້ອງ.
14. ຂອງກິນບໍ່ກິນມັນເນົ່າ ຂອງເກົ່າບໍ່ເລົ່າມັນລືມ.
15. ປ່າໃຫຍ່ກິນນ້ອຍ ປາສ້ອຍກິນປາຊິວ.
16. ຢາກກິນຫຼາຍໄດ້ກິນທ່ກິ່ງກ້ອຍ ຢາກກິນໜ້ອຍໄດ້ກິນທ່ໂປ້ມື.
17. ຢາກມີຫຼາຍມັນໄຮ້ ຢາກໄດ້ຫຼາຍມັນຕາຍ.
18. ຮັກເມຍໂຕໃຫ້ຮັກລຸງຕາ ຮັກນາໂຕໃຫ້ຮັກກວານບ້ານ.
19. ໃກ້ຫົວລ້ານຢ່າດ່ານົກກະຊຸມ.
20. ທີ່ສະໜຸກຢ່ານອນ ເມຍວອນຢ່າຍິນ
    ເຮັດກິນຢ່າຄ້ານ ເຂົ້າບ້ານຢ່າອາຍ
    ເຫັນຜີຕາຍ ຢ່າໄດ້ຂີ້ດຽດ.
21. ຂ້າມເໜືອເຜື່ອຕົກໃຕ້ ໄຫຼລົງມາຄອມແມ່ນ.

ผ้าอี่โต้บ่เอ้า ฟันเจี้ยตั้งแต่ไภ.

22. เอ้าอู้ไอ้ไภตา เธัดบาไอ้ไภบ้าม

ฟามพู่ร้อย ทรวเอ้าส่องบ่เห็น.

23. ถาภไม้บ่ตามหู่ธมเค้า แสบซิก้รวภกำบ่วาม.

24. ใผเธัดดีจึ่งมีผิมวาม ใผทิบทามอรภวามจึ่งแล้อ.

25. เธัดอันใด ใส่ใจอันนั้น

อู้เอ่ยอ้าว ผันชั้นย่าหูรอ.

26. แหภับอ้อว สังมาจาภับค่อว

ทาวแหผัดมุดน้ำ ทาวอ้อวผัดล่อวลอย.

27. ติภตาป้ำ บ่เป็นสอนให้เป็นไธ่

ลันบ่ได้ปูภเอ้ำ ผ่ได้ปูภมัน.

28. เผิ่นอี้โตจึ่งหาออน เผิ่นนอนโตจึ่งหาบ่อนนั่ว.

29. ยาภธอดไอให้ลาน ยาภธอดนามให้แล่น.

30. เธัดนาย่าแผวก้า ไปล้าย่าแผวทึบ.

31. ยู่ให้ปูภมอน หีให้ซอนธ้อ.

32. ภาวลืนเป็นเหวัน ภาวเอันเป็นมิภเค้า มื้เช้าเป็นแมอโพว.

33. ไม้แภ่ก่อาหูอ จ้อแภ่ก่อาพะ

ไม้ลื่นอา, ปาลื่นร้อย เด็ภน้อยลื่นผู่ใหย่.

34. ยามยาภคึดเถิวนาย ยามตายคึดเถิวพะ.

35. สัดสี่ตีนยังธู้พะลาด นักปาดยังธู้หูว

หิวลำยังถืภบ้อว ลอายเถ้าติ่นไถ.

36. ลาดซิได้บินมาลืนิภเจ่า ลาดซิบ่ได้บินเจี๊ยเจิดหี.

37. เอ้ำเผิ่นขาอ ลูภสาวเผิ่นแธว

แภวเผิ่นแซบ ปาแดภเผิ่นบ๊อ

ຜົວເພິ່ນດີ ຍ້ອນເມຍເພິ່ນຊ່າງ.

38. ບຸນບໍ່ໃຫ້ຍອຍໄຮກໍບໍ່ຍ່ອນ ບຸນບໍ່ໃຫ້ແສນຊີໃກ້ກໍເລົ່າໄກ.
39. ເຮືອລົ້ມບາດຈອດ ຕາບອດບາດເຖົ້າ.
40. ເຊືອກສາມວາລ່າມຊ້າງ ອວດອ້າງວ່າໂຕດີ.
41. ແມງເມົ່າບິນຜ່ານຟ້າ ບໍ່ມີມື້ມປາກອົ່ງຢ່າງ.
42. ຜູກຄວາຍໃສ່ຫີນລາດ ຄ່າວບໍ່ຂາດຄວາຍຕາຍ.
43. ພ້າດີແພ້ກັ່ນ ຄົນໝັ່ນແພ້ແຮງ
ຄານແຂງແພ້ບ່າ ມັກປ້ອຍຜີຮ່າແພ້ເຂົ້າຂອງ
ຜົມຫຍອງແພ້ຫວີ.
44. ຟັງຄວາມເມຍເສຍຜີນ້ອງ ຟັງຄວາມທ້ອງມັນແກ່ມຂອງກິນ.
45. ມ້ອນນອນຢ່າເກືອ ເສືອນອນຢ່າປຸກ
46. ໜາກັດໜັງຊິຍັງຄົນເທື່ອ ເບື່ອຜີນ້ອງຍ້ອງຜູ້ອື່ນດີ.
47. ຍາມດີບໍ່ໃຫ້ເຫັນ ຍາມເໜັນຈຶ່ງໃຫ້ພໍ້.
48. ເສືອຕາຍຍ້ອນໜັງ ຊ້າງຕາຍຍ້ອນງາ ພະຍາຕາຍຍ້ອນລາຊະສົມບັດ.
49. ສິບພໍ່ຄ້າມາໄຫວ້ພໍ່ນາ ສິບພໍ່ນາບໍ່ທໍ່ອາດຍາລ້ຽງ.
50. ຊື້ຄວາຍຍາມນາ ຊື້ຜ້າຍາມບຸນ
51. ເອົາລູກໄພ້ມາລ້ຽງຍ່າ ປານເອົາຮ່າມາໃສ່ເຮືອນ.
52. ຕົກໝູ່ແຮ້ງເປັນແຮ້ງ ຕົກໝູ່ກາເປັນກາ.
53. ຄົນຕາບອດຢ່າໃຫ້ຮ່ວມເຮືອນ ຄົນຕາເປືອນຢ່າໃຫ້ຮ່ວມບ້ານ
ຄົນຂີ້ຄ້ານ ຢ່າເອົາເປັນໝູ່ເປັນຝູງ.
54. ຄຳທໍ່ຫົວໜາ ບໍ່ທໍ່ນາຕີນບ້ານ.
55. ເງິນເຕັມພາ ບໍ່ທໍ່ຜະຫຍາເຕັມປູມ.
56. ເພິ່ນບໍ່ເອີ້ນບໍ່ຂານ ເພິ່ນບໍ່ວານບໍ່ຊ່ວຍ.
57. ມີຜົວໃຫ້ຊ່າງຍ້ອງ ມີນ້ອງໃຫ້ຊ່າງອວຍ.

| | | |
|---|---|---|
| 58. ສິບຜູ້ຮູ້ບໍ່ທໍ່ຜູ້ເຄີຍ | ສິບລູກເຂີຍບໍ່ທໍ່ພໍ່ເຖົ້າ | ສິບເວົ້າບໍ່ທໍ່ທຳ. |
| 59. ຢ່າຟັງຄວາມເບົາ | ຢ່າເອົາຄວາມງ່າຍ. | |
| 60. ໃຫ້ຮັກສາສາມປາຍ | ຈຶ່ງຫາຍສາມໂຫດ. | |
| 61. ໄກ່ສາມເດືອນພໍ້ຄ້າ | ມ້າສາມປີພໍ່ຂີ່. | |
| 62. ຄວາຍບາດແຫ່ກ້າ | ໜາບາດແຫ່ແມງວັນ. | |
| 63. ຄວາມຮູ້ຖ້ວມຫົວ | ເອົາຕົວບໍ່ລອດ. | |
| 64. ເຄັ່ງຫຼາຍມັນຂາດ | ຍານຫຼາຍມັນຄ້ອງ. | |
| 65. ຄວາມບໍ່ມີຫາໃສ່ | ໄມ້ບໍ່ໃຫຍ່ຫາແຖມ. | |
| 66. ຄວາຍຊົນກັນແພ້ຫຍ້າແຝກ | ແດດອອກແພ້ພູເຂົາ. | |
| 67. ຄວາມດີຝັງໄວ້ເກົ້າສອກ | ຄວາມຊົ່ວຊັດອອກເກົ້າວາ. | |
| 68. ເງິນຫົວຂວັນເຈົ້າ | ເຂົ້າຫົວຂວັນໜາ. | |
| 69. ໃຈໜັກໄດ້ກິນເຂົ້າ | ໃຈເບົາໄດ້ກິນກອຍຫົວໃຫ່ຍ. | |
| 70. ໃຈຮ້າຍເປັນຜີ | ໃຈດີເປັນພະເຈົ້າ. | |
| 71. ເຈົ້ານາຍບໍ່ດີ | ເຫັນແກ່ເງິນແສນໄຖ່ | |
| ເຈົ້ານາຍດີ | ເຫັນແກ່ໄພ່ແສນເມືອງ. | |
| 72. ຊ້າງຊິຕາຍທາວເຄືອ | ເສືອຊິຕາຍທາວເຫຼົ່າ. | |
| 73. ໄຊໃສ່ໃຕ້ | ຫຼັງຫຼ້າບໍ່ໜານ. | |
| 74. ໄດ້ບໍ່ເສຍບໍ່ມີບ່ອນໄວ້ | ກິນບໍ່ໃຊ້ເປັນໜີ້ເທົ້າຕາຍ. | |
| 75. ຕີຫົວປາ | ສະເໝືອນຫົວນາກ. | |
| 76. ທຸກໃຫ້ລ້ຽງ | ປາກກ້ຽງໃຫ້ໄລ່ໜີ. | |
| 77. ນອນບໍ່ຫຼັບໃຫ້ໄປທ່ຽວ | ມີສ່ຽວໃຫ້ໄປຍາມ. | |
| 78. ນ້ຳເຢັນປາຮ້ອນ | ນ້ຳຮ້ອນປາໜີ. | |
| 79. ນຸ່ງຜ້າລາຍໜາເຫົ່າ | ຄົ້ນຄວາມເກົ່າຜິດກັນ. | |
| 80. ບ່ອນເຂັດໃຫ້ຢຳ | ບ່ອນຂະລຳໃຫ້ຢ້ານ. | |

81. ບໍ່ມີຝອຍໝາບໍ່ຮ່ອນຂີ້ ບໍ່ມີໜີ້ເຂົ້າບໍ່ຮ່ອນຖາມ.

82. ເປັນຂ້ອຍໃຫ້ເປັນຂ້ອຍອາດຍາ ເປັນໝາໃຫ້ເປັນໝາວັດ.

83. ປ່າເພິ່ງເສືອ ເຮືອເພິ່ງພາຍ ນາຍເພິ່ງບ່າວ.

84. ປູກໄມ້ໃຫ້ເປັນດົງ ປູກບົງໃຫ້ເປັນເຫຼົ່າ.

85. ເປັນຄົນໃຫ້ເພິ່ນໃຊ້ ເປັນໄມ້ເຂົາຟັນ.

86. ເອົາລູກເພິ່ນມາລ້ຽງ ເອົາໜ້ຽງເພິ່ນມາອົມ.

87. ຢູ່ທົ່ງຢ່າຖາມຫາວີ ຢູ່ດີຢ່າຖາມຫາໝໍຢາ

88. ຮັກລູກສິບນາບ ຮັກຫຼານໝື່ນໜຶ່ງ.

89. ຮັກເມຍໂຕໃຫ້ຮັກລຸງຕາ ຮັກນາໂຕໃຫ້ຮັກພໍ່ບ້ານ
ໃກ້ຫົວລ້ານຢ່າດ່ານິກກະຊຸມ ເພິ່ນຫຸມໂຕຢ່າໂງຫາງຕ່າງ.

90. ເຖິງຍາມຄ່ຳຢ່ານັ່ງແຈຫາງ ຍາມກາງຄືນຢ່າທ່ຽວກາງບ້ານ.

91. ເຂົ້າເຖື່ອນກ້ວາງ ຢ່າອ່າວຫາເສືອ ໄປຫາງເຮືອຢ່າອ່າວຫາເງືອກ.

92. ໄດ້ເມຍດີປານໄດ້ແກ້ວຄູນລ່ຳ ໄດ້ເມຍຊ່ຳງປານໄດ້ແກ້ວຄູນເຮືອນ
ໄດ້ເມຍບິດເບືອນ ປານກຸມໝູເຂົ້າຄອກ
ໄດ້ເມຍປອກລອກ ປານແກ່ໄມ້ຫາງປາຍ.

93. ໄດ້ເມຍດີປານສິບໄຖຂາງ ໄດ້ເມຍນາງຜ້ອນຸ່ງຜ້າໃໝ່.

94. ນາແຫ່ງໃຫຍ່ ກ້າຊ້ຳແຫ່ງເຫຼືອ.

95. ໄດ້ເມຍດີ ປານສິບໄຖເຫຼັກ
ໄດ້ເມຍປາກເກັກໆ ຜ້ອນຸ່ງຜ້າຜ່ອຍ
ນາແຫ່ງນ້ອຍ ກ້າຊ້ຳບໍ່ພໍ.

96. ເປັນນາຍໃຫ້ຮັກໝູ່ ເປັນປູ່ໃຫ້ຮັກຫຼານ ເປັນຂຸນກວານໃຫ້ຮັກລູກບ້ານ
ຄັນຊິຕ້ານໃຫ້ຄ່ອຍພຽນຈາ ຢ່າກິນນ້ຳໃຫ້ພຽນຂອງຝາກ.

97. ກາກິນປີ ໄປຄ້ຳຄໍແຮ້ງ ເຮືອຄ້ຳແກ້ງ ໄປລົ້ມເຄິ່ງວັງ.

98. ກຳສັງໂອ້ ໂອທອງສັງມາແຕກ ບາດກະໂປະໜາກພ້າວສັງມາໝັ້ນກວ່າໂອ.

99. ภอาวภินพาภอามป้อม ไปลาภิ้นละมั่ว
ละมั่วอี้บ่ได้ สามมื้ภะต่ายตาย.

100. เภ้าซิ้อาสิบซิ้อา ให้เอ๊าแก่นภะยุวติ
ย่าได้เอ๊าบาลิ ต่อยติตาวล้อบ.

101. ยาภภินเพัด ให้เจ้าแยวลิวห้อย.
ยาภภินผักพิพอย ให้เจ้าแยวลิวบุ่ว
ลับอ่ายาภได้ภุ้ว ให้พายอ้อวอื้บว่ายาว.

102. หินแผ่นล้าบ ก้อบใหย่ลือซิพัภ
บาดอ่าเอ๊าสะโบติด ซั่วซาสังมาได้
ผิอ่าตามตาถื้อ ลือสะโบซิพัภภอ่า
ลับอ่าตาบ่ถื้อ ซิเบ๊าเบื้อวฝ่ายสะโบ

103. ตาดีไปล้อวซ้าว สามลืบมาเป่า
ตาบอดไปลอ่าล้อว ลาวมื้ได้ยี่มา.

104. ติภตาอ่าได้เป็บเสือแล้อ ลายบ่ลายเอ๊าภ่ตู่
แพวไปหาพื้บพั้ มาแต้มให้ติ่มลาย.

105. บ้าบเมืองอ้อบอุบภอาบ่าอไพ่
เมืองอวาได้ไภ่โจ้บ เมืองซ้ายได้ไภ่หยอว
เมืองซองได้ไภ่แจ้ ลือซิแพ้ไพ่เมืองว.

106. บ่ยาภพั้ทิวซาดมาพิบ หิอภิบเภิดเป็บหอวแดว
หิอปาละแยวเภิดเป็บหอวลำ ซ่าวใดซิติได้.

107. อ่ายาภโตบลิวส้าว หารังมิดแดวไอ่
อ่ายาภอื้บต้บไม้ หาพ้อวภะต่ายบอบ.

108. เป็บสังผาภับโตบลิวห้อย หาภินแต่แตบต่ำ
สังบ่อื้บโลภภอ้าว หาซ้าวล่าแผว.

109. ເຮືອນມຸງຫຍ້າ ຝົນຕົກມາ ສັງມາຮົ່ວ
ບາດວ່າລົດຫຍ້າໄວ້ ຝົນເທ້ັງກໍບໍ່ຖອງ.
110. ເປັດເປັນຜູ້ໄຂ່ ໄກ່ເປັນຜູ້ຟັກ
ຂີ້ກະດັກກະເດືອນເປັນຜູ້ລ້ຽງ ບຸນຊິໄດ້ແກ່ໃຜ.
111. ເຫັນວ່າຜັກຫົມຫ້ຽນ ແຄມທາງຢ່າໄດ້ຟ້າວຢຽບຢ່ຳ
ບາດຫ່າທອດຍອດຂຶ້ນ ຍັງຊິໄດ້ກ່າຍເກີນ.
112. ຢ່າໄປເກັບດອກຫວ້ານ ບ້ານເພິ່ນມາຊົມ
ໃຫ້ຄ່ອຍໆອຍຊານເກັບ ດອກກະຈຽວແຄມຮົ້ວ.
113. ບົວບໍ່ໃຫ້ຊ້ຳ ນ້ຳບໍ່ໃຫ້ຂຸ່ນ ປາໃນໜອງເອົາກິນໃຫ້ໄດ້.
114. ລູກຜູ້ຮັກເອົາໄວ້ທາງຫຼັງ ລູກຜູ້ຊັງເອົາໄວ້ທາງໜ້າ ເອົາປາປ້ອນມ່ານ.
ຜູ້ຢູ່ຫຼັງຮັກບໍ່ແພ້ ບໍ່ຫຽວໜ້າລ່າແລ.
115. ສອງເຂືອເຖົ້າ ທຳນາຢູ່ກາງໂຄກ
ປີບໍ່ໂຊກໄດ້ສາມ ປີບ່ຽງາມໄດ້ສີ່
ປີບໍ່ໄດ້ແທ້ໆ ຢ່າຍໃຫ້ຄູ່ຄົບ
116. ໃຫ້ເຈົ້າເອົາຍາວໄວ້ ຄືກາຄາບເຕົ່າ
ຢ່າໄດ້ເຮັດອຸ້ງປຸ້ງ ຄືຮຸ້ງຄາບງູ.
117. ເສື້ອຂາດຫຼັງ ໄປຕາບກະບ່ອງໄກ່
ເສື້ອຂາດໄຫ່ ໄປຕາບກະບ່ອງລີງ
ເສື້ອຂາດຂ້າງ ໄປຄ້າງເຂົ້າຄວາຍ.
118. ອັດສະຈັນ ອັດສະຈ້ອຍ ໄກ່ນ້ອຍໃຫ້ກິນນົມນຳກາ
ໝູໝາໃຫ້ ກິນນົມເສືອໂຄ່ງ
ສັດຕູກັບແທ້ໆ ສັງມາໃຫ້ແອ່ວກິນ.
119. ອັດສະຈັນໃຈໂອ້ ເຂົ້າສານຢູ່ໂອຍໍຄໍຕອດໄກ່
ໄມ້ໄຜ່ຢູ່ກໍ ຍໍຄໍຕອດຊ້າງ

ปาย้างยู่ห็วง ทะยานเต้นลุบแมอ
แมอเสยใจ แฤห็อไปบอด
หมูชิวตาสอด เป้นแม่ออกค้า ทุงเอ้าใส่เผน.
120. อัดสะจับตั้วแต่หาคิบข้าว สานแรงล้มท่าอ
บาดท่าข้างลุกได้ หาชิไห้ต่สาน.
121. บ็อยี้แบ้ สังไปเกิดกางหอง
บ็อทองซ้ำ ไปเกิดยู่หิอสอนบ้านเก่า
บ่อนเลิกมาต่าอต็น พ่ยี้ย่องเถิง.
122. มิกอิอ้รว กินหากโพไธ
แซวๆสรว บ่มิโตร้อง
แซวๆร้อง โตดรอพ็ดพู่.
123. กุนซะโลข้าว พายสานเกิดยู่ป่า
ยังได้มายู่บ้าน เมืองกว้างก่อนขุน.
124. ลับอ่าได้ยี่ข้าว ย่าลืมแห่งลุนหา
ลางเหื่อโจนมาลัก ชิเห่าหอนให้มันย้าน.
ลางเหื่อกอางฟานเต้น ในดิงชิได้ไล่
บาดท่าได้ต่อนชิ้น ยังชิได้อ่าอลุน.
125. จองจับห้าว ทะลอนหอมแต่มื้ใพ่
บาดอ่ากิ้อกิ่นส้ม ชิมแล้อก่เห่าเหีย.
126. ชื่อ่าจับใสแจ้ว บ่ปานแสงสุลิเยด
แสงกะบองพื่นเหั้ม บ่ใสแจ้งห่ะจับ.
127. ลับเจ้าไถบาแล้อ ย่าลืมลอายกับแอก
ถึกท่าเอ้าบาดพ้อม ยังชิโอ้อ่าอหา.
128. ฝันติกหิ้ว ไหลิงโธมแต่บ่อนขุ่ม

ບ່ອນສູງຢູ່ໃກ້ຟ້າ ຝົນເທ້ຶງແລ່ນກາຍ.

129. ໂມໂຫໂຫໂສນີ້ ພາໂຕຕົກຕ່ຳ

ໃຫ້ຄ່ອຍຄິດໃຫ້ຄ່ອຍປາກເວົ້າ ຄຳລະຫ້ອຍມ່ວນຫູ.

130. ຕາມໃຈນ້ຳ ຊີໄຫຼໄປຕາມຮ່ອມ

ບໍ່ຫ່ອນໄຫຼເພ່ນຂຶ້ນ ເມືອຟ້າຍອດດອຍ.

131. ຮັກລູກນີ້ ຄືເຊືອກຜູກຄໍ

ຮັກເມຍ ຄືດັ່ງປ໋ຜູກສອກ

ຮັກເອົ້າຂອງ ຄືດັ່ງປອກສຸບຕີນ

132. ປຸກເຮືອນຢ່ຳໃຫ້ໃກ້ກວານບ້ານ ປຸກຮ້ານຢ່ຳໃຫ້ໃກ້ທ່ຽງຫຼວງ

ບ່ອນເຂັດຂວາງ ຢ່ຳໄດ້ໄປຕ້ອງ.

133. ຜູ້ຂ້ຳຫັກໄລ່ຈັບຊ້ຳງ ຜູ້ຜ່ຽຍແພ້ອ້ຳງຄຳຫ່ານ.

134. ໃກ້ບ່ອຶດເກືອ ໄປທ່ຽງເຮືອອຶດນ້ຳ.

135. ບ້ານໃກ້ປ່ຳໄດ້ຢູ່ເຮືອນເຜ ບ້ານໃກ້ເຊອຶດປ່ຳແດກ.

136. ນົກເຈົ່ຳຫັ້ງ ລຽບຫຼັ່ງແຄມສະ

ເຫັນປ່ຳມ່ຳ ຢ່ຳກົນແດດິ້ນ

ນົກເຕັນເຕັ້ນ ໂຕນລົ່ງກົນກ່ອນ

ນົກເຈົ້ຳຫຼັ້ງ ແທ່ງນໜ້ຳເບິ່ງດ່ຽຍ.

137. ໝ່ຳຫວ່ຳງ້ຳ ກະໂຖນເທເອົ້ຳຖອກ

ບ່ຳດໄດ້ກົນຊ່ຳກ້ຳ ລືມເຊືອຊ່ຳດໂຕ.

138. ຄັນຊິທ່ຳກ່ຳນສ້ຳ ອັນໃດໃຫ້ເຈົ້ຳຫິ່ນຕ່ອງທ້ອນ

ຢ່ຳໄດ້ເຫັນແກ່ໃກ້ ກົນກ້ວຍໂມ່ມເສຍ.

139. ທ່ຳທ່ຳນບໍ່ມີສິນພ້ອມ ຜົນບຸນບໍ່ເຮືອງຮຸ່ງ

ມີສິນຄັນບໍ່ຄິດລະເວັ້ນ ຊິເປັນໄດ້ຮ່ອມໃດ.

140. ທ່ຳທ່ຳນບໍ່ປ່ຳຖະໜ່ຳຕັ້ງ ຊິເອົ່ຳຫຍັ່ງເປັນທີ່ຕັ້ງ

ມີແຕ່ປາຖະໜາບຸນເຈົ້າບໍ່ໄດ້ສ້າງ ຊິໄປໄດ້ຮ່ອມໃດ.

141. ຄັນແມ່ນເອົາຄົນກ້າ ຄອງເມືອງມັນຈຶ່ງຮຸ່ງ
ຄັນເອົາຄົນຂີ້ຢ້ານ ຄອງບ້ານບໍ່ຮຸ່ງເຮືອງ.

142. ຢ່າໄດ້ຕິໂທດທ້ວງ ປວງໝູ່ໝູໜາ
ມັນບໍ່ເຫັນຂອງກິນ ບໍ່ແລ່ນວົນວຽນອ້ອມ
ຕິແຕ່ແມງວັນຮ້າຍ ຕອມໂຕຢູ່ໂພ່ໆ
ໂຕຫາກເໜັນອູ້ໆ ຊິຕີໄດ້ຮ່ອມໃດ.

143. ສັດຈະຜູ້ຍິງນີ້ ຄຶກວຍກະຕ່າຫ່າງ
ຖົ້ມໃສ່ນ້ຳ ໄຫຼເຂົ້າຄູ່ຕາ.

144. ສັດຈະຜູ້ຊາຍນີ້ ຄືຫີນໜັກໜຶ່ນ
ຖົ້ມໃສ່ນ້ຳ ຈົມປົ້ງບໍ່ຟູ.

145. ໜອງຊິລານ້ຳ ນາຫາມຊິລາທົ່ງ
ຜົມປົ່ງລາກະດົ້ນ ຜົມຊິຊົ້ນບ່ອນໃດ.

146. ເປັນຂຸນກະຈານີ້ ເປັນພໍ່ນາດີກວ່າ
ພໍ່ນາເອົ້ອມອີ່ມເຂົ້າ ຂຸນກະຈາເອົ້ອມອີ່ມລົ້ມ.

147. ເຊື້ອຊາດແຮ້ງ ກຸຍສາບກັນເອງ
ປູຕໍ່ປູສອນກັນ ໃຫ້ຍ່າງຕົ້ງລືຊິໄດ້.

148. ແນວກຳພ້າ ໝູໜາມັນກໍໜ່າຍ
ກາຍໜ້າໃກ້ ຊາວບ້ານຖິ່ມນ້ຳລາຍ

149. ກົກກໍເຫງົ້າ ວົງຕະກຸນໂຄດຍ່າ
ໃຫ້ບູຊາອ່ອນນ້ອມ ຖະໜອມໄວ້ຢ່າລອນ.

150. ຢ່າໄດ້ກົດເອົາຍ້ອງ ຍໍໂຕຜິດຮີດ
ຢ່າໄດ້ຫວີດໆເວົ້າ ປະສົງຂົ້ນອົ່ມເອົາ.

151. ບຸນມີແລ້ວ ແນວດີປ່ອງໃສ່

ບຸນບໍ່ໃຫ້ ແນວຂີ້ຮ້າຍແລ່ນໂຮມ.

152. ບຸນມີໄດ້ ເປັນນາຍໃຫ້ເອົາເຜິ່ງ

ຄັນວ່າບຸນບໍ່ພ້ອມ ແສນຊີຄົ້ນກໍເປົ່າດາຍ.

153. ຕົກຕາວ່າໄດ້ລົ່ງລາຍມ້ວນ ບໍ່ເປັນບຸ່ງໃຫ້ເປັນກະຕ່າ

ຄັນບໍ່ເປັນກະຊ້າ ໃຫ້ເປັນຂ້ອງໃສ່ປາ.

154. ຕາບອດແຈ້ງ ບໍ່ຮູ້ຮ່ອມທ່ຽງເດີນ

ຄັນບໍ່ແຍງເງົາຫີນ ຊິບອດຕາຍຈົນເຖົ້າ.

155. ນົກເຈົ່າຫຼົ້ງ ລຽບຫຼົ່ງແຄມສະ

ເຫັນປາມາ ຢາກກິນແດດິ້ນ

ນົກເຕັນເຕັ້ນ ໂຕນລົ່ງກິນກ່ອນ

ນົກເຈົ່າຫຼົ້ງ ແຫ່ງນໜ້າເບິ່ງດາຍ.

156. ໃຈບໍ່ໃສ່ຕໍ່ແກ້ວ ແຍງເງົາກໍບໍ່ສ່ອງ

ໃຈບໍ່ໃສ່ຕໍ່ຄ້ອງ ຕິກະເບື້ອງກໍບໍ່ດັ່ງ.

157. ເຈົ້າຜູ້ແພຜືນກວ້າງ ປູມາໃຫ້ອ້າຍນັ່ງແດ່ແມ

ສັ່ງມາເຮັດອ່ອມຊ້ອມ ແພງໄວ້ນັ່ງຜູ້ດຽວ.

158. ພີ່ນີ້ແນວນາມເຊື້ອ ຫອຍນາໜ້າຕ່ຳ

ບໍ່ມີສົມເຜົ່າຜູ້ ຫອຍກວ້າງບ່ວງທະເລ.

159. ທາງເສັ້ນເກົ່າ ຢ່າໄດ້ກວາດໜາມປົກ

ຢ່າໄດ້ທຽວທາງອົກ ປ່າດົ່ງເສືອຮ້າຍ

ຢ່າໄດ້ເຫຼືອແຕ່ຕ້ານ ໂອ໋ຍພົ້ນເພື່ອນ

ເວົ້າບໍ່ເປັນປະໂຫຍດນີ້ ຜີຮ້າຍຊິແລນຕຳ.

160. ນິກກະແດບເດົ້າ ຫາກິນໄກເຂດ

ເຂດໂຕມີບໍ່ແພ້ ໜີໄປເດົ້າເຂດເອົ້າ.

161. ທັ໋ງຫຼາຍທຮ໋ອທ່ຽງແປ້ນ ຫາຂ໋ອແປງໄຕ່

ໂຕສັ໋ງມາກະຕິກະຕິ່ງເຕັ້ນ ໂຕນຫ້ອຍຕະຫຼິ່ງຊັ້ນ.

162. ຊື່ວ່າຈັນເຜັ໋ງແຈ້ງ ບໍ່ປານແສງສຸລິເຍດ

ແສງກະບ໋ອງໜຶ່ນເຫັ້ມ ບໍ່ປານແຈ້ງແທ່ງເດືອນ

ຄືດັ່ງແນວຫຼານຫຼ໋ອນ ບໍ່ປຸ່ນປານເຖົ້າຍ່ຳ

ເດັກນ້ອຍຮູ້ຕັ້ງລ້ານ ບໍ່ປານເຖົ້າຜູ້ດຮ໋ອ.

163. ສິບແໜ໋ງໄມ້ຊາວແໜ໋ງໄມ້ ບໍ່ປານແໜ໋ງໄມ້ດູ່

ສິບແກ່ນຄູ້ຊາວແກ່ນຄູ້ ບໍ່ປານໄມ້ແກນຈັນ.

164. ເຈົ້າຜູ້ຫົ໋ງຄຳຜ້າຍ ກາຍເອົ໋າຄັນທະມາດ

ເຈົ້າຊິແຍ໋ງໃສ່ໄມ້ ໂພຄ້ວຮິ່ມຂ໋ຽວ

ບາດວ່າສາຂ໋າໄມ້ ໃບບ໋າງເຫຼືອ໋ງລິ່ນ

ພັດຊິໄດ້ອ່າວໂອ້ ຄະນິ໋ງໄມ້ຢູ່ດົ໋ງ.

165. ໜ໋າຫ໋າງກົ້ນມັກແກວ່ ຄົນປ໋າກແຫວ່ງມັກເວົ້ ໋າ

166. ຂຸດດິນດັ້ນ ປະສົ໋ງຫ໋າແຕ່ບ່ອນກົ່ວ

ແນວສົ່ວໄມ້ ປະສົ໋ງໄວ້ແຕ່ບ່ານບ໋າ໋ງ.

167. ບ້ານນ້ອຍພຸ້ນ ດິນດ໋ຳນ້ ໋າຊຸ່ມ

ปาภุ่มบ้อม ถือแย้แภอ่วงหาง

ปาบางบ้อม ถือยางฟ้าลั่น

จักจั่นร้องๆ ถือค้องลั่นยาม.

168. สอนให้แย้ ลอยพองมันบ่ล่องๆ

สอนใก้นากหุ้นน้ำ แมอบั้นแห่งบ่ถือ

169. เห็นว่าอิๆร้องๆ ย่าอางใจว่าจักจั่น

ลางเหือสรวงเห่าห้อม ยรอก้รอกำหากมิ.

170. ยามเมื่อยังหนุ่มน้อย ให้ธิบธ่ำธรรมคุน

บุนเธ้ามิ ชีใหย่สูงพรวงฟ้า

ไปพายหน้า ชีหาเงินได้ง่าย

ใผผู้ลอามธู้ตื้น เงินเบ้ยบ่แภอ่นถึง.

171. ใผผู้สิมพานลิ้น ภุสินมิมาก

จะได้ไปเกิดก้ำ เมืองฟ้าฟากสะหวับ.

172. ผูกลอายไอ้ใก้ก้า ผูกม้าไอ้ใก้น้ำ

บ่กินหน้อย ก่หากหลาย

173. ของดีนี้ คินทำยากยิ่งๆ

ของอี้ร้าย ทำได้สู่อับ

174. ย่าได้เมียามมือหุ้น ภานพะนันเบ้ยโบภ

ลางเหื่อโชภบ่ให้ ถึงเบ้ยชีขาดภางๆ.

175. เอ็าธักเอ็าก้ยองๆ เอ็าชังเอ็าก่ด่า

ຄືດັ່ງບັກເຄົ້າເມົ້າ ໝາເຖົ້າເຫົ່າແຕ່ເຂົ້າ

ຄັນເຮົາທຳດີແລ້ວ ເຂົ້າຊັ່ງກໍຕາມຊ່າງ

ຄັນເຮົາເຮັດແມ່ນແລ້ວ ເຂົ້າຍ້ອງກໍຊ່າງເຂົ້າ

ເຂົ້າຊິພາກັນທ້ວງ ທັ່ງເມືອງບໍ່ມີຫວ່ຽງ

ເຂົ້າຊິຕິຕັ້ງຄ້ານ ຂາຍໜ້າກໍບໍ່ອາຍ.

176. ບຸນບໍ່ເຄີຍຂີ່ຊ້າງ ຢ້ານແຕ່ແຢ່ງພາຕົກ

ບຸນບໍ່ເຄີຍຂີ່ຄົກ ຢ້ານສາກເຂົ້າເບືອພາຕັ້ນ.

177. ຝົນຕົກຫົ້ງ ໄຫລົ່ງນາຂຸ່ນ

ໃຜຊິອູ້ມມັດກ້າ ພານ້ອງຢ່ຳດຳ

178. ຄັນວ່າທຽວທາງເວີ້ງ ໄປມາໃຫ້ມີໝູ່

ລາງເທືອໂຈນເຂັ່ນຂ້າ ຍັງຊິໄດ້ຊ່ວຍກັນ.

179. ນາເຂີນຫ້ວຍ ຝົນບໍ່ຮວຍກໍ່ແລ້ງເປ່ຳ

ໄດ້ແຕ່ເຂົ້າໜາກກ້າ ແກມຫຍ້າຊິຄ່ອຍເລັ້ມ

180. ແນວມັນມີ ໜາກເຂືອຫຳມ້າ

ບໍ່ໄດ້ກ້າ ມັນເກີດມາເອງ.

# ບົດທີ 4
# ນິທານອັດສະຈັນ

ເວລາ 8 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ໄລຍະການກຳເນີດ ແລະ ການຂະຫຍາຍຕົວຂອງນິທານອັດສະຈັນ.
- ອະທິບາຍເນື້ອໃນການສ່ອງແສງຂອງນິທານອັດສະຈັນ.
- ວິພາກເລື່ອງ "ກຳພ້າຜີນ້ອຍ".

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງນິທານອັດສະຈັນ.
- ການກຳເນີດ ແລະ ຂະຫຍາຍຕົວຂອງນິທານອັດສະຈັນ.
- ເນື້ອໃນຂອງນິທານອັດສະຈັນ.
- ສິລະປະການປະດິດແຕ່ງນິທານອັດສະຈັນ.
- ວິພາກເລື່ອງ "ກຳພ້າຜີນ້ອຍ".

## III. ສື່ການຮຽນ ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືວິຊາວັນນະຄະດີຊັ້ນມັດທະຍົມປີທີໜຶ່ງ.
- ປຶ້ມແບບຮຽນວິຊາພາສາລາວຊັ້ນມັດທະຍົມປີທີໜຶ່ງ.
- ປຶ້ມນິທານພື້ນເມືອງລາວຕ່າງໆ (ຖ້າມີ)

## IV. ກິດຈະກຳການຮຽນ-ການສອນ

**ການນຳເຂົ້າສູ່ບົດຮຽນ**

- ຄູສ້າງບັນຍາກາດ ກ່ອນການຮຽນ-ການສອນດ້ວຍການຍົກເອົານິທານຊວນຫົວເລື່ອງໃດເລື່ອງໜຶ່ງເລົ່າສູ່ນັກຮຽນຟັງ.
- ຄູທົບທວນຄວາມຮູ້ຂອງນັກຮຽນດ້ວຍການຍົກຄຳຖາມຂຶ້ນສົນທະນາກັບນັກຮຽນ. ຊຶ່ງຄຳຖາມຕ່າງໆຕ້ອງຜົວພັນກັບບົດຮຽນໃນບົດທີ 3 ຫຼື ບົດຮຽນທີ່ຮຽນມາກ່ອນ.
- ຄູຕັ້ງຄຳຖາມສົນທະນາທີ່ມີເນື້ອໃນກ່ຽວກັບບົດທີ 4 ເຊັ່ນ:

1) ນັກຮຽນເຄີຍຮຽນນິທານອັດສະຈັນແລ້ວບໍ?

2) ນິທານອັດສະຈັນແມ່ນຫຍັງ?

3) ນັກຮຽນຮູ້ນິທານອັດສະຈັນເລື່ອງໃດແດ່?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນປະມານ 2-3 ຄົນ.

- ຄູສະຫຼຸບຄືນ ແລ້ວນຳພານັກຮຽນເຂົ້າສູ່ການຮຽນບົດທີ 4.

**1. ການສອນຄວາມໝາຍຂອງນິທານອັດສະຈັນ**

- ຄູອ່ານ ຫຼື ຄູແນະນຳໃຫ້ນັກຮຽນຜູ້ໃດຜູ້ໜຶ່ງອ່ານຄວາມໝາຍຂອງນິທານອັດສະຈັນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ຄຳວ່ານິທານອັດສະຈັນມີຄວາມໝາຍວ່າແນວໃດ?

- ຄູໃຫ້ນັກຮຽນຕອບຄຳຖາມ (ຕາມຄວາມເໝາະສົມ)
- ຄູສະຫຼຸບຄຳຕອບຂອງນັກຮຽນ.
- ຄູອະທິບາຍ ແລະ ສະຫຼຸບຄືນຄວາມໝາຍຂອງນິທານອັດສະຈັນຕາມປຶ້ມແບບຮຽນ.

**2. ການສອນການກຳເນີດ ແລະ ການຂະຫຍາຍຕົວຂອງນິທານອັດສະຈັນ.**

- ຄູແນະນຳໃຫ້ນັກຮຽນຜູ້ໃດຜູ້ໜຶ່ງຂຶ້ນອ່ານ, ສ່ວນນັກຮຽນຜູ້ອື່ນໆຕັ້ງໃຈຟັງ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນກ່ຽວກັບການກຳເນີດ ແລະ ການຂະຫຍາຍຕົວຂອງນິທານບູຮານດັ່ງນີ້:

1) ນິທານອັດສະຈັນກຳເນີດຂຶ້ນເມື່ອໃດ?

2) ສັງຄົມມີຊົນຊັ້ນ ແມ່ນສັງຄົມແນວໃດ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.
- ຄູອະທິບາຍ ແລະ ສະຫຼຸບການກຳເນີດ ແລະ ການຂະຫຍາຍຕົວຂອງນິທານອັດສະຈັນໃຫ້ຊັດເຈນ, ຊຶ່ງຄຳຕອບມີຢູ່ໃນປຶ້ມແບບຮຽນ.

**3. ການສິດສອນເນື້ອໃນຂອງນິທານອັດສະຈັນ**

**3.1 ອະທິບາຍພູມສັນຖານ ແລະ ຮ່ອງຮອຍທຳມະຊາດ**

- ຄູໃຫ້ນັກຮຽນອ່ານປຶ້ມແບບຮຽນ.
- ຄູອະທິບາຍເນື້ອໃນດັ່ງກ່າວດ້ວຍວິທີຍົກເອົາພາບທຳມະຊາດ ທີ່ກາຍມາເປັນນິທານຕາມເຂດແຂວງຕ່າງໆທີ່ຄູຮູ້ຈັກ.
- ຄູເລົ່ານິທານເລື່ອງໃດເລື່ອງໜຶ່ງ ເພື່ອປະກອບເນື້ອໃນບົດຮຽນທີ່ເວົ້າເຖິງການອະທິບາຍຮ່ອງຮອຍທຳມະຊາດ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ຮ່ອງຮອຍທຳມະຊາດທີ່ສະແດງອອກໃນນິທານທີ່ຄູເລົ່ານັ້ນມີອັນໃດແດ່?

2) ຢູ່ບ້ານເກີດເມືອງນອນຂອງນັກຮຽນມີຮ່ອງຮອຍທຳມະຊາດອັນໃດແດ່, ທີ່ຖືກປະຊາຊົນເລົ່າເປັນນິທານ?

- ຄູອະທິບາຍ ແລະ ສະຫຼຸບຄືນເນື້ອໃນຂອງນິທານອັດສະຈັນທີ່ເວົ້າເຖິງພູມສັນຖານ ແລະ ຮ່ອງຮອຍທຳມະຊາດຕາມປຶ້ມແບບຮຽນ.

### 3.2 ນິທານອັດສະຈັນທີ່ເວົ້າເຖິງຂໍ້ຂັດແຍ້ງຕ່າງໆຂອງສັງຄົມ

- ຄູແນະນຳໃຫ້ນັກຮຽນຜູ້ໃດຜູ້ໜຶ່ງອ່ານນິທານອັດສະຈັນ ທີ່ມີເນື້ອໃນເວົ້າເຖິງຂໍ້ຂັດແຍ້ງຂອງສັງຄົມ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນວ່າໃນສັງຄົມມີຂໍ້ຂັດແຍ້ງຫຍັງແດ່?
- ຄູໃຫ້ນັກຮຽນຕອບຕາມຄວາມສະໝັກໃຈ ຫຼື ບິ່ງຕົວ.
- ຄູຂຽນຂໍ້ຂັດແຍ່ງຕ່າງໆຂອງສັງຄົມໃສ່ກະດານ.
- ຄູພ້ອມກັບນັກຮຽນຊອກເອົານິທານ, ໃນປຶ້ມແບບຮຽນ ຫຼື ນິທານຕ່າງໆທີ່ຄູ ແລະ ນັກຮຽນຮູ້ຈັກ, ມາເປັນຕົວຢ່າງໃສ່ນິທານທີ່ເວົ້າເຖິງຂໍ້ຂັດແຍ່ງທາງຊົນຊັ້ນ, ຂໍ້ຂັດແຍ່ງຂອງຜົວເມຍ, ເມຍນ້ອຍກັບເມຍຫຼວງ, ແມ່ຍ່າກັບລູກໃພ້, ພໍ່ເຖົ້າກັບລູກເຂີຍ ແລະ ອື່ນໆ.
- ຄູ ຫຼື ນັກຮຽນເລົ່ານິທານທີ່ມີເນື້ອໃນເວົ້າເຖິງຂໍ້ຂັດແຍ່ງທາງສັງຄົມ.
- ຄູສະຫຼຸບຄືນເນື້ອໃນນິທານອັດສະຈັນທີ່ເວົ້າເຖິງຂໍ້ຂັດແຍ່ງທາງສັງຄົມຕາມປຶ້ມແບບຮຽນ.

## 4. ການສອນສິລະປະການແຕ່ງຂອງນິທານອັດສະຈັນ

- ຄູໃຫ້ນັກຮຽນອ່ານສິລະປະການປະດິດແຕ່ງນິທານອັດສະຈັນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນກ່ຽວກັບສິລະປະໃນການແຕ່ງນິທານອັດສະຈັນເພິ່ນໃຊ້ສິລະປະຫຍັງແດ່?
- ຄູໃຫ້ນັກຮຽນມີຄວາມຄິດເຫັນຕາມຄວາມເໝາະສົມ.
- ຄູສະຫຼຸບແລ້ວຂຽນສິລະປະການປະດິດແຕ່ງຕ່າງໆໃສ່ກະດານ.
- ຄູອະທິບາຍ ກ່ຽວກັບການປະດິດແຕ່ງ ນິທານອັດສະຈັນ, ດ້ວຍວິທີຍົກເອົາ ນິທານເລື່ອງໃດເລື່ອງໜຶ່ງໃນບົດຮຽນ ຫຼື ບົດອ່ານເພີ່ມ, ມາຈຳແນກໃຫ້ເຫັນ,
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນຊຶ່ງຄຳຖາມຕ່າງໆຕ້ອງຜົວພັນກັບຈຸດສຳຄັນຂອງສິລະປະການແຕ່ງນິທານອັດສະຈັນ.

• ສິລະປະການພັນລະນາ:

ຄູຕັ້ງຄຳຖາມສົນທະນາເຈາະຈີ້ມດັ່ງນີ້:

1) ການພັນລະນາໂດຍທາງຊື່ແມ່ນແນວໃດ?

2) ການພັນລະນາຕົວລະຄອນແບບລວມໆແມ່ນແນວໃດ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ ແລະ ອະທິບາຍເນື້ອໃນຕາມປຶ້ມແບບຮຽນ.

• ສິລະປະການສ້າງຂໍ້ຂັດແຍ່ງ:

ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ຕົວລະຄອນໃນນິທານແບ່ງອອກເປັນຈັກຝ່າຍ ແຕ່ລະຝ່າຍມີຄວາມແຕກຕ່າງກັນແນວໃດ?

2) ຕົວລະຄອນມີການປະທະກັນແນວໃດແດ່ ແລະ ຝ່າຍໃດເປັນຜູ້ຊະນະ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນດ້ວຍການຕຳນິຕິຊົມ ແລະ ອະທິບາຍຕາມປຶ້ມແບບຮຽນ.

• ສິລະປະການລື້ມເລື່ອງ ແລະ ເວົ້າໂຍກ:

ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ການລື້ມເລື່ອງແມ່ນແນວໃດ?

2) ການເວົ້າໂຍກແມ່ນແນວໃດ?

3) ການເວົ້າໂຍກ ແລະ ລື້ມເລື່ອງສະແດງອອກໃນບົດເລື່ອງແນວໃດ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມເຫັນຂອງນັກຮຽນ ແລະ ໃຫ້ຄວາມກະຈ່າງແຈ້ງແກ່ນັກຮຽນຄື: ລື້ມເລື່ອງແມ່ນ ລື້ມຄືນເລື່ອງທີ່ມີມາກ່ອນແລ້ວນຳມາເລົ່າຄືນ, ສະແດງອອກໃນການເລົ່ານິທານມັກໃຊ້ສຳນວນ ວ່າແຕ່ກີ້ແຕ່ກ່ອນ ຫຼື ແຕ່ປາງກ່ອນ... ການເວົ້າໂຍກແມ່ນເວົ້າຂຶ້ນກາຍຄວາມເປັນຈິງ, ສະແດງອອກ ໃນເລື່ອງຄື: ຜົມຂອງແມ່ຍ່າງາມສາມາດດຶງຊ້າງທີ່ຕົກລົງໜອງຂຶ້ນມາໄດ້ດັ່ງນີ້ເປັນຕົ້ນ.
- ຄູສະຫຼຸບຄືນກ່ຽວກັບສິລະປະການປະດິດແຕ່ງຂອງນິທານອັດສະຈັນຕາມປຶ້ມແບບຮຽນ.

## 5. ການສອນວິພາກບົດເລື່ອງ " ກຳພ້າຜີນ້ອຍ"

### 5.1 ການແບ່ງຕອນ

- ຄູແນະນຳໃຫ້ນັກຮຽນທຸກຄົນອ່ານນິທານເລື່ອງ "ກຳພ້າຜີນ້ອຍ".
- ຄູແນະນຳໃຫ້ນັກຮຽນອ່ານເລື່ອງກຳພ້າຜີນ້ອຍຫຼາຍເທື່ອແລ້ວແບ່ງຕອນ.
- ຄູໃຫ້ນັກຮຽນຂຶ້ນນຳສະເໜີການແບ່ງຕອນ.
- ຄູຈົດຫົວຂໍ້ຂອງເນື້ອໃນການແບ່ງຕອນຂອງນັກຮຽນໄວ້ເທິງກະດານ.
- ຄູສະຫຼຸບການແບ່ງຕອນຂອງນັກຮຽນ ແລະ ສະເໜີການແບ່ງຕອນທີ່ເປັນເອກະພາບດັ່ງນີ້:

• ຕອນທີ 1 ແຕ່ຕົ້ນ ເຖິງ ຈະບໍ່ເລາະຂໍທານອີກ.

• ຕອນທີ 2 ແຕ່ ເມື່ອຮອດປ່າ ເຖິງ ເສືອ ແລະ ອື່ນໆ.

• ຕອນທີ 3 ແຕ່ ຕົກໃນເດືອນສິບເອັດ ເຖິງ ພະຍາຟ້ງແລ້ວ.

• ຕອນທີ 4 ແຕ່ ຕາພໍ່ບ້ານ ເຖິງ ທີ່ເມືອງຄົນ.

• ຕອນທີ 5 ແຕ່ ຜີນ້ອຍເອົາຂ້ອງ ເຖິງ ສຸດທ້າຍ.

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນກ່ຽວກັບເນື້ອໃນຂອງແຕ່ລະຕອນ.
- ຄູສະຫຼຸບຄວາມເຫັນຂອງນັກຮຽນ ແລະ ສະເໜີເນື້ອໃນຂອງແຕ່ລະຕອນດັ່ງນີ້:

• ເນື້ອໃນຕອນທີ1 : ເວົ້າເຖິງຄວາມທຸກຍາກລຳບາກບໍ່ມີບ່ອນເພິ່ງພາອາໄສ, ທຸກມື້ມີແຕ່ຂໍທານ

ກິນນ້ຳໄທບ້ານໄທເມືອງຂອງທ້າວກ້ຳພ້າ.

• ເນື້ອໃນຕອນທີ2: ເວົ້າເຖິງການດຳລົງຊີວິດ ແລະ ນ້ຳໃຈເມດຕາຂອງທ້າວກ້ຳພ້າ ທີ່ມີຕໍ່ສັດຕ່າງໆຢູ່ໃນປ່າດົງພົງໄພ.

• ເນື້ອໃນຕອນທີ3: ຊ້າງໄດ້ມອບນາງງາໃຫ້ເປັນເມຍຂອງທ້າວກ້ຳພ້າ ແລະ ຊີວິດຄອບຄົວທີ່ມີຄວາມສຸກຂອງທ້າວກ້ຳພ້າ ແລະ ນາງງາ.

• ເນື້ອໃນຕອນທີ4: ເວົ້າເຖິງຂໍ້ຂັດແຍ່ງ ແລະ ການຕໍ່ສູ້ກັນລະຫວ່າງກ້ຳພ້າ ແລະ ພະຍາ.

• ເນື້ອໃນຕອນທີ5: ເວົ້າເຖິງໄຊຊະນະ, ຄວາມສຸກຂອງທ້າວກ້ຳພ້າ ແລະ ນາງງາ.

- ຄູແນະນຳໃຫ້ນັກຮຽນອີງໃສ່ເນື້ອໃນແຕ່ລະຕອນຂອງບົດເລື່ອງ ທີ່ຄູຂຽນໃສ່ກະດານເພື່ອຊອກຫາເນື້ອໃນລວມຂອງບົດເລື່ອງ.
- ຄູຕັ້ງຄຳຖາມເພື່ອສົນທະນາກັບນັກຮຽນ ເນື້ອໃນລວມຂອງເລື່ອງກ້ຳພ້າຜີນ້ອຍເວົ້າເຖິງຫຍັງ?
- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເໝາະສົມ.
- ຄູສະຫຼຸບຄຳຕອບຂອງນັກຮຽນພ້ອມທັງແນະນຳຄຳຕອບທີ່ຖືກຕ້ອງໃຫ້ນັກຮຽນດັ່ງນີ້: ເນື້ອໃນລວມຂອງເລື່ອງກ້ຳພ້າຜີນ້ອຍແມ່ນເວົ້າເຖິງຄວາມດຸໝັ່ນ, ອົດທົນ ແລະ ມີເມດຕາຈຶ່ງພາໃຫ້ກ້ຳພ້າຕໍ່ສູ້ກັບພະຍາໄດ້ຮັບໄຊຊະນະ ແລະ ເຮັດໃຫ້ກ້ຳພ້າໄດ້ພົບກັບຄວາມສຸກອັນແທ້ຈິງໃນຊີວິດ.

**5.2 ສິລະປະການແຕ່ງ**

- ຄູແນະນຳໃຫ້ນັກຮຽນອ່ານເລື່ອງ ກ້ຳພ້າຜີນ້ອຍຫຼາຍເທື່ອແລ້ວຊອກຫາສຳນວນພັນລະນາພາບດ້ວຍຄຳຖາມດັ່ງນີ້:

1) ໃຫ້ຊອກສຳນວນພັນລະນະພາບທຳມະຊາດປະມານ 2 ສຳນວນ.

2) ຈົ່ງຊອກສຳນວນພັນລະນາພາບການດຳລົງຊີວິດຂອ່ງກ້ຳພ້າ 2 ສຳນວນ.

- ຄູໃຫ້ນັກຮຽນຕອບ ສ່ວນຄູເປັນຜູ້ຂຽນໃສ່ກະດານ.
- ຄູສະຫຼຸບຄືນສິລະປະການພັນລະນາພາບໂດຍອີງໃສ່ປຶ້ມແບບຮຽນວັນນະຄະດີ ແລະ ພາສາລາວຊັ້ນມັດທະຍົມປີທີ່ໜຶ່ງເພື່ອອະທິບາຍໃຫ້ນັກຮຽນເຂົ້າໃຈ.

ຕົວຢ່າງ:

- ສຳນວນພັນລະນາພາບທຳມະຊາດ:

1) ແຕ່ລະມື້ສັດອອກຈາກປ່າດົງລົງມາຫາກິນນ້ຳ.

2) ຕົກໃນເດືອນສິບເອັດ ເຂົ້າໃນນາຖອກຮວງສິ່ງກິນຫອມກະຈາຍໄປທົ່ວປ່າດົງ.

- ພັນລະນາພາບການດຳລົງຊີວິດຂອງກ້ຳພ້າ:

1) ກ້ຳພ້ານອນເຮືອນບໍ່ມີຝາ.

2) ແຕ່ລະມື້ທຽວຂໍທານ.

- ຄູຈັດກຸ່ມນັກຮຽນຄົ້ນຄວ້າ.
- ຄູແນະນຳນັກຮຽນອ່ານນິທານເລື່ອງ ກຳພ້າຜີນ້ອຍ ແລ້ວຕອບຄຳຖາມດັ່ງນີ້:

1) ຕົວລະຄອນໃນເລື່ອງກຳພ້າຜີນ້ອຍມີຈັກຕົວຄືຕົວໃດແດ່?

2) ຕົວລະຄອນໃນເລື່ອງກຳພ້າຜີນ້ອຍມີຈັກຝ່າຍ, ແຕ່ລະຝ່າຍມີຕົວໃດແດ່?

3) ຕົວລະຄອນພະຍາ ແລະ ກຳພ້າຕ່າງກັນແນວໃດ?

4) ພະຍາ ແລະ ກຳພ້າໄດ້ຕໍ່ສູ້ກັນແນວໃດ?

5) ແມ່ນໃຜເປັນຜູ້ຊະນະ, ຍ້ອນຫຍັງ?

- ຄູໃຫ້ເວລານັກຮຽນຄົ້ນຄວ້າຕາມຄວາມເໝາະສົມ.
- ຄູໃຫ້ນັກຮຽນຂຶ້ນສະແດງຄວາມຄິດເຫັນ.
- ຄູສັງເກດການນຳສະເໜີ ແລະ ຂຽນຕົວລະຄອນຕ່າງໆທີ່ນັກຮຽນສະເໜີໃສ່ກະດານ.
- ຄູອະທິບາຍຕົວລະຄອນ ແລະ ຈັດກຸ່ມຕົວລະຄອນສອງຝ່າຍຄືຕົວລະຄອນຝ່າຍສິນທຳ ແລະ ຝ່າຍອະທຳດັ່ງນີ້:

+ <u>ຝ່າຍສິນທຳ</u>

1) ກຳພ້າ (ດຸໝັ່ນ, ຊື່ສັດ ແລະ ເມດຕາ)

2) ເທວະດາ ແລະ ຜີຍ່າງາມ.

3) ສັດຕ່າງໆ.

+ <u>ຝ່າຍອະທຳ</u>

1) ພະຍາ (ໃຊ້ອຳນາດ, ບັງຄັບຄົນອື່ນ, ບຽດບຽນຄົນອື່ນ)

2) ເສນາອາມາດ.

3) ສັດຕ່າງໆ.

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນກ່ຽວກັບການກະທຳຂອງຕົວລະຄອນຝ່າຍສິນທຳ ແລະ ຕົວລະຄອນຝ່າຍອະທຳ.
- ຄູຈຳແນກຄວາມແຕກຕ່າງຂອງຕົວລະຄອນສອງຝ່າຍ ໂດຍເນັ້ນໜັກຕົວລະຄອນກຳພ້າກັບພະຍາທີ່ແຕກຕ່າງກັນດ້ານການບຸ່ງຖື, ການໄປມາ, ການກິນຢູ່ ແລະ ແນວຄິດ, ຈາກຄວາມແຕກຕ່າງເກີດມີການຕໍ່ສູ້.
- ຄູໃຫ້ນັກຮຽນຍົກເຫດການ, ການປະທະກັນລະຫວ່າງກຳພ້າ ແລະ ພະຍາຄື: ການຕີໄກ່, ຄວາຍຊົນກັນ...
- ຄູສະຫຼຸບການຕໍ່ສູ້ໃນນິທານກຳພ້າຜີນ້ອຍໄດ້ສິ້ນສຸດລົງດ້ວຍໄຊຊະນະຂອງຝ່າຍສິນທຳຄື: ກຳພ້າຜີນ້ອຍໄດ້ຮັບໄຊຊະນະ. ນີ້ສະແດງໃຫ້ເຫັນວ່າປະຊາຊົນລາວມັກຄວາມເປັນທຳ, ຕໍ່ສູ້ເພື່ອຄວາມຍຸດຕິທຳ. ດັ່ງນັ້ນ, ການຕໍ່ສູ້ໃນນິທານຈຶ່ງສິ້ນສຸດລົງດ້ວຍໄຊຊະນະຂອງຝ່າຍສິນທຳ.

## 6. ກິດຈະກຳເສີມ

ຫຼັງຈາກຄູສອນບົດທີ 4 ແລະ ສອນການວິພາກບົດຕົວຢ່າງແລ້ວ. ຄູຄວນຈັດກິດຈະກຳນ້ອຍຫຼາຍຢ່າງໃນຫ້ອງຮຽນເພື່ອທົດສອບຄວາມຮູ້ຄວາມຈື່ຈຳຂອງນັກຮຽນດັ່ງນີ້:

- ຄູຈັດກຸ່ມໃຫ້ນັກຮຽນຕາມຄວາມເໝາະສົມ.
- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າບົດຮຽນ ຕາມຫົວຂໍ້ຂອງບົດຮຽນທີ່ໄດ້ຮຽນມາແລ້ວ ຂຶ້ນມານຳສະເໜີບົດເຊິ່ງມີສອງວິທີຄື:

+ ຄູໃຫ້ຄຳຖາມແກ່ນັກຮຽນຕາມຫົວຂໍ້ຂອງບົດທີ່ໄດ້ຮຽນມາດ້ວຍຄຳຖາມເອກະພາບທຸກໆກຸ່ມ.

+ ຄູໃຫ້ຄຳຖາມແຕ່ລະກຸ່ມຕ່າງກັນຄື: ກຸ່ມໜຶ່ງຄົ້ນຄວ້າຄວາມໝາຍຂອງນິທານອັດສະຈັນ, ກຸ່ມໜຶ່ງຄົ້ນຄວ້າການກຳເນີດ ແລະ ຂະຫຍາຍຕົວ, ກຸ່ມໜຶ່ງຄົ້ນຄວ້າກ່ຽວກັບເນື້ອໃນ ແລະ ອີກກຸ່ມໜຶ່ງຄົ້ນຄວ້າກ່ຽວກັບສິລະປະ. ຖ້າຫາກມີຫຼາຍກຸ່ມຄູຄວນຢາຍແຕ່ລະເນື້ອໃນ ແລະ ສິລະປະການແຕ່ງແຕ່ລະແບບໃຫ້ແກ່ນັກຮຽນແຕ່ລະກຸ່ມ.

- ຄູສະຫຼຸບຄຳເຫັນຂອງນັກຮຽນພ້ອມທັງສະຫຼຸບຈຸດສຳຄັນຂອງນິທານອັດສະຈັນຄືນຕື່ມອີກ.

### ★ ຕອບຄຳຖາມທ້າຍບົດໃນປຶ້ມແບບຮຽນ

1) ນິທານອັດສະຈັນ ແມ່ນນິທານປະເພດໜຶ່ງ. ນິທານປະເພດນີ້ມີເຫດການ ແລະ ການເຄື່ອນໄຫວຂອງຕົວລະຄອນມີລັກສະນະເຫຼືອເຊື່ອ, ແລະ ອັດສະຈັນແຕ່ມີຄວາມໝາຍເວົ້າເຖິງທຳມະຊາດ, ການດຳລົງຊີວິດ ແລະ ຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າ.

ນິທານອັດສະຈັນກຳເນີດ ແລະ ຂະຫຍາຍຕົວແຮງໃນໄລຍະສັງຄົມເລີ່ມມີການແບ່ງແຍກເປັນຄອບຄົວ, ມີຊົນຊັ້ນ (ມີຂໍ້ຂັດແຍ່ງທາງຊົນຊັ້ນ ແລະ ການຕໍ່ສູ້ຊົນຊັ້ນ). ນິທານປະເພດນີ້, ກຳເນີດ ແລະ ຂະຫຍາຍຕົວຜ່ານຫຼາຍລະບອບສັງຄົມ. ນອກຈາກນີ້, ນິທານອັດສະຈັນຍັງມີກົກເຄົ້າມາຈາກເທບນິຍາຍທີ່ອະທິບາຍປາກົດການທຳມະຊາດ. ໂດຍສະເພາະແມ່ນພູມສັນຖານ, ພູຜາປ່າດົງ, ຫ້ວຍນ້ຳລຳເຊທີ່ຜູກພັນກັບການດຳລົງຊີວິດຂອງປະຊາຊົນແຕ່ລະທ້ອງຖິ່ນ.

2) ນິທານອັດສະຈັນມີຄວາມອຸດົມສົມບູນດ້ວຍຈຳນວນ ແລະ ເນື້ອໃນ. ເນື້ອໃນຂອງນິທານອັດສະຈັນສ່ອງແສງໃຫ້ເຫັນທຳມະຊາດ ແລະ ຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າຫຼາຍແງ່ ຫຼາຍມຸມ ແຕ່ເນື້ອໃນຕົ້ນຕໍຂອງນິທານແມ່ນ ການອະທິບາຍພູມສັນຖານ, ຮ່ອງຮອຍທຳມະຊາດ ຂອງແຕ່ລະທ້ອງຖິ່ນ. ນອກຈາກນີ້, ຍັງມີເນື້ອໃນເວົ້າເຖິງຂໍ້ຂັດແຍ່ງຕ່າງໆທີ່ເກີດຂຶ້ນໃນສັງຄົມ.

3) ນິທານອັດສະຈັນແຕ່ງຂຶ້ນດ້ວຍສິລະປະພັນລະນາພາບ, ພັນລະນາສັດ, ຄົນ ແລະ ວັດຖຸເຄື່ອງໃຊ້ຕ່າງໆ. ນອກຈາກນີ້, ນິທານອັດສະຈັນຍັງປະດິດແຕ່ງຂຶ້ນດ້ວຍສິລະປະຂໍ້ຂັດແຍ້ງ, ລົ້ມເລື່ອງ ແລະ ການເວົ້າໂຍກ.

* ຄູແນະນຳນັກຮຽນຄົ້ນຄວ້າບົດໃໝ່.

## V. ການວັດ ແລະ ປະເມີນຜົນ


ສັງເກດຈາກ:

- ການອະທິບາຍຄວາມໝາຍຂອງນິທານອັດສະຈັນ.
- ການອະທິບາຍການກຳເນີດ ແລະ ການຂະຫຍາຍຕົວຂອງນິທານອັດສະຈັນ.
- ການອະທິບາຍເນື້ອໃນການສ່ອງແສງນິທານອັດສະຈັນ.
- ການອະທິບາຍສິລະປະການແຕ່ງນິທານອັດສະຈັນ.

ກວດຜົນງານຈາກ:

- ການວິພາກເນື້ອໃນເລື່ອງ "ກຳພ້າຜີນ້ອຍ"
- ການວິພາກສິລະປະເລື່ອງ "ກຳພ້າຜີນ້ອຍ"





ກຳພ້າຜີນ້ອຍ

## ບົດອ່ານເພີ່ມ.

## ເລື່ອງ: ສາມອ້າຍນ້ອງ

ແຕ່ກີ້ແຕ່ກ່ອນມີຄອບຄົວໜຶ່ງ ເຊິ່ງມີອ້າຍນ້ອງສາມຄົນໄດ້ດຳລົງຊີວິດຮ່ວມກັນ. ພາຍຫຼັງທີ່ພໍ່ແມ່ຂອງເຂົາເຈົ້າໄດ້ຕາຍໄປ, ອ້າຍກົກກໍເປັນຜູ້ເບິ່ງແຍງຄອບຄົວ. ເຂົາເຈົ້າໄດ້ພ້ອມກັນອອກ ເຫື່ອເທ ແຮງເພີ່ມພູນຜະລິດຜົນຈົນມີຊື່ວ່າ "ຄອບຄົວເລົ້າເຂົ້າຫຼວງ". ຍ້ອນແນວນັ້ນ, ພວກໂຈນຈຶ່ງມາປອງ ລັກເຂົ້າ ແລະ ຄວາຍ. ສາມອ້າຍນ້ອງສາມັກຄີກັນປ້ອງກັນເປັນຢ່າງດີ, ໂຈນທີ່ມາປອງລັກນັ້ນຕ້ອງ ພາຍໜີໄປ.

ຢູ່ມາໄລຍະໜຶ່ງ, ນ້ອງຊາຍຫຼ້າໄດ້ເຊື່ອຟັງໂຈນຜູ້ໜຶ່ງ ກໍມີແນວຄິດຂັດແຍ້ງກັນ ແລະ ຢາກ ພາເມຍຂອງຕົນອອກເຮືອນຕ່າງຫາກ. ມື້ໜຶ່ງ, ອ້າຍນ້ອງທັງສາມໄດ້ແບ່ງດິນນາທີ່ພໍ່ແມ່ປະໄວ້ນັ້ນ. ອ້າຍກົກໄດ້ຫ່ວມເຫງົ້າເສົ້າໂສກ ພ້ອມທັງຮ້ອງໄຫ້ ເມື່ອເຫັນວ່າໄມ້ງ່າໜຶ່ງຢູ່ໜ້າເຮືອນແຫ່ວແຫ້ງຫຼິ່ນ ລົງດິນ. ນ້ອງທັງສອງເຫັນສະພາບຂອງອ້າຍຈຶ່ງຖາມວ່າ "ກົກໄມ້ອັນນັ້ນມີອັນໃດທີ່ພາໃຫ້ອ້າຍຮ້ອງ ໄຫ້?" ອ້າຍກົກຕອບວ່າ: ແຕ່ກ່ອນງ່າໄມ້ທີ່ຖືກແຫ່ວແຫ້ງນີ້ມັນຂຽວງາມດີ, ມັນມີຊີວິດ ຄືກັນກັບ ງ່າອື່ນ, ພ້ອມກັນສົ່ງຜົດຜົນຄວາມເຢືອກເຢັນມາສູ່ຄອບຄົວເຮົາ. ມາເຖິງດຽວນີ້, ຄວາມແຫ່ວແຫ້ງ ຂອງມັນເກີດຂຶ້ນ ຍ້ອນມີບ້ຶງເຈາະລຳຕົ້ນຂອງມັນ, ກິ່ງກ້ານສາຂາໃກ້ຈະຫຼິ່ນອອກຈາກລຳມັນແລ້ວ, ມັນກໍປຽບເໝືອນນ້ອງຊາຍຫຼ້າຮ່ວມທ້ອງແມ່ດຽວທີ່ຈະຈາກພວກເຮົາໄປໃນເວລານີ້. ຄິດເຖິງບ່ອນນີ້ ຈຶ່ງພາໃຫ້ອ້າຍຮ້ອງໄຫ້ ເພາະເປັນຫ່ວງນຳຄອບຄົວ.

ນ້ອງຊາຍຫຼ້າສະເດີດຂຶ້ນເພາະຮູ້ຄວາມຜິດຂອງຕົນ ແລະ ກໍຮ້ອງໄຫ້ຕາມກັນ, ຍ້ອນເຫັນຄວາມ ຜິດພາດ. ແຕ່ນັ້ນມາ, ເຂົາເຈົ້າກໍໄດ້ປຸ້ມລຸ້ມກັນສ້າງສາ ແລະ ຂະຫຍາຍການເພີ່ມພູນຈົນໄດ້ກາຍເປັນ ຄອບຄົວແບບຢ່າງ...

## ເລື່ອງ: ນາງໄກ່ແກ້ວ.

ຕັ້ງແຕ່ປາງກ່ອນກີ້ ປາງຟ້າຍ່ອນເຖິງດິນ ປາງພະອິນໂກທາເມືອງລຸ່ມ. ປາງນັ້ນ, ຟ້າມືດຄຶ້ມ ຝົນພັດບໍ່ຮວຍຮໍ່ າ, ຝຸ່ງໝູ່ປູປາຫອຍ ກໍຄ່ອຍຕາຍເພາະຫິວນ້ຳ, ພືດຊະພັນແນວໄມ້ໃບເຫຼືອງລ່ຳຫຼິ່ນ. ດິນ ແດງແຫ້ງເຫືອດ ທຸລີກຸ້ມໄຈ່ຜິງ. ເມື່ອນັ້ນ, ທານທາລານ້ຳກໍເຂີນວັງຂ້ອນຂາດ, ນ້ຳຝົນບໍ່ຢາດຍ້ອຍ ຢ້ານຕາຍສ້ຽງບໍ່ຫຼໍ.

ປາງນັ້ນ, ເຂົ້າປາອາຫານນັບມື້ໝົດ ນັບມື້ກ້ຽງ; ຄົນທັງຫຼາຍໜີອອກຈາກບ້ານ ເພື່ອສະ ແຫວງຫາອາຫານ ແລະ ນ້ຳດື່ມ. ປາງນັ້ນ, ຍັງມີວັງນ້ຳໜຶ່ງເປັນທີ່ຢູ່ອາໄສຂອງຝຸ່ງສັດນ້ຳໂຮມກັນ ເປັນໝູ່ໆ. ວັງແຫ່ງນັ້ນ, ປາງກ່ອນເປັນວັງນ້ຳໃຫຍ່ໃສເຢັນ ແຕ່ຕົກມາຄາວນີ້ກໍເປັນວັງນ້ຳແຫ້ງແລ້ງ.

ຍັງມີນ້ຳວັງໜຶ່ງ ກ່ອນນັ້ນເປັນວັງເລິກ ເປັນທີ່ຢູ່ອາໄສຂອງຝູງສັດນ້ຳມີປູ, ປາ, ກຸ້ງ, ໜ້ອຍ ຖືວ່າເປັນວັງນ້ຳທີ່ອຸດົມສົມບູນ, ແຕ່ຕໍ່ມາໄດ້ກາຍເປັນວັງນ້ຳທີ່ແຫ້ງແລ້ງ ມີນ້ຳໄຫຼຊຶມອອກມາດົນໆ ຈຶ່ງຄ່ອຍຕັກໄດ້ໜ້ອຍໜຶ່ງ. ຍ້ອນມີນ້ຳໜ້ອຍ, ຄົນທັງຫຼາຍຈຶ່ງໃຊ້ປອກຜູກເປັນພາຊະນະຕັກ ແລ້ວແບ່ງກັນກິນຄົນລະກຶນສອງກຶນພໍ່ບໍ່ຕາຍ. ຄົນຈຳນວນຫຼາຍລົ້ມຫາຍຕາຍຈາກກັນລະເນດລະນອງ, ລາງຜ່ອງກໍຕາຍຍ້ອນຂຸດສ້າງເລິກດິນເຈື່ອນທັບຕາຍ, ລາງຜ່ອງກໍຕາຍຄາຂຸມກອຍຂຸມມັນ, ລາງຜ່ອງກໍຕາຍຍ້ອນເຈັບໄຂ້ໄດ້ພະຍາດ ສາລະພັດແຕ່ອັນຕາຍ.

ຄອບຄົວໜຶ່ງ ປະກອບດ້ວຍພໍ່ແມ່ ແລະ ລູກສາວນ້ອຍ. ແຕ່ກ່ອນກໍເປັນຄອບຄົວທີ່ມີຄວາມສຸກ, ອຸດົມສົມບູນ, ເຂົ້າເຕັມນາປາເຕັມຕ້ອນ. ແຕ່ມາຮອດເວລານັ້ນ, ກໍຕົກຢູ່ໃນຊາຕາກຳດຽວກັບຄົນທັງຫຼາຍ. ຜົວເມຍຄູ່ນີ້, ມີຄວາມຮັກ ຕໍ່ລູກສາວນ້ອຍຂອງຕົນເໝືອນດັ່ງໜ່ວຍຕາທັງຄູ່ ແລະ ລູກສາວນ້ອຍກໍເປັນຜູ້ໜ້າຮັກໜ້າແພງອີ່ຫຼີ. ເຂືອທັງສອງມີຄວາມຫວາດຫວັ່ນຢ້ານລູກສາວນ້ອຍຂອງຕົນ ຈະຕາຍຢ່າງທໍລະມານ ຍ້ອນຄວາມຫອດຫິວ. ຂ່າວຊ່າລືກັນວ່າ ມີນ້ຳອອກບໍ່ແຫ່ງໜຶ່ງຢູ່ຫ່າງໄກແສນໄກ, ແຕ່ເຂົາເຈົ້າກໍມີຄວາມປາຖະໜາທີ່ຈະໄດ້ນ້ຳນັ້ນມາໃຫ້ລູກສາວນ້ອຍຂອງເຂົາເຈົ້າໄດ້ດື່ມຊາມຊາຝັນມາຟ້າລ່ວງ. ຜົວເມຍຕົກລົງເດີນທາງໄປຫາບໍ່ນ້ຳ ແຕ່ການເດີນທາງໄກນັ້ນ, ຜູ້ເປັນເມຍພັດບໍ່ຢາກປະລູກຈຶ່ງອ້ອນວອນນຳຜົວ ເພື່ອເອົາລູກສາວນ້ອຍນັ້ນຕິດຕາມໄປນຳ. ເຂົາເຈົ້າເດີນດອນຊອນປ່າໄປຫາວັງບໍ່ນ້ຳນັ້ນ, ໄປຫຼາຍເດືອນກໍບໍ່ຮອດຈັກເທື່ອ; ເທື່ອແຮງກໍອິດອ່ອນລົງທຸກມື້. ອາຫານການກິນທີ່ຖືໄປນັ້ນກໍນັບມື້ນັບໜົດລົງແຕ່ຄວາມຫວັງທີ່ຈະໄດ້ພົບບໍ່ນ້ຳຊ້ຳພັດຍັງເປັນຄວາມຝັນຢູ່.

ເມື່ອເປັນແນວນັ້ນ, ຜົວຈຶ່ງອອກຄຳເຫັນນຳເມຍວ່າ: ຖ້າເຮົາຍັງເອົາລູກສາວນ້ອຍເດີນທາງໄປນຳ ແນ່ນອນພວກເຮົາຈະຕ້ອງຕາຍດັບໜົດທັງຄອບຄົວ. ຜົວເວົ້າແນວນັ້ນ, ຝ່າຍເມຍກໍ ຮ້ອງໄຫ້ຂຶ້ນ ເພາະເຂົ້າໃຈວ່າຜົວ ບໍ່ຮັກລູກ, ຜູ້ເປັນຜົວຈຶ່ງຄ່ອຍເວົ້າຄ່ອຍຈາໃຫ້ເຫດໃຫ້ຜົນວ່າ "ຖ້າເຮົາເອົາລູກໄປນຳພວກເຮົາກໍຈະຊ້າເວລາ ໜົດອາຫານການກິນ ຄວາມອິດເມື່ອຍກໍຈະທະວີຂຶ້ນ. ສະນັ້ນ, ພວກເຮົາຄວນເອົາລູກໄວ້ທີ່ນີ້, ແລ້ວພວກເຮົາຄ່ອຍສູ້ຊົນເດີນທາງຕໍ່ໄປ ເມື່ອເຮົາໄດ້ຮັບຜົນສຳເລັດພົບນ້ຳອອກບໍ່ແລ້ວ, ຈຶ່ງຄ່ອຍກັບມາເອົາລູກ". ຈາກຄຳເວົ້າຂອງຜົວດັ່ງກ່າວນັ້ນ, ເຮັດໃຫ້ເມຍໂລ່ງໃຈນຳວິທີຂອງຜົວ.

ຄັນສອງຜົວເມຍຕົກລົງກັນແນວນັ້ນ, ກໍພ້ອມກັນເຮັດຕູບນ້ອຍພໍກັນແດດກັນລົມ ໃຫ້ລູກສາວນ້ອຍເອົາອາຫານການກິນທີ່ຍັງເຫຼືອນັ້ນປະໄວ້ໃຫ້ລູກ ໃນນັ້ນມີເຂົ້າປັ້ນໜຶ່ງ ແລະ ໄຂ່ໄກ່ດິບໜ່ວຍໜຶ່ງ. ເມື່ອສອງຜົວເມຍເດີນທາງໄປຮອດວັງນ້ຳແຫ່ງນັ້ນແລ້ວຊ້ຳພັດເຫັນແຕ່ວັງນ້ຳແຫ້ງ. ຢູ່ທ້ອງວັງພຽງແຕ່ເປັນດິນປຽກຊຸ່ມເທົ່ານັ້ນ, ຝູງຄົນທັງຫຼາຍພາກັນເອົາໂຕເອງກົ້ງເກືອກລົງໃສ່ດິນ, ພໍມີແຮງຍ້ອນຄວາມເຢັນຂອງດິນຊຸ່ມນັ້ນ, ເຮັດໃຫ້ວັງນ້ຳແຫ່ງນັ້ນ ແໜ້ນໜາດ້ວຍຝູງຄົນ ຈຳນວນຫຼວງຫຼາຍ. ສອງຜົວເມຍກໍໄດ້ເຂົ້າຮ່ວມນຳຊາຕາກຳດຽວກັນກັບຝູງຄົນເຫຼົ່ານັ້ນ. ຢູ່ເໜືອວັງນ້ຳແຫ້ງໄປນັ້ນມີພູເຂົາສູງເຈີ້ນເທີ້ນ, ເຊິ່ງແມ່ນບ່ອນກຳເນີດສາຍນ້ຳແຫ່ງນັ້ນ.

ສອງຜົວເມຍໝົດປັນຍາກໍນັ່ງໄຫ້ໃສ່ກັນ. ຜ່ອງຄິດຮອດລູກສາວນ້ອຍ, ປານນີ້, ມັນຄົງອຶດຫິວ ຕາຍແລ້ວກໍບໍ່ຮູ້ ຜູ້ເປັນຜົວຈຶ່ງເວົ້ານຳຜູ້ເປັນເມຍວ່າ "ຢູ່ທີ່ນີ້ກໍຕ້ອງຕາຍ, ໄປຕໍ່ອີກກໍຈະຕາຍ ແຕ່ກ່ອນ ເຮົາຈະຕາຍ ເຮົາຄວນເຮັດຈົນສຸດຄວາມສາມາດຕໍ່ສູ້ຈົນວິນາທີສຸດທ້າຍ, ບໍ່ໄດ້ຮັບໄຊຊະນະ ຈຶ່ງຍອມ ຕາຍ ຂ້ອຍຄິດວ່າເຮົາບໍ່ຄວນນັ່ງຖ້າຕາຍ ຄືກັບຜູ້ອື່ນໆທີ່ຕາຍໄປແລ້ວຢ່າງເດັດຂາດ". ຜູ້ເປັນຜົວເວົ້າ ແລ້ວ ກໍບອກໃຫ້ເມຍປ່າວເຕືອນຄົນ ແລະ ສັດທັງຫຼາຍ ໃຫ້ຮູ້ທົ່ວເຖິງກັນວ່າ "ເພື່ອມີຊີວິດໃຫ້ລອດຕໍ່ໄປ ໄດ້ ພວກເຮົາຕ້ອງຮ່ວມແຮງຮ່ວມໃຈ ເພື່ອຕໍ່ສູ້ກັບຄວາມຫຍຸ້ງຍາກ ແລະ ກັນດານນີ້ ຖ້າພວກເຮົາເຮັດ ສຳເລັດຄົນ ແລະ ສັດທັງຫຼາຍກໍຈະບໍ່ສູນສິ້ນເຊື້ອພັນຈາກໂລກນີ້, ຖ້າພວກເຮົາ ຫາກຂີ້ຄ້ານມັກງ່າຍ ຄວາມຕາຍກໍຈະມາເຖິງພວກເຮົາ ແລະ ຍາດວົງພົງພັນຂອງພວກເຮົາຢ່າງໜ້າເວດທະນາ ແລະ ເປັນຕາຢ້ານກົວທີ່ສຸດ".

ເມື່ອທຸກຄົນໄດ້ຍິນຄຳປ່າວປະກາດແນວນັ້ນກໍເຫັນດີ, ຍອມສະຫຼະຊີບຂອງຕົນ ເພື່ອຍາດເອົາ ໄຊຊະນະຈາກທຳມະຊາດ, ເພື່ອຄວາມຄົງຢູ່ຂອງມະນຸດຊາດ ແລະ ທຳມະຊາດອື່ນໆໃນໂລກ. ພວກ ເຂົາພາກັນຕັດສິນໃຈຂຸດເຈາະເຂົ້າໄປໃນໜ່ອຍພູ ທີ່ເຄີຍເປັນເຄົ້າແມ່ນ້ຳສາຍເກົ່າທີ່ແຫ້ງແລ້ງໄປນັ້ນ; ເຂົາເຈົ້າໃຊ້ຄວາມພະຍາຍາມແກະ, ໄວ້, ເຈາະ, ຂຸດ ແລະ ກົ່ງແຜ່ນຫີນດານອັນສຸດແສນແຂງເທື່ອລະ ເລັກເທື່ອລະນ້ອຍ. ເວລານັ້ນ, ຜູ້ຕາຍກໍຕາຍໄປນຳເບິ່ງກະດູກຫົວຜີຫຼ້ອນກອງລະເນລະນາດໃນແຖບ ນັ້ນ. ເຖິງປານນັ້ນ, ຜູ້ມີຊີວິດຢູ່ກໍເຮັດຕໍ່ໄປບໍ່ຢຸດຢັ້ງເຮັດໄປເລື້ອຍໆ... ພວກຂະເຈົ້າກໍເຈາະເລິກລົງໄປ ໃນໜ່ອຍພູນັ້ນຊັກໃຊ້, ບາດແລ້ວຄວາມຝັນກໍໄດ້ກາຍມາເປັນຄວາມຈິງ. ນ້ຳໄດ້ໄຫຫຼັ່ງອອກມາຈາກພູ ໜ່ອຍນັ້ນຢ່າງອະເນກອະນອງ, ໄຫອອກມາບໍ່ຢຸດບໍ່ເຊົາ ຈົນເຫຼືອກິນເຫຼືອໃຊ້, ນ້ຳໄຫແຮງຈົນພັດເອົາ ສັດສາວາສິ່ງ ແລະ ທຳມະຊາດເຫຼົ່ານັ້ນໄຫໄປນຳອຶກກະທຶກນຶກນອງ ແມ່ນກະທັ່ງຄົນເຈາະຫີນຢູ່ນັ້ນກໍ ຖືກພັດເຂົ້າໄປນຳກັນລະເນລະນາດ, ຄົນລະຫົນລະແຫ່ງ.

ກ່າວເຖິງລູກສາວນ້ອຍ ນັບແຕ່ພໍ່ແມ່ໜີຈາກໄປ ກໍມີແຕ່ຮ້ອງໄຫ້ຮ່ຳໄຮຢູ່ໃນກະຕູບນັ້ນ ບໍ່ຍອມ ກິນເຂົ້າປາອາຫານ. ລາວນັ່ງກຳໄຂ່ດິບໜ່ອຍນັ້ນຢູ່ບໍ່ວ່າງ ດົນຕາມດົນ, ໄຂ່ໜ່ອຍນັ້ນເລີຍເບາະອອກ ເປັນໄກ່ນ້ອຍ ນາງໄດ້ພຽນລ້ຽງໄກ່ນ້ອຍຕົວນັ້ນ, ດ້ວຍເຂົ້າປັ້ນດຽວທີ່ພໍ່ແມ່ເອົາໃຫ້ນັ້ນ ຈົນໄກ່ນ້ອຍນັ້ນ ໃຫຍ່, ມັນໃຫຍ່ຂຶ້ນມາເປັນໄກ່ຜູ້ໂອກ ມັນຮຽນຮ້ອງຮຽນຂັນ ຮຽນຮູ້ຄວາມຄົນ ແລະ ເວົ້າລົມນຳນາງ ນ້ອຍໄດ້ເໝືອນກັບວ່າແມ່ນຄົນ.

ເມື່ອໄກ່ໂອກຕົວນັ້ນ, ເຫັນເຈົ້າຂອງ ມັນຫງ່ວມເຫງົາ ມັນກໍຖາມຫາກົກປາຍສາຍເຫດ; ນາງຜູ້ ເປັນເຈົ້າຂອງໄດ້ເລົ່າຄວາມເປັນມາຂອງຕົນສູ່ໄກ່ຟັງຕັ້ງແຕ່ຕົ້ນຈົນຕະຫຼອດປາຍ. ມື້ໜຶ່ງ, ໄກ່ໂອກວິ ເສດໂຕນັ້ນ ໄດ້ຖາມເຈົ້າຂອງວ່າ:

" ນາງເອີຍ ນາງເປັນຜູ້ມີບຸນຄຸນຕໍ່ຂ້ອຍ ເຈົ້າຢາກໄດ້ຫຍັງບອກຂ້ອຍແມ ຂ້ອຍຈະຫາມາໃຫ້ ".

" ຂ້ອຍຢາກໄດ້ບ້ານກວ້າງເມືອງງາມ" ນາງຕອບ. ຕອນຂ້ອນຊິແຈ້ງ ໄກ່ໂອກກໍຂັນ ຂຶ້ນວ່າ: " ເອີກ ອີ່ເອີກ... ເອີກ...! ເຈົ້າຂອງຢາກໄດ້ບ້ານກວ້າງ ເມືອງງາມ". ຕື່ນເຊົ້າຂຶ້ນມາ, ນາງມືນຕາຂຶ້ນໄດ້ເຫັນ

ບ້ານເມືອງຮຸ່ງເຮືອງດັ່ງຕົນນຶກຢາກໄດ້ແທ້.

ເມື່ອຕອບສະໜອງຄວາມຕ້ອງການຂອງເຈົ້າຂອງຕົນໄດ້ແນວນັ້ນ, ໄກ່ໂອກຈຶ່ງຖາມຕໍ່ວ່າ: "ເຈົ້າຕ້ອງການຫຍັງອີກ" ນາງຕອບວ່າ ຕໍ່ໄປຂ້ອຍຢາກໄດ້ບ່າວໄພ່ລາສະດອນ, ຊ້າງ, ມ້າ, ງົວ, ຄວາຍ, ນ້ຳໃນຟືນໄຟ, ຈົກຂວານພ້າມີດ ພ້ອມເຄື່ອງໃຊ້ຫຼາຍສິ່ງນາໆ ເພື່ອເອົາມາຂຸດດິນຟັນໄມ້". ຕື່ນເຊົ້າຂຶ້ນມາມື້ໃໝ່, ນາງກໍເຫັນສິ່ງທີ່ຕົນຕ້ອງການທຸກຢ່າງ. ນາງໄດ້ເຫັນສະພາບເມືອງບ້ານຮຸ່ງເຮືອງເຫຼືອງເຫຼື້ອມ ປະກອບດ້ວຍປະຊາລາສະດອນ ແລະ ເຄື່ອງໃຊ້ໄມ້ສອຍທຸກຢ່າງ, ກົງກັນຂ້າມ, ນາງຊ້ຳພັດຫຼຽວໄປເຫັນໄກ່ໂອກຂອງນາງກຳລັງຫຼັ່ງນ້ຳຕາ ດ້ວຍຄວາມໂສກເສົ້າເທງົ່າທ້ວຍ, ນາງຈຶ່ງຖາມໄກ່ໂອກວ່າ: "ນ້ອງໄກ່ໂອກເອີຍ, ເປັນຫຍັງເຈົ້າຈຶ່ງໄຫ້ ແລະ ໂສກເສົ້າໂສກາ ຫຼັ່ງນ້ຳຕາ ເໝືອນຜູ້ມີຄວາມທຸກຮ້ອນແທ້, ຂ້ອຍໄດ້ເຮັດຫຍັງໃຫ້ເຈົ້າຜິດໃຈບໍ?" ໄກ່ໂອກຕອບນາງວ່າ" ຄັ້ງນີ້, ຂ້ອຍຕ້ອງຕາຍຈາກເຈົ້າໄປແລ້ວ ເພາະພ້າມີດຟື້ນໄຟຈະທຳລາຍຂ້ອຍ ຄັນຂ້ອຍຕາຍໄປແລ້ວໃຫ້ເອົາຊາກສົບຂອງຂ້ອຍເຜົາຈູດໃນກອງໄຟ ຢ່າໄດ້ເອົາໄປຝັງ ຢັ່ງລົງໃນພື້ນ".

ເມື່ອໄກ່ຕາຍໄປແລ້ວ, ນາງໄດ້ເອົາໃຈໃສ່ມ້ຽນຄາບສິ່ງສະກາບ ຕາມຄຳສັ່ງຂອງໄກ່ຄື: ເອົາຈູດໃນກອງໄຟໃຫ້ໄໝ້ຈົນບໍ່ເຫັນຮອດກະດູກ. ນາງມີຄວາມອາໄລອາວອນຫາໄກ່, ທຸກເຊົ້າແລງໃດ ນາງກໍໄປຫາກອງຟອນຂອງໄກ່, ເກັບດອກໄມ້ໄປມອບແກ່ກອງຟອນຂອງໄກ່, ວ້ຶງວອນໃຫ້ວິນຍານຂອງໄກ່ໄປສູ່ເມືອງສະຫວັນ. ເຮັດແນວນັ້ນເປັນປະຈຳຈົນຮອດເຈັດມື້, ຕໍ່ມານາງກໍປະກົດເຫັນຕົ້ນດອກພຸດເກີດຂຶ້ນໃນກອງຟອນໄກ່ນັ້ນ, ມັນເປັນດອກດຽວມີສີຂາວບໍລິສຸດ, ດອກພຸດດອກນັ້ນໃຫຍ່ຜິດປົກກະຕິສິ່ງກົ່ນຫອມຫວນທົ່ວບໍລິເວນນັ້ນ. ນາງຖະໜອມຮັກດອກພຸດນັ້ນ ດ້ວຍຄວາມເອົາໃຈໃສ່ ເມື່ອເຫັນວ່າດອກໄມ້ບານເຕັມສອນແລ້ວ ກໍຫຼົ່ນລົງສູ່ພື້ນດິນ. ນາງໄດ້ເກັບເອົາເມືອບູຊາໄວ້ເທິງຫົວບ່ອນນອນ ເດິກທ່ຽງຄືນກໍມີຊາຍໜຸ່ມຄົນໜຶ່ງ ງາມຢາດຍ້ອຍເໝືອນເທວະບຸດ, ອອກມາຈາກດອກໄມ້ແລ້ວໂອ້ລົມນຳນາງ ຂໍມອບຄວາມຮັກໃຫ້ນາງ. ເມື່ອນາງເຂົ້າໃຈແລ້ວ, ກໍຮັບເອົາຄວາມຮັກ ຈາກຊາຍດອກໄມ້ຄົນນັ້ນ; ດ້ວຍຄວາມພໍໃຈທັງສອງຕົກລົງປົງໃຈເປັນຜົວເມຍກັນດ້ວຍຄວາມພໍອົກພໍໃຈ. ນັບແຕ່ຄືນນັ້ນມາ, ເປັນອັນວ່າຂະເຈົ້າທັງສອງໄດ້ກາຍເປັນພະຍາ ແລະ ມະເຫສີແຫ່ງເມືອງນິລະມິດນັ້ນຢ່າງສົມບູນ.

ນ້ຳໄດ້ພັດເອົາສອງຜົວເມຍເຖົ້າຄູ່ນັ້ນໄປຢ່າງບໍ່ຮູ້ສິ້ນຮູ້ເງື່ອນ, ຜູ້ເປັນຜົວເກັບຈ່ອງຂອນໄມ້ອັນໜຶ່ງຈຶ່ງຄວາດຶງເອົາເມຍຂຶ້ນນຳ. ນ້ຳໄດ້ພັດລ່ອງໄຫຼໄປຕັ້ງຫຼາຍປີຫຼາຍເດືອນກໍບໍ່ເຫັນຮ່ອງຮອຍວ່າຈະພົບບ້ານຜູ້ເມືອງຄົນ, ຂອນໄມ້ເຂົ້າຝັ່ງຍາມໃດກໍກິນໝາກໄມ້ເປັນອາຫານຂອນໄມ້ໄຫຼລ່ອງໄປ... ສອງເຖົ້າຈຶ່ງປຶກສາກັນວ່າ: "ພວກເຮົາຕ້ອງຕາຍຄັກໆແລ້ວບາດນີ້ ຂອນໄມ້ນີ້ອາດຈົມ ຫຼື ບໍ່ດັ່ງນັ້ນຝູງແຂ້ເງືອກ ແລະ ສັດນ້ຳຫັງຫຼາຍກໍອາດຈະສອບກິນເຮົາກໍເປັນໄດ້". ເມຍເວົ້າຕື່ມວ່າ" ຕາຍກໍຕາຍ, ຕາຍໄປກໍບໍ່ກິນແໜງດອກ ເພາະພວກເຮົາໄດ້ເຮັດທຸກຢ່າງເພື່ອມວນມະນຸດແລ້ວ ພວກເຮົາໄດ້ເຮັດໃຫ້ມະນຸດມີນ້ຳໃຊ້ ນ້ຳກິນຢ່າງພຽງພໍແລ້ວ, ພວກເຮົາຈະຕາຍຍ້ອນນ້ຳຄືເຈົ້າວ່ານັ້ນກໍບໍ່ຄວນກິນແໜງ". ຜົວກໍເອີ່ຍເຖິງເລື່ອງລູກສາວນ້ອຍວ່າ: " ປານນີ້ອີ່ນາງລູກສາວເຮົາຄົງຕາຍແທ້ງ

ຍ້ອນອຶດຫິວແລ້ວລະນໍ, ເຮົາເດ! ຈະຢູ່ຕໍ່ໄປໃຫ້ຫໍລະມານເຮັດຫຍັງອີກ.

ຂະນະທີ່ສອງເຖົ້າໂລມກັນໄປຫຼາຍເລື່ອງຫຼາຍລາວນັ້ນ, ກໍພໍດີຂອນໄມ້ໄຫຼຜ່ານເມືອງຄົນແຫ່ງໜຶ່ງ, ຂະເຈົ້າແນມຂ້າມໄປຫາຕາຝັ່ງເຫັນຝູງຄົນໄຫບ້ານລົງອາບນ້ຳຍາມຄ່ຳຢ່າງຫຼວງຫຼາຍ. ເມື່ອຊາວບ້ານຊາວເມືອງຫຼຽວເຫັນຄົນຂີ່ຂອນໄມ້ໄຫຼມາແນວນັ້ນ ກໍຄິດຢາກຊ່ວຍເຫຼືອຈຶ່ງພາກັນເອົາເຂົ້າຝັ່ງ, ເຂົາເຈົ້າເບິ່ງໃກ້ໆຄືກັບວ່າລີງ ເພາະຕາມຕົນໂຕຂອງສອງເຖົ້ານັ້ນ ເຕັມແຕ່ຂົນ ເຄື່ອງນຸ່ງກໍບໍ່ມີ, ໜ້າຕາຈ່ອຍຜອມ ຮ່າງຄີງກໍກ່ຳໜອງ.

ແຕ່ຢ່າງໃດກໍຕາມ, ຊາວບ້ານທີ່ໄດ້ພົບເຫັນນັ້ນເວົ້າເປັນສຽງດຽວກັນວ່າ: ຈະເປັນຄົນ ຫຼື ສັດ ກໍຕາມພວກເຮົາກໍຄວນເອົາໄປໃຫ້ນາງ ແລະ ທ້າວພະຍາເບິ່ງສາກ່ອນວ່າມັນແມ່ນຄົນ ຫຼື ວ່າສັດ ແປກປະຫຼາດແນວໃດແທ້. ເມື່ອນາງພະຍາຮູ້ແນວນັ້ນ, ຈຶ່ງສັ່ງໃຫ້ເສນາອາມາດຈັດການຫາເຄື່ອງນຸ່ງຂອງຖືໃຫ້ທັງສອງເຖົ້ານັ້ນທັນທີ ພ້ອມທັງໃຫ້ອາບນ້ຳ ແລະ ເອົາອາຫານການກິນໃຫ້.

ເມື່ອກິນເຂົ້າອີ່ມໜຳສຳລານແລ້ວ ນາງ ແລະ ທ້າວພະຍາເມືອງຈຶ່ງຖາມຫາຕົ້ນປາຍສາຍເຫດ, ສອງເຖົ້າປ່ຽນກັນເລົ່າຕັ້ງແຕ່ຕົ້ນຈົນຮອດປາຍ ທັງເວົ້າທັງເຊັດນ້ຳຕາ. ເມື່ອສອງເຖົ້າເລົ່າສຸດລົງ ນາງພະຍາ ຈຶ່ງກ່າວຊ້ອງໜ້າບ່າວໄພ່ທັງຫຼາຍວ່າ "ສອງເຖົ້ານີ້ແມ່ນພໍ່ແມ່ຂອງນາງເອງ" ແຕ່ສອງເຖົ້ານັ້ນບໍ່ເຊື່ອວ່າແມ່ນລູກສາວຂອງຕົນ ເວົ້າແນວໃດກະບໍ່ເຊື່ອ ສຸດທ້າຍນາງຈຶ່ງຈົກເອົາແຫວນຄຳ ທີ່ພໍ່ແມ່ມອບໃຫ້ກ່ອນຈາກໄປໃນເມື່ອກ່ອນ ອອກມາໃຫ້ເບິ່ງ, ທັງສອງເຖົ້າເຫັນແຫວນຄຳວົງນັ້ນ ຈຶ່ງຄ່ອຍເຊື່ອ.

ເໝືອນຕາຍແລ້ວເກີດໃໝ່, ພໍ່ແມ່ພາກລູກໄປຕັ້ງຊາວກ່າວປີ ຈຶ່ງໄດ້ມາພົບພໍ້ ຄວາມດີໃຈໄດ້ສະແດງອອກມາເປັນສຽງສະອື້ນເວົ້າບໍ່ອອກທັງພໍ່ແມ່ ແລະ ລູກສາວເກີດຄວາມດີໃຈຫາຍຄວາມກັງວົນຈາກນັ້ນ, ສອງເຖົ້າກໍໄດ້ຂຶ້ນຢູ່ເຮືອນລູກສາວລູກເຂີຍໄດ້ຫ້າງຫາໄວ້ຢ່າງມີຄວາມສຸກຄວາມສະບາຍຢູ່ຮ່ວມກັນ ນັບແຕ່ເວລານັ້ນຈົນຕະຫຼອດກາລະນານ.

## ເລື່ອງ: ທ້າວເຈັດໄຫ
## ຕອນທີ12 ທ້າວເຈັດໄຫສູ້ກັບຈີນາຍໂມ້

ທ້າວເຈັດໄຫບອກລູກນ້ອງ
ໄປບິດຂາຈີນາຍມາ
ບາລະຄອນເຂົ້າໄປໃກ້
ຖືກຈີນາຍດີດຟ້ອງ
ທ້າວເຈັດໄຫບອກໃຫ້ທ້າວ
ບິດເອົາຂາຈີ່ນາຍໃຫ້ໄດ້
ບາບຸນຖືກຂາຈີ່ນາຍດີດຟ້ອງ
ຕົກໃສ່ໜອງເຫວະດາເກົ້າລ້ຽວ
ບາລຳບໍ່ໄດ້ຊ້າ
ເອົາສອງມືກຸມບິດ
ຖືກຈີນາຍດີດຟ້ອງ
ຕົກໃສ່ບຶງຫາດຫຼວງສະໜັ່ນກ້ອງ
ທ້າວເຈັດໄຫຄິດໃຈຮ້າຍ
ກູຊິບິດເອົາຂາຂອງມຶ່ງ
ຍ່າງໄປບິດຂາຊ້າຍ
ຂາຈີນາຍຫຼຸດຫຼົ່ນແລ້ວ
ທ້າວເຈັດໄຫແບກເອົາໄດ້
ໄປນັ່ງເຊົາເອົາແຮງ
ເປັນສາລາຫຼວງສ້າງ
ເອີ້ນວ່າສາລາຄຳເກົ່າກີ້
ພໍຕາເວັນບ່າຍຄ້ອຍ
ທ້າວທັງສາມເດີນທາງມາ
ພວກເຂົາໂຮແຊວທ້ວງ
ບາເຈັດໄຫບິດເອົາໄດ້
ທ້າວທັງສີ່ໄດ້ຍົກຍ້າຍ
ແລເຫັນແສງໄຟແດງ

ຜູ້ທີໜຶ່ງເຂົ້າໄປຫາ
ຈີ່ເປັນອາຫານເຊົ້າ
ກອດຂາພັນແຂ່ງ
ໄປຕົກໜອງນ້ຳຊື່ພະຍາ
ບາບຸນໄປປາບ
ມາປີ້ງຈີ່ກິນ
ໄປຕົກລົ່ງແຄມທ່າ
ຄາງຮ້ອງສະແມ່ງຕາຍ
ອາສາປາບໂຕຈີນາຍ
ຂາຈີນາຍໜຽວແໜ້ນ
ຄືກັນກັບພວກເພື່ອນ
ຄາງຮ້ອງດັ່ງດຽວ
ຈີນາຍໃຫຍ່ມຶ່ງໂອຫັ່ງ ແທ້ນໍ
ມາຈີ່ກິນໃຫ້ເຕັມທ້ອງ
ຈີນາຍດົ່ງໂຕໃຫຍ່
ໂຕມັນໜ້ຳລີ້ຢູ່ຮູ
ຂາໃຫຍ່ຂອງຈີນາຍ
ຢູ່ສາລາແຄມນ້ຳ
ພອກຄຳປ໋ວເຫຼືອງອະລ່ານ
ມາເທົ້າສູ່ວັນນີ້ແລ້ວ
ໃກ້ຄ່ຳຕາເວັນແດງ
ຮ່ວມກັນພຽງພ້ອມ
ຂາຈີນາຍຫຼຸດຫຼົ່ນ
ພາກັນຍ້ອງຊື່ນຊົມ
ໄປຊອກຈີ່ຂາຈີນາຍ
ຢ່າຈຳສອນດັ່ງໄວ້

ข้ามจำหน่าย

ທ້າວເຈັດໄຫບອກລູກນ້ອງ
ມາຈີ່ຂາຈີນາຍໃຫ້ອີ່ມທ້ອງ
ໄປຂໍໄຟນໍາຍ່າ
ຈຶ່ງເດີນດັ້ນຕໍ່ໄປ

## ຕອນທີ 13 ທ້າວເຈັດໄຫຕໍ່ສູ້ກັບຍັກຍ່າຈໍາສອນ

ຜູ້ທີ່ໜຶ່ງເຂົ້າໄປໃກ້
ຂໍເອົາໄຟໄປດ້ວງ
ຍ່າຈໍາສອນບອກໃຫ້
ດົ້ນຟືນຍ່າເອົາໄວ້
ຜໍເມື່ອບາລະຄອນເຂົ້າໄປກ້ອງ
ຄີບເອົາຖ່ານໄຟແດງ
ຍ່າຈໍາສອນຫັກຂາທ້າວ
ຜ້າຍັດປາກບໍ່ໃຫ້ຮ້ອງ
ທ້າວບາບຸນກໍໄດ້
ໄປຂໍໄຟມາດ້ວງ
ບາຄໍາຄົນສຸດທ້າຍ
ຍັກຍ່າຍາຍໂຫດຮ້າຍ
ທ້າວເຈັດໄຫລອຍລອງຖ້າ
ລູກນ້ອງໄປສາມຄົນ
ມັນອາດມີເຫດຮ້າຍ
ທ້າວເຈັດໄຫເດີນດຸ່ງດັ້ນ
ທ້າວສິ່ງສຽງກ່ວ່າຮ້ອງ
ແມ່ເຖົ້າເອີຍ ລູກຊິຂໍເອົາໄຟ
ຍັກຍ່າບອກໃຫ້ທ້າວ
ສ່ວນດົ້ນຟືນບໍ່ໃຫ້

ທ້າວເຈັດໄຫໄປຈັບເອົາດົ້ນ
ຖືກອີ່ນາຍບາງຍັກ
ທ້າວເຈັດໄຫຖີບສຸ່ມຟັ້ງ
ຈັບຜົມໜ້າຜາກແກ່ວງກ້ຽວ


ເຮືອນຍ່າຈໍາສອນ
ຈີ່ຂາຈີນາຍໂມ້
ຍ່າເອົາຟືນເອົາແຕ່ຖ່ານ ມັນດີ
ອູດຮົ້ນໄລ່ຍູງ
ເຮືອນຍ່າຈໍາສອນ
ຖືກສຸ່ມເຫຼັກງວມໄວ້
ບາລະຄອນເອົາໄປເຊື່ອງ
ລໍຖ້າຜູ້ອື່ນມາ
ເຮັດດັ່ງດຽວກັນ
ຖືກສຸ່ມງວມຫັກຂາມ້ຽນ
ໄປຂໍໄຟນໍາຍ່າ
ຫັກຂາມ້ຽນດັ່ງດຽວ
ເຫິງນາມຍິ່ງຫິວຫອດ
ມິດຫາຍບໍ່ມາໃກ້
ແນວບໍ່ດີມາຜ່ານ ລະນໍ
ໄປຢ້ຽມເບິ່ງສວນ
ໄປຍັງຍ່າຈໍາສອນ
ໄປຈີ່ຂາຈີນາຍໂມ້
ເຂົ້າມາເອົາຍັງຖ່ານ
ເອົາໄວ້ໄລ່ຍຸງ

ຟືນໃຫຍ່ໄຟແດງ
ເອົາສຸ່ມງວມຈັບໄວ້
ຄວ້າມືດຶງຜົມຍ່າ
ຈົນຫໍ້ຮ້ອຍ່ຽວໄຫຼ

ທ້າວເຈັດໄຫແຜດສຽງຮ້າຍ
ມຶ້ງນີ້ເປັນແນວຜີ
ແປງເປັນຄົນໃຈກວ້າງ
ພໍເຂົ້າໄປນັ່ງໃກ້
ໃຫ້ມຶ້ງເອົາລູກນ້ອງ
ລູກນ້ອງກູສາມຄົນ
ຍ່າຈຳສວນຈົກເອົາທ້າວ
ຫັກແຂ່ງຂາມຸ່ນມ້ຽນ
ທ້າວເຈັດໄຫບອກໃຫ້ຜີຍັກຮ້າຍ
ຈົ່ມເວດມົນປົວແປງ
ຕໍ່ແຂ່ງຂາຄືນໃຫ້ພ້ອມ
ຫາກຕໍ່ຄືນບໍ່ໄດ້
ຍັກໄດ້ຍົນນິ້ວ
ເປົ່າໃສ່ບາທັງສາມ
ບາທັງສາມຖາມທ້ວງ
ມຶ້ງນີ້ສັງວ່າໃຈໂຫດຮ້າຍ
ບາບຸນມືຊ້ຳໜ້າ
ທັງຍໍຕີນຖີບພຸ
ຂໍອະໄພຂໍຊີວັງໄວ້
ຍ່າກໍຫົວຫອດທ້ອງ
ຍ່າຫາກສູ້ບໍ່ແພ້
ຫາກພວກຫຼາບຢາກເອົາໄຟ
ຂໍເຊີນເອົາໄປໄດ້
ຫຼື ຊີຈີ່ຢູ່ບ່ອນນີ້
ທັງສີ່ບາຍົບເອົາດິ້ນ
ໄປດັງໄຟແຄມໜອງ
ພາກັນກິນເຕັມທ້ອງ
ແລ້ວຈຶ່ງເດີນດຸ່ງດັ້ນ

ຮ້ອງໃສ່ອີ່ນາຍຍັກ
ປ່ຽນແປງໂສມໜ້າ
ວາຈາຫວານອ່ອນ
ຜັດທຳຮ້າຍຊົ່ວຊາມ ແທ້ນໍ
ຄືນມາສິ່ງກູໃສໝົດ
ໃຫ້ສິ່ງມາດຽວນີ້
ທັງສາມຈາກຮີບໃຫຍ່
ສະຫຼົບນ້ຳສູ່ຄົນ
ອີ່ນາຍຍ່າຈຳສວນ
ໝູ່ເຂົ້າໃຫ້ກັບຟື້ນ
ໃຫ້ຄືເດີມທຸກຢ່າງ
ຊີຂ້າຖ້ຳມຍ່າຍາຍ ແທ້ເນີ
ຈາຈົ່ມຄາຖາ
ໃຫ້ຟື້ນຄືນຍືນໄດ້
ບາງຜີຍັກຍ່າ
ໝາຍຂ້າຊົ່ງກູ
ຍັກຍາຈຳສວນ
ຍັກຍອມວອນໄຫວ້
ນຳຫຼານທັງສີ່
ຢາກກິນແທ້ສີ່ບາ
ຂໍອ່ອນຂໍຍອມ
ໄປດັງຈີ່ຂາຈີນາຍໂມ້
ຟືນໄຟ ຫຼື ຖ່ານ
ເຊີນທ້ອນຍ່າບໍ່ຂີ້ນ
ຟືນໃຫຍ່ໄຟແດງ
ຈີ່ຂາຈີນາຍໂມ້
ແຄມໜອງນອນພັກຜ່ອນ
ໝາຍໜ້າເຂົ້າສູ່ເມືອງ

## ตอบ14 ท้าวเจัดไทเอ้ำหาพะยาอู่เมืองหาดซายฟอง



ท้าวเจัดไทย่างออกหน้า
ไปเมืองหาดซายฟอง
ขาบไทอ้ปู่ตาถ้ำ
แจ้งข่าวยาดพี่น้อง
อันว่าปีตุลาดไท้
ทังอาว อา ป้า ลุง
ยังค่อยอู่สะถรมพั้น
ฝูงพู่ทวยลาดไท้
ส่วนว่าทางฝ่ายก้ำ
ยังค่อยเมิาภะเสิมสุภ
สามบาย่างนำหลัง
ยื่นสานถะหวายเจ้า
ภะสัดตาลาวหิลาด
จำปาพุ้นสู่ปู่ฟัง
พ้อมพ่ำมานถา
เผ่าผิงพันเชื้อ
ถองเมืองตุ้มไพ่
ภะเสิมส้างอู่ซุ่มเย็น แท้แล้ว
มะถอนใหย่หาดซายฟอง
อู่สะบายสะถรมพั้น อู่ลือ

ອັນວ່າໄອຍະໂກເຈົ້າ
ມະເຫສີແກ່ນເທົ້າ
ເມື່ອນັ້ນອົງເອກໄທ
ໄດ້ກ່າວຈາດອມຫຼານ
ໄຂ່ຂ່າວຄາວເມືອງບ້ານ
ທັງຂ່າວລຸ່ງຂ່າວປ້າ
ຍັງຄ່ອຍສຸກກະເສີມສ້າງ
ປວງປະຊາມີຄວາມສຸກ
ຜະລິດເຂົ້າປາອາຫານໄດ້
ມອບສ່ວນສາສິ່ງໃຫ້
ອັນວ່າເສເນດທ້າວ
ໄດ້ປຶກຄອງເປັນທຳ
ສິ່ງເສີມການຂາຍຄ້າ
ຫວຍຄ້າຫຼາຍແຫ່ງຫ້ອງ
ໄດ້ເອົາຂອງເຄື່ອງໃຊ້
ທັງຜ້າໄໝ ຜ້າຝ້ມ
ແລກເອົານໍ ງາຊ້າງ
ໄມ້ຣາກຢາ ໄມ້ຄ່າລ້ຳ
ຫວຍຄ້າຫຼາຍເຂດບ້ານ
ມາຈາກຫຼາຍຫົວເມືອງ
ທັງຖໍ່ເຮືອຂາຍຄ້າ
ທຸກດ່ານໂຮມຮິບໄດ້
ພໍເມື່ອຈາກັນແລ້ວ
ສັ່ງໃຫ້ເສນາເມືອງ
ໃຫ້ຈັດການໂຮມເຕົ້າ
ພໍ່ພະຍາພ້ອມເສນາ ແລະ ໄພ່ຟ້າ
ຟັງສຽງຫຶດຫຶດກ້ອງ
ບາເຈັດໄຫໝັ້ນຍືນ!
ພາຍຫຼັງບາສີແລ້ວ
ພະພໍ່ເມືອງຈັດລ້ຽງ

ພະຍາຫຼວງພ້ອມມິ່ງ
ພົ້ງເຊື້ອຄ່ອຍສະບາຍ ຢູ່ລື
ພະຍາໃຫຍ່ຫາດຊາຍຟອງ
ໜໍ່ເມືອງແດນໃຕ້
ຫາດຊາຍຟອງທຸກຢ່າງ
ວົງສາເຊື້ອໝູ່ປະຊາ
ຊ້ອຍຊື່ນເທຍລະຄາ
ຊື່ນຊົມໂຮມເຕົ້າ
ຫຼວງຫຼາຍຍໍຍື່ນ
ແຮໄວ້ໃສ່ຄັງ
ເຈົ້າດ່ານນາຍກອງ
ລ່ຳແຍງແປງບ້ານ
ໄປມາທຽວທ່ອງ
ຈາກແດນໃກ້ ແລະ ໄກ
ຫຼາຍຢ່າງມາວາງຂາຍ
ເພັດນິນສິນຄ້າ
ເຂົ້າກວາງ ຂອງປ່າ
ຈວງຈັນພ້ອມຄັ່ງຍານ
ກາຍຜ່ານທຽວຂາຍ
ຜ່ອງສະໜາມ ຈາມ ຫໍ້
ມອບກຸລາ ພະມ້າມ່ານ
ຫຼາຍແທ້ສ່ວຍສາ
ພະຍາພໍ່ໄດ້ຈາກລາ
ຈັດຫໍໂຮງໃຫ້ບາທ້າວ
ບາສີໃຫ້ບາບ່າວ
ບາສີທ້າວຊື່ນຊົມ
ຮ້ອງກ່າວອວຍໄຊ
ໜັ້ນຍືນ! ໜໍ່ເມືອງແດນໃຕ້
ໄດ້ຊຸມແຊວສືບຕໍ່
ພຽງພ້ອມຄູ່ຊູ່ອັນ

## ບົດທີ 5
## ນິທານຊອນຫົວ

ເວລາ 8 ຊົ່ວໂມງ

# I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານຊອນຫົວ.
- ອະທິບາຍກ່ຽວກັບເນື້ອໃນການສ່ອງແສງຂອງນິທານຊອນຫົວໄດ້.
- ວິພາກນິທານຊອນຫົວເລື່ອງ "ຊຽງໜ້ຽງຕົວະພະຍາລົງໜອງ"ໄດ້.
- ອະທິບາຍສິລະປະນິທານຊອນຫົວໄດ້.
- ຂຽນສະຫຼຸບເຫດການ ແລະ ຂຽນສະຫຼຸບຫຍໍ້ນິທານຊອນຫົວໄດ້.
- ຮູ້ສະແດງລະຄອນຊອນຫົວແບບສັ້ນໆຕາມເນື້ອໃນຂອງນິທານຊອນຫົວໄດ້.

# II. ເນື້ອໃນຕົ້ນຕໍ

- ຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານຊອນຫົວ.
- ເນື້ອໃນຂອງນິທານຊອນຫົວ.
- ສິລະປະການແຕ່ງຂອງນິທານຊອນຫົວ.
- ວິພາກເລື່ອງ "ຊຽງໜ້ຽງຕົວະພະຍາລົງໜອງ"

# III. ສື່ການຮຽນ-ການສອນ

- ປຶ້ມແບບຮຽນວິຊາວັນນະຄະດີ ແລະ ຄູ່ມືຊັ້ນມັດທະຍົມປີທີໜຶ່ງ.
- ປຶ້ມນິທານຊຽງໜ້ຽງ, ປຶ້ມນິທານຊອນຫົວອື່ນໆ (ຖ້າມີ)

# IV. ກິດຈະກຳການຮຽນ-ການສອນ

### ການນຳເຂົ້າສູ່ບົດຮຽນ

- ຄູຄວນສ້າງບັນຍາກາດກ່ອນການຮຽນ-ການສອນ ດ້ວຍການເລົ່ານິທານຊອນຫົວເລື່ອງໃດເລື່ອງໜຶ່ງກ່ອນ.
- ຄູຕັ້ງຄຳຖາມສົນທະນາບົດຮຽນເກົ່າກັບນັກຮຽນດັ່ງນີ້:

1) ບົດທີ 4 ຮຽນກ່ຽວກັບຫຍັງ?

2) ຈຸດສຳຄັນຂອງບົດທີ 4 ເວົ້າເຖິງຫຍັງແດ່?

- ຄູສະຫຼຸບຄືນຂໍ້ຄິດເຫັນຂອງນັກຮຽນ ແລ້ວນຳພານັກຮຽນເຂົ້າສູ່ການຮຽນ ບົດທີ 5.

## 1. ภาบสอบถอาบพาย, ภาบกำเบิด ແละ ภาบขะหยายต๊อของบิหาบซอบหิอ.

### 1.1 ภาบสอบถอาบพายของบิหาบซอบหิอ.

- ถูอ่าบ ຫຼື ແบะบำให้บักธຽบผู้ใดผู้หึ่งอ่าบ ถอาบพายของบิหาบซอบหิอใบปึ้บ ແบบธຽบ.

- ถูตั้งถำถาบสิบทะบาภับบักธຽบดั่งบี้:

1) สຽงหิอใบบิหาบซอบหิอแม่บแบวใด?

2) เป้บหยังบิหาบซอบหิอจึ่งบีถอาบพายเยำะเย้ย, สຽดสิ, ก่าวปะบาบภาบภะทำที่ผิดพาดของถ๊บใบสังถ๊บ?

- ถูสะห฼ุบถำตอบของบักธຽบพ้อบหังอຽบถำตอบที่ถืภต้องแภ่บักธຽบดั่งบี้:

1) บิหาบซอบหิอ แม่บสຽงหิอที่บีถอาบพายยอภไยม่อบซื่บ, เยำะเย้ย, สຽดสิ, ก่าวปะบาบภาบภะทำผิดของถ๊บทุภชั้บถ๊บ.

2) สຽอหิอใบบิหาบซอบหิอบีถอาบพายเยำะเย้ย, สຽดสิ, ก่าวปะบาบภาบภะทำที่ผิดพาดของถ๊บย้อบว่า: ภาบภะทำที่ผิดของถ๊บ, ใบสังถ๊บเป้บภาบภะทำที่บ่ดี, บีผิบภะทิบต่ถอาบจะเลิบก้าวหน้าของบุภถ๊บหมู่เพื่อบ, ต่สังถ๊บ ແละ ปะเทดชาด.

### 1.2 ภาบสอบภาบกำเบิด ແละ ภาบขะหยายต๊อของบิหาบซอบหิอ

- ถูแบะบำให้บักธຽบผู้ใดผู้หึ่งอ่าบเบื้อใบภาบกำเบิด ແละ ภาบขะหยายต๊อของบิหาบซอบหิอใบปึ้บแบบธຽบให้หมิด.

- ถูแบะบำให้บักธຽบผู้อื่บๆติดตาบภาบอ่าบตาบปึ้บแบบธຽบ.

- ถูตั้งถำถาบสิบทะบาภับบักธຽบว่า: บิหาบซอบหิอบีภิภเถ้ำภาบกำเบิดบาจาภใส?

- ถูให้บักธຽบบีถอาบถิด ถอาบเห็บปะบาบ 2-3 ถ๊บตาบถอาบเพาะสิบ.

- ถูสะห฼ุบถอาบถิดเห็บของบักธຽบ ແล้วอຽบจุดสำถับของภาบกำเบิด ແละ ภาบขะหยายต๊อของบิหาบซอบหิอใส่ภะถาบดั่งบี้: บิหาบซอบหิอกำเบิดบาจาภภาบดำลิ๋งชีวิดของปะชาชิบผู้ออภแຮงงาบ. กำเบิด ແละ ขะหยายต๊อแຮงใบสังถ๊บที่บีชิบชั้บปิภถอง ແละ พุดทะสาสะหา.

- ถูตั้งถำถาบเพื่อสิบทะบาเจาะจี้มดั่งบี้:

1) ย้อบหยังบิหาบซอบหิอจึ่งกำเบิดบาจาภภาบดำลิ๋งชีวิดของปะชาชิบผู้ออภแຮงงาบ?

2) ย้อบหยังบิหาบซอบหิอจึ่งกำเบิดบาจาภชิบชั้บปิภถอง?

3) ย้อบหยังผะสิงสาบะเบบจึ่งภายเป้บต๊อละถอบใบบิหาบซอบหิอ?

- ຄູໃຫ້ນັກຮຽນຕອບຄຳຖາມປະມານ 3-4 ຄົນ.
- ຄູສະຫຼຸບຄຶນຄຳເຫັນຂອງນັກຮຽນ ພ້ອມທັງອະທິບາຍຄຳຕອບຕາມປຶ້ມແບບຮຽນ.

## 2 . ການສອນເນື້ອໃນຂອງນິທານຊວນຫົວ

### 2.1 ການສອນເນື້ອໃນທີ່ສ່ອງແສງການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ.

- ຄູໃຫ້ນັກຮຽນອ່ານກ່ຽວກັບເນື້ອໃນສ່ອງແສງການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ.
- ຄູຕັ້ງຄຳຖາມ ສົນທະນາກັບນັກຮຽນດັ່ງນີ້:

1) ແນວຄິດການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ ສະແດງຜ່ານນິທານຊວນຫົວມີຄຶແນວໃດ?

2) ຍ້ອນຫຍັງປະຊາຊົນຜູ້ອອກແຮງງານຈຶ່ງກາຍເປັນເປົ້າໝາຍສຽງຫົວເຢາະເຢີ້ຍສຽດສີໃນນິທານຊວນຫົວ?

- ຄູອະທິບາຍດ້ວຍວິທີການຍົກນິທານຊວນຫົວທີ່ມີເນື້ອໃນເວົ້າເຖິງການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ ມາເລົ່າສູ່ນັກຮຽນຟັງ ຫຼື ໃຫ້ນັກຮຽນເລົ່າ.
- ຄູຕັ້ງຄຳຖາມເຈາະຈີ້ມກ່ຽວກັບນິທານທີ່ເລົ່າມາດ້ວຍຄຳຖາມດັ່ງນີ້:

1) ການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ ສະແດງອອກໃນນິທານດັ່ງກ່າວແນວໃດ?

2) ສຽງຫົວທີ່ເກີດຂຶ້ນໃນນິທານດັ່ງກ່າວຕຳນິຕິຕຽນເຢາະເຢີ້ຍ, ສຽດສີບັນຫາໃດ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນກ່ຽວກັບການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ ແລະ ສຽງຫົວທີ່ເກີດຂຶ້ນໃນນິທານຊວນຫົວ.
- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ ແລະ ອະທິບາຍຊີ້ແຈງໃຫ້ນັກຮຽນເຂົ້າໃຈຕາມປຶ້ມແບບຮຽນ. ຈາກນັ້ນ, ໃຫ້ນັກຮຽນຈົດໃສ່ປຶ້ມຂຽນຂອງຕົນ.

### 2.2 ການສອນເນື້ອໃນຕຳນິຕິຕຽນການກະທຳທີ່ຜິດພາດຂອງຄູບາ ແລະ ພໍ່ຄ້າຊາວຂາຍ

- ຄູໃຫ້ນັກຮຽນອ່ານເນື້ອໃນຂໍ້ນີ້ພ້ອມກັນ.
- ຄູອະທິບາຍການກະທຳທີ່ຜິດພາດຂອງພະສົງສາມະເນນ ດ້ວຍການຍົກຄຳຖາມມາສົນທະນາກັບນັກຮຽນດັ່ງນີ້:

1) ການກະທຳຜິດພາດຂອງພະສົງສາມະເນນມີຫຍັງແດ່?

2) ການກະທຳທີ່ຜິດພາດຂອງພະສົງສາມະເນນ ສະແດງອອກໃນນິທານຊວນຫົວແນວໃດ?

- ຄູເລົ່າ ຫຼື ໃຫ້ນັກຮຽນເລົ່ານິທານເລື່ອງໃດເລື່ອງໜຶ່ງ ທີ່ເວົ້າເຖິງການກະທຳທີ່ຜິດພາດຂອງຄູບາອາຈານສູ່ກັນຟັງ.



ຫ້ອງສະໝຸດ ຮັກອ່ານ 21

- ຄູໃຫ້ນັກຮຽນຍົກການກະທຳຜິດຂອງຄູບາອາຈານທີ່ສະແດງອອກໃນນິທານດັ່ງກ່າວ.
- ຄູຂຽນການກະທຳທີ່ຜິດພາດຂອງຄູບາອາຈານໃສ່ກະດານ.
- ຄູອະທິບາຍເຈາະຈີ້ມ ການກະທຳທີ່ຜິດພາດຂອງຄູບາອາຈານດັ່ງກ່າວໃຫ້ນັກຮຽນເຫັນວ່າເປັນຫຍັງການກະທຳດັ່ງກ່າວຈຶ່ງເປັນການກະທຳທີ່ຜິດພາດ, ມັນຜິດພາດແນວໃດ ແລະ ຜິດພາດຕໍ່ໃຜ.
- ຄູສະຫຼຸບຄືນໃຫ້ນັກຮຽນເຂົ້າໃຈວ່າ ການກະທຳທີ່ຜິດພາດຂອງຄູບາອາຈານໄດ້ກາຍເປັນເປົ້າໝາຍຂອງສຽງຫົວໃນນິທານຊວນຫົວ (ຄຳຕອບຕາມປຶ້ມແບບຮຽນ)

* ຄູນຳພານັກຮຽນເຂົ້າສູ່ການຈຳແນກການກະທຳທີ່ຜິດພາດຂອງພໍ່ຄ້າຊາວຂາຍ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:
1) ການກະທຳທີ່ຜິດພາດຂອງພໍ່ຄ້າຊາວຂາຍມີຫຍັງແດ່?
2) ເປັນຫຍັງການກະທຳນັ້ນຈຶ່ງຜິດພາດ?
- ຄູໃຫ້ນັກຮຽນຍົກການກະທຳທີ່ຜິດພາດຂອງ ພໍ່ຄ້າຊາວຂາຍ.
- ຄູເປັນຜູ້ຂຽນ ແນວຄິດການກະທຳທີ່ຜິດພາດຂອງພໍ່ຄ້າຊາວຂາຍໃສ່ກະດານ. ພ້ອມທັງອະທິບາຍ ການກະທຳດັ່ງກ່າວນັ້ນ, ມັນຜິດພາດແນວໃດ? ເປັນຫຍັງແນວຄິດການກະທຳທີ່ຜິດພາດຈຶ່ງເປັນເປົ້າໝາຍເຢາະເຢີ້ຍ, ສຽດສີ ແລະ ກ່າວປະນາມໃນນິທານຊວນຫົວ.
(ຄຳຕອບຕາມປຶ້ມແບບຮຽນ)

**2.3 ການສອນແນວຄິດການກະທຳທີ່ຜິດພາດຂອງຊົນຊັ້ນປົກຄອງ**

- ຄູຕັ້ງຄຳຖາມສົນທະນາກ່ຽວກັບແນວຄິດການກະທຳທີ່ຜິດພາດຂອງຊົນຊັ້ນປົກຄອງດັ່ງນີ້:
1) ການກະທຳທີ່ຜິດພາດຂອງຊົນຊັ້ນປົກຄອງມີຫຍັງແດ່?
2) ເປັນຫຍັງການກະທຳຂອງຊົນຊັ້ນປົກຄອງນັ້ນຈຶ່ງເປັນການກະທຳທີ່ຜິດພາດ?
3) ເປັນຫຍັງການກະທຳທີ່ຜິດພາດຈຶ່ງກາຍເປັນເປົ້າໝາຍຂອງສຽງຫົວໃນນິທານຊວນຫົວ.
- ຄູໃຫ້ນັກຮຽນຕອບປະມານ 3-4 ຄົນ (ຕາມຄວາມເໝາະສົມ).
- ຄູຂຽນການກະທຳທີ່ຜິດພາດຂອງຊົນຊັ້ນປົກຄອງໃສ່ກະດານ ແລະ ແນະນຳໃຫ້ນັກຮຽນບັນທຶກໄວ້ໃນປຶ້ມຂຽນ.
- ຄູເລົ່ານິທານເລື່ອງໃດເລື່ອງໜຶ່ງ ຫຼື ຕອນໃດຕອນສູ່ນັກຮຽນຟັງ.
- ຄູຂຽນການກະທຳທີ່ຜິດພາດຂອງຊົນຊັ້ນປົກຄອງ ທີ່ສະແດງອອກໃນເລື່ອງໃສ່ກະດານ.
- ຄູອະທິບາຍການກະທຳທີ່ຜິດພາດຂອງຊົນຊັ້ນປົກຄອງ ແລະ ຄູສະຫຼຸບຄືນໂດຍຫຍໍ້ເນື້ອໃນຂອງນິທານຊວນຫົວຕາມປຶ້ມແບບຮຽນ.

**3. ການສອນສິລະປະການແຕ່ງນິທານຊວນຫົວ**

- ຄູໃຫ້ນັກຮຽນອ່ານສິລະປະການປະດິດແຕ່ງນິທານຊວນຫົວ.

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນຄື: ການແຕ່ງນິທານຊອນຫົວເພື່ນໃຊ້ສິລະປະຫຍັງແດ່?
- ໃຫ້ນັກຮຽນຕອບຕາມປຶ້ມແບບຮຽນປະມານ 2-3 ຄົນ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ພ້ອມທັງຂຽນສິລະປະການປະດິດແຕ່ງຂອງນິທານຊອນຫົວໃສ່ກະດານຄື: ສິລະປະໃນການໃຊ້ສຽງຫົວ, ສິລະປະການເວົ້າໂຍກ, ສິລະປະການສ້າງເຫດການ ແລະ ການແກ້ໄຂເຫດການໂດຍບັງເອີນ ແລະ ສິລະປະສ້າງຂໍ້ຂັດແຍ້ງ.

**3.1 ສິລະປະໃນການໃຊ້ສຽງຫົວ**

- ຄູໃຫ້ນັກຮຽນອ່ານພ້ອມໆກັນ.
- ຄູຕັ້ງຄຳຖາມສົນທະນາເຈາະຈີ້ມກັບນັກຮຽນດັ່ງນີ້:

1) ສຽງຫົວໃນນິທານຊອນຫົວມີຄວາມໝາຍແນວໃດ?

2) ເປັນຫຍັງການກະທຳທີ່ຜິດພາດຂອງຄົນໃນສັງຄົມ ຈຶ່ງກາຍເປັນເລື່ອງທີ່ເປັນຕາຢາກຫົວ ຫຼື ພາໃຫ້ເຮົາຫົວ?

- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເໝາະສົມ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ແລະ ຄຳຕອບທີ່ເປັນເອກະພາບດັ່ງນີ້: ສຽງຫົວ ແມ່ນຈຸດລັກສະນະພິເສດຂອງຄົນ, ສ່ວນສັດບໍ່ຮູ້ຫົວ ແລະ ການໃຊ້ຄວາມໝາຍຂອງສຽງຫົວໃນນິທານຊອນຫົວແມ່ນ ກ່າວປະນາມປະນາມການກະທຳທີ່ຜິດພາດຂອງຄົນໃນສັງຄົມ; ການກະທຳທີ່ຜິດພາດຂອງຄົນໃນສັງຄົມກາຍເປັນເລື່ອງທີ່ເປັນຕາຫົວ ກໍຍ້ອນວ່າມັນຜິດພ້ຽນໄປຈາກຄວາມຈິງ, ຈາກຂະນົບທຳນຽມປະເພນີ.

**3.2 ສິລະປະໃນການເວົ້າໂຍກ**

ຄູສົນທະນາກັບນັກຮຽນດ້ວຍຄຳຖາມນີ້:

1) ການເວົ້າໂຍກແມ່ນຫຍັງ?

2) ການເວົ້າໂຍກຊ່ວຍເຮັດໃຫ້ນິທານຊອນຫົວມີຊີວິດຊີວາ ແລະ ເປັນຕາຢາກຫົວຢູ່ບ່ອນໃດ?

- ຄູໃຫ້ນັກຮຽນຕອບປະມານ 2-3 ຄົນຕາມຄວາມເໝາະສົມ.
- ຄູສະຫຼຸບຄຳຕອບຂອງນັກຮຽນ, ພ້ອມທັງອະທິບາຍເພີ່ມເຕີມດ້ວຍການຍົກນິທານຊອນຫົວເລື່ອງໃດເລື່ອງໜຶ່ງມາເລົ່າສູ່ນັກຮຽນຟັງ.
- ຄູສະຫຼຸບຄືນສິລະປະການເວົ້າໂຍກ ໃນນິທານຊ່ວຍຫົວ ແລະ ແນະນຳໃຫ້ນັກຮຽນບັນທຶກໃສ່ປຶ້ມຂຽນຄື: ເວົ້າໂຍກ ແມ່ນເວົ້າກາຍຄວາມເປັນຈິງ, ການເວົ້າໂຍກຊ່ວຍໃຫ້ນິທານຊອນຫົວມີຊີວິດຊີວາ ແລະ ເປັນຕາຢາກຫົວຂຶ້ນຕື່ມ.

**3.3 ສິລະປະໃນການສ້າງເຫດການໂດຍບັງເອີນ**

- ຄູອະທິບາຍ ແລະ ສົນທະນາກັບນັກຮຽນດ້ວຍຄຳຖາມທີ່ມີລັກສະນະດັ່ງນີ້:

1) ເຫດການໂດຍບັງເອີນແມ່ນຫຍັງ? ຈົ່ງຍົກຕົວຢ່າງ.

2) ການແກ້ໄຂເຫດການໂດຍບັງເອີນແມ່ນແນວໃດ? ຈົ່ງຍົກຕົວຢ່າງ.

- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເໝາະສົມ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ແລະ ອະທິບາຍເພີ່ມເຕີມດ້ວຍການເລົ່ານິທານສັ້ນໆເປັນຕົວຢ່າງ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນວ່າ: ນິທານດັ່ງກ່າວໄດ້ໃຊ້ເຫດການໂດຍບັງເອີນ ແລະ ແກ້ໄຂເຫດການໂດຍບັງເອີນແນວໃດ?
- ຄູໃຫ້ນັກຮຽນຕອບຄຳຖາມປະມານ 2-3 ຄົນ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ພ້ອມທັງອະທິບາຍເຫດການໂດຍບັງເອີນ ແລະ ແກ້ໄຂເຫດການໂດຍບັງເອີນໃນບົດເລື່ອງດັ່ງກ່າວໃຫ້ນັກຮຽນເຫັນຢ່າງຊັດເຈນ. ຕົວຢ່າງ: ເລື່ອງຊຽງໜ້ຽງຕອບ "ຕົວພະຍາລົງໜອງ" ພະຍາບອກຊຽງໜ້ຽງວ່າ: "ຊຽງໜ້ຽງຖ້າເຈົ້າເກັ່ງລອງຕົວພະຍາລົງໜອງແມ!" ຊຽງໜ້ຽງ ຕອບວ່າ: "ຕົວພະຍາລົງໜອງບໍ່ໄດ້, ແຕ່ຖ້າຕົວພະຍາຍົ້ນອາດຈະໄດ້". ເຮັດໃຫ້ພະຍາ ຖືກກົນອຸບາຍຂອງຊຽງໜ້ຽງແລ້ວຄາບລົງໜອງໂດຍບໍ່ຮູ້ສຶກຕົວ.

**3.4 ສິລະປະການໃນສ້າງຂໍ້ຂັດແຍ້ງ**

- ຄູໃຫ້ນັກຮຽນອ່ານພ້ອມກັນທຸກຄົນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ຂໍ້ຂັດແຍ່ງໃນນິທານຊອນຫົວສະແດງອອກແນວໃດ?

2) ການແກ້ໄຂຂໍ້ຂັດແຍ້ງໃນນິທານຊອນຫົວແມ່ນແນວໃດ?

- ຄູໃຫ້ນັກຮຽນຕອບຄຳຖາມດັ່ງກ່າວ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ແລະ ອະທິບາຍເພີ່ມເຕີມດ້ວຍການຍົກນິທານເລື່ອງໃດເລື່ອງໜຶ່ງທີ່ນັກຮຽນໄດ້ຟັງ, ມາອະທິບາຍເຈາະຈີ້ມໃຫ້ເຫັນຄວາມຂັດແຍ້ງໃນນິທານຊອນຫົວເລື່ອງນັ້ນ. ຕົວຢ່າງ: ເລື່ອງຕາບອດຄຳຊ້າງຂໍ້ຂັດແຍ່ງທີ່ສ້າງຂຶ້ນ ແມ່ນຂໍ້ຂັດແຍ່ງລະຫວ່າງຄວາມເປັນຈິງກັບຄວາມບໍ່ເປັນຈິງຄື: ຊາຍຕາບອດຫົກຄົນຊອນກັນໄປເບິ່ງຊ້າງ. ການເບິ່ງແມ່ນມີຄວາມໝາຍວ່າໃຊ້ຕາເບິ່ງແຕ່ຊາຍຕາບອດເບິ່ງຊ້າງຜັດໃຊ້ມືລູບຄຳເອົາ. ດັ່ງນັ້ນ, ການໃຊ້ມືລູບຄຳເວົ້າຖືກຈຸດໃດຈຸດໜຶ່ງຂອງຊ້າງ ແລ້ວກໍສະຫຼຸບຕາມຄວາມຮູ້ສຶກ ຈາກຈຸດໃດຈຸດໜຶ່ງທີ່ໂຕໄດ້ລູບຄຳຈຶ່ງອະທິບາຍຜິດຈາກຄວາມເປັນຈິງເຊັ່ນ: ຜູ້ທີ່ຈັບຖືກຂ້າງຊ້າງກໍບອກວ່າ: ຊ້າງຄືກັບຝາເຮືອນ... ການເວົ້າບໍ່ຖືກຄວາມຈິງນັ້ນກາຍເປັນຕາຢາກຫົວ. ສຽງຫົວຈຶ່ງມີຄວາມໝາຍຕີຕຽນການເວົ້າບໍ່ຖືກຄວາມຈິງຂອງຊາຍຕາບອດທັງຫົກ.

## 4. ภาบสอบวิพาภเลื่อวชุรวพ้รวตอบ "ติอะพะยาลิวพอว"

### 4.1 ภาบแบ่วตอบ

- ลูให้นักธรุบอ่านเลื่อวชุรวพ้รวตอบ " ติอะพะยาลิวพอว"
- ลูตั้วคำถามสิบทะบาภับนักธรุบถืเลื่อวชุรวพ้รวตอบ "ติอะพะยาลิวพอว" แบ่วออภ เป้บจักตอบ, แต่ละตอบมิเบื้อใบเอ้าเถิวหยัว?
- ลูให้นักธรุบตอบคำถามปะมาบ 2-3 ถิบ, ตามลอามเพาะสิม.
- ลูสะพุบ ภาบแบ่วตอบของนักธรุบ และ อะทิบายภาบแบ่วตอบที่เอภะพาบให้แภ่นัก ธรุบดั่วนี้:

เลื่อวชุรวพ้รวตอบ "ติอะพะยาลิวพอว" แบ่วออภเป้บ 3 ตอบถื:

ตอบที1: แต่ติ้บ เถิว ไปบำพ้อม. เบื้อใบตอบนี้เอ้าเถิวพะยาถึดลุดให้ชุรวพ้รวบ่เลิภบ่ แล้อจึ่วชอภหาอิทิหาวเพื่อเอ้าชะบะชุรวพ้รวให้ได้.

ตอบที2: แต่เมื่อได้เอลาแล้อ เถิว อาดชิพ่ติอะได้. เบื้อใบตอบนี้เอ้าเถิวภาบไปท่รอป่าที่ อุดิมสิมบูบ, ใบป่ามิพอวสะใพย่มิบ้ำเต้ม, พะยาได้โอภาดจึ่วบอภให้ชุรวพ้รว ติอะพะยาลิวพอว.

ตอบที3: แต่พะยา เถิว สุดท้าย. เบื้อใบตอบนี้เอ้าเถิวชุรวพ้รวสาบาดพูอภให้พะยา ลิวไปใบพอวได้.

- ลูให้นักธรุบชอภหาเบื้อใบลอามของเลื่อวโดยอิวใส่เบื้อใบของแต่ละตอบเพื่อสะพุบ เป้บเบื้อใบลอาม.
- ลูให้นักธรุบสะแดวลอามลิดเห็บปะมาบ 3-4 ถิบ.
- ลูสะพุบลอามลิดเห็บของนักธรุบ, พ้อมทั้วตอบคำถามแภ่นักธรุบดั่วนี้:

เลื่อวชุรวพ้รวตอบ "ติอะพะยาลิวพอว" มิเบื้อใบลอามเอ้าเถิวลอามสะพูรอสะพาด ของวชุรวพ้รวที่สาบาดติอะพะยาลิวไปใบพอวได้.

### 4.2 สิละปะภาบแต่วนิทาบเลื่อวชุรวพ้รวตอบ "ติอะพะยาลิวพอว"

- ลูให้นักธรุบอ่านเลื่อวชุรวพ้รวตอบ "ติอะพะยาลิวพอว" พ้อมทั้วชอภหาสรววหิอ และ ลอามพายของสรววหิอตามคำถามลุ่มนี้:

1) สรววหิอใบนิทาบชอบหิอเลื่อวชุรวพ้รวตอบ "ติอะพะยาลิวพอว" แม่บหิอหยัว?

2) สรววหิอมิลอามพายสรดสิ และ ก่าอปะบามภาบภะทำผิดของใผ?

- ลูให้นักธรุบตอบคำถามตามลอามเพาะสิม.
- ลูสะพุบคำตอบของนักธรุบ พ้อมทั้วสะเพิ่คำตอบที่เป้บเอภะพาบแภ่นักธรุบดั่วนี้:

ໃນເລື່ອງຊຽງໜ້ຽງຕອນ "ຕົວະພະຍາລົງໜອງ" ແມ່ນຫົວພະຍາຖືກຊຽງໜ້ຽງຫຼອກລົງໜອງ. ສຽງຫົວດັ່ງກ່າວມີຄວາມໝາຍສຽດສີໂຈມຕີແນວຄິດ ແລະ ການກະທຳທີ່ໂງ່ຈ້າຂອງພະຍາທະລາວະດີ.

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ເຫດການໂດຍບັງເອີນທີ່ເກີດຂຶ້ນເລື່ອງນີ້ແມ່ນຫຍັງ?

2) ການແກ້ໄຂເຫດການໂດຍບັງເອີນນັ້ນແນວໃດ?

- ຄູໃຫ້ນັກຮຽນຕອບຕາມຄວາມເໝາະສົມ.

- ຄູສະຫຼຸບຄຳຕອບຂອງນັກຮຽນ ແລະ ສະເໜີຄຳຕອບທີ່ຖືກຕ້ອງແກ່ນັກຮຽນຄື: ເຫດການໂດຍບັງເອີນທີ່ເກີດຂຶ້ນໃນເລື່ອງນີ້ແມ່ນພະຍາເຫັນໜອງສະໃຫຍ່ມີນ້ຳອັ່ງເຕັມກໍຄິດຢາກເອົາຊະນະຊຽງໜ້ຽງຈຶ່ງກ່າວຂຶ້ນວ່າ "ຊຽງໜ້ຽງຖ້າມຶງເກັ່ງແທ້ມຶງຕົວະກູລົງໄປໃນໜອງແມ!" ຊຽງໜ້ຽງແກ້ໄຂທັນເຫດການຄື "ຕົວະອາດຍາລົງໜອງບໍ່ຊ່າງຊິຕົວະແຕ່ຖ້າພະຍາລົງໄປແລ້ວຕົວະໃຫ້ຂຶ້ນນັ້ນບາງເທື່ອພໍຕົວະໄດ້".

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ຂໍ້ຂັດແຍ້ງສະແດງອອກໃນເລື່ອງຊຽງໜ້ຽງຕອນ "ຕົວະພະຍາລົງໜອງ" ບ່ອນໃດ?

2) ການແກ້ໄຂຂໍ້ຂັດແຍ້ງຕອນນີ້ແນວໃດ?

- ຄູໃຫ້ນັກຮຽນຕອບຄຳຖາມປະມານ 2-3 ຄົນຕາມຄວາມເໝາະສົມ.

- ຄູສະຫຼຸບຄຳຕອບຂອງນັກຮຽນ ພ້ອມທັງສະເໜີຄຳຕອບທີ່ຖືກຕ້ອງແກ່ນັກຮຽນດັ່ງນີ້:

ຂໍ້ຂັດແຍ້ງສະແດງອອກໃນເລື່ອງຊຽງໜ້ຽງຕອນ "ຕົວະພະຍາລົງໜອງ" ແມ່ນຂໍ້ຂັດແຍ້ງລະຫວ່າງພະຍາກັບຊຽງໜ້ຽງ ຊຶ່ງພະຍາມີປັນຍາບໍ່ທັນຊຽງໜ້ຽງ. ດັ່ງນັ້ນ, ການແກ້ໄຂຂໍ້ຂັດແຍ້ງໃນຕອນນີ້ແມ່ນພະຍາທະລາວະດີເປັນຜູ້ປະລາໄຊ, ຊຽງໜ້ຽງເຊິ່ງເປັນປະຊາຊົນທຳມະດາເປັນຜູ້ໄດ້ຮັບໄຊຊະນະ.

## 5. ການສອນຮຽນສະຫຼຸບເຫດການໃນເລື່ອງຊຽງໜ້ຽງຕອນ "ຕົວະພະຍາລົງໜອງ"

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ.

- ຄູແນະນຳນັກຮຽນແຕ່ລະກຸ່ມອ່ານເລື່ອງຊຽງໜ້ຽງຕອນ "ຕົວະພະຍາລົງໜອງ" ແລ້ວຕອບຄຳຖາມດັ່ງນີ້: ເຫດການທີ່ສຳຄັນໃນເລື່ອງມີຈັກເຫດການຄືເຫດການໃດແດ່?

- ຄູໃຫ້ຕາງໜ້າກຸ່ມລາຍງານຜົນຂອງການຄົ້ນຄ້ວາ.

- ຄູສັງເກດການລາຍງານຂອງນັກຮຽນແຕ່ລະກຸ່ມ ແລ້ວສະຫຼຸບການລາຍງານຂອງແຕ່ລະກຸ່ມ.

- ຄູອະທິບາຍ ແລະ ຕອບຄຳຖາມໃຫ້ແກ່ນັກຮຽນລຸ່ມນີ້:

+ ເຫດການທີ1: ພະຍາທະວາລາວະດີຫາວິທີເອົາຊະນະຊຽງໜ້ຽງດ້ວຍການພາເສນາອາມາດ ແລະ ຊຽງໜ້ຽງໄປທ່ຽວປ່າ.
+ ເຫດການທີ2: ພະຍາເຫັນໜອງສະໃຫຍ່ມີນ້ຳອັ່ງເຕັມ ພະຍາອອກຄຳສັ່ງໃຫ້ຊຽງໜ້ຽງຕົວະພະຍາລົງໜອງ.
+ ເຫດການທີ3: ຊຽງໜ້ຽງຕອບວ່າ: "ຕົວະອາດຍາລົງໜອງບໍ່ຊ່ວງຊີຕົວະ, ຖ້າວ່າພະຍາລົງໄປແລ້ວຕົວະຂຶ້ນບາງເທື່ອພໍຊີຕົວະໄດ້!"
+ ເຫດການທີ4: ພະຍາລົງໄປໃນໜອງແລ້ວບອກຊຽງໜ້ຽງຕົວະຂຶ້ນ, ຊຽງໜ້ຽງຫົວຍຸ້ມພ້ອມທັງຕອບວ່າ: "ຕົວະລົງໄປແລ້ວເດຊີຂຶ້ນ ຫຼື ບໍ່ຂຶ້ນກໍຕາມມໃຈເນີ".

## 6. ການສອນສະແດງລະຄອນເລື່ອງຊຽງໜ້ຽງຕອນ "ຕົວະພະຍາລົງໜອງ"

- ຄູຈັດກຸ່ມນັກຮຽນຕາມຕົວລະຄອນຂອງບົດເລື່ອງ.
- ຄູມອບໜ້າທີ່ໃຫ້ນັກຮຽນແຕ່ລະຄົນສະແດງເປັນຕົວລະຄອນໃນເລື່ອງໃຫ້ຄົບຄື:

1) ຜູ້ໜຶ່ງສະແດງເປັນພະຍາ.
2) ຜູ້ໜຶ່ງສະແດງເປັນຊຽງໜ້ຽງ.
3) ນັກຮຽນແມ່ຍິງປະມານ 4-5 ຄົນສະແດງເປັນສາວສະໜົມ.
4) ນັກຮຽນຜູ້ຊາຍ 4-5 ຄົນສະແດງເປັນເສນາອາມາດ.
5) ຜູ້ໜຶ່ງສະແດງເປັນມ້າໃຫ້ພະຍາຂີ່.
6) ຄູເຮັດຮູບຈຳລອງໜອງ.

- ຄູແນະນຳໃຫ້ຜູ້ສະແດງຕ້ອງທ່ອງຄຳເວົ້າ, ທ່າທີ ແລະ ຂັ້ນຕອນຂອງຕົວລະຄອນທີ່ຕົນສະແດງໃຫ້ລະອຽດ.
- ຄູແນະນຳໃຫ້ນັກຮຽນກຸ່ມນັ້ນຝຶກການສະແດງກ່ອນແລ້ວຈຶ່ງຂຶ້ນສະແດງໃນຫ້ອງ.
- ຄູສະຫຼຸບຕຳນິຕິຊົມການສະແດງຂອງນັກຮຽນ ແລະ ແນະນຳການສະແດງເພີ່ມຕື່ມ.

## 7. ກິດຈະກຳເສີມ

ຫຼັງຈາກຄູສອນເນື້ອໃນ ແລະ ວິພາກນິທານຊອນຫົວແລ້ວ ຄູຄວນຈັດກິດຈະກຳນ້ອຍຫຼາຍຢ່າງໃນຫ້ອງເພື່ອທົດສອບຄວາມຮູ້, ຄວາມຈື່ຈຳເນື້ອໃນຂອງບົດຮຽນບົດທີ5 ນິທານຊອນຫົວດັ່ງນີ້:

ຄູໃຫ້ນັກຮຽນຄົ້ນຄ້ວາບົດຮຽນແລ້ວເຮັດລາຍງານເປັນກຸ່ມ.

- ຄູຈັດກຸ່ມນັກຮຽນໃນຫ້ອງຮຽນ ຕາມຄວາມເໝາະສົມ.
- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄ້ວາບົດຮຽນຕາມຫົວຂໍ້ຂອງບົດຮຽນ ແລ້ວຂຶ້ນນຳສະເໜີ

ຊຶ່ງມີສອງວິທີຄື:

+ ຄູໃຫ້ຄຳຖາມແກ່ນັກຮຽນຕາມຫົວຂໍ້ຂອງບົດຮຽນທີ່ໄດ້ຮຽນມາດ້ວຍຄຳຖາມເອກະພາບກັນ ເຊັ່ນ: ຄົ້ນຄ້ວາຄວາມໝາຍ, ການກຳເນີດການຂະຫຍາຍຕົວ, ເນື້ອໃນ ແລະ ສິລະປະການແຕ່ງ ຂອງນິທານຊວນຫົວ.

+ ຄູໃຫ້ຄຳຖາມແກ່ນັກຮຽນ ແຕ່ລະກຸ່ມແຕກຕ່າງກັນຄື: ກຸ່ມໜຶ່ງຄົ້ນຄ້ວາຄວາມໝາຍ, ກຸ່ມໜຶ່ງ ຄົ້ນຄວ້າການກຳເນີດການຂະຫຍາຍຕົວ, ກຸ່ມໜຶ່ງຄົ້ນຄ້ວາເນື້ອໃນ ແລະ ອີກກຸ່ມໜຶ່ງຄົ້ນຄວ້າ ສິລະປະການແຕ່ງ ນິທານຊວນຫົວ.

- ຄູໃຫ້ຕາງໜ້າກຸ່ມຂຶ້ນລາຍງານຜົນການຄົ້ນຄ້ວາເນື້ອໃນຂອງບົດຮຽນ.
- ຄູສະຫຼຸບການຂຶ້ນລາຍງານຂອງນັກຮຽນ ພ້ອມທັງທົບທວນຈຸດສຳຄັນຂອງບົດຮຽນຄືນອີກເທື່ອໜຶ່ງ.

## ✱ ຕອບຄຳຖາມທ້າຍບົດ

(1) ນິທານຊວນຫົວ ແມ່ນນິທານພື້ນເມືອງທີ່ແຕ່ງຂຶ້ນດ້ວຍຈຸດປະສົງໃຫ້ຜູ້ອ່ານ, ຜູ້ຟັງເກີດມີສຽງຫົວເພື່ອຢອກໂຍ້ມ່ວນຊື່ນ, ເຢາະເຢີ້ຍ, ສຽດສີ ແລະ ກ່າວປະນາມການກະທຳທີ່ຜິດພາດຂອງຄົນທຸກຊັ້ນຄົນໃນສັງຄົມ.

2) ນິທານຊວນຫົວມີກົກເຄົ້າມາຈາກການອອກແຮງງານ, ການດຳລົງຊີວິດປະຈຳວັນຂອງປະຊາຊົນຜູ້ອອກແຮງງານເຊິ່ງໃນຊີວິດປະຈຳວັນຂອງປະຊາຊົນ ມີຄົນທີ່ກະທຳຜິດຕໍ່ຮີດຄອງປະເພນີຂະນົບທຳນຽມ, ມີແນວຄິດ ແລະ ການກະທຳທີ່ບໍ່ດີ. ປະຊາຊົນໄດ້ຍົກເອົາເຫດການທີ່ຜິດພາດຕ່າງໆ ຂອງປະຊາຊົນຜູ້ອອກແຮງງານນັ້ນມາເລົ່າສືບກັນມາ ແລ້ວກາຍເປັນນິທານຊວນຫົວ.

ນອກຈາກນີ້, ນິທານຊວນຫົວຍັງກຳເນີດ ແລະ ຂະຫຍາຍຕົວແຮງໃນລະບອບສັງຄົມທີ່ມີຊົນຊັ້ນປົກຄອງ. ຊົນຊັ້ນປົກຄອງໄດ້ເປັນຜູ້ມີອຳນາດບາດໃຫຍ່ຍິ່ມຢູ່, ບັງຄັບ ແລະ ກົດຂີ່ຂູດຮີດປະຊາຊົນ ຜູ້ອອກແຮງງານ ສ່ວນຄູບາອາຈານເຊິ່ງເປັນຕົວແທນໃຫ້ແກ່ສາສະໜາພຸດ, ເປັນຜູ້ນຳພາປະຊາຊົນປະຕິບັດຕາມຫຼັກທຳຂອງພຸດທະສາສະໜາ ແຕ່ຄູບາຈຳນວນໜຶ່ງຝ່າຝືນບໍ່ປະຕິບັດຕາມຫຼັກທຳຄຳສອນຂອງພຸດທະສາສະໜາຄື: ມັກຫຼີ້ນຊູ້ຊູ່ເມຍທ່ານ, ຂາດຄວາມເມດຕາ, ຂີ້ຖີ່ຈັງໄຮຈຶ່ງເຮັດໃຫ້ປະຊາຊົນຍົກເອົາຄວາມຜິດພາດດັ່ງກ່າວ ນັ້ນມາເລົ່າສູ່ກັນຟັງຈາກຜູ້ນີ້ຕໍ່ຜູ້ອື່ນ ແລະ ເລົ່າຕໍ່ໆກັນມາກໍກາຍເປັນນິທານຊວນຫົວ.

3) ນິທານຊວນຫົວມີເນື້ອໃນສ່ອງແສງທຸກແນວຄິດ ແລະ ການກະທຳທີ່ຜິດພາດຂອງປະຊາຊົນຜູ້ອອກແຮງງານ, ຄູບາອາຈານ, ພໍ່ຄ້າຊາວຂາຍ ແລະ ຊົນຊັ້ນປົກຄອງເຊັ່ນ: ແນວຄິດຂີ້ຖີ່,

ແນວຄິດຂີ້ຄ້ານ, ແນວຄິດໂລບມາກໂລພາ, ແນວຄິດຕີ້ດ້ານ, ບໍ່ປະຕິບັດຕໍ່ຮີດຄອງຕ່າງໆ. ນິທານຊອນຫົວເພິ່ນໄດ້ໃຊ້ສິລະປະການແຕ່ງຫຼາຍຮູບແບບຄື: ໃຊ້ສິລະປະສຽງຫົວ, ການເວົ້າໂຍກ, ເຫດການໂດຍບັງເອີນ ແລະ ໃຊ້ສິລະປະຂໍ້ຂັດແຍ່ງ.

* ຄູແນະນຳໃຫ້ນັກຮຽນຄົ້ນຄວ້າບົດໃໝ່.


## V. ການວັດ ແລະ ປະເມີນຜົນ

ສັງເກດຈາກ:

- ການອະທິບາຍຄວາມໝາຍຂອງນິທານຊອນຫົວ.
- ການອະທິບາຍການກຳເນີດ ແລະ ຂະຫຍາຍຕົວຂອງນິທານຊອນຫົວ.
- ການອະທິບາຍເນື້ອໃນການສ່ອງແສງຂອງນິທານຊອນຫົວ.
- ການອະທິບາຍສິລະປະການແຕ່ງນິທານຊອນຫົວ.

ກວດຜົນງານຈາກ:

- ການວິພາກເລື່ອງຊຽງໜ້ຽງຕອນ "ຕົວະພະຍາລົງໜອງ"
- ການຂຽນສະຫຼຸບເຫດການເລື່ອງຊຽງໜ້ຽງຕອນ "ຕົວະພະຍາລົງໜອງ"
- ການສະແດງລະຄອນເລື່ອງ "ສາມສ່ຽວໄປລັກໄກ່"



ຊຽງໜ້ຽງຕົວະພະຍາລົ້ງໜອງ

## ບົດອ່ານເພີ່ມ
## ນິທານຊຽງໜ້ຽງ
### ຕອນ: ການຖືກຫົວເຮືອນ

ມື້ໜຶ່ງ, ແມ່ນມື້ທີ່ການຖືກຫົວເຮືອນຊຽງໜ້ຽງ. ເມື່ອການຖືກຫົວເຮືອນໃຜແລ້ວຜູ້ນັ້ນຕ້ອງເຂົ້າໄປໃນວັງແຕ່ເຊົ້າເພື່ອລໍຖ້າຮັບໃຊ້ວຽກງານລາຊະການຕາມຄຳສັ່ງຂອງພະຍາເມືອງ. ມື້ນັ້ນດວງຕາເວັນໃກ້ຊິທ່ຽງແລ້ວແຕ່ພະຍາກໍບໍ່ທັນເຫັນຊຽງໜ້ຽງເຂົ້າມາໃນວັງ, ພະຍາຈຶ່ງແຕ່ງເສນາໄປຖາມເບິ່ງວ່າເປັນຫຍັງຊຽງຈຶ່ງບໍ່ໄປຮັບການຕາມຜຽນ, ເສນາໄປຮອດເຮືອນຊຽງໜ້ຽງ ກໍໄດ້ເຫັນຊຽງງອຍຢູ່ເທິງຫຼັງຄາເຮືອນໂຕດໂປດຢູ່ພ້ອມທັງຈັບໄມ້ຖໍ່ເວີດວາດໆຢູ່. ເສນາເຫັນຈຶ່ງຮ້ອງຂຶ້ນໄປໃສ່ວ່າ:

"ຊຽງເອີຍ! ມື້ນີ້ການຖືກຫົວເຮືອນຊຽງ, ຊຽງຮູ້ແລ້ວບໍ່?"

"ຮູ້ແລ້ວ"

"ຮູ້ແລ້ວເປັນຫຍັງບໍ່ໄປຮັບການຕາມຜຽນ?"

"ກໍຍ້ອນວ່າການຖືກຫົວເຮືອນນີ້ແລ້ວຈຶ່ງບໍ່ໄດ້ໄປ!"

"ເປັນຫຍັງຈຶ່ງເວົ້າແນວນັ້ນ"

"ຕັ້ງແຕ່ເຊົ້າໆພຸ້ນທີ່ຂ້ອຍໄດ້ຂຶ້ນມາຖໍ່ໃຫ້ເຮືອນໄປຮັບຫົວການ, ແຕ່ມັນກໍບໍ່ຮ້ອນບໍ່ເຄືອງຫຍັງໝົດ, ຂ້ອຍກໍຈົນປັນຍາ"

" ເຖິງຈະວ່າດ່າປ້ອຍແນວໃດ ມັນກໍບໍ່ໄປ, ຈັກຊິໃຫ້ຂ້ອຍເຮັດແນວໃດ?"

ເສນາຮູ້ແນວນັ້ນແລ້ວກໍກັບເມືອລາຍງານຕໍ່ພະຍາເມືອງ. ພະຍາເມືອງໃຈຮ້າຍຈຶ່ງຮຽກຊຽງໜ້ຽງເຂົ້າເຝົ້າອີກເທື່ອໜຶ່ງ, ເມື່ອຊຽງໜ້ຽງໄປຮອດພະຍາກໍເວົ້າຂຶ້ນວ່າ:

"ຊຽງເອີຍ! ມື້ອື່ນຈະມີວຽກເຮັດທາງອອກໄປສູ່ບ້ານນອກຄອກຄາເມ, ໃຫ້ຊຽງໜ້ຽງໄປປ່າວເຕືອນທຸກຄົນກະກຽມເຄື່ອງຂອງຄົບຊຸດ ແລະ ອາຫານການກິນທຸກຢ່າງເພື່ອອອກໄປຕັດທາງ, ໃນເທື່ອນີ້ແມ່ນມອບໃຫ້ຊຽງເປັນຫົວໜ້ານຳພາໝູ່, ເມື່ອໃດວຽກສຳເລັດຈຶ່ງກັບມາ".

ພະຍາເຮັດແນວນັ້ນກໍເພື່ອເປັນການລົງໂທດຊຽງໜ້ຽງ. ຝ່າຍຊຽງໜ້ຽງກໍໄດ້ປ່າວປະກາດຕາມຄຳສັ່ງຂອງພະຍາ. ຫຼັງຈາກນັ້ນ, ຊຽງກໍກັບເມືອເຮືອນແລ້ວຈັບເອົາໄກ່ຜູ້ໂຈ້ນໂຕໜຶ່ງມາຫຼົກຂົນທັງເປັນແລ້ວກໍເອົາໃບຕອງກ້ວຍໄປຕົ້ມໃຫ້ໝາດ, ຈາກນັ້ນເອົາໃບຕອງກ້ວຍມາຫໍ່ໄກ່ໂຕນັ້ນໄວ້. ຊຽງໄດ້ສານກວຍໃຫຍ່ໜ່ວຍໜຶ່ງເພື່ອໃສ່ຂອງໄປແຮທາງ. ຕອນເຊົ້າມື້ໃໝ່, ຊຽງກໍໄດ້ເອົາໝົກໄກ່ໂຕນັ້ນໃສ່ກວຍ

ໄປຫາໝູ ແລະ ຮອດບ່ອນນັດໝາຍນຳຫຼັງໝູ. ເມື່ອທຸກສິ່ງຢ່າງກຽມພ້ອມໝົດແລ້ວຊຽງກໍໄດ້ອອກຄຳສັ່ງໃຫ້ທຸກຄົນອອກເດີນທາງໄປເຮັດວຽກ. ເມື່ອຮອດເວລາກິນເຂົ້າ ຊຽງກໍໄດ້ບອກໝູ່ພັກຜ່ອນກິນເຂົ້າເສຍກ່ອນ ແລ້ວຈຶ່ງພາກັນໄປ. ຊຽງໄດ້ຈັບເອົາໝົກໄກ່ໂຕນັ້ນອອກມາ ແລະ ໄຂຫໍ່ໝົກອອກ, ໄກ່ຜູ້ໂຈ້ນໂຕນັ້ນກໍເຕັ້ນດິ້ງອອກຈາກໝົກ,ເວລານັ້ນ,ຊຽງໜ້ຽງກໍຕິເຮັດວ່າຕາຕີ່ຕາລານແລ້ວເວົ້າຂຶ້ນວ່າ:

"ໂອຍ! ຕາຍແລ້ວ! ຕາຍແລ້ວ! ສັງມາເປັນແນວນີ້ເດ! ໄກ່ໂຕນີ້ຟັກຢ່າງລະອຽດຈົນວ່າມຸ່ນແລະ ຜັກບົ່ວຫົວຫອມກໍໄດ້ໃສ່ຈົນຄົບພ້ອມທັງໄດ້ໜຶ້ງຈົນສຸກຄັກແນ່! ເຮັດແນວໃດຈຶ່ງວ່າກັບຄືນມາເປັນໂຕໄດ້ອີກ? ມັນຈະເປັນລາງຮ້າຍ ຫຼື ວ່າມີເຫດຮ້າຍເກີດຂຶ້ນພາຍໃນເຮືອນຊານເສຍບໍ?"

ເມື່ອໝູ່ຄູ່ທຸກຄົນເຫັນແນວນັ້ນ ກໍຄິດວ່າຢ້ານມີເຫດຮ້າຍເກີດຂຶ້ນຢູ່ກັບຄອບຄົວເຮືອນຊານຂອງຊຽງໜ້ຽງ. ເຂົາເຈົ້າຈຶ່ງເຫັນດີນຳກັນວ່າໃຫ້ຊຽງໜ້ຽງກັບຄືນເມືອເຮືອນຂອງຕົນເພາະຢ້ານຈະມີເຫດຮ້າຍເກີດຂຶ້ນ, ໃຜໆກໍງຶດວ່າ:ໄກ່ຟັກຈົນມຸ່ນແລ້ວເອົາໄປໝົກກໍຈົນວ່າໃບຕ້ອງກ້ວຍໝາດເຮັດແນວໃດຈຶ່ງກັບຄືນເປັນໂຕໄດ້ຄືເກົ່າ. ສະນັ້ນ, ຊຽງໜ້ຽງຈຶ່ງໄດ້ກັບຄືນເຮືອນຂອງຕົນ ແລະ ບໍ່ໄດ້ຖືກລົງໂທດແຕ່ປະການໃດເລີຍ.

## ນິທານ ຊຽງໜ້ຽງ
## ຕອນ ຕົວະຊຽງຍານດົ່ມຕົດ

ຊຽງຍານແມ່ນລູກຂອງເຈົ້າພະຍາມະຫາກະສັດຜູ້ໜຶ່ງ, ເຊິ່ງເປັນຄົນທີ່ມີຄວາມຮູ້ຄວາມສາມາດໃນການເວົ້າຈາປາໄສ. ຊຽງຍານໄດ້ຮູ້ຂ່າວຄາວການເຄື່ອນໄຫວຂອງຊຽງໜ້ຽງປົກກະຕິ, ຮູ້ວ່າຊຽງໜ້ຽງເປັນຄົນສະຫຼາດບໍ່ມີໃຜທຽບທັນໄດ້. ຊຽງຍານຮູ້ສຶກຕ່ຳຄ້ອຍນ້ອຍໃຈ ແລະ ຄຽດຊັງຊຽງໜ້ຽງຫຼາຍເພາະຊຽງໜ້ຽງໄດ້ຮັບຄຳຊ່ຳລືວ່າ ເປັນຄົນສະຫຼາດຫຼາຍກວ່າຕົນ. ສະນັ້ນ, ຊຽງຍານຈຶ່ງໄດ້ຊອກຫາທຸກວິທີເພື່ອໃຫ້ຊຽງໜ້ຽງເສຍຊື່ສຽງ.

ໃນທີ່ສຸດ, ຊຽງຍານກໍຄິດຫາວິທີເອົາຊະນະຊຽງໜ້ຽງ, ເພື່ອໃຫ້ຊຽງໜ້ຽງເສຍຊື່ສຽງຄື: ຊຽງຍານໄດ້ສະສົມຕົດຕົນເອງໃສ່ກະບັ້ງໄວ້ ເພື່ອຊິໄປຕົວະໃຫ້ຊຽງໜ້ຽງດົ່ມ. ເມື່ອໄດ້ໂອກາດແລ້ວ, ຊຽງຍານກໍໄດ້ພາຍບັ້ງຕົດໄປຫາຊຽງໜ້ຽງ. ພໍແຕ່ໄປຮອດ, ຊຽງໜ້ຽງກໍທ້ວງຂຶ້ນກ່ອນໂລດວ່າ:

"ຕາຍ! ອັນນີ້ຫວະບັ້ງຕົດ!"

"ອື! ອັນນີ້ແລ້ວ!"

"ເປັນຫຍັງຄືວ່າສັ້ນແທ້?"

"ສັ້ນ ແຕ່ຂ້ອຍໄດ້ອັດແຈບໄວ້ຢ່າງດີທີ່ສຸດແລ້ວ!"

"ເຈົ້າອັດໄວ້ດົນປານໃດ?"

"ໄດ້ 7 ມື້ ແລ້ວ"

"ຕາຍຜູ້ໃດເຄີຍອັດລົມອັດຕົດໄວ້ຮອດ 7 ມື້ 8 ມື້ ທຳມະດາແລ້ວຕົດເຮົານີ້ບໍ່ຜ່ຄາວມັນກໍເຫີຍໃດ! ຂ້ອຍວ່າມັນຄືຊິເຫີຍໝົດແລ້ວ, ຕັ້ງວ່າຕົດໄວ້ຮອດ 7, 8 ມື້ຜຸ້ນ, ມັນກໍແຮ່ງຊິບໍ່ມີຮອດກິ່ນຜຸ້ນແລ້ວ".

ເມື່ອໄດ້ຍິນຊຽງໜ້ຽງເວົ້າແນວນັ້ນ, ຊຽງຍານກໍເລີ່ມເກີດມີຄວາມບໍ່ແນ່ໃຈຈຶ່ງໄດ້ເວົ້ານຳຊຽງໜ້ຽງວ່າ:

"ເຮັດແນວໃດຈຶ່ງຊິຮູ້ວ່າ ມັນເຫີຍ ຫຼື ບໍ່ເຫີຍ"

"ໂຕກໍລອງໄຂອອກແລ້ວດົມເບິ່ງ, ຄັນວ່າມັນຍັງມີກິ່ນເຮົາຊິດົມໃຫ້ໝົດດອກ"

ຊຽງຍານກໍໄຂປັ້ງຕົດແລ້ວກົ້ມລົງດົມ, ກິ່ນຕົດໄດ້ຫູບເຂົ້າດັງຊຽງຍານຈົນວ່າສະມັກຄັກແຄ້ນ. ເມື່ອເຫັນເປັນແນວນັ້ນ ຊຽງໜ້ຽງຈຶ່ງເວົ້າຂຶ້ນວ່າ:

"ເວລານີ້ ຕົດມັນຄືຊິເຫີຍໝົດແລ້ວນໍ ຊຽງຍານເອີຍ!"

ຊຽງຍານປາກບໍ່ອອກເພາະຖືກຊຽງໜ້ຽງຕົວະໃຫ້ດົມຕົດຕົນເອງ. ຈາກນັ້ນ, ໜ້າຍ່າງກັບຄືນເຮືອນ ຂອງຕົນດ້ວຍຄວາມແຄ້ນເຄືອງ ແລະ ລະອາຍໃຈຫາອັນປຽບບໍ່ໄດ້.

## ນິທານຊຽງໜ້ຽງ

## ຕອນ: ຊຽງໜ້ຽງຕາຍ

ໃນບັ້ນທ້າຍຂອງຊີວິດຊຽງໜ້ຽງນັ້ນ, ຊຽງໜ້ຽງໄດ້ຮູ້ໂຕວ່າຕົນເອງຈະຕາຍເພາະບໍ່ມີທາງ ແກ້ແຕ່ເຖິງຈະຕາຍກໍຕ້ອງຕາຍແບບມີກຽດ, ຕ້ອງຕາຍໃຫ້ສັດຕູຂອງຕົນຕາຍນຳ.

ຫຼັງຈາກໄດ້ເສຍໄຊແບບອັບອາຍຂາຍໜ້າໃຫ້ແກ່ຊຽງໜ້ຽງມາຫຼາຍເທື່ອແລ້ວ, ພະຍາກໍຄິດຫາວິທີກຳຈັດຊຽງໜ້ຽງໂດຍກົງ, ບໍ່ເຮັດແບບປິດບັງທາງອ້ອມຄືແຕ່ເກົ່າເມືອຫຼັງອີກ. ພະຍາໄດ້ເຊີນຊຽງໜ້ຽງໄປກິນເຂົ້າຢູ່ລາຊະສຳນັກ, ໂດຍສະເໜີວ່າເປັນການລ້ຽງສະຫຼອງ ແລະ ບູຊາຄວາມຮູ້ຄວາມສາມາດຂອງຊຽງໜ້ຽງ.

ພະຍາໄດ້ແຕ່ງໃຫ້ເສນາອາມາດແຕ່ງອາຫານການກິນຢ່າງຫຼວງຫຼາຍ ແລະ ມີແຕ່ອາຫານທີ່ແຊບນົວທີ່ສຸດ, ແຕ່ໃຫ້ເອົາງ້ວນໃສ່ໃນອາຫານ ແລ້ວໃຫ້ຄົນໄປເຊີນເອົາຊຽງໜ້ຽງມາກິນ. ເວລານີ້ຊຽງ

ຮູ້ສຶກຕົນວ່າຕົນຈະຕ້ອງຖືກພະຍາເບື່ອ ແຕ່ກໍຕ້ອງຮັກສາກຽດຈຶ່ງຮັບຄຳເຊີນຂອງພະຍາເມືອງ, ເມື່ອ ຊຽງໜ້ຽງໄປຮອດແລ້ວ ພະຍາກໍໄດ້ພາຊຽງໜ້ຽງກິນເຂົ້າທັນທີ:

"ໂອ! ມາຮອດແລ້ວຫວະ! ເຊີນເລີຍ! ເຊີນຕາມສະບາຍເລີຍ! ທຸກຢ່າງກຽມພ້ອມໝົດແລ້ວ!"

"ຂ້ານ້ອຍຂໍຂອບພະເດດພະຄຸນນຳພໍ່ພະຍາຫຼາຍໆ"

"ເອີນາ! ບໍ່ເປັນຫຍັງດອກ! ຖືວ່າເປັນການບູຊາພູມຄວາມຮູ້ຂອງຊຽງກໍແລ້ວກັນ"

"ພໍ່ພະຍາເດ! ບໍ່ຊົງສະເຫວີຍຄູ່ຂ້ານ້ອຍແດ່ບໍ?"

"ເອີໆ! ເຮົາກໍຈະສະເຫວີຍຮ່ວມເຈົ້າຄືກັນ". ເວົ້າສຸດພະຍາກໍນັ່ງລົງໃນບ່ອນທີ່ໄດ້ກະກຽມໄວ້ ສະເພາະຕົນເອງແລ້ວ. ການກິນເຂົ້າກໍໄດ້ເລີ່ມຕົ້ນ ແລະ ດຳເນີນໄປຕາມທີ່ພະຍາໄດ້ກະກຽມໄວ້. ຫຼັງ ຈາກກິນເຂົ້າແລ້ວ, ຊຽງໜ້ຽງກໍກັບຄືນເມືອເຮືອນຂອງຕົນ. ຊຽງໄດ້ເວົ້າກັບເມຍຂອງຕົນວ່າ:

"ຫາກຂ້ອຍຕາຍໄປ, ເຈົ້າຢ່າຟ້າວຮ້ອງຟ້າວໄຫ້ເດີ! ໃຫ້ເຈົ້າເອົາຂ້ອຍນັ່ງໄວ້ ແລ້ວເອົາແວ່ນ ຕາມາໃສ່ຕາໃຫ້ຂ້ອຍເຮັດໃຫ້ໜ້າຂອງຂ້ອຍກົງກັບໜັງສືນັ້ນ, ເອົາແມງໄມ້ມາມັດຕິດໄວ້ຢູ່ເທິງຫົວ ຂອງຂ້ອຍ, ເຮັດຄືກັບວ່າບໍ່ມີຫຍັງຜິດປົກກະຕິ"

ພໍແຕ່ເວົ້າສຸດຄວາມຜິດຂອງງ້ວນກໍສະແດງລິດຂອງມັນອອກ, ຊຽງໜ້ຽງໄດ້ຕາຍຕາມການ ຄາດກະຂອງລາວ. ຫຼັງຈາກຕາຍແລ້ວ, ຜູ້ເປັນເມຍກໍໄດ້ປະຕິບັດຕາມຄຳແນະນຳຂອງຜົວຕົນທຸກໆປະ ການ. ຝ່າຍພະຍາເມືອງກໍໄດ້ຕິດຕາມຜົນຂອງການວາງງ້ວນຄັ້ງນັ້ນດ້ວຍຄວາມຕັ້ງໃຈ. ມື້ຕໍ່ມາພະຍາ ໄດ້ເອີ້ນເສນາຊັ້ນຈຳເຂົ້າພົບ ແລ້ວສັ່ງວ່າ:

"ໃຫ້ທ່ານເສນາໄປຕິດຕາມເບິ່ງບັກຊຽງໜ້ຽງເບິ່ງດູ, ມັນຕາຍແລ້ວບໍ, ຮາໆໆ".

"ມີແຕ່ທໍ່ນັ້ນບໍ! ເຈົ້າກູເອີຍ!"

"ເອີ! ຍັງມີບັນຫາໜຶ່ງທີ່ຕ້ອງລະວັງ!"

"ແມ່ນຫຍັງອີກນໍ!"

"ເວລາທີ່ທ່ານໄປນັ້ນ ບໍ່ໃຫ້ໃຜຮູ້ໃຜເຫັນເປັນອັນຂາດ"

"ໂດຍຂ້ານ້ອຍ"

ຫຼັງຈາກນັ້ນແລ້ວ, ເສນາຜູ້ນັ້ນກໍໄປຕິດຕາມເບິ່ງສະພາບການເຄື່ອນໄຫວຢູ່ເຮືອນຊຽງໜ້ຽງ ແລະ ເຫັນວ່າສະພາບການຢູ່ໃນສະພາບປົກກະຕິ; ເມຍຂອງຊຽງໜ້ຽງກໍຍັງຍິ້ມແຍ້ມແຈ່ມໃສເວົ້ານິວຫົວ ມ່ວນກັບທຸກຄົນ, ຊຽງໜ້ຽງກໍນັ່ງໃສ່ແວ່ນຕາອ່ານໜັງສືດັງຮຶໆຢູ່ເສີຍ. ເມື່ອເປັນແນວນັ້ນແລ້ວເສນາ ກໍກັບຄືນມາລາຍງານສະພາບຕາມຄວາມເປັນຈິງທີ່ຕົນໄດ້ຝົບຕໍ່ພະຍາ ແລະ ໄດ້ທູນວ່າ:

"ທຸກສິ່ງຢ່າງຢູ່ເຮືອນຊຽງຍັງຢູ່ໃນສະພາບປົກກະຕິ, ເມຍຂອງມັນຍັງແຕ່ງຢູ່ຄົວກິນ, ເກືອເປັດ ເກືອໄກ່ຄືກັບທຸກໆມື້ທີ່ຜ່ານມາ. ສ່ວນຊຽງເອງນັ່ງໃສ່ແວ່ນຕາອ່ານໜັງສືຮືໆຢູ່ເສີຍ!"

ເມື່ອພະຍາໄດ້ຮັບຊາບແນວນັ້ນ, ກໍເລີຍເກີດຄວາມສົງໄສຂຶ້ນວ່າ: ງ້ວນທີ່ກູໃສ່ອາຫານມື້ນັ້ນ ມັນແຮງສຸດຂະໜາດນາ, ມັນບໍ່ມີມຮອດຄືນໜາ, ເປັນຫຍັງບັກຊຽງຈຶ່ງຍັງບໍ່ຕາຍ ຫຼື ວ່າກູເອົ້າຢາຜິດ ບໍ່ນໍ! ບໍ່ຜິດນາ! ໂອ! ມັນອາດຈະເປັນເພາະວ່າ ຢານີ້ເອົ້າໄວ້ດົນໂພດ ມັນອາດຈະບໍ່ມີພິດຄືເກົ່າອີກ! ກູຊິ ລອງຊິມເບິ່ງກ່ອນນາ ! ບັກຊຽງບໍ່ຕາຍ ກູກໍບໍ່ຕາຍ!

ຫຼັງຈາກຄິດແນວນັ້ນ, ພະຍາກໍເອົ້າຢາພິດນັ້ນມາລອງຊິມເບິ່ງ, ບໍ່ພໍຄາວພະຍາກໍ ຮູ້ສຶກວິນ ຫົວປວດຮາກ. ໃນທີ່ສຸດ, ພະຍາກໍຮ້ອງຄວນຄາງດ້ວຍຄວາມເຈັບປວດທໍລະມານຢ່າງໜັກ, ເມື່ອເສ ນາອາມາດມາຮອດ, ພະຍາກໍໄດ້ສິ້ນພະຊົນເສຍແລ້ວ. ສຽງຮ້ອງໄຫ້ຮ່ຳໄຮອາໄລອາວອນຂອງລູກ ເມຍພະຍາ, ຕະຫຼອດເຖິງບ່າວໄພ່ເສນາຜູ້ທີ່ພັກດີຕໍ່ພະຍາກໍດັງຂຶ້ນທົ່ວພະລາຊະວັງ ແລະ ແພ່ດັງ ອອກນອກວັງ. ເວລານັ້ນ, ຄົນທັງຫຼາຍກໍໄດ້ຍິນສຽງຮ້ອງໄຫ້ຮ່ຳໄຮອາໄລຮັກ ຂອງເມຍຊຽງໜ້ຽງຕື່ມ ອີກ. ເຂົ້າຮູ້ພາຍຫຼັງວ່າຊຽງໜ້ຽງກໍຕາຍຄືກັນ ແລະ ຕາຍກ່ອນພະຍາອີກຕັ້ງມື້ໜຶ່ງພຸ້ນ. ເມື່ອພະຍາ ໄດ້ຕາຍໄປແລ້ວ, ເສນາອາມາດກໍໄດ້ມ້ຽນຄາບສົ່ງສະການຕາມປະເພນີ, ສ່ວນເມຍຊຽງໜ້ຽງກໍໄດ້ປະ ຕິບັດຕາມການແນະນຳຂອງຜົວຕົນທຸກຢ່າງ.

## ບົດອ່ານເພີ່ມ
## ເລື່ອງ: ໂຈນສອງອ້າຍນ້ອງ

ແຕ່ຄາວກ່ອນພຸ້ນຍັງມີເມືອງໜຶ່ງເຊິ່ງມີປະຊາຊົນອາໄສຢູ່ຢ່າງໜາແໜ້ນ. ໃນເມືອງນັ້ນມີໂຈນສອງອ້າຍນ້ອງເຊິ່ງເປັນລູກຂອງພະຍາເມືອງນັ້ນເອງ. ເກີດເປັນມື້ມາສອງອ້າຍນ້ອງມີແຕ່ທ່ຽວຊອກຫາລັກເຄື່ອງຂອງປະຊາຊົນ, ເຮັດໃຫ້ປະຊາຊົນມີຄວາມເດືອດຮ້ອນ ແຕ່ກໍບໍ່ມີໃຜເຮັດຫຍັງໃຫ້ເຂົາໄດ້ ເພາະເຂົາເປັນລູກຂອງພະຍາ.

ໃນເມືອງນັ້ນຍັງມີຜົວເມຍເຖົ້າຄູ່ໜຶ່ງເຊິ່ງເປັນຄົນຂີ້ຖີ່, ຄວາມຂີ້ຖີ່ຂອງຜົວເມຍເຖົ້າຄູ່ນີ້ຈົນບໍ່ມີໃຜຢາກໄປໃກ້ເຮືອນຂອງເຂົາເຈົ້າເພາະຢ້ານຖືກຕູ່ຫາວ່າລັກເຄື່ອງ ແລະ ຈະຖືກດ່າວ່າຕ່າງໆນາໆ. ທັງສອງຜົວເມຍເຖົ້າພາກັນຢູ່ກິນໄປຕາມພາສາເພາະລູກກໍບໍ່ມີຄືບ້ານຄືເມືອງເພິ່ນ.

ຕົກມາມື້ໜຶ່ງ, ຜູ້ເປັນຜົວໄດ້ຕາຍໄປຍ້ອນຄວາມແກ່ຊະລາພາບ. ຜູ້ເປັນເມຍຄິດກ່ຽວກັບເລື່ອງການສົງສະການຜົວວ່າ: ຄັນຊິຫາໄຫບ້ານໄຫເມືອງຊ່ວຍຫາມຂອນຜີໄປຖິ້ມ, ໄຫບ້ານເພິ່ນຊິຖາມເອົາເງິນຄ່າຈ້າງນຳຕົນ ເງິນຄຳທີ່ມີຢູ່ກໍຊິເສຍໄປລ້າໆ, ເຮັດແນວນັ້ນບໍ່ໄດ້ດັດຂາດ, ຕ້ອງຊອກຫາວິທີອື່ນ... ແມ່ເຖົ້າຄົນນັ້ນຄິດຫາອຸບາຍໃນການເອົາສົບຜົວໄປຖິ້ມ ດ້ວຍວິທີທີ່ປະຫຍັດທີ່ສຸດໄດ້ແລ້ວລາວກໍປະຕິບັດຕາມຄວາມຄິດຂອງລາວ.

ລາວໄດ້ເຮັດຫີບໜ່ວຍໜຶ່ງຂຶ້ນ ກະວ່າໃຫ້ໝົດຊາກສົບຜົວຂອງລາວດ້ວຍໄມ້ເທົ່າທີ່ມີຢູ່. ຫຼັງຈາກນັ້ນ, ລາວກໍໄດ້ຍົນເອົາເງິນຄຳທີ່ລາວມີຢູ່ໃສ່ເຂົ້າໄປໃນຫີບນັ້ນແລ້ວກໍທຳທ່າແກ່ລາກອອກມາປາຍຊານແລ້ວກໍຈົກເອົາເງິນຄຳເຫຼົ່ານັ້ນອອກມາຕາກໄວ້ຢູ່ທີ່ຊານເຮືອນນັ້ນ. ເມື່ອຮອດຕອນຄ່ຳມາ, ລາວກໍເກັບກູ້ເອົາເງິນຄຳທີ່ຕາກຢູ່ນັ້ນເຂົ້າໃສ່ຫີບຄືນ ແລ້ວແກ່ເຂົ້າໄປໄວ້ຕີນບ່ອນນອນຂອງລາວ. ພໍຮອດມື້ທີສອງ, ສຽງຊ່າລືວ່າແມ່ເຖົ້າຄົນນັ້ນມີເງິນຄຳຫຼາຍຈົນວ່າໄດ້ໃສ່ຫີບໄວ້ ແລະ ເອົາອອກມາຕາກແດດທຸກມື້ໄດ້ດັງໄປທົ່ວບ້ານທົ່ວເມືອງ. ຄວາມຊ່າລືອັນນີ້ໄດ້ໄປຮອດຫູຂອງ ໂຈນສອງອ້າຍນ້ອງ ຢ່າງວ່ອງໄວ ແລະ ທັງສອງກໍໄດ້ຕິດຕາມການເຄື່ອນໄຫວຂອງແມ່ເຖົ້າຄົນນັ້ນຢ່າງລະອຽດ ແລ້ວກໍພ້ອມກັນວາງແຜນລັກຫີບເງິນຂອງແມ່ເຖົ້າ.

ສ່ວນແມ່ເຖົ້າຂີ້ຖີ່ຄົນນັ້ນຊ້ຳພັດບໍ່ໄດ້ເຮັດຄືກັບທຸກຄົນໄດ້ຮູ້ໄດ້ເຫັນ, ທຸກເທື່ອທີ່ລາວໄດ້ລາກຫີບເງິນເຂົ້າຮອດໃນເຮືອນ ລາວກໍໄດ້ຈົກເອົາເງິນຄຳອອກໄປໄວ້ບ່ອນອື່ນ, ແລ້ວຈຶ່ງເອົາສົບຜົວເຂົ້າໃສ່ຫີບແທນ. ລາວໄດ້ເອົາຫີບສົບຂອງຜົວລາວວາງໄວ້ຕີນບ່ອນນອນ, ສ່ວນລາວເອງກໍນອນຕາມສະບາຍຢູ່ບ່ອນຂອງລາວ.

ໃນຄືນຂອງມື້ທີສອງນີ້ເອງ, ໂຈນສອງອ້າຍນ້ອງໄດ້ເຂົ້າໄປໃນເຮືອນຂອງແມ່ເຖົ້າດ້ວຍຄວາມລະມັດລະວັງ ຈົນວ່າແມ່ເຖົ້າທີ່ນອນຢູ່ນັ້ນບໍ່ທັນໄດ້ຮູ້ເມື່ອ. ໂຈນສອງອ້າຍນ້ອງພໍແຕ່ລູບຄຳເບິ່ງຫີບສົບກໍຮູ້ໂລດວ່າແມ່ນຫີບເງິນທີ່ແມ່ເຖົ້າແກ່ອອກໄປຕາກໃນຕອນກາງເວັນນັ້ນ, ພວກມັນບໍ່ໄດ້ເວົ້າຫຼາຍຄວາມພ້ອມກັນຍົກເອົາຫີບໜ່ວຍນັ້ນອອກຈາກເຮືອນແລ້ວລົງຕະລ່າງຟ້າວໜີໄປ.

ໃນຂະນະທີ່ຫາມຫີບໜ່ວຍນັ້ນໄປ, ຜູ້ເປັນອ້າຍທີ່ຢູ່ທາງຫຼັງໄດ້ຄິດຂຶ້ນມາວ່າຫາກປັນກັນຕ້ອງໄດ້ປັນທ່ໍກັນ, ເຮັດແນວນັ້ນບໍ່ໄດ້ຕິເບາະເຮົາເປັນອ້າຍ, ເຮົາຕ້ອງໄດ້ລື່ນນ້ອງຂອງເຮົາມັນຈຶ່ງຊິຖືກແຕ່ເມື່ອປັນນັ້ນມັນຄົງຊິບໍ່ຍອມເດັດຂາດ, ບໍ່ໄດ້ເຮົາຕ້ອງຈົກເອົາເງິນໃນຫີບນີ້ໄວ້ກ່ອນຈຶ່ງຈະບໍ່ມີບັນຫາ. ຄິດໄດ້ແນວນັ້ນຜູ້ເປັນອ້າຍກໍເອົາມືຈົກລົງໄປໃນຫີບ,ເລີຍໄປຊູນເອົາຫົວຂອງຄົນຕາຍ,ແລ້ວກໍເລີຍຮ້ອງເຫຼີຂຶ້ນໝົດແຮງວ່າ "ຄົນ! ຄົນ! ຄົນ! ຄົນ!"

ນ້ອງຊາຍບໍ່ຮູ້ຫຍັງໄດ້ຍິນຄຳວ່າ "ຄົນ" ຜັດຄິດວ່າແມ່ນຄົນທີ່ໄລ່ຕາມຫຼັງມາ, ຈຶ່ງໄດ້ສ່າວບາດຕີນຂຶ້ນໄວກວ່າເກົ່າ, ແກ່ເອົາຜູ້ເປັນອ້າຍຫົວປັກຫົວແຖໄປຕາມຫຼັງ. ສ່ວນຜູ້ເປັນອ້າຍນັ້ນ, ພາຍຫຼັງໄປໄດ້ໄລຍະໜຶ່ງຜັດຄິດສົງໄສຂຶ້ນມາອີກວ່າ "ແມ່ນຄົນແທ້ຫຼືບໍ່?" ມັນຈຶ່ງເອົາມືຈົກລົງໄປໃນຫີບນັ້ນອີກ, ຈົກລົງໄປເລິກກວ່າເກົ່າ, ມືໄດ້ໄປລູບເອົາໜ້າຄົນຕາຍເຢັນຄືກັບໜາກເຫັບ, ມັນຈຶ່ງແນ່ໃຈຄັກວ່າ ແມ່ນຄົນຕາຍກໍເລີຍຮ້ອງຂຶ້ນແຮງກວ່າເກົ່າວ່າ: "ຄົນ! ຄົນ! ຄົນ! ຄົນອີຫຼີ!". ຜູ້ເປັນນ້ອງໄດ້ຍິນ ຜັດຄິດວ່າແມ່ນຄົນທີ່ໄລ່ມາໃກ້ຊິທັນພວກຕົນຈຶ່ງຟ້າວເອົາມືກອດຫີບໜ່ວຍນັ້ນແລ້ວແລ່ນ, ຢ່າງເອົາເປັນເອົາຕາຍ. ຜູ້ເປັນອ້າຍກໍຟາງຕື່ນຫັງຢ້ານຈົນລືມວ່າພວມຫາມຫີບສົບ,ມັນຫັງແລ່ນຫັງຫາມຫີບສົບຄູ່ກັບນ້ອງ,ມັນຖືກນ້ອງແກ່ໄປຢ່າງຫົວປັກຫົວຄອບກະຟຸບກະຟາບ. ບາງເທື່ອຫັງສອງ, ກໍລົ້ມລຸກຄຸກຄາມແຕ່ຫາກບໍ່ມີໃຜປະຫີບສົບໜ່ວຍນັ້ນ. ສຸດທ້າຍກໍພາກັນແລ່ນໄປຕົກເຫວ, ຫັງຫີບຫັງຄົນພ້ອມກັນລົງໄປກອງຢູ່ພື້ນເຫວ ຄົນກະໄປພໍຄົນ ຫີບກໍໄປພໍຫີບ.

ເລົ່າໂດຍ: ອາຈານ ບຸນຍໍ ພົມມະບຸດ

ຮຽບຮຽງໂດຍ: ຄຳຜຸຍ ພົນລືຊາ

## ເລື່ອງ: ສາມສ່ຽວໄປລັກໄກ່

ແຕ່ກີ້ແຕ່ກ່ອນຢູ່ບ້ານແຫ່ງໜຶ່ງມີຊາຍໜຸ່ມ 3 ຄົນ. ພວກເຂົາທັງ 3 ຄົນເປັນຄົນບໍ່ສົມປະກອບ, ຜູ້ໜຶ່ງຫູໜວກ, ຜູ້ໜຶ່ງຕາບອດ ແລະ ອີກຜູ້ໜຶ່ງຂາຕິດ. ດັ່ງນັ້ນ, ຊາຍທັງສາມຈຶ່ງແຮກສ່ຽວນຳກັນ ແລະ ໃຫ້ຄຳໝັ້ນສັນຍາວ່າ: "ພວກເຂົາຈະຮັກແພງຊ່ວຍເຫຼືອກັນ ແລະ ເປັນສ່ຽວຮັກກັນຈົນຊົ່ວຊີວິດ. ຊາຍ

ຂາຕິດ ແລະ ຊາຍຫູໜວກຈະເປັນຕາໃຫ້ແກ່ຊາຍຕາບອດ; ຊາຍຕາບອດກັບຊາຍຫູໜວກຈະເປັນຂາ ໃຫ້ແກ່ຊາຍຂາຕິດ ແລະ ຊາຍຂາຕິດກັບຊາຍຕາບອດຈະເປັນຫູໃຫ້ແກ່ຊາຍຫູໜວກ"

ຊາຍໜຸ່ມທັງສາມນັບແຕ່ມື້ຕົກລົງເປັນສ່ຽວກັນມາ, ກໍຮັກແພງກັນໄປໃສມາໃສກໍໄປມານຳກັນ ຍາມຄ້ຳຍຄ່ຳມາພວກເຂົາມັກພາກັນໄປນັ່ງລົມກັນຢູ່ກ້ອງຮົ່ມກົກຂາມຫາງບ້ານ. ຢູ່ໃກ້ກັບຕົ້ນໝາກ ຂາມມີເຮືອນຂອງລຸງສີ. ລຸງສີລ້ຽງໄກ່ຫຼາຍໂຕໄກ່ໂຕໃດກໍຕຸ້ຍພີດີງາມ, ສາມສ່ຽວມັກໂຮມເງິນກັນໄປຊື້ ມາຕົ້ມຊຸມກັນ. ຕົກມາມື້ໜຶ່ງສາມສ່ຽວກໍໄປນັ່ງລົມກັນຢູ່ກ້ອງຮົ່ມກົກຂ້າມຄືກັບຫຼາຍໆມື້ຜ່ານມາ. ພວກເຂົາເລົ່າກັນໄປມາຫຼາຍເລື່ອງ ສຸດທ້າຍສ່ຽວຂາຕິດຫຼຽວເຫັນໄກ່ລຸງສີແລ້ວເວົ້າຂຶ້ນວ່າ: "ເບິ່ງແມ່ ໄກ່ລຸງສີ ຫວ່າງນີ້ຊອບບ່າວຊອບສາວໂຕໃດກໍຕຸ້ຍພີເປັນຕາແຊບເນາະສ່ຽວ". ສ່ຽວຫູໜວກຫຼຽວໄປເບິ່ງ ນຳພ້ອມທັງເວົ້າຂຶ້ນວ່າ: "ໂອສ່ຽວ ເວົ້າແທ້ພວກເຮົາກໍດົນແລ້ວບໍ່ໄດ້ກິນຕົ້ມໄກ່ເນາະ! ເອີ! ແມ່ນແທ້ໄດ໋ ເນາະສ່ຽວ, ພວກເຮົາບໍ່ໄດ້ກິນຕົ້ມໄກ່ດົນແທ້ໄດ໋"; ເວົ້າໄປເວົ້າມາກູກະຢາກກິນຕົ້ມໄກ່ໃດ໋ສ່ຽວ!" ສ່ຽວ ຂາຕິດຕອບ. ສ່ຽວຫູໜວກໄດ້ຍິນຫວິດແຫວ່ວເຂົ້າຫູກໍຕອບຂຶ້ນໂລດວ່າ: "ຢາກກິນກໍເອົາມາຕົ້ມກິນໂລດ". ສ່ຽວຂາຕິດເວົ້າສ່ອດຂຶ້ນວ່າ: "ໃສເງິນ, "ສ່ຽວຫູໜວກເວົ້າຕັດຂຶ້ນວ່າ:" ບໍ່ມີເງິນກະລັກເອົາຊັ້ນຕ໊ວະຊິ ຍາກເຮັດຫຍັງ?"

ສາມສ່ຽວຕົກລົງປຶງໃຈໄປລັກໄກ່ລຸງສີໃນຕອນຄ່ຳຂອງມື້ຕໍ່ມາ. ກ່ອນໄປສາມສ່ຽວໄດ້ລົມກັນ ວ່າຈະໃຫ້ໃຜເປັນຄົນເຂົ້າໄປລັກໄກ່ ແລະ ໃຫ້ໃຜຍາມເບິ່ງຄົນຢູ່ຂ້າງນອກ. ເບື້ອງຕົ້ນ ຕົກລົງກັນວ່າໃຫ້ ຊາຍຂາຕິດເຂົ້າໄປລັກໄກ່ໃນຄອກເພາະຫູຕາດີ. ຊາຍຂາຕິດຄິດບຶດໜຶ່ງແລ້ວຕອບວ່າ: "ບໍ່ໄດ້ຕິສ່ຽວຊິ ໃຫ້ກູເຂົ້າໄປລັກເພາະກູຂາຕິດຍ່າງບໍ່ໄວຖ້າເສຍລັບຈະໄປບໍ່ທັນ". ເຂົາທັງສາມສົນທະນາກັນໄປມາ ແລ້ວພ້ອມກັນເຫັນດີວ່າ ໃຫ້ສ່ຽວຫູໜວກເຂົ້າໄປລັກ. ໃຫ້ສ່ຽວຂາຕິດໄປຢູ່ແປະຮົ້ວຕິດກັບຄອກໄກ່ລໍຖ້າ ຮັບໄກ່ຈາກສ່ຽວຫູໜວກ. ໃຫ້ຊາຍຕາບອດໄປຢູ່ກ້ອງຕົ້ນໝາກຂາມຟັງສຽງດັງຂ້າງນອກ. ຖ້າໄດ້ຍິນ ສຽງຄົນມາໃຫ້ຖິ່ວປາກດັງໆສາມບາດ. ເມື່ອຕົກລົງກັນຮຽບຮ້ອຍແລ້ວກໍພາກັນໄປລັກໄກ່.

ສ່ຽວຫູໜວກເຂົ້າໄປເຖິງຄອກໄກ່ໄດ້ເຫັນໄກ່ເຂົ້າຢູ່ໃນຕຸ້ມໝົດ ເພາະຄ່ຳມາລຸງສີເອົາໄກ່ເຂົ້າ ຢູ່ໃນຕຸ້ມແລ້ວໃສ່ກະແຈ. ສ່ຽວຫູໜວກເຫັນແນວນັ້ນບໍ່ຮູ້ຈັກເຮັດ ຈຶ່ງເວົ້າຄ່ອຍໆກັບສ່ຽວຂາຕິດລໍຖ້າຮັບ ໄກ່ຢູ່ຂ້າງນອກວ່າ: "ໄກ່ຢູ່ໃນຕຸ້ມໃສ່ກະແຈເອົາບໍ່ໄດ້ເຮັດຈັ່ງໃດ?" ສ່ຽວຂາຕິດຕອບວ່າ: "ເອົາເປັນໂຕບໍ່ໄດ້ ກໍຍຸ້ມທັງຕໍແປວ່າ: ຍໍທັງຕຸ້ມ". ສ່ຽວຫູໜວກບໍ່ໄດ້ຍິນຜັດຖາມຂຶ້ນແຮງກວ່າເກົ່າວ່າ "ເຮັດຈັ່ງໃດເຮີຍ?" ສ່ຽວຂາຕິດກໍເວົ້າວ່າ: "ຍຸ້ມທັງຕໍ". ສ່ຽວຫູໜວກກໍບໍ່ໄດ້ຍິນອີກ. ສ່ຽວຫູໜວກຖາມມາອີກ ພວກເຂົາຖາມ ມາຕອບໄປຫຼາຍຄັ້ງສ່ຽວຫູໜວກກໍບໍ່ໄດ້ຍິນ. ສ່ຽວຂາຕິດຢາກຮ້າຍແຮງກໍເວົ້າທັ່ງອອກມາວ່າ "ຍໍທັງ ຕຸ້ມບັກຫູໜວກມຶງ!" ພໍດີເຈົ້າຂອງເຮືອນຊວາດຮູ້ເມື່ອຈຶ່ງຜຸດລຸກຂຶ້ນພ້ອມທັງສົ່ງສຽງຮ້ອງວ່າ: "ແມ່ນ ໃຜມາເວົ້າຍຸ້ມທັງຕໍ, ຍໍທັງຕຸ້ມກັບໄປກັບມາຢູ່ນີ້". ສ່ຽວຂາຕິດໄດ້ຍິນສຽງເຈົ້າຂອງເຮືອນຕື່ນຂຶ້ນມາກໍ

ຟ້າວຖິ່ວປາກດັ່ງໆພ້ອມທັ່ງເອົາຕີນເບື້ອງຂາຕິດຢັນຍ່າງຢ່າງໄວ, ຫວັ່ງຈະແລ່ນໜີແຕ່ບັ່ງເອີນຂາຕິດແຂ່ງ ກໍເລີຍຈີກອອກເລືອດໄຫຼອອກຢ່າງແຮງຍ່າງຕໍ່ໄປບໍ່ໄດ້. ສ່ຽວຫູໜວກບໍ່ທັນໄດ້ຍິນສຽງຫຍັງກໍຍັ່ງງົມຫາໄກ່ໃນຄອກຢູ່. ສ່ຽວຕາບອດໄດ້ຍິນສຽງຖິ່ວປາກສາມບາດກໍຟ້າວລຸກຂຶ້ນ, ຟ້າວເອົາຄ້ອນເທົ້າຊັກຊ້າຍຊັກຂວາພ້ອມທັ່ງຮ້ອງວ່າ: ຖ້າແດ່ສ່ຽວ! ຖ້າແດ່ສ່ຽວ!" ເຈົ້າຂອງເຮືອນໄດ້ຍິນຈຶ່ງຮ້ອງຂຶ້ນວ່າ: "ຊ່ວຍແດ່! ຊ່ວຍແດ່! ຄົນຂີ້ລັກ... ແລ້ວກໍ່ຈັບ 3 ສ່ຽວຂີ້ລັກໄດ້ສະບາຍ.

ເລົ່າໂດຍ: ພໍ່ສຸລິນທອງ ບ້ານສົບມອນ ເມືອງຊຽງຄໍ້ ແຂວງ ຫົວພັນ

ຮຽບຮຽງໂດຍ: ຄຳຜຸຍ ພົນລືຊາ

# ບົດທີ 6
# ນິທານສັດ

ເວລາ 8 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດໄດ້.
- ອະທິບາຍເນື້ອໃນການສ່ອງແສງຂອງນິທານສັດໄດ້.
- ອະທິບາຍສິລະປະການປະດິດແຕ່ງນິທານສັດໄດ້.
- ຖອດຄະຕິຈາກນິທານມາຮັບໃຊ້ຊີວິດປະຈຳວັນໄດ້.
- ວິພາກນິທານສັດເລື່ອງ "ປັນຍາ" ໄດ້.
- ຂຽນສະຫຼຸບເຫດການຕ່າງໆໃນເລື່ອງ "ປັນຍາ" ໄດ້.
- ຂຽນສະຫຼຸບຫຍໍ້ເລື່ອງ "ປັນຍາ"ໄດ້.
- ສະແດງລະຄອນສັດແບບສັ້ນໆຕາມເນື້ອໃນຂອງເລື່ອງ "ປັນຍາ"ໄດ້.

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງນິທານສັດ.
- ການກຳເນີດ ແລະ ຂະຫຍາຍຕົວຂອງນິທານສັດ.
- ເນື້ອໃນການສ່ອງແສງ ແລະ ສິລະປະການປະດິດແຕ່ງນິທານສັດ.
- ວິພາກບົດເລື່ອງ "ປັນຍາ".

## III. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືວັນນະຄະດີຊັ້ນມັດທະຍົມປີທີໜຶ່ງ.
- ປຶ້ມນິທານສັດເຊັ່ນ: ນິທານນາງຕັນໄຕ, ປຶ້ມອ່ານສຳລັບເດັກ ແລະ ນິທານສັດຕ່າງໆ.
- ປຶ້ມແບບຮຽນພາສາລາວຊັ້ນມັດທະຍົມປີທີໜຶ່ງ.
- ຊີດີກະຕູນຕ່າງໆ (ຖ້າມີ)

## IV. ກິດຈະກຳການຮຽນ-ການສອນ

### ການນຳເຂົ້າສູ່ບົດຮຽນ

- ຄູທົບທວນບົດຮຽນບົດທີ 5 "ນິທານຊອນຫົວ" ດ້ວຍການຕັ້ງຄຳຖາມສົນທະນາກັບນັກຮຽນຕາມຄວາມເໝາະສົມ.

- ຄູໃຫ້ນັກຮຽນຍົກມືຕອບ ຫຼື ບິ່ງຕົວເພື່ອສະແດງຄວາມຄິດເຫັນ.
- ຄູສະຫຼຸບຄຳເຫັນຂອງນັກຮຽນ ແລະ ອະທິບາຍຈຸດສຳຄັນຂອງບົດຮຽນບົດທີ່ 5 ແບບຫຍໍ້ໆ.
- ຄູທົດສອບຄວາມຮູ້ຂອງນັກຮຽນໃນບົດທີ 6 "ນິທານສັດ" ດ້ວຍຄຳຖາມສົນທະນາກັບນັກຮຽນ ດັ່ງນີ້:

1) ນັກຮຽນເຄີຍຮຽນນິທານສັດມາແລ້ວບໍ?

2) ນັກຮຽນເຄີຍໄດ້ຍິນນິທານສັດເລື່ອງໃດແດ່?

- ຄູໃຫ້ນັກຮຽນຕອບຄຳຖາມ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ແລ້ວພານັກຮຽນເຂົ້າສູ່ການຮຽນ-ການສອນບົດໃໝ່.

## 1. ການສອນຄວາມໝາຍ, ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດ

### 1.1 ການສອນຄວາມໝາຍ

- ຄູອ່ານ ຫຼື ແນະນຳໃຫ້ນັກຮຽນອ່ານຄວາມໝາຍຂອງນິທານສັດໃນປຶ້ມແບບຮຽນ.
- ຄູແນະນຳໃຫ້ນັກຮຽນໃນຫ້ອງຟັງ, ພ້ອມທັງຕິດຕາມຄວາມໝາຍຂອງນິທານສັດຕາມປຶ້ມແບບຮຽນ,
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ນິທານສັດແມ່ນເລື່ອງເລົ່າກ່ຽວກັບຫຍັງ?

2) ຈຸດປະສົງຕົ້ນຕໍຂອງການປະດິດແຕ່ງນິທານສັດແມ່ນເພື່ອຫຍັງ?

3) ນິທານສັດແມ່ນເລື່ອງເລົ່າຫຍັງຂອງສັດ,ຈົ່ງຍົກຕົວຢ່າງ?

4) ຍ້ອນຫຍັງຊາວບູຮານຈຶ່ງເອົາເລື່ອງສັດມາປຽບທຽບໃສ່ຄົນ? ເມື່ອປຽບທຽບແລ້ວເຮັດໃຫ້ນິທານສັດມີຄວາມໝາຍແນວໃດ?

- ຄູໃຫ້ນັກຮຽນຕອບຕາມຄວາມເໝາະສົມ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ພ້ອມທັງໃຫ້ຄຳຕອບທີ່ຖືກຕ້ອງແກ່ນັກຮຽນຄື:

1) ນິທານສັດແມ່ນເລື່ອງເລົ່າກ່ຽວກັບສັດ.

2) ຈຸດປະສົງຕົ້ນຕໍຂອງການປະດິດແຕ່ງນິທານສັດ ແມ່ນເພື່ອສຶກສາແນວຄິດຄຸນສົມບັດ, ຄວາມຊື່ສັດ, ຄວາມສັດຈະທຳ ແລະ ແບບແຜນການດຳລົງຊີວິດໃຫ້ແກ່ຄົນ.

3) ນິທານສັດ ແມ່ນເລື່ອງເລົ່າກ່ຽວກັບຈຸດພິເສດ, ລັກສະນະສະເພາະຂອງສັດຕົວຢ່າງ: ເສືອເປັນຫຍັງຈຶ່ງລາຍ, ຄວາຍເປັນຫຍັງຈຶ່ງບໍ່ມີແຂ້ວເບື້ອງເທິງ...

4) ຊາວບູຮານເອົາເລື່ອງສັດມາປຽບທຽບໃສ່ຄົນ ເພາະຊາວບູຮານເຂົ້າໃຈວ່າ ສັດກໍ່ຄືກັບຄົນ, ຮູ້ປາກເວົ້າ ແລະ ມີແນວຄິດຈິດໃຈຄືກັບຄົນ. ເມື່ອນຳເອົາເລື່ອງສັດມາປຽບທຽບໃສ່ຄົນແລ້ວ ເຮັດໃຫ້ນິທານສັດກາຍເປັນເລື່ອງ ທີ່ມີຄວາມໝາຍສຶກສາຄຸນສົມບັດ, ຄວາມຊື່ສັດ, ຄວາມສັດຈະທຳ ແລະ ແບບແຜ່ນການດຳລົງຊີວິດແກ່ຄົນ.

**1.2 ການສອນການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດ**

- ຄູໃຫ້ນັກຮຽນສະໜັກ ຫຼື ບົ່ງຕົວນັກຮຽນຜູ້ໃດຜູ້ໜຶ່ງອ່ານການກຳເນີດ ແລະ ຂະຫຍາຍຕົວຂອງນິທານຊວນຫົວຕາມປຶ້ມແບບຮຽນໃຫ້ໝົດ.
- ຄູແນະນຳໃຫ້ນັກຮຽນຜູ້ອື່ນໆຟັງ ແລະ ຕິດຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ນິທານສັດມີກົກເຄົ້າການກຳເນີດມາຈາກໃສ?

2) ນິທານສັດມີການຂະຫຍາຍຕົວແນວໃດ?

- ຄູໃຫ້ນັກຮຽນຕອບຕາມຄວາມເໝາະສົມ.

-ຄູສະຫຼຸບຄຳຕອບຂອງນັກຮຽນ ແລ້ວອະທິບາຍເພີ່ມຕື່ມ, ພ້ອມທັງຂຽນຈຸດສຳຄັນຂອງການກຳເນີດ ແລະ ຂະຫຍາຍຕົວຂອງນິທານສັດໃສ່ກະດານ, ໃຫ້ນັກຮຽນຂຽນໃສ່ປຶ້ມຂຽນເຊິ່ງຈຸດສຳຄັນຂອງກົກເຄົ້າການກຳເນີດຂອງນິທານສັດແມ່ນ:

1) ເກີດມາຈາກການດຳລົງຊີວິດຕິດພັນກັບທຳມະຊາດຂອງປະຊາຊົນຜູ້ອອກແຮງງານ.

2) ເກີດມາຈາກການປຽບທຽບເອົາເລື່ອງສັດມາປຽບທຽບໃສ່ເລື່ອງຄົນເຮັດໃຫ້ນິທານສັດກຳເນີດ ແລະ ຂະຫຍາຍຕົວຫຼາຍຂຶ້ນ.

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນເພື່ອເຈາະຈີ້ມກ່ຽວກັບຈຸດສຳຄັນຂອງການກຳເນີດຂະຫຍາຍຕົວຂອງນິທານສັດ 2 ບັນຫາທີ່ຍົກຂຶ້ນມາດັ່ງນີ້:

1) ຍ້ອນຫຍັງການດຳລົງຊີວິດຕິດພັນກັບທຳມະຊາດຂອງປະຊາຊົນຜູ້ອອກແຮງງານ ຈຶ່ງເຮັດໃຫ້ມີນິທານສັດເກີດຂຶ້ນ?

2) ຍ້ອນຫຍັງການເອົາສັດມາປຽບທຽບໃສ່ຄົນຈຶ່ງເຮັດໃຫ້ນິທານສັດກຳເນີດ ແລະ ຂະຫຍາຍຕົວແຮງ?

- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນພ້ອມທັງອະທິບາຍໃຫ້ນັກຮຽນເຂົ້າໃຈຄື:

1) ການດຳລົງຊີວິດ ຂອງປະຊາຊົນສະໄໝກ່ອນຕິດພັນກັບທຳມະຊາດ, ອາໄສການເກັບຜັກ, ຫາໝໍ່ໄມ້, ລ່າສັດເຊັ່ນ: ນົກ, ປູ, ປາ, ກຸ້ງ, ຫອຍທີ່ມີຢູ່ໃນທຳມະຊາດເພື່ອລ້ຽງຊີວິດໃນແຕ່ລະມື້. ຢາກຫາປາ ລ່າສັດໄດ້ດີຊາວບູຮານລາວຈຳຕ້ອງຊອກຮູ້ ແລະ ສັງເກດຢ່າງລະອຽດກ່ຽວກັບຈຸດພິເສດ, ລັກສະນະສະເພາະ, ການເຄື່ອນໄຫວ, ຄວາມຊິນເຄີຍ, ຮູບຮ່າງ, ສີສັນ ແລະ ສຽງຮ້ອງຂອງສັດແຕ່ລະຊະນິດ. ທັງນີ້ກໍເພື່ອສະດວກໃນການຈັບສັດນ້ອຍມາເປັນອາຫານ ແລະ ຫຼີກເວັ້ນສັດໃຫຍ່ ຫຼື ສັດທີ່ເປັນອັນຕະລາຍເຊັ່ນ: ເສືອ, ສິງ, ງູ ແລະ ອື່ນໆ.

2) ການນຳເອົາສັດມາປຽບທຽບໃສ່ຄົນເຮັດໃຫ້ນິທານສັດກຳເນີດ ແລະ ຂະຫຍາຍຕົວຫຼາຍຂຶ້ນ ຍ້ອນວ່າ: ເມື່ອເອົາເລື່ອງສັດມາປຽບທຽບໃສ່ຄົນ ເຮັດໃຫ້ນິທານສັດມີຄວາມໝາຍເພື່ອສຶກສາແນວຄິດ

ຄຸນສົມບັດເປັນຄະຕິເຕືອນໃຈແກ່ການດຳລົງຊີວິດ ເຊິ່ງຄົນເຮົານິຍົມນຳມາເປັນເລື່ອງເລົ່າສຳລັບເດັກ ເພື່ອອົບຮົມແນວຄິດຄຸນສົມບັດ ແລະ ແບບແຜນການດຳລົງຊີວິດດັ່ງນັ້ນ, ຈຶ່ງເຮັດໃຫ້ນິທານສັດຂະຫຍາຍຕົວແຮງ.

2. ການສອນເນື້ອໃນຂອງນິທານສັດ

- ຄູແນະນຳໃຫ້ນັກຮຽນອ່ານເນື້ອໃນຂອງນິທານສັດຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມເພື່ອສົນທະນາກັບນັກຮຽນກ່ຽວກັບຈຸດສຳຄັນຂອງເນື້ອໃນນິທານສັດວ່າ: ນິທານສັດ ມີເນື້ອໃນເວົ້າເຖິງຫຍັງ?
- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນປະມານ 2-3 ຄົນຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ ແລ້ວຂຽນຈຸດສຳຄັນໃນເນື້ອໃນຂອງນິທານສັດໃສ່ກະດານ ເພື່ອໃຫ້ນັກຮຽນບັນທຶກໄວ້ໃນປຶ້ມຂຽນ, ເຊິ່ງຈຸດສຳຄັນໃນເນື້ອໃນຂອງນິທານສັດແມ່ນ:

+ ເບື້ອງຕົ້ນນິທານສັດເປັນພຽງບົດເລື່ອງເລົ່າກ່ຽວກັບການເຄື່ອນໄຫວຂອງສັດແບບລອມໆ, ຕໍ່ມານິທານສັດໄດ້ມີການປຽບທຽບກັບແນວຄິດ ແລະ ການກະທຳຂອງຄົນເພື່ອຕັກເຕືອນສັ່ງສອນຄົນ.

- ຄູຕັ້ງຄຳຖາມເຈາະຈີ້ມກ່ຽວກັບເນື້ອໃນຂອງນິທານສັດວ່າ: ນິທານສັດເປັນເລື່ອງກ່ຽວກັບການເຄື່ອນໄຫວຂອງສັດແບບລອມໆແມ່ນແນວໃດ?
- ຄູໃຫ້ນັກຮຽນຕອບຄຳຖາມປະມານ 2-3 ຄົນຕາມຄວາມເໝາະສົມ.
- ຄູສະຫຼຸບຄຳຕອບຂອງນັກຮຽນພ້ອມທັງອະທິບາຍໃຫ້ນັກຮຽນເຂົ້າໃຈວ່ານິທານສັດແມ່ນເລື່ອງເລົ່າກ່ຽວກັບການເຄື່ອນໄຫວແບບລອມໆຂອງສັດ. ແມ່ນການເລົ່າຈຸດພິເສດ, ລັກສະນະສະເພາະຂອງສັດແຕ່ລະຊະນິດທີ່ສະແດງຜ່ານການເຄື່ອນໄຫວ, ຮູບຮ່າງ, ສີສັນຂອງສັດແຕ່ລະຊະນິດ.
- ຄູເລົ່ານິທານ ຫຼື ແນະນຳໃຫ້ນັກຮຽນອ່ານເລື່ອງ "ປັນຍາ" ແລ້ວຕັ້ງຄຳຖາມວ່າ: ເລື່ອງ "ປັນຍາ" ແມ່ນອະທິບາຍຈຸດພິເສດອັນໃດຂອງເສືອ, ຄວາຍ ແລະ ຄົນ?
- ຄູໃຫ້ເວລານັກຮຽນອ່ານເລື່ອງຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມເຫັນຂອງນັກຮຽນ ດ້ວຍການຕຳນິຕິຊົມ ແລະ ແນະນຳຄຳຕອບທີ່ຖືກພ້ອມທັງຈົດຄຳຕອບທີ່ຖືກຕ້ອງໃສ່ກະດານໃຫ້ນັກຮຽນ ເຊິ່ງຄຳຕອບທີ່ຖືກຕ້ອງແມ່ນ: ເລື່ອງ "ປັນຍາ" ແມ່ນອະທິບາຍຈຸດພິເສດຄື: ເສືອມີລາຍ, ຄວາຍບໍ່ມີແຂ້ວເບື້ອງເທິງ, ຄົນມີປັນຍາ.
- ຄູຕັ້ງຄຳຖາມເພື່ອສົນທະນາກັບນັກຮຽນອີກວ່າ: ເພິ່ນເອົາເລື່ອງສັດມາປຽບທຽບໃສ່ຄົນເຮັດໃຫ້ນິທານສັດມີເນື້ອໃນຕັກເຕືອນສັ່ງສອນຄົນແນວໃດ?
- ຄູເລົ່ານິທານເລື່ອງຊ້າງກັບນົກໄສ່ສູ່ນັກຮຽນຟັງ ແລ້ວຕັ້ງຄຳຖາມສົນທະນາກັບນັກຮຽນວ່າ: ນິທານເລື່ອງນີ້ມີເນື້ອໃນເວົ້າເຖິງຫຍັງ?
- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.

- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ ແລ້ວສະເໜີຄຳຕອບໃຫ້ຖືກຕ້ອງຄື: ນິທານເລື່ອງຊ້າງກັບນົກໄສ່ມີເນື້ອໃນເວົ້າເຖິງຊ້າງເປັນສັດໃຫຍ່ມີກຳລັງແຮງສາມາດຂົ່ມຂູ່ ແລະ ທຳລາຍເຮືອນຮັງຂອງນົກໄສ່. ນົກໄສ່ເປັນສັດນ້ອຍບໍ່ມີກຳລັງແຮງ ແຕ່ມີຄວາມສາມັກຄີກັບກົບ, ແມງວັນສາມາດຕໍ່ສູ້ກັບຊ້າງໃຫຍ່ໄດ້.

- ຄູຕັ້ງຄຳຖາມສົນທະນາເຈາະຈີ້ມກັບນັກຮຽນອີກວ່າ: ເມື່ອນຳເອົາເລື່ອງຊ້າງກັບນົກໄສ່ມາທຽບໃສ່ຄົນພວກເຮົາຈະທຽບແນວໃດ? ຊ້າງທຽບໃສ່ໃຜ ແລະ ນົກໄສ່ທຽບໃສ່ໃຜ?

- ຄູໃຫ້ນັກຮຽນມີຄວາມຄິດເຫັນຕາມຄວາມເໝາະສົມ.

- ຄູສະຫຼຸບຄວາມເຫັນຂອງນັກຮຽນພ້ອມທັງຕອບຄຳຖາມທີ່ຖືກຄື:

+ ຊ້າງປຽບທຽບໃສ່ບຸກຄົນທີ່ມີອຳນາດໃຫຍ່ ຂົ່ມຂູ່ຜູ້ມີກຳລັງນ້ອຍ.

+ ນົກໄສ່ປຽບທຽບໃສ່ປະຊາຊົນຜູ້ອອກແຮງງານ ແຕ່ມີຄວາມສາມັກຄີກັບໝູ່ເພື່ອນ.

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນ ດ້ວຍຄຳຖາມເຈາະຈີ້ມບັນຫາດັ່ງກ່າວອີກວ່າ: ເມື່ອເອົາຊ້າງ ແລະ ນົກໄສ່ທຽບໃສ່ຄົນແລ້ວ ນິທານສັດເລື່ອງຊ້າງກັບນົກໄສ່ມີເນື້ອໃນຕັກເຕືອນສັ່ງສອນຄົນແນວໃດ?

- ຄູໃຫ້ນັກຮຽນສະແດງຄວາມຄິດຄວາມເຫັນຕາມຄວາມເໝາະສົມ.

- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນແລ້ວສະເໜີຄຳຕອບທີ່ເປັນເອກະພາບກັນວ່ານິທານເລື່ອງນີ້ມີເນື້ອໃນເວົ້າເຖິງວິທີການຕໍ່ສູ້, ກຳລັງນ້ອຍສູ້ກັບກຳລັງໃຫຍ່ຕ້ອງມີຄວາມສາມັກຄີກັນ. ດັ່ງນັ້ນ, ນິທານເລື່ອງນີ້ຈຶ່ງເປັນມີລະຕິຕັກເຕືອນສັ່ງສອນຄົນເຮົາໃຫ້ມີຄວາມສາມັກຄີກັນດັ່ງສຸພາສິດທີ່ກ່າວວ່າ: ເຫັບວ່າປາກນົກນ້ອຍຊ້າງຢ່າຟ້າວຢຽບລົງໜັກຫຼາຍເນີ, ບາດນົກໂຮມແຮງກັນຊິຕອດຕາຍໂຕຊ້າງ.

- ຄູສະຫຼຸບສັງລວມໃຫ້ນັກຮຽນເຫັນແຈ້ງ ກ່ຽວກັບເນື້ອໃນຂອງນິທານສັດທີ່ເອົາເລື່ອງສັດມາປຽບທຽບໃສ່ຄົນ ແລ້ວເຮັດໃຫ້ນິທານສັດມີເນື້ອໃນເປັນລະຕິເຕືອນໃຈແກ່ການດຳລົງຊີວິດຂອງຄົນ.

### 3. ການສອນສິລະປະການແຕ່ງ

- ຄູໃຫ້ນັກຮຽນອ່ານສິລະປະການແຕ່ງໃນປຶ້ມແບບຮຽນຕາມຄວາມເໝາະສົມ.

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ສິລະປະການແຕ່ງນິທານສັດມີຄືແນວໃດ?

2) ນິທານສັດມີໂຄງປະກອບສ້າງຈັກດ້ານຄືດ້ານໃດແດ່?

- ຄູສະຫຼຸບຄຳຕອບຂອງນັກຮຽນ ແລະ ຕອບຄຳຖາມທີ່ຖືກຕ້ອງແກ່ນັກຮຽນຄື:

1) ສິລະປະການແຕ່ງນິທານສັດມີສິລະປະປຽບທຽບໂດຍທາງອ້ອມ, ສິລະປະລະຄອນ ແລະ ສິລະປະການກອນ.

2) ໂຄງປະກອບຂອງນິທານສັດມີ 2 ດ້ານຄື: ດ້ານຮູບປະທຳ ແລະ ນາມມະທຳ.

- ຄູຕັ້ງຄຳຖາມສົນທະນາກ່ຽວກັບຄຳສັບຄືຄຳວ່າ: "ຮູບປະທຳ" ແລະ "ນາມມະທຳ" ມີຄວາມໝາຍແນວໃດ?
- ຄູໃຫ້ນັກຮຽນຕອບຄຳຖາມດັ່ງກ່າວຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມຄິດຄວາມເຫັນຂອງນັກຮຽນ ພ້ອມທັງຊີ້ແຈ້ງໃຫ້ນັກຮຽນຮູ້ຄວາມໝາຍຂອງຄຳສັບ "ຮູບປະທຳ" ແລະ "ນາມມະທຳ" ຄື: ຮູບປະທຳ ແມ່ນສິ່ງທີ່ເຫັນໄດ້, ຈັບບາຍໄດ້. ນາມມະທຳ ແມ່ນ ສິ່ງທີ່ບໍ່ສາມາດເຫັນປະຈັກຕາໄດ້ ແລະ ຈັບບາຍບໍ່ໄດ້.

## 4. ການສອນວິພາກເລື່ອງ "ປັນຍາ"

### 4.1 ການແບ່ງຕອນ

- ຄູຈັດກຸ່ມນັກຮຽນຕາມຄວາມເໝາະສົມ.
- ຄູແນະນຳໃຫ້ນັກຮຽນຄົ້ນຄວ້າເປັນກຸ່ມຕາມຄຳຖາມດັ່ງນີ້:

1) ນິທານສັດເລື່ອງ "ປັນຍາ" ແບ່ງອອກເປັນຈັກຕອນ, ແຕ່ລະຕອນມີເນື້ອໃນເວົ້າເຖິງຫຍັງ?

2) ເນື້ອໃນລວມຂອງນິທານສັດເລື່ອງ "ປັນຍາ" ເວົ້າເຖິງຫຍັງ?

- ຄູໃຫ້ຕາງໜ້າກຸ່ມຂຶ້ນລາຍງານຜົນຂອງການຄົ້ນຄວ້າ.
- ຄູໃຫ້ນັກຮຽນຜູ້ອື່ນໆປະກອບຄວາມເຫັນເພີ່ມຕື່ມ.
- ຄູສະຫຼຸບການລາຍງານການຄົ້ນຄວ້າຂອງແຕ່ລະກຸ່ມດ້ວຍການຕີຊຶມ.
- ຄູອະທິບາຍ ແລະ ຕອບຄຳຖາມທີ່ຖືກຕ້ອງແກ່ນັກຮຽນດັ່ງນີ້:

ນິທານສັດເລື່ອງ "ປັນຍາ" ແບ່ງເປັນ 3 ຕອນຄື:

+ ຕອນທີ1: ແຕ່ຕົ້ນ ເຖິງ ໄປຖາມພໍ່ນາພຸ້ນ. ເນື້ອໃນຕອນນີ້ເສືອສົນໃຈ "ປັນຍາ" ຂອງພໍ່ນາທີ່ສາມາດບັງຄັບຄວາຍໃຫ້ໄຖນາໄດ້.
+ ຕອນທີ2: ແຕ່ເສືອຄ່ອຍຍ່າງໄປຫາພໍ່ນາ ເຖິງ ນີ້ແລ້ວປັນຍາ! ເນື້ອໃນຕອນນີ້ເວົ້າເຖິງພໍ່ນາບອກປັນຍາໃຫ້ເສືອຮູ້ດ້ວຍການເອົາໄຟຈູດເຜົ້າເສືອ.
+ ຕອນທີ3: ແຕ່ເສືອຖືກໄຟໄໝ້ ເຖິງສຸດທ້າຍ. ເນື້ອໃນຕອນນີ້ເວົ້າເຖິງສາຍເຫດຂອງເສືອທີ່ເປັນສີລາຍ ແລະ ຄວາຍບໍ່ມີແຂ້ວເບື້ອງເທິງ.

- ຄູອີງໃສ່ເນື້ອໃນຂອງແຕ່ລະຕອນ ແລ້ວສະຫຼຸບເນື້ອໃນລວມຂອງນິທານເລື່ອງ "ປັນຍາ" ນີ້ແກ່ນັກຮຽນຄື: ນິທານສັດເລື່ອງນີ້ມີເນື້ອໃນອະທິບາຍຈຸດພິເສດຂອງເສືອມີລາຍ, ຄວາຍບໍ່ມີແຂ້ວເບື້ອງເທິງເພາະປັນຍາຂອງພໍ່ນາ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ເລື່ອງນີ້ມີຕົວລະຄອນຈັກຕົວ ຄືຕົວໃດແດ່?

2) ໃນເລື່ອງນີ້ແມ່ນຕົວລະຄອນໃດເປັນຕົວລະຄອນເອກ ແລະ ຕົວລະຄອນສຳຮອງ?

3) ຕົວລະຄອນແຕ່ລະຕົວມີການເຄື່ອນໄຫວແນວໃດ?

- ຄູໃຫ້ເວລາແກ່ນັກຮຽນຄົ້ນຄວ້າເປັນກຸ່ມ ຫຼື ບຸກຄົນກໍໄດ້.
- ຄູໃຫ້ນັກຮຽນຂຶ້ນລາຍງານການຄົ້ນຄວ້າ (ຕາມການກະກຽມ).
- ຄູສະຫຼຸບການລາຍງານການຄົ້ນຄິດຂອງນັກຮຽນພ້ອມມທັງຕຳນິຕິຊົມ.
- ຄູອະທິບາຍ ແລະ ໃຫ້ຄຳຕອບທີ່ຖືກຕ້ອງແກ່ນັກຮຽນຄື: ຕົວລະຄອນໃນເລື່ອງນີ້ມີ 3 ຕົວຄື: ເສືອ, ພໍ່ນາ ແລະ ຄວາຍ. ເສືອເປັນຕົວລະຄອນເອກ ສ່ວນພໍ່ນາ ແລະ ຄວາຍເປັນຕົວລະຄອນສຳຮອງ. ການເຄື່ອນໄຫວຂອງຕົວລະຄອນມີດັ່ງນີ້:

+ ເສືອ ຫຼຽວເຫັນຄວາຍຖືກພໍ່ນາບັງຄັບໄຖນາ, ເສືອຖາມເຫດຜົນກັບຄວາຍ ແລະ ໄປຖາມເບິ່ງປັນຍາກັບພໍ່ນາ, ເສືອຖືກມັດ ແລະ ຖືກໄຟໄໝ້ເຮັດໃຫ້ເສືອກາຍເປັນສີລາຍ.

+ ຄວາຍ, ຄວາຍເຫັນເສືອຖືກໄຟໃໝ້, ຄວາຍຫົວຂວັນຈົນແຂ້ວເປ້ືອງເທິງຫຼ່ອນ.

+ ຄົນ ສະແດງປັນຍາໃຫ້ເສືອເບ່ິງດ້ວຍການໃຊ້ອຸບາຍມັດເສືອຕິດກົກໄມ້, ເອົາເຟືອງປົກແລ້ວເອົາໄຟຈູດ.

**4.2 ສິລະປະການແຕ່ງ**

- ຄູໃຫ້ນັກຮຽນອ່ານເລື່ອງ "ປັນຍາ" ອີກເທື່ອໜຶ່ງແລ້ວຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄວ້າຄື: ຈົ່ງຊອກຫາສຳນວນພັນລະນາຕົວລະຄອນເສືອ, ຄວາຍ ແລະ ຄົນຕົວລະ 2 ສຳນວນ?
- ຄູໃຫ້ເວລາແກ່ນັກຮຽນຄົ້ນຄວ້າປະມານ 10 ນາທີ ອາດຈະຄົ້ນຄວ້າເປັນກຸ່ມ ຫຼື ເປັນບຸກຄົນກໍ່ໄດ້.
- ຄູໃຫ້ນັກຮຽນລາຍງານຜົນຂອງການຄົ້ນຄວ້າ.
- ຄູສະຫຼຸບການລາຍງານການຄົ້ນຄວ້າຂອງນັກຮຽນ ພ້ອມທັງຂຽນຄຳຕອບທີ່ຖືກຕ້ອງແກ່ນັກຮຽນເຊັ່ນ:

+ ສຳນວນພັນລະນາຕົວລະຄອນເສືອ: ເສືອໂຄ່ງໂຕໜຶ່ງ, ເສືອຄ່ອຍຍ່າງໄປຫາພໍ່ນາ ແລະ ຖາມຢ່າງສຸພາບ.

+ ສຳນວນພັນລະນາຕົວລະຄອນຄວາຍ: ຄວາຍໂຕລ້ຳສັນແຂງແຮງ, ຄວາຍແກ່ໄຖ..., ຄວາຍບໍ່ຮູ້ອະທິບາຍແນວໃດໃຫ້ເສືອເຂ້ົາໃຈ.

+ ສຳນວນພັນລະນາຕົວລະຄອນຄົນ: ຄົນຮ່າງນ້ອຍແຕ່ມີປັນຍາ, ປັນຍາຂ້ອຍເອົາໄວ້ຢູ່ເຮືອນ.

- ຄູໃຫ້ນັກຮຽນອ່ານເລື່ອງ "ປັນຍາ" ແລ້ວຊອກຫາສຳນວນພັນລະນາພາບຄວາຍໄຖນາ, ເສືອໄຟໄໝ້, ຄົນສະແດງອຸບາຍ ຢ່າງລະ 2 ສຳນວນ.
- ຄູໃຫ້ເວລາແກ່ນັກຮຽນຄົ້ນຄວ້າ ອາດຈະຄົ້ນຄວ້າເປັນກຸ່ມ ຫຼື ບຸກຄົນກໍໄດ້.
- ຄູໃຫ້ນັກຮຽນລາຍງານຜົນຂອງການຄົ້ນຄວ້າ.
- ຄູໃຫ້ນັກຮຽນຜູ້ອື່ນປະກອບຄວາມເຫັນເພີ່ມຕື່ມ.
- ຄູສະຫຼຸບການລາຍງານການຄົ້ນຄວ້າຂອງນັກຮຽນ ພ້ອມທັງຂຽນຄຳຕອບທີ່ຖືກຕ້ອງແກ່ນັກຮຽນເຊັ່ນ:

+ ພັນລະນາພາບຄວາຍແກ່ໄຖເຊັ່ນ: ຄວາຍກົ່ງຫຼັງບືນແກ່ໄຖ, ມັນຖືກຂາເທື່ອລະບາດແສນໜັກ ໜ່ວງ.

+ ພັນລະນາພາບເສືອຖືກໄຟໄໝ້ເຊັ່ນ: ເສືອຖືກໄຟໄໝ້ຂົນເກືອບໝົດ, ເສືອຮ້ອງຕາຍທັງຄົ້ນດິກໆ!

+ ພັນລະນາຄົນສະແດງອຸບາຍເຊັ່ນ: ພໍ່ນາລຸກຂຶ້ນເຮັດຕິເມືອເຮືອນ, ພໍ່ນາຍ່າງໄປສອງສາມກ້າວ ແລ້ວເຮັດຄືຄິດເຫັນອັນໃດອັນໜຶ່ງເລີຍກັບມາ.

## 5. ການສອນຂຽນສະຫຼຸບເຫດການໃນເລື່ອງ "ປັນຍາ"

- ຄູໃຫ້ນັກຮຽນອ່ານເລື່ອງ "ປັນຍາ".
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ເຫດການສຳຄັນໃນເລື່ອງມີຈັກເຫດການ ຄືເຫດການໃດແດ່?

- ຄູໃຫ້ເວລານັກຮຽນຄົ້ນຄວ້າເປັນກຸ່ມ ຫຼື ເປັນບຸກຄົນຕາມຄວາມເໝາະສົມ.
- ຄູໃຫ້ນັກຮຽນລາຍງານການຄົ້ນຄວ້າ.
- ຄູສະຫຼຸບການລາຍງານຂອງນັກຮຽນດ້ວຍການຕິຊົມ.
- ຄູອະທິບາຍຄຳຕອບຂອງຄຳຖາມໃຫ້ຈະແຈ້ງແກ່ນັກຮຽນດັ່ງນີ້:

+ ເຫດການທີ 1: ເສືອງຶດເມື່ອເຫັນພໍ່ນາບັງຄັບຄວາຍໄຖນາ.

+ ເຫດການທີ 2: ເສືອໄປຫາຄວາຍ ແລະ ຖາມວ່າ: ເປັນຫຍັງຄວາຍໂຕໃຫຍ່ຈຶ່ງຖືກພໍ່ນາຮູບຮ່າງນ້ອຍໆບັງຄັບ, ຄວາຍຕອບວ່າ ເຖິງເຂົາບ້ອຍແຕ່ເຂົາມີປັນຍາ.

+ ເຫດການທີ 3: ເສືອໄປຂໍເບິ່ງປັນຍານຳພໍ່ນາ.

+ ເຫດການທີ 4: ພໍ່ນາເອົາປັນຍາໃຫ້ເສືອເບິ່ງ ດ້ວຍການມັດເສືອໃສ່ກັບກົກໄມ້, ເອົາເຟືອງປົກ ແລ້ວເອົາໄຟຈູດ,

+ ເຫດການທີ 5: ໄຟໄໝ້ເສືອເຮັດໃຫ້ເສືອລາຍ ແລະ ຄວາຍຫົວຂວັນເສືອຈົນແອ້ວເບື້ອງເທິງຫຼ່ອນ.

## 6. ການສອນຂຽນສະຫຼຸບຫຍໍ້ເລື່ອງ "ປັນຍາ"

- ຄູຈັດກຸ່ມນັກຮຽນເພື່ອຄົ້ນຄວ້າໃນຫ້ອງຕາມເນື້ອໃນປຶ້ມແບບຮຽນ.
- ຄູໃຫ້ນັກຮຽນຂຽນສະຫຼຸບຫຍໍ້ເລື່ອງ "ປັນຍາ" ໃສ່ໃນປຶ້ມຂຽນຂອງຕົນ.
- ຄູໃຫ້ນັກຮຽນສົ່ງບົດຂຽນໂດຍຫຍໍ້ ຫຼື ລາຍງານການຄົ້ນຄວ້າຕາມຄວາມເໝາະສົມ.
- ຄູສະຫຼຸບບົດຂຽນ ຫຼື ການລາຍງານຂອງນັກຮຽນດ້ວຍການຕິຊົມ. ຄູອະທິບາຍວິທີຂຽນສະຫຼຸບຫຍໍ້ເລື່ອງ, ຈາກນັ້ນຄູອ່ານບົດຕົວຢ່າງ ການຂຽນຫຍໍ້ເລື່ອງ "ປັນຍາ" ທີ່ຄູກຽມມາສູ່ນັກຮຽນຟັງ ດັ່ງນີ້: ມື້ໜຶ່ງເສືອຫຼຽວເຫັນພໍ່ນາບັງຄັບຄວາຍໄຖນາ. ເສືອງຶດເພາະຄວາຍໃຫຍ່ກວ່າຄົນ, ເສືອຈຶ່ງເຂົ້າໄປຖາມຄວາຍວ່າ: ເປັນຫຍັງເຈົ້າໂຕໃຫຍ່ແຂງແຮງຈຶ່ງຖືກຄົນບັງຄັບໃຫ້ແກ່ໄຖ, ຄວາຍຕອບເຖິງວ່າ: ຄົນບ້ອຍແຕ່ເຂົາມີປັນຍາ.

ເສືອສົນໃຈວ່າປັນຍາແມ່ນຫຍັງ? ເສືອຈຶ່ງເຂົ້າໄປຖາມເບິ່ງປັນຍານຳພໍ່ນາ, ພໍ່ນາຄິດກົນອຸບາຍບົດ

ໜຶ່ງຈຶ່ງເວົ້າວ່າ: ປັນຍາເອົາໄວ້ຢູ່ເຮືອນບໍ່ໄດ້ເອົາມານຳ, ຄວາຍຂໍຮ້ອງໃຫ້ພໍ່ນາເອົາມາເບິ່ງ. ພໍ່ນາຕອບ ວ່າບໍ່ໄດ້ເພາະຢ້ານເສືອກິນຄວາຍຂອງພໍ່ນາ, ເພື່ອໃຫ້ພໍ່ນາໝັ້ນໃຈເສືອຕົກລົງໃຫ້ພໍ່ນາມັດຕົນເອງໃສ່ຕົ້ນໄມ້ໄວ້. ພໍ່ນາໄດ້ໂອກາດຈຶ່ງມັດເສືອໃສ່ຕົ້ນໄມ້ ເອົາເຟືອງມາປົກແລ້ວເອົາໄຟມາຈູດເສືອ.

ເສືອຖືກໄຟໄໝ້ຈົນດ່າງດາວໝົດ, ຄວາຍເຫັນເສືອຖືກໄຟໄໝ້ຈຶ່ງຫົວຂັ້ນ ບັງເອີນແຂ້ວເປື້ອງເທິງ ໄປຕຳໃສ່ຫີນເຮັດໃຫ້ແຂ້ວຫັກໝົດກ້ຽງ. ນັບແຕ່ນັ້ນມາຄວາຍບໍ່ມີແຂ້ວເປື້ອງເທິງ.

## 7. ການສອນສະແດງລະຄອນກ້ອມເລື່ອງ "ປັນຍາ"

- ຄູຈັດກຸ່ມນັກຮຽນ ຫຼື ໃຫ້ນັກຮຽນເລືອກກຸ່ມເອງ ຊຶ່ງຈຳນວນໃນກຸ່ມໃຫ້ຄົບຕາມຕົວລະຄອນໃນເລື່ອງຄື:

+ ຜູ້ໜຶ່ງສະແດງ ເປັນ ເສືອໂຄ່ງ ຜູ້ນີ້ໃຫ້ອ່ານ ແລະ ຈື່ຈຳຄຳເວົ້າຂອງເສືອໂຄ່ງ.
+ ຜູ້ໜຶ່ງສະແດງ ເປັນ ຄວາຍ ຜູ້ນີ້ໃຫ້ອ່ານ ແລະ ຈື່ຈຳຄຳເວົ້າຂອງຄວາຍ.
+ ຜູ້ໜຶ່ງສະແດງ ເປັນ ພໍ່ນາ ຜູ້ນີ້ໃຫ້ອ່ານ ແລະ ຈື່ຈຳຄຳເວົ້າຂອງພໍ່ນາ.
+ ຜູ້ໜຶ່ງສະແດງ ເປັນ ຕົ້ນໄມ້ໃກ້ຖຽງນາ, ໃຫ້ຈັບຕົ້ນໄມ້.
+ ສ່ວນໄຖຄູອາດຈະເອົາໄມ້ເຮັດເປັນໄຖ.

- ຄູແນະນຳໃຫ້ນັກຮຽນຝຶກການສະແດງຕາມແຕ່ລະກຸ່ມ ແລ້ວມາສະແດງຢູ່ຫ້ອງແຂ່ງກັນເປັນກຸ່ມ.
- ຄູສະຫຼຸບການສະແດງລະຄອນຂອງນັກຮຽນແຕ່ລະກຸ່ມດ້ວຍການຍ້ອງຍໍ ແລະ ຕິຊົມ.

◆ ກິດຈະກຳທີ່ກ່າວມານີ້ຄູອາດນຳພານັກຮຽນສະແດງລະຄອນ ຕາມເວລາທີ່ເໝາະສົມ.

## ★ ຕອບຄຳຖາມທ້າຍບົດ

1) ນິທານສັດ ແມ່ນເລື່ອງພື້ນເມືອງລາວທີ່ປັ້ນແຕ່ງຂຶ້ນດ້ວຍວິທີປັ້ນແຕ່ງຕົວລະຄອນສັດແລ້ວຍົກເອົາຈຸດພິເສດ, ລັກສະນະສະເພາະຂອງສັດແຕ່ລະຊະນິດ ແລ້ວນຳມາປຽບທຽບໃສ່ຈຸດພິເສດ, ລັກສະນະຂອງຄົນ. ຈຸດປະສົງເພື່ອສຶກສາແນວຄິດຄຸນສົມບັດ, ຄວາມສັດຈະທຳ ແລະ ແບບແຜນການດຳລົງຊີວິດຂອງຄົນໃນສັງຄົມ.

2) ນິທານສັດກຳເນີດມາຈາກການອອກແຮງງານ ການດຳລົງຊີວິດຂອງປະຊາຊົນຜູ້ອອກແຮງງານລາວ. ເນື່ອງຈາກວ່າຊາວຜູ້ອອກແຮງງານລາວສະໄໝກ່ອນດຳລົງຊີວິດຕິດພັນກັບທຳມະຊາດ ໂດຍສະເພາະແມ່ນການລ້ຽງສັດ ແລະ ລ່າສັດເປັນອາຫານ. ດັ່ງນັ້ນ, ເຂົາເຈົ້າຈຶ່ງສັງເກດເບິ່ງຮູບຮ່າງສີສັນ ແລະ ຈຸດພິເສດຂອງແຕ່ລະປະເພດສັດ ແລ້ວນຳມາເລົ່າກາຍເປັນເລື່ອງເລົ່າກ່ຽວກັບສັດ. ຕໍ່ມາເຂົາເຈົ້ານຳເອົາເລື່ອງສັດຕ່າງໆເຫຼົ່ານັ້ນມາປຽບທຽບໃສ່ຄົນ, ຈຶ່ງກາຍເປັນນິທານສັດ. ໝາຍຄວາມວ່ານິທານສັດໄດ້ກຳເນີດ ແລະ ຂະຫຍາຍຕົວຕັ້ງແຕ່ສະໄໝກ່ອນຈົນເຖິງປັດຈຸບັນນີ້.

3) ນິທານສັດມີເນື້ອໃນສຶກສາຄວາມຮູ້ກ່ຽວກັບສັດ, ນິທານສັດໄດ້ອະທິບາຍຈຸດພິເສດ, ລັກສະນະຂອງສັດແຕ່ລະປະເພດເຊັ່ນ: ເສືອໂຕມີສີລາຍ, ຄວາຍບໍ່ມີແຂ້ວເປື້ອງເທິງ, ຊ້າງໂຕໃຫຍ່, ຫອຍຍ່າງຊ້າ, ງູມີພິດ ແລະ ອື່ນໆ... ນອກຈາກນີ້, ນິທານສັດຍັງມີເນື້ອໃນເປັນຄະຕິເຕືອນໃຈໃຫ້ແກ່ການດຳ

ລ້ຽງຊີວິດ. ເນື່ອງຈາກຊາວບູຮານສັງເກດເຫັນສັດ ແລະ ຄົນມີການເກີດ, ການຕາຍ, ມີການ ເກີດແມ່ ແຜ່ລູກຄືກັບຄົນ, ຊາວບູຮານລາວເຊື່ອວ່າສັດກໍມີແນວຄິດຈິດໃຈຄືກັນກັບຄົນ. ດັ່ງນັ້ນ, ຊາວບູຮານ ລາວຈຶ່ງມັກເອົາເລື່ອງສັດມາປຽບທຽບໃສ່ຄົນ ຈຶ່ງເຮັດໃຫ້ນິທານສັດກາຍເປັນບົດຮຽນຄວາມຮູ້ທີ່ເປັນ ຄະຕິຄຳສອນໃນການດຳເນີນຊີວິດ. ບົດຮຽນຄຳສອນໃນນິທານເຖິງວ່າຈະເປັນບັນຫານ້ອຍແຕ່ມີຄວາມ ສຳຄັນ ແລະ ຈຳເປັນໃນການດຳລ້ຽງຊີວິດຂອງຄົນເຮົາ ຕົວຢ່າງ: ຊ້າງກັບນົກໄສ່ໄດ້ເປັນບົດຮຽນສອນ ໃຫ້ຮູ້ຄວາມສາມັກຄີ ຈຶ່ງສາມາດເອົາກຳລັງທີ່ນ້ອຍສູ້ກັບກຳລັງອັນໃຫຍ່ຫຼວງ.

4) ນິທານສັດເປັນບົດເລື່ອງທີ່ໄດ້ຮັບຄວາມນິຍົມຊົມຊອບຈາກປະຊາຊົນຢ່າງກ້ວາງຂວາງເໝາະ ສົມກັບການສຶກສາແນວຄິດສຳລັບເດັກ. ທັງນີ້ກໍ່ເນື່ອງຈາກວ່າສິລະປະການປະດິດແຕ່ງຂອງນິທານ ສັດ ທີ່ໃຊ້ການປຽບທຽບໂດຍທາງອ້ອມ, ໃຊ້ລັກສະນະຄອນ ແລະ ໃຊ້ລັກສະນະການກອນທີ່ແອ້ມດ້ວຍ ສຸພາສິດທີ່ເປັນຄະຕິເຕືອນໃຈໃນການດຳລ້ຽງຊີວິດ.

5) ນິທານສັດ ເລື່ອງ "ປັນຍາ" ສອນໃຫ້ພວກເຮົາຮູ້ຈຸດພິເສດຂອງເສືອທີ່ມີລາຍ, ຄວາຍບໍ່ມີແຂ້ວ ເບື້ອງເທິງ, ຄົນມີປັນຍາ.

6) ນິທານສັດ ເລື່ອງ "ຊ້າງ ແລະ ນົກໄສ່" ສອນໃຫ້ພວກເຮົາຮູ້ຮັກຮູ້ສາມັກຄີກັນ.

7) ນິທານສັດເລື່ອງ "ເສືອເຖົ້າຈຳສິນ" ສອນໃຫ້ພວກເຮົາຕ້ອງມີສະຕິລະວັງຕົວຢູ່ສະເໝີ ຢ່າຫູ ເບົາໃຈງ່າຍ.

✱ ຄູແນະນຳໃຫ້ນັກຮຽນອ່ານບົດຕໍ່ໄປ.

## V. ການວັດ ແລະ ປະເມີນຜົນ

ສັງເກດຈາກ:

- ການອະທິບາຍຄວາມໝາຍ, ການກຳເນີດ ແລະ ຂະຫຍາຍຕົວຂອງນິທານສັດ.
- ການອະທິບາຍເນື້ອໃນການສ່ອງແສງຂອງນິທານສັດ.
- ການອະທິບາຍສິລະປະການແຕ່ງນິທານສັດ.

ກວດຜົນງານຈາກ:

- ການວິພາກເລື່ອງ "ປັນຍາ"
- ການຂຽນສະຫຼຸບເຫດການໃນເລື່ອງ "ປັນຍາ"
- ການຂຽນສະຫຼຸບຫຍໍ້ເລື່ອງ "ປັນຍາ"
- ການສະແດງລະຄອນເລື່ອງ "ປັນຍາ"




ໝາຈອກ




ກວາງ



ເສືອ



ຄົນໄຖນາ



ງົວ



ລີງ

## ບົດອ່ານເພີ່ມ

## ກວາງ ແລະ ໝາຈອກ

ມີປ່າແຫ່ງໜຶ່ງ ເປັນທີ່ອາໄສຂອງສັດສອງສະຫາຍຄື: ກວາງກັບກາມາເຫິງນານແລ້ວ. ວັນໜຶ່ງ ໝາຈອກໂຕໜຶ່ງມາເຫັນກວາງ ຈຶ່ງຄິດໃນໃຈວ່າ " ຮຶ? ເຮັດຈັ່ງໃດນໍ? ກູຈັ່ງຊິໄດ້ກິນກວາງຜີໂຕນີ້; ບ໊ະ! ເຮົາຕ້ອງລໍ້ລວງໃຫ້ມັນຕາຍໃຈເສຍກ່ອນ". ຕົກລົງໃຈດັ່ງນີ້ແລ້ວຈຶ່ງເບັດໜ້າເຂົ້າໄປຫາກວາງແລ້ວ ເວົ້າວ່າ: "ສ່ຽວເອີຍ! ຂໍສ່ຽວຈົ່ງມີຄວາມສຸກສະຫວັດດີ ທຸກທິວາລາຕິເຖີ້ນ". ກວາງຫັນໜ້າມາຖາມ "ອ້າວ! ເຈົ້າແມ່ນໃຜ ມາແຕ່ໃສ?".

ໝາຈອກ "ຂ້າພະເຈົ້າແມ່ນໝາຈອກ, ເຊິ່ງອາໄສຢູ່ໃນປ່ານີ້ຜູ້ດຽວບໍ່ມີພີ່ນ້ອງປານຄົນຕາຍແລ້ວ, ບັດນີ້ໄດ້ມາເຫັນທ່ານມີຄວາມດີໃຈຫຼາຍປານຕາຍແລ້ວເກີດໃໝ່, ເຫດນີ້ຂໍທ່ານຈົ່ງເມດຕາຮັບເອົາຂ້າພະເຈົ້າໄວ້ເປັນຂ້າຊ່ວງໃຊ້ດ້ວຍເຖີ້ນ".

ກວາງຮັບວ່າ "ເອີ! ບໍ່ເປັນຫຍັງ" ຢູ່ມາພໍຕາເວັນບ່າຍລັບລ່ຽມພູລົງແລ້ວ, ກວາງກັບໝາຈອກກໍພາກັນໄປສູ່ບ່ອນຢູ່ຂອງກາ, ກາເຫັນສັດທັງສອງຢ່າງມາຈຶ່ງຮ້ອງຖາມວ່າ: "ສະຫາຍກວາງໂຕ ພາໃຜມານຳຫັ້ນ", ກວາງບອກວ່າ: "ໝາຈອກຕ້ອງການຈະຜູກໄມຕີກັບຂ້າພະເຈົ້າ" ກາທ້ວງວ່າ: "ສ່ຽວ! ການໄວ້ເນື້ອເຊື່ອໃຈຜູ້ອື່ນໃນເວລາອັນຮີບດ່ວນ ກັບຜູ້ທີ່ເຫັນກັນໃໝ່ບໍ່ເປັນການສົມຄວນເລີຍ".

ໝາຈອກໄດ້ຟັງກາເວົ້າປຽບທຽບດັ່ງນັ້ນ ກໍຄຽດຈຶ່ງເວົ້າວ່າ: "ເມື່ອກວາງໄດ້ພໍ້ທ່ານໃນວັນທຳອິດກໍຍັງບໍ່ຮູ້ນິດໄສໃຈຄໍກັນ ເຫດສັນໃດທ່ານຈຶ່ງເປັນມິດກັນໄດ້?"

ທຳມະດາຖິ່ນໃດໄຮ້ນັກປາດ ຖິ່ນນັ້ນຜູ້ທີ່ຜ່ານພໍຮູ້ອີ່ຫຍັງແດ່ເລັກໜ້ອຍກໍຍົກຍ້ອງກັນເປັນນັກປາດໄດ້. ປຽບທຽບໃນດິນແດນອັນໄຮ້ພືກສາຊາດ, ແມ່ນແຕ່ຕົ້ນຫຸ່ງສາກໍນັບວ່າເປັນຕົ້ນໄມ້ໃຫຍ່ໄດ້.

"ຜູ້ນີ້ເປັນພວກເຮົາ ຫຼື ພວກອື່ນ?" ນີ້ເປັນຂໍ້ຖືຂອງຜູ້ມີໃຈແຄບ, ຜູ້ມີໃຈກວ້າງຍ່ອມຖືວ່າຜູ້ຢູ່ເໜືອແຜ່ນດິນທັງໝົດເປັນພວກດຽວກັນ, ເມື່ອກວາງເປັນສະຫາຍກັບຂ້າພະເຈົ້າ, ທ່ານກໍ່ເປັນສະຫາຍຂອງຂ້າພະເຈົ້າຄືກັນ".

ກວາງເວົ້າຂົ້ນຕັດບົດວ່າ: "ນີ້ແມ່ນຊິມາຖຽງກັນຫາປະໂຫຍດອີ່ຫຍັງ? ຂໍໃຫ້ເຮົາທັງສາມຢູ່ເປັນສຸກ, ສະມາຄົມກົມກຽວກັນດີກວ່າເພາະວ່າໃຜໆກໍບໍ່ແມ່ນມິດຂອງຜູ້ໃດ, ໃຜໆກໍບໍ່ແມ່ນສັດຕູຂອງຜູ້ໃດຈະເກີດເປັນມິດກັນຂົ້ນກໍຍ້ອນຄວາມປະພຶດ, ຈະເກີດເປັນສັດຕູກັນຂົ້ນກໍສັນດຽວ". ກາວ່າ: "ເອີຖ້າຈັ່ງຊັ້ນກໍ່ຕາມໃຈ".

ຮຸ່ງເຊົ້າມາ, ສັດສາມໂຕນັ້ນກໍໄປຊອກຫາກິນໃນຖິ່ນທີ່ຕົນພໍໃຈ ຢູ່ມາມື້ໜຶ່ງ, ໝາຈອກເວົ້ານຳກວາງເປັນຄວາມລັບວ່າ "ສ່ຽວເອີຍ! ໃນປ່າແຫ່ງນີ້ມີບ່ອນໜຶ່ງເຂົ້າຂຽວງາມດີ ຂ້າພະເຈົ້າຈະພາໄປເບິ່ງ". ເມື່ອໝາຈອກໄດ້ຈັດການໃຫ້ເປັນດັ່ງນັ້ນແລ້ວ, ກວາງກໍໄປກິນເຂົ້າໃນໄຮ່ນັ້ນທຸກມື້, ຕໍ່ມາສອງສາມມື້ເຈົ້າຂອງໄຮ່ມາເຫັນຮອຍກວາງກິນເຂົ້າ ຈຶ່ງຈັດການຫ້ວງແຮ້ວດັກໄວ້.ໃນຄືນນັ້ນກວາງເຂົ້າມາ

ກິນເຂົ້າໃນໄຮ່ຕາມເຄີຍຈຶ່ງມາຖືກແຮ້ວ, ກວາງດົ້ນທ່ໃດກໍບ່ໜຸດ ຈຶ່ງຄຶດຮ່ຳເຜິ່ງວ່າ: "ຜູ້ສາມາດພໍທີ່ ຈະໃຫ້ເຮົາພົ້ນຈາກຄວາມຕາຍນີ້ໄດ້ບ່ເຫັນໃຜ, ນອກຈາກມິດສະຫາຍ". ໃນຂະນະທີ່ກວາງກຳລັງຄິດ ກັງວົນຢູ່, ໝາຈອກກໍມາເຫັນມັນຄິດໃນໃຈວ່າ" ກິນອຸບາຍຂອງເຮົາສຳເລັດແລ້ວ ຄວາມປາຖະໜາ ຂອງເຮົາຈະໄດ້ຮັບຜົນຢ່າງບ່ຕ້ອງສົງໄສ, ເພາະວ່າເມື່ອເຈົ້າຂອງໄຮ່ປາດກວາງ, ເຮົາກໍ່ຈະໄດ້ກິນກະ ດູກທີ່ມີຊີ້ນ ແລະ ເລືອດຕິດຢູ່ຢ່າງແນ່ນອນ". ຝ່າຍກວາງຫຼຽວເຫັນໝາຈອກກໍດີໃຈ ຮ້ອງໃສ່ໃຫ້ໝາ ຈອກຊ່ວຍວ່າ: "ສ່ຽວເອີຍ! ມາຊ່ວຍກັດເຊືອກແຮ້ວນີ້ໃຫ້ຂ້າພະເຈົ້າຫຼຸດໄປໄວໆແດ່".

ໝາຈອກພິຈາລະນາເບິ່ງແຮ້ວເຫັນວ່າຮັດແໜ້ນດີແລ້ວ, ຈຶ່ງເວົ້າວ່າ: "ສ່ຽວເອີຍ! ສາຍແຮ້ວ ນີ້ເຮັດດ້ວຍເອັນສັດ, ວັນນີ້ກໍເປັນວັນສິນຈະໃຫ້ເຮົາເອົາແຂ້ວໄປຊຸນສາຍເອັນນີ້ໄດ້ແນວໃດ? ຄອຍຖ້າໃຫ້ ເຖິງມື້ອື່ນເຊົ້າເປັນມື້ໃໝ່ກ່ອນເຖີດ! ເຮົາຈະຈັດການໃຫ້ທ່ານເອງ!" ເວົ້າແລ້ວກໍ່ໜີໄປນອນຢູ່ໃນພຸ່ມໄມ້ ພຸ່ມໜຶ່ງໃກ້ໆຫັ້ນ.

ກ່າວເຖິງກາ, ເຖິງຍາມແລງມາ ບ່ເຫັນກວາງກໍ່ຫ່ຽວນຳຫາໄປພົ້ກວາງຕົກຢູ່ໃນສະພາບດັ່ງ ກ່າວແລ້ວ ຈຶ່ງເຂົ້າໄປຖາມວ່າ "ໂທ! ສ່ຽວ! ນີ້ເປັນຈັ່ງໃດ?".

ກວາງຕອບວ່າ: "ຍ້ອນບ່ເຊື່ອເຈົ້າຫັນແລ້ວ!".

ກາຖາມວ່າ: "ອ້າຍໝາຈອກໄປໃສແລ້ວ?".

ກວາງຕອບວ່າ: "ນອນຢູ່ພຸ່ມໄມ້ຫັ້ນເດ! ຕັ້ງທ່າຄອຍກິນຊີ້ນຂອງເຮົາຢູ່!

ກາວ່າ: "ສ່ຽວເອີຍ! ຂ້າພະເຈົ້າໄດ້ເຕືອນແລ້ວ. ສ່ຽວທີ່ຍ້ອງຍໍຕ່ໜ້າ ເວລາລັບຫຼັງແລ້ວນິນທາ ນັ້ນຄວນຫຼີກໜີໃຫ້ໄກເອົາ.

ຂ້ົນຊື່ວ່າ ຄົນຊົ່ວໃຜໆບ່ຄວນຜູກເປັນມິດ ຫຼື ຕີສະໜິດນຳ; ເໝືອນກັນກັບຖ່ານໄຟເມື່ອຍັງຮ້ອນຢູ່ ເມື່ອຖືກມືກໍຈະໄໝ້ໂພງ, ເມື່ອມອດເຢັນແລ້ວຈັບບາຍກໍເປື້ອນດຳ".

ຄັນຕື່ນເຊົ້າມາ, ກາຫຼຽວເຫັນເຈົ້າຂອງໄຮ່ຍ່າງມາແຕ່ໄກ ຈຶ່ງຮ້ອງບອກໃຫ້ກວາງນອນເຮັດຕີ ຕາຍ, ເບັ່ງທ້ອງໃຫ້ໄຄ່ ແລະ ຢຽດຂາໃຫ້ແຂງຢູ່, ເມື່ອເຮົາໃຫ້ສຽງວ່າ "ກາ! ເວລາໃດໃຫ້ທ່ານຟ້າວລຸກ ຂ້ົນແລ່ນທັນທີ", ກວາງກໍເຮັດດັ່ງກາບອກ. ເຈົ້າຂອງໄຮ່ມາເຖິງ ເຫັນກວາງຖືກແຮ້ວຕາຍຢູ່ກໍດີໃຈ ຟ້າວຈັດການແກ້ເຊືອກແຮ້ວອອກມາວາງໄວ້, ແລ້ວຍ່າງຫັນໜ້າໄປທາງອື່ນ ເພື່ອຈະເອົາຟືດໄມ້ມາ ຮອງ, ກາກໍໃຫ້ສັນຍານຕາມທີ່ນັດໄວ້, ກວາງໄດ້ຍິນກໍ່ປຸບປັບລຸກຂ້ົນແລ່ນໜີໄປ. ເຈົ້າຂອງໄຮ່ໄດ້ຍິນ ຫັນມາເບິ່ງເຫັນກວາງແລ່ນໜີ ຈຶ່ງແກ່ວງມີດໃສ່ກວາງ, ເລີຍໄປຖືກໝາຈອກທີ່ນອນຢູ່ໃນພຸ່ມໄມ້ນັ້ນໝາ ຈອກເລີຍຕາຍ.

## ເລື່ອງ: "ງົວນັນທະກະ ກັບ ລາຊະສີ"

ແຕ່ກີ້ແຕ່ກ່ອນຍັງມີເສດຖີຜູ້ໜຶ່ງ ຊື່ວ່າທຳມະປາລະ ອາໄສຢູ່ໃນນະຄອນປຸດຕິຍະ. ເສດຖີຜູ້ນັ້ນ ຮັ່ງມີໄປດ້ວຍສິນຄ້ານາໆຊະນິດ ແຕ່ປານນັ້ນກໍຍັງບໍ່ພຽງພໍ, ລາວຈຶ່ງໄດ້ທ່ຽວຄ້າຂາຍຕາມຕົວເມືອງ ຕ່າງໆ. ລາວມີງົວມູນໂຕໜຶ່ງຊື່ວ່າ: ນັນທະກະ ແລະ ເປັນງົວທີ່ແຂງແຮງທີ່ສຸດ.

ຄັ້ງໜຶ່ງ, ເສດຖີຜູ້ນັ້ນໄດ້ໄປຄ້າທີ່ປະເທດກັດສະມີລະ, ບົນເສັ້ນທາງຜ່ານໄປນັ້ນໄດ້ຜ່ານປ່າໃຫຍ່ ອັນຕຶບໜາ ແລະ ຫ້ອຍນ້ຳທີ່ໃສເຢັນ. ເມື່ອນັນທະກະແນມເຫັນຈຶ່ງຄິດວ່າ: "ຍ້ອນເຮົານີ້ແລ້ວຈຶ່ງເຮັດໃຫ້ ເຈົ້າເສດຖີນັບມື້ນັບຮັ່ງມີຂຶ້ນ", ທຸກໆມື້ເຮົາມີແຕ່ແກ່ກອຽນແກ່ລໍ້ບັນທຸກສິນຄ້າໄປຂາຍ, ມັນເປັນເລື່ອງ ທີ່ລຳບາກກາກກຳທີ່ສຸດ, ງົວໂຕອື່ນມີແຕ່ໄປຊອກກິນຫຍ້າຕາມລຳພັງໃຈ .

ເມື່ອມັນຄິດແນວນັ້ນແລ້ວ ມັນກໍທຳທ່າເຮັດຕີລົ້ມເຈັບລົງ. ເມື່ອເສດຖີຮູ້ຈຶ່ງໄດ້ເອົາງົວໂຕໃໝ່ມາ ແທນແລ້ວແຕ່ງໃຫ້ຄົນເຝົ້າພ້ອມທັງສັ່ງວ່າ: "ຖ້າມັນຕາຍໃຫ້ຝັງເສຍ, ບໍ່ພໍເທົ່າໃດນາທີພວກທີ່ເຝົ້າ ງົວກໍແລ່ນໜີໄປນຳເສດຖີ".

ສ່ວນງົວນັນທະກະກໍດີອົກດີໃຈ, ແລ່ນໄປລີ້ຢູ່ບ່ອນທີ່ສະຫວາດສະເຫວີຍ ພ້ອມທັງສົ່ງສຽງຮ້ອງ ດັງກ້ອງໄປທົ່ວດົງ, ກິນຫຍ້າອ່ອນ ແລະ ນ້ຳທີ່ໃສເຢັນຢ່າງສະບາຍ. ໃນປ່າແຫ່ງນັ້ນຍັງມີລາຊະສີໂຕ ໜຶ່ງຊື່ວ່າ: ຈັນທະປິງຄະລະ ເປັນພະຍາຂອງຝູງສັດທັງຫຼາຍ. ເວລາທີ່ຈັນທະປິ, ຄະລະໄປຊອກຫາກິນ ນັ້ນມັນກໍໄດ້ຍິນສຽງຮ້ອງກ້ອງສະໜັ່ນ ຈຶ່ງຟ້າວແລ່ນກັບຄືນດ້ວຍຄວາມສະທ້ານຢ້ານກົວ. ບໍ່ພໍຄາວກໍ ໄດ້ມີໝາຈອກຊື່ວ່າ: ວະສຸພາຄະຍະມາລາຍງານ ເຖິງເລື່ອງລາວຕ່າງໆນັ້ນແກ່ລາຊະສີ.

ເມື່ອຮູ້ແນວນັ້ນແລ້ວບໍ່ດົນລາຊະສີກັບງົວນັນທະກະ, ກໍມີຄວາມຜູກພັນສະໜິດສະໜົມກັນຈົນ ໃນທີ່ສຸດສັດທັງສອງກໍໄດ້ຕົກລົງປົງໃຈຜູກສ່ຽວນຳກັນ ແລະ ທັງສອງກໍໄດ້ກາຍເປັນໃຫຍ່ໃນເຂດປ່າດົງ ແຫ່ງນັ້ນ.

ເມື່ອໝາຈອກຮູ້ຂ່າວວ່າ: ງົວກັບລາຊະສີເປັນມິດກັນແລ້ວ ກໍທຳທ່າໂສກເສົ້າໜ່ວມເໜງົາ ເພື່ອຫວັງທຳລາຍຄວາມສາມັກຄີລະຫວ່າງສັດທັງສອງນັ້ນໃຫ້ຂາດສະບັ້ນລົງ. ມັນຈຶ່ງໄດ້ເອີ້ນເອົາບໍລິ ວານຂອງມັນມາປຶກສາຫາລືວ່າ: ພວກເຮົາບໍ່ອາດທົນຕໍ່ເລື່ອງນີ້ໄດ້ເພາະວ່າ ງົວນັ້ນທະກະນີ້ບໍ່ແມ່ນ ເຊື້ອສາຍລາຍລ່ອງຂອງພວກເຮົາ. ອັນໜຶ່ງອີກອາຫານການກິນຂອງເພິ່ນກໍລ້ວນແຕ່ແມ່ນຫຍ້າອ່ອນ, ສ່ວນລາຊະສີຂອງພວກເຮົານີ້ຜັດກິນແຕ່ຊີ້ນ, ອີກບໍ່ດົນລາຊະສີກໍຊິກິນຫຍ້ານຳງົວສ່ວນພວກເຮົາເດ ຈະເປັນໄປແນວໃດ?

ເມື່ອປຶກສາກັນແລ້ວ, ໝາຈອກກໍໄປຫາງົວ ແລະ ເວົ້ານຳງົວວ່າ: "ລາຊະສີມີຊີວິດຢູ່ໄດ້ກໍຍ້ອນ

ອາໄສຊີ້ນເປັນອາຫານ, ດັ່ງນັ້ນໃນໂອກາດຕໍ່ໄປເພິ່ນກໍຈະ ເອົາຝູງຂ້ານີ້ໄປເປັນອາຫານ, ສ່ວນພະຍາເອງ ຊ້ຳພັດກົງກັນຂ້າມ, ເພາະພະຍາກິນແຕ່ຫຍ້າອ່ອນເປັນອາຫານ. ຈົ່ງຊ່ວຍແກ້ໄຂບັນຫານີ້ຊ່ວຍຝູງຂ້າ ແດ່ທ້ອນ".

ງົວນັນທະກະເວົ້າວ່າ: "ພວກທ່ານບໍ່ຕ້ອງຕົກໃຈ, ເຮົາມີຊີວິດຢູ່ໄດ້ກໍຍ້ອນອາໄສເຮື່ອແຮງຂອງ ຕົນເອງເພື່ອຊອກຢູ່ຫາກິນບໍ່ໄດ້ຂ້າຟັນລັນແທງຜູ້ໃດໝົດ".

ວັນເວລາຜ່ານໄປປະມານ 4-5 ປີ, ໝາຈອກເຂົ້າໄປຫາລາຊະສີຕື່ມອີກ ແລະ ເວົ້າສັບສ່ຕ່ລາ ຊະສີວ່າ: "ພະຍາເອີຍ! ດຽວນີ້ງົວນັນທະກະມີແຕ່ກິນຫຍ້າອ່ອນ, ຊ້ຳບໍ່ໜຳຍັງຄິດທຳຮ້າຍຕໍ່ທ່ານອີກ, ໃຫ້ທ່ານສັງເກດເບິ່ງວ່າ ເມື່ອມັນເຂົ້າມາໃກ້ທ່ານນັ້ນ ມັນຈະກົ້ມຫົວສະເໝີ ອັນນັ້ນບໍ່ແມ່ນມັນສະແດງ ຄວາມນັບຖືທ່ານໃນຖານະເປັນສະຫາຍດອກ, ມັນເຮັດແນວນັ້ນແມ່ນມັນກຽມພ້ອມທີ່ຈະຊົນທ່ານໄດ້ທຸກ ເວລາ, ໃຫ້ທ່ານຈົ່ງລະວັງໄວ້".

ຫຼັງຈາກເວົ້າສັບສ່ຕ່ລາຊະສີແລ້ວ, ໝາຈອກໂຕນັ້ນກໍໄປເວົ້າສ່ຕ່ງົວຕື່ມອີກວ່າ: "ຂ້າພະເຈົ້າມາ ເປັນຫ່ວງນຳທ່ານຫຼາຍແທ້ເດ! ດຽວນີ້ສັງເກດເຫັນວ່າລາຊະສີນັ້ນບໍ່ມີຄວາມພໍໃຈໃນຕົວທ່ານເສຍ ແລ້ວ, ໄດ້ຍິນເພິ່ນເວົ້າເປັນຄວາມລັບວ່າ ຈະຕ້ອງຂ້າທ່ານເປັນອາຫານໃນມື້ໜຶ່ງຂ້າງໜ້າ".

ນັບແຕ່ເວລານັ້ນມາ ສັດທັງສອງກໍໄດ້ບົ່ມຊ້ອນຄວາມແຄ້ນເຄືອງ ແລະ ຄວາມອາຄາດ ພະຍາບາດຕ່ກັນນັບມື້ນັບຮຸນແຮງຂຶ້ນ. ໃນທີ່ສຸດ ສັດທັງສອງກໍໄດ້ປະເຊີນໜ້າກັນ, ໂດຍບໍ່ທັນໄດ້ເວົ້າຈາ ກັນຫຍັງໝົດ, ຍ້ອນຄວາມແຄ້ນໄດ້ຝັງເລິກຢູ່ໃນໃຈຂອງແຕ່ລະຝ່າຍນັ້ນ ໄດ້ເຮັດໃຫ້ສັດທັງສອງທະຍານ ເຂົ້າໃສ່ກັນ ແລະ ຕໍ່ສູ້ກັນຢ່າງດຸເດືອດ. ທັງສອງນັ້ນຕັ້ງໃຈວ່າ ຈະຕ້ອງຂ້າຄູ່ຕໍ່ສູ້ໃຫ້ໄດ້, ບໍ່ມີໃຜຍອມໃຜ ແລະ ໃນທີ່ສຸດສັດທັງສອງກໍຕາຍໄປພ້ອມກັນ.

ຫ້ານຈຳໜ່າຍ

## ເລື່ອງ: "ລີງ ກັບ ນົກຈອກຟ້າ"

ຕັ້ງແຕ່ຄັ້ງດຶກດຳບັນຜຸ້ນ, ແຄມຝັ່ງແມ່ນ້ຳມີປ່າໃຫຍ່ແຫ່ງໜຶ່ງທີ່ສວຍງາມ, ມີນົກຈອກຟ້າໂຕ ໜຶ່ງເຮັດຮັງຢູ່ເທິງປາຍໄມ້; ຢູ່ເທິງຕົ້ນໄມ້ນັ້ນມີແມງທີ່ງຫ້ອຍ ແລະ ລີງໂຕໜຶ່ງອາໄສຢູ່.

ແລງມື້ໜຶ່ງ ໄດ້ເກີດມີຟ້າຝົນຊົນລະທາທ່າໃຫຍ່ຕົກລົງມາເປັນເວລາເທິງນານ, ນົກຈອກຟ້າ ໄດ້ເຂົ້າໄປນອນຢູ່ໃນຮັງຢ່າງມີຄວາມສຸກ, ສ່ວນລີງນັ່ງຕາກຝົນຢູ່ເທິງງ່າໄມ້ຈົນໜາວສັ່ນ. ນົກຈອກ ຟ້າເຫັນແນວນັ້ນກໍເກີດມີຄວາມອີ່ດູຕົນສົງສານຈຶ່ງເວົ້າຕໍ່ລີງວ່າ: "ດູລາລີງເອີຍ! ມື, ຕີນ ແລະ ເຫື່ອ ແຮງຂອງທ່ານມີຄົບຖ້ວນ ສາມາດກະທຳກິດຈະການທຸກຢ່າງໄດ້ເໝືອນມະນຸດ, ແຕ່ເຫດໃດນໍທ່ານຈຶ່ງ ບໍ່ເຮັດເຮືອນນ້ອຍຢູ່ ພໍໄດ້ຊົ່ນແດດຊົ່ນຝົນ?".

ເມື່ອລີງຍິນແນວນັ້ນກໍເລີຍຄຽດຢ່າງໃຫຍ່, ພໍຝົນເຊົາແລ້ວມັນກໍແລ່ນຂຶ້ນໄປຈັບເອົາຮັງນົກ ຈອກຟ້າມາຍ່ອງຈົນມຸ່ນ. ນົກຈອກຟ້າເຫັນດັ່ງນັ້ນ ຈຶ່ງໄດ້ກ່າວຄຳຜັງເພີຍທີ່ມີລັກສະນະເປັນຄະຕິຕໍ່ ແມງທີ່ງຫ້ອຍວ່າ: "ດູລາທີ່ງຫ້ອຍ, ທ່ານເບິ່ງເທາະ, ເບິ່ງອ້າຍຂີ້ຖ່ອຍຈັ່ງໃຮນັ້ນ, ກູຫວັງປະໂຫຍດໃຫ້ ມັນຢູ່ສຸກສະບາຍ ຈຶ່ງຕັກເຕືອນມັນໂດຍດີ ແຕ່ແລ້ວຮັງຂອງກູຕ້ອງຈົບຫາຍຍ້ອນມັນ".

ນົກຈອກຟ້າເປັນສັນຍະລັກຕົວລະຄອນ ທີ່ເປັນຕົວແທນໃຫ້ແກ່ຄົນດຸໝັ່ນ, ການເຕືອນບອກຂອງ ນົກຈອກຟ້າຕໍ່ລີງນັ້ນແມ່ນຖືກຕ້ອງ ແລະ ດີແລ້ວ ແຕ່ຫາກວ່າບໍ່ຖືກເປົ້າໝາຍ ແລະ ກາລະ, ເທສະ ຈຶ່ງເປັນສາເຫດທີ່ພາໃຫ້ຕົນພົບກັບຄວາມຫາຍຍະນະໃນຕອນທ້າຍ.

# ພາກທີ II
# ວັນນະຄະດີຕ່າງປະເທດ

ຕາມຫຼັກສູດທີ່ຜັດທະນາໃໝ່ ນອກຈາກໃຫ້ຮຽນຮູ້ວັນນະຄະດີພື້ນເມືອງລາວແລ້ວ ຍັງເຫັນສົມຄວນໃຫ້ນັກຮຽນ ຮຽນຮູ້ວັນນະຄະດີຂອງປະເທດເພື່ອນບ້ານໃກ້ຄຽງຂອງເຮົາອີກເຊັ່ນ: ວັນນະຄະດີໄທ, ກຳປູເຈຍ ແລະ ມຽນມາ ເພື່ອເປັນການລິເລີ່ມໄຂປະຕູໃຫ້ມີຄວາມຮັບຮູ້ປະເທດເພື່ອນບ້ານໃນດ້ານວັດທະນະທຳ, ສັງຄົມ ແລະ ວັນນະຄະດີສິລະປະກຳໂດຍຫຍໍ້ ເຊິ່ງຄວາມຮູ້ເລັກນ້ອຍນີ້ຈະເປັນພື້ນຖານໃຫ້ແກ່ການຮຽນຮູ້ວັນນະຄະດີຕ່າງປະເທດໃນຂັ້ນຕໍ່ໄປ.

ກ່ຽວກັບວິທີການສິດສອນ ວັນນະຄະດີຕ່າງປະເທດ ມັນຮຽກຮ້ອງໃຫ້ຄູຈະຕ້ອງໄດ້ໃຊ້ຄວາມພະຍາຍາມຊອກຮູ້ປະເທດຕ່າງໆ ໂດຍສະເພາະດ້ານວັດທະນະທຳ, ວັນນະຄະດີສິລະປະກຳ ເຊິ່ງບໍ່ອາດຈະຈຳກັດຢູ່ໃນແຕ່ປຶ້ມແບບຮຽນເທົ່ານັ້ນ, ຄູຕ້ອງເສີມຂະຫຍາຍຄວາມປະດິດສ້າງຂອງຕົນໃຫ້ກ້ວາງຂວາງຈຶ່ງສາມາດນຳສະເໜີບົດຮຽນແກ່ ນັກຮຽນຢ່າງມີຊີວິດຊີວາໄດ້.

ໃນການສິດສອນຕົວຈິງຄູກໍບໍ່ຄວນປະຕິບັດຢ່າງຕາຍຕົວ ຕາມທິດທາງແນະນຳໃນປຶ້ມຄູ່ມືຄູນີ້, ອາດຈະເສີມຂະຫຍາຍວິທີການສິດສອນທີ່ຄູເຫັນວ່າ ເຄີຍປະສົບຜົນສຳເລັດມາແລ້ວເຊັ່ນວ່າ: ກ່ອນຈະສອນບົດໃໝ່ຄູກໍຕ້ອງໄດ້ທົບທວນບົດຮຽນເກົ່າຈະດ້ວຍວິທີກວດກາ ຫຼື ທົດສອບແນວໃດກໍແລ້ວແຕ່ຄວາມເໝາະສົມ. ສິ່ງສຳຄັນທີ່ສຸດກ່ອນຄູຈະສິດສອນບົດໃດກໍຕ້ອງສ້າງແຜນການສອນ (ແຕ່ງບົດສອນ) ໂດຍສະເພາະການສອນພາກວັນນະຄະດີຕ່າງປະເທດ ກໍຄວນປັບປຸງບົດສອນຂອງຕົນໃຫ້ລະອຽດຊັດເຈນເປັນຕົ້ນຊື່ເລື່ອງ, ຊື່ຕົວລະຄອນໃຫ້ຖືກກັບຕົ້ນສະບັບ, ແຕ່ລະບົດຮຽນມີການວິພາກບົດ ສະນັ້ນຄູຕ້ອງໄດ້ແຕ່ງບົດວິພາກ ເຊິ່ງໂຄງຮ່າງຂອງວິພາກບົດທີ່ເຄີຍປະຕິບັດມາກໍປະກອບມີບາງບາດກ້າວດັ່ງນີ້:

1) ເນື້ອໃນລວມຂອງບົດເລື່ອງເວົ້າເຖິງຫຍັງ?
2) ເລື່ອງນີ້ແບ່ງອອກເປັນຈັກຕອນ? ແຕ່ລະຕອນແຕ່ໃສເຖິງໃສ? ເນື້ອໃນແຕ່ລະຕອນເວົ້າເຖິງຫຍັງ?
3) ວິພາກເນື້ອໃນຕົ້ນຕໍຂອງເລື່ອງ ຫຼື ຈຳແນກຈຸດພິເສດ (ຄຸນລັກສະນະ) ຂອງຕົວລະຄອນໃນເລື່ອງ.
4) ສິລະປະການແຕ່ງຂອງເລື່ອງນີເປັນແນວໃດ?
5) ຄວາມເຫັນຂອງຜູ້ວິພາກເລື່ອງນີ້ (ຖ້າຫາກມີ).

ເວົ້າລວມແລ້ວ ການສິດສອນວັນນະຄະດີ ໃຫ້ພະຍາຍາມຫຼີກເວັ້ນການສິດສອນ ສະເໜີບົດຮຽນແບບລວມໆ, ຄູເປັນຜູ້ເລື່ອນໄຫວແຕ່ຜູ້ດຽວ, ຄູອ່ານໃຫ້ນັກຮຽນຈົດ ແລ້ວກໍຖືວ່າສຳເລັດການສິດສອນ. ຖ້າເຮັດແນວນັ້ນ ຈະບໍ່ສາມາດບັນລຸຈຸດປະສົງການຮຽນຮູ້ຂອງນັກຮຽນ. ເພື່ອຢາກໃຫ້ການສິດສອນໄດ້ຮັບຜົນດີ ນອກຈາກການໝູນໃຊ້ກິດຈະກຳການສອນ ທີ່ໄດ້ແນະນຳໄວ້ແລ້ວ ຄູກໍຄວນເບິ່ງ

ວ່າມັນເໝາະສົມ ຫຼື ບໍ່, ຖ້າຫາກບໍ່ເໝາະສົມຄວນດັດແປງຕື່ມ ເພື່ອໃຫ້ການສິດສອນເປັນໂອກາດໃຫ້ນັກຮຽນມີສ່ວນຮ່ວມໃນກິດຈະກຳການຮຽນການສອນຫຼາຍຂຶ້ນ, ຖ້າຫາກເຮັດໄດ້ແນວນັ້ນຈຶ່ງຈະພາໃຫ້ນັກຮຽນມີຄວາມຕິດພັນກັບການສິດສອນພາສາລາວ, ຮູ້ໜັກແໜ້ນ, ມີຄວາມກ້າຫານປະກອບຄຳຄິດຄຳເຫັນຂອງຕົນ ແລະ ຮູ້ຄົ້ນຄິດຫາຄວາມຮູ້ດ້ວຍຕົນເອງຫຼາຍຂຶ້ນ. ການສິດສອນວັນນະຄະດີຕ້ອງຕິດພັນກັບການສິດສອນພາສາລາວ, ຄູຕ້ອງຕິດຕາມ ແລະ ຊ່ວຍເຫຼືອໃຫ້ນັກຮຽນໃຊ້ພາສາລາວໃຫ້ຖືກຕ້ອງ ບໍ່ວ່າການເວົ້າ, ການຂຽນ. ຄູຕ້ອງໄດ້ໃຊ້ຄວາມພະຍາຍາມເຮັດໃຫ້ເວທີການຮຽນ ການສອນໄປຕາມທີ່ໄດ້ແນະນຳໄວ້ແຕ່ລະບົດ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງຕົນເອງໃຫ້ຫຼາຍຂຶ້ນ ຈຶ່ງຈະສາມາດບັນລຸຜົນການຮຽນ ການສອນທີ່ດີ.

# ບົດທີ 7
# ວັນນະຄະດີໄທ

ເວລາ 6 ຊົ່ວໂມງ

## I. ຈຸດປະສົງ.

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍບາງຈຸດກ່ຽວກັບປະເທດໄທດ້ານວັດທະນະທຳ, ວັນນະຄະດີ ແລະ ສາຍພົວພັນດ້ານວັດທະນະທຳ, ຮີດຄອງປະເພນີຂອງລາວ-ໄທໄດ້.
- ອະທິບາຍເຄົ້າກຳເນີດຂອງວັນນະຄະດີພື້ນເມືອງໄທໄດ້.
- ອະທິບາຍປະຫວັດວັນນະຄະດີໄທໂດຍຫຍໍ້ໄດ້.
- ວິພາກນິທານເລື່ອງ "ສົມບັດຂອງພໍ່".

## II. ເນື້ອໃນຕົ້ນຕໍ.

- ບາງຈຸດກ່ຽວກັບປະເທດໄທ.
- ສະພາບປະຫວັດສາດຂອງໄທ.
- ສະພາບວັນນະຄະດີພື້ນເມືອງໄທ.
- ປະຫວັດວັນນະຄະດີໄທ ແລະ ວິພາກເລື່ອງ "ສົມບັດຂອງພໍ່".

## III. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືຄູວັນນະຄະດີຊັ້ນມັດທະຍົມ ປີທີ ໜຶ່ງ.
- ປຶ້ມວັນນະຄະດີ ຫຼື ນິທານເລື່ອງຕ່າງໆຂອງໄທ, ປຶ້ມກ່ຽວກັບປະຫວັດສາດ, ວັດທະນະທຳ ແລະ ສັງຄົມຂອງໄທ.

## IV. ກິດຈະກຳການຮຽນ-ການສອນ

**ການນຳເຂົ້າສູ່ບົດຮຽນ**

- ຄູຕັ້ງຄຳຖາມທົບທວນບົດຮຽນເກົ່າ.
- ຄູທົດສອບຄວາມຮູ້ຂອງນັກຮຽນດ້ວຍການຕັ້ງຄຳຖາມ ຖາມນັກຮຽນບາງຈຸດກ່ຽວກັບປະເທດໄທ.
- ຄູເລີ່ມເຂົ້າສູ່ການຮຽນການສອນ.

**1. ການສອນບາງຈຸດກ່ຽວກັບປະເທດໄທ**

- ຄູອະທິບາຍບາງຈຸດກ່ຽວກັບປະເທດໄທຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

1) ປະເທດໄທຕັ້ງຢູ່ໃສ? ມີຊາຍແດນຕິດກັບປະເທດໃດແດ່?

2) ວິຖີຊີວິດຂອງປະຊາຊົນລາວ ແລະ ປະຊາຊົນໄທມີອັນຄ້າຍຄືກັນແນວໃດ?

- ຄູແບ່ງນັກຮຽນເປັນກຸ່ມຕາມຄວາມເໝາະສົມ ແລະ ໃຫ້ເວລານັກຮຽນແຕ່ລະກຸ່ມ ຄົ້ນຄວ້າເພື່ອຕອບຄຳຖາມ.
- ຄູໃຫ້ຕາງໜ້າກຸ່ມຂຶ້ນລາຍງານ.
- ນັກຮຽນແຕ່ລະກຸ່ມປະກອບຄຳຄິດເຫັນເພີ່ມເຕີມ.
- ຄູສະຫຼຸບຄຳຄິດເຫັນຂອງນັກຮຽນ ແລ້ວເນັ້ນໜັກຈຸດສຳຄັນຂອງຄຳຖາມດັ່ງນີ້:

1) ປະເທດໄທຕັ້ງຢູ່ແຫຼມອິນດູຈີນ ແລະ ມາລາຢູໃນເຂດອາຊີຕາເວັນອອກສຽງໃຕ້ ແລະ ມີບັນດາປະເທດ ໃກ້ຄຽງຫຼາຍປະເທດເຊັ່ນ: ທາງທິດຕາເວັນຕົກຕິດກັບປະເທດມຽນມາ, ທາງທິດເໜືອຕິດກັບ ສປປ ລາວ, ທາງທິດຕາເວັນອອກຕິດກັບປະເທດກຳປູເຈຍ, ທາງທິດໃຕ້ຕິດກັບປະເທດມາເລເຊຍ.

2) ວິຖີຊີວິດຂອງປະຊາຊົນລາວ ແລະ ປະຊາຊົນໄທມີອັນຄ້າຍຄືກັນທາງດ້ານຮີດຄອງປະເພນີ,ຂະນົບທຳນຽມຕະຫຼອດຮອດການນັບຖືສາສະໜາ ກໍແມ່ນອັນດຽວກັນຄືສາສະໜາພຸດ. ຍ້ອນມີວັດທະນະທຳ, ຮີດຄອງປະເພນີທີ່ຄ້າຍຄືກັນ, ວັນນະຄະດີລາວ ແລະ ວັນນະຄະດີໄທ ຈຶ່ງມີຫຼາຍອັນຄ້າຍກັນໂດຍສະເພາະ ແມ່ນວັນນະຄະດີພື້ນເມືອງ.

**2. ການສອນສະພາບປະຫວັດສາດ**

- ຄູບັນຍາຍສະພາບປະຫວັດສາດຕາມປຶ້ມແບບຮຽນ ຈາກນັ້ນຄູຕັ້ງຄຳຖາມ ຖາມນັກຮຽນດັ່ງນີ້:

1) ຊົນຊາດໄທໃນເມື່ອກ່ອນນອນຢູ່ໃນຊົນເຜົ່າໃດ?

2) ຊົນເຜົ່າໄຕໃນເມື່ອກ່ອນເຂົ້າເຈົ້າດຳລົງຊີວິດແບບໃດ? ນອກນີ້ອາດມີຄຳຖາມອື່ນໆທີ່ຄູກຳນົດເອງ.

- ຄູໃຫ້ເວລານັກຮຽນຄົ້ນຄິດເພື່ອຕອບຄຳຖາມ.
- ຫຼັງຈາກນັ້ນຄູສະຫຼຸບຕີລາຄາຜົນການຕອບຄຳຖາມຂອງນັກຮຽນໃນທຸກຂໍ້ ໂດຍເນັ້ນໜັກຈຸດສຳຄັນທີ່ເປັນໃຈຄວາມຂອງຄຳຖາມນັ້ນໆອີກເທື່ອໜຶ່ງ.

**3. ການສອນສະພາບວັນນະຄະດີພື້ນເມືອງໄທ.**

**3.1. ການສອນກົກເຄົ້າຂອງວັນນະຄະດີພື້ນເມືອງໄທ.**

- ຄູບັນຍາຍເນື້ອໃນໂດຍອີງຕາມປຶ້ມແບບຮຽນ ຫຼື ວິທີອື່ນໆຕາມປະສົບການຂອງຄູ.

- ຕັ້ງຄຳຖາມໃຫ້ນັກຮຽນຕອບ ຫລື ສະແດງຄວາມຄິດເຫັນຕາມຄວາມເໝາະສົມດັ່ງນີ້:

1) ວັນນະຄະດີພື້ນເມືອງໄທມີເຄົ້າກຳເນີດມາຈາກໃສ?

2) ນິດເລື່ອງພື້ນເມືອງໄທມີເນື້ອໃນເວົ້າເຖິງບັນຫາໃດແດ່?

- ຄູຈັດນັກຮຽນເປັນກຸ່ມຕາມຄວາມເໝາະສົມເພື່ອຄົ້ນຄວ້າຕອບຄຳຖາມຕາມເວລາທີ່ຄູກຳນົດໃຫ້.

- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານຜົນຂອງການຄົ້ນຄວ້າ.

- ຄູໃຫ້ກຸ່ມອື່ນປະກອບຄຳຄິດຄຳເຫັນເພີ່ມຕື່ມ.

- ຄູບັນທຶກຂໍ້ຄວາມຂອງນັກຮຽນທີ່ເຫັນວ່າຈະໄດ້ປັບປຸງເພີ່ມຕື່ມ.

- ຄູສະຫຼຸບຄືນໂດຍເນັ້ນໜັກເນື້ອໃນໃຈຄວາມທີ່ເປັນຈຸດສຳຄັນຂອງຄຳຖາມໃຫ້ຖືກຕ້ອງ ແລະ ຊັດເຈນ ເພື່ອ ໃຫ້ນັກຮຽນຈົດກ່າຍເອົາ.

**3.2 ການສອນປະຫວັດວັນນະຄະດີໄທ**

- ຄູບັນຍາຍເນື້ອໃນໂດຍອີງຕາມປຶ້ມແບບຮຽນ ຫຼື ປະສົບການຂອງຄູ.

- ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ ຫຼື ສະແດງຄວາມຄິດເຫັນຕາມຄວາມເໝາະສົມດັ່ງນີ້:

1) ປະຫວັດວັນນະຄະດີໄທແບ່ງອອກເປັນຈັກສະໄໝ? ຄືສະໄໝໃດແດ່?

2) ວັນນະຄະດີພື້ນເມືອງໄທນອນຢູ່ໃນສະໄໝໃດ ແລະ ແບ່ງອອກເປັນຈັກລັກສະນະ? ຄືລັກສະນະໃດແດ່?

- ຄູໃຫ້ເວລານັກຮຽນຄົ້ນຄ້ວາ ສົນທະນາກັນເພື່ອຕອບຄຳຖາມ.

- ເມື່ອນັກຮຽນສົນທະນາ ຕອບຄຳຖາມແລ້ວ ຄູສະຫຼຸບຄືນ ແລະ ເນັ້ນໜັກຈຸດສຳຄັນພື້ນຖານໂດຍອີງຕາມປຶ້ມແບບຮຽນ ເພື່ອໃຫ້ນັກຮຽນຈົດກ່າຍເອົາ.

**4. ການສອນວິພາກບົດ**

- ຄູສະເໜີນິທານເລື່ອງ "ສົມບັດຂອງພໍ່" ແລ້ວແນະນຳໃຫ້ນັກຮຽນອ່ານນິທານເລື່ອງນີ້ ຢູ່ໃນຫ້ອງຕາມເວລາທີ່ເໝາະສົມ.

- ຄູຈັດນັກຮຽນເປັນກຸ່ມຕາມຄວາມເໝາະສົມ.

- ຄໃຫ້ແຕ່ລະກ່ມຄົ້ນຄວ້ານິທານເລື່ອງ "ສົມບັດຂອງພໍ່" ຕາມຄຳຖາມຄື:

1) ເນື້ອໃນນິທານເລື່ອງ "ສົມບັດຂອງພໍ່" ເວົ້າເຖິງຫຍັງ?

2) ນິທານເລື່ອງນີ້ແບ່ງອອກເປັນຈັກຕອນ? ແຕ່ລະຕອນແຕ່ໃສເຖິງໃສ? ເນື້ອໃນແຕ່ລະຕອນເວົ້າເຖິງຫຍັງ?

- ຄູໃຫ້ແຕ່ລະກຸ່ມຄົ້ນຄວ້າຕາມເວລາທີ່ເໝາະສົມ.

- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນສະເໜີຄວາມເຫັນ.

- ຄູສະຫຼຸບເອົາຄວາມເຫັນທີ່ເອກະພາບ ແລະ ຖືກຕ້ອງກວ່າໝູ່.

- ຄູສະຫຼຸບຄືນ ແລະ ເນັ້ນໜັກຈຸດສຳຄັນຂອງຄຳຖາມ ເພື່ອໃຫ້ນັກຮຽນຈົດກ່າຍເອົາ ເຊິ່ງຈຸດສຳຄັນມີດັ່ງນີ້:

1) ເນື້ອໃນລວມນິທານເລື່ອງ "ສົມບັດຂອງພໍ່" ເວົ້າເຖິງຄວາມເປັນຫ່ວງເປັນໃຍຂອງພໍ່ທີ່ມີຕໍ່ລູກ, ກ່ອນພໍ່ຈະຕາຍໄປພໍ່ໄດ້ສັ່ງສອນລູກດ້ວຍປິດສະໜາສາມຂໍ້ ເປັນສົມບັດໄວ້ໃຫ້ລູກທັງສອງ. ລູກທັງສອງໄດ້ເອົາປິດສະໜາ ສາມຂໍ້ໄປປະຕິບັດແຕ່ການປະຕິບັດແຕກຕ່າງກັນ, ລູກຜູ້ສອງບໍ່ມີຄວາມຄິດຄວາມອ່ານປະຕິບັດບໍ່ຖືກຕ້ອງກາຍເປັນຄົນທຸກ, ລູກຜູ້ທີ່ໜຶ່ງເປັນຄົນສະຫຼາດ ປະຕິບັດຖືກຕ້ອງກາຍເປັນຄົນຮັ່ງມີ.

2) ນິທານເລື່ອງນີ້ແບ່ງອອກເປັນສາມຕອນຄື:

+ ຕອນທີໜຶ່ງ ແຕ່ໃນກາລະຄັ້ງໜຶ່ງເຖິງການເບິ່ງແຍງຊັບສົມບັດ. ເນື້ອໃນຕອນນີ້ເວົ້າເຖິງຄວາມເປັນຫ່ວງເປັນໃຍຂອງພໍ່ທີ່ມີຕໍ່ລູກ.

+ ຕອນທີສອງ ແຕ່ໂອລູກທີ່ຮັກຂອງພໍ່ເຖິງແລ້ວກໍຕາຍໄປ. ເນື້ອໃນຕອນນີ້ເວົ້າເຖິງກ່ອນພໍ່ຈະຕາຍໄປພໍ່ໄດ້ສັ່ງສອນລູກດ້ວຍຄຳເວົ້າປິດສະໜາສາມຂໍ້ ເພື່ອເປັນສົມບັດໄວ້ໃຫ້ລູກ

+ ຕອນທີສາມ ແຕ່ລູກຜູ້ນ້ອຍຍັງອາໄສຢູ່ເຮືອນຫຼັງເກົ່າເຖິງຮັ່ງມີຕະຫຼອດມາ. ເນື້ອໃນຕອນນີ້ເວົ້າເຖິງລູກທັງສອງໄດ້ປະຕິບັດຕາມຄຳເວົ້າປິດສະໜາຂອງພໍ່ ທີ່ໄດ້ສັ່ງສອນໄວ້ເຊິ່ງເປັນສົມບັດທີ່ພໍ່ໄດ້ມອບໃຫ້. ແຕ່ການປະຕິບັດຂອງສອງອ້າຍນ້ອງແຕກຕ່າງກັນ.

ສະຫຼຸບລວມແລ້ວເລື່ອງ "ສົມບັດຂອງພໍ່" ໄດ້ສຶກສາໃຫ້ຜູ້ອ່ານຮູ້ວ່າຄວາມໂງ່ຈ້າຂອງຄົນເຮົາບໍ່ອາດສາມາດຕຶກຕອງ ແລະ ແກ້ໄຂບັນຫາຕ່າງໆໄດ້ ຄືດັ່ງລູກຊາຍຜູ້ທີສອງບໍ່ສາມາດນຳເອົາປິດສະໜາສາມຂໍ້ນຳໄປປະຕິບັດໃນທາງທີ່ຖືກຕ້ອງໄດ້, ສຸດທ້າຍກາຍເປັນຄົນທຸກຍາກ.

ແຕ່ຖ້າຄົນເຮົາມີຄວາມສະຫຼາດ ຈະສາມາດຕຶກຕອງຫາເຫດຜົນ ແລະ ແກ້ໄຂບັນຫາຕ່າງໆໄດ້ຄືລູກຊາຍຜູ້ກົກ ຈຶ່ງສາມາດນຳເອົາປິດສະໜາສາມຂໍ້ທີ່ພໍ່ໄດ້ສອນໄວ້ ນຳໄປປະຕິບັດທີ່ຖືກຕ້ອງສຸດທ້າຍກາຍເປັນຄົນຮັ່ງມີ.

ສິລະປະການແຕ່ງນິທານເລື່ອງນີ້ຜູ້ແຕ່ງໄດ້ໃຊ້ພາສາທີ່ເຂົ້າໃຈງ່າຍ ສາມາດສ້າງຄວາມສົນໃຈໃຫ້ແກ່ຜູ້ອ່ານຜູ້ຟັງໄດ້ດີ ແລະ ເຫັນໄດ້ການເຄື່ອນໄຫວຂອງຕົວລະຄອນຢ່າງຈະແຈ້ງ.

## 5. ກິດຈະກຳເສີມ

- ຄູແນະນຳໃຫ້ນັກຮຽນເຮັດວຽກບ້ານຕາມບົດອ່ານເພີ່ມ.

- ຄູຕັ້ງຄຳຖາມໃຫ້ນັກຮຽນວ່າ: ເນື້ອໃນລວມຂອງນິທານເລື່ອງ "ພະອະໄພມະນີ" ເວົ້າເຖິງຫຍັງ?

- ຄູໃຫ້ນັກຮຽນສັງລວມເນື້ອໃນຂອງນິທານເລື່ອງນີ້ ແລ້ວນຳສະເໜີ.

- ຄູສະຫຼຸບຄຳຕອບທີ່ນັກຮຽນສະເໜີ ແລ້ວອະທິບາຍໃຫ້ນັກຮຽນເຂົ້າໃຈ ກ່ຽວກັບເນື້ອໃນຂອງນິທານເລື່ອງນີ້.

## * ตอบคำถามท้ายบิดในปื้มแบบธรรม

1. ประเทดไทมิเนื้อที่ทังหมิด 514.000 กิโลแม้ดมิบทิบ และ มิประชากอบทังหมิด 67.386.383 คิบ (สะถิติ 2008). ประเทดไทตั้งยู่แหงมอิบดูจิบ และ มาลายู ในเขดอาซิตาเวับติกสรงใต้ และ มิขับดาประเทดใก้ครงหงายประเทดเชั่บ: พากตาเวับติกติดกับประเทดมรมมา, พากเหือ ติดกับประเทด สาทาละบะลัดประชาทิปะไตประชาชิบลาว, พากตาเวับออกติดกับประเทดกำปู เจย และ พากใต้ติดกับ ประเทดมาเลเซย. บางกอก แม่บนะคอบหงวงของประเทดไท.

ชิบชาดไทในเมื่อก่อบเอิ้บว่า "สะทยาม" เชิ่งเป้บกุ่มคิบหนึ่งยู่ในชิบเผ่าไตที่มิเขดดำ ลิงชิวิด ยู่ทางพากใต้ของจิบ. เอ๋าเจ้าดำลิงชิวิดแบบกิกเหล่าเชิ่งหิอหน้ากิกเหล่าเอิ้บว่า "เจ้า" แต่ละกิกได้สำพับกับ เอิ้บว่า "สำพับกิกเหล่า" และ เอ๋าเมืองกิกมิบตังของจิบในปัด จุบับเป้บนะคอบหงวง, เชิ่งประหวัดสาดจิบเอิ้บว่า (อาบาจักบ่าบเจ๋า). มาธอดสะตะวัดที XI กุ่มคิบไตได้เดื่อบย้ายลิงมาทางพากใต้ และ ปิบเปเอ๊ากับเผ่าอื่บๆที่มิพื้บถาบหลักแหล่งยู่ ก่อบแล้ว เป้บต้บแม่บพอกกุ่มคิบมอบ-ขะแม และ อ้าตามล้องแม่น้ำเจ้าพะยา และ เขด พากเหือของแม่น้ำของ (บໍลิเวบพากเหือของไทในปัดจุบับ).

2. วับบะคะดิพื้บเมืองไท มิกิกเค้ากำเบิดมาจากวับบะคะดิชิบชาดไต, ขอม และขะแมเชิ่ง มิพูมลำเบ๋าตั้งยู่บิบแผ่บดิบไทมาก่อบแล้ว. ผ่มาธอดสะไหสุโขไทวับบะคะดิมิลักสะบะปะ ถิมปะถาบ, มิสิสับท้องถิ่บ และ กุ่มคิบหลายกว่า. สะไหหลังสุโขไท วับบะคะดิได้มิการผัด ทะบาทางด้าบเบื้อใบ และ ธูบการถือได้มิการธิบโธมเอ๋าบิดเลื่องพื้บเมืองจากหลายๆท้อง ถิ่บมาดัดแก้ธรรบธรง และ แต่งติมเพิ่มต่บางส่วบ ที่ติกเธี่ยเสยหายไปในลาวก่อบ. บิด เลื่องพื้บเมืองได้มิเบื้อใบเว้าเถิงคุบสิมบัด, อิบธิมสั่งสอบให้คิบมิความสะหงรวสะหลาด, หิก เว้บการกะทำที่ชื่อช้าลามิก, ส้างแต่ความดิงามตามธิดลองปะเผบิ ที่ชาวบ้าบเชื่อถือกับ.

3. เบื้อใบลวมของบิทาบเลื่อง "สิมบัดของพ่" เว้าเถิงความเป้บห่วงเป้บใยของพ่ที่มิต่ลูก, ก่อบพ่จะตายไปพ่ได้สั่งสอบลูกด้วยปิดสะพาสามข้ เป้บสิมบัดไว้ให้ลูกทังสอง. ลูกทังสอง ได้เอ๋าปิดสะพาสามข้ไปปะติบัดแต่การปะติบัดแตกต่างกับ, ลูกผู้ทิสองปะติบัดบ่เป้บการย เป้บคิบทุก, อิกผู้หนึ่งเป้บคิบสะหลาดปะติบัดถือกต้องกายเป้บคิบธั่งมิ.

4. เลื่อง "สิมบัดของพ่" ได้สึกสาให้ผู้อ่าบธู้ว่าความโง่จ้าของคิบเธาบ่อาดสามาดตึกตอง และ แก้ไขบับหาต่างๆได้ถึดังลูกชายผู้ทิสองยู่ในเลื่อง บ่สามาดบำเอ๋าปิดสะพาสามข้บำไปปะติบัดในทางที่ถือกต้องได้, สุดท้ายกายเป้บคิบทุกยาก. แต่ถ้าคิบเธาบิความสะหลาดจะสามาดตึกตองหาเหดผิบ และ แก้ไขบับหาต่างๆได้ถึลูกชายผู้ทิหนึ่งสามาดบำเอ๋าปิดสะพาสามข้ทิพ่ได้สอบไว้บำไปปะติบัด ในทางที่ถือกต้องสุดท้ายกายเป้บคิบธั่งมิได้.

* ຄູແນະນຳໃຫ້ນັກຮຽນອ່ານບົດຮຽນບົດຕໍ່ໄປ.

## V. ການວັດ ແລະ ປະເມີນຜົນ

ສັງເກດຈາກ:

- ການອະທິບາຍກ່ຽວກັບປະເທດໄທດ້ານວັດທະນະທຳ, ວັນນະຄະດີ ແລະ ສາຍພົວພັນດ້ານວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ ແລະ ໄທ.
- ການອະທິບາຍເຄົ້າກຳເນີດຂອງວັນນະຄະດີພື້ນເມືອງໄທ.
- ການອະທິບາຍປະຫວັດວັນນະຄະດີຂອງໄທໂດຍຫຍໍ້.
- ການອະທິບາຍເນື້ອໃນນິທານເລື່ອງ "ສົມບັດຂອງພໍ່" ໂດຍຜ່ານການວິພາກບົດ.

# ບົດທີ 8
# ວັນນະຄະດີກຳປູເຈຍ

ເວລາ 8 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍບາງຈຸດກ່ຽວກັບປະເທດກຳປູເຈຍໄດ້.
- ອະທິບາຍສະພາບວັນນະຄະດີຂອງປະເທດກຳປູເຈຍໄດ້.
- ວິພາກວັນນະຄະດີກຳປູເຈຍເລື່ອງ "ຊາຍຊຸດກະປູ" ໄດ້.
- ຂຽນສະຫຼຸບເຫດການໃນເລື່ອງ "ຊາຍຊຸດກະປູ" ໄດ້.

## II. ເນື້ອໃນຕົ້ນຕໍ

- ບາງຈຸດກ່ຽວກັບປະເທດກຳປູເຈຍ.
- ສະພາບວັນນະຄະດີ.
- ວິພາກເລື່ອງ "ຊາຍຊຸດກະປູ"

## III. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາວັນນະຄະດີຊັ້ນມັດທະຍົມປີທີໜຶ່ງ.
- ປຶ້ມນິທານ ແລະ ວັນນະຄະດີຕ່າງໆຂອງກຳປູເຈຍ (ຖ້າມີ).
- ປຶ້ມວາລະສານ, ສາລະຄະດີ, ສິລະປະບັນເທີງຕ່າງໆກຽວກັບປະເທດກຳປູເຈຍ (ຖ້າມີ).

## IV. ກິດຈະກຳການຮຽນການສອນ

### ການນຳເຂົ້າສູ່ບົດຮຽນ

- ຄູທົບທວນຄວາມຮູ້ຂອງນັກຮຽນໃນບົດຮຽນທີ 7 ດ້ວຍຄຳຖາມດັ່ງນີ້ຄື:

1) ບົດທີ 7 ຮຽນກ່ຽວກັບຫຍັງ?

2) ເນື້ອໃນບົດທີ 7 ເວົ້າເຖິງຫຍັງແດ່?

- ຄູທົດສອບຄວາມຮູ້ຂອງນັກຮຽນໃນບົດຮຽນທີ 8 ດ້ວຍຄຳຖາມດັ່ງນີ້:

1) ນັກຮຽນຮູ້ຫຍັງແດ່ກ່ຽວກັບປະເທດກຳປູເຈຍ?

2) ນັກຮຽນເຄີຍອ່ານ ຫຼື ຮູ້ນິທານເລື່ອງໃດຂອງກຳປູເຈຍ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.
- ຄູສະຫຼຸບຄືນ ແລ້ວນຳພານັກຮຽນເຂົ້າສູ່ການຮຽນບົດຮຽນທີ 8.

## 1. ການສອນບາງຈຸດກ່ຽວກັບປະເທດກຳປູເຈຍ

- ຄູໃຫ້ນັກຮຽນ ອ່ານບົດຮຽນຂໍ້ທີ 1 ໃນປຶ້ມແບບຮຽນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ທີ່ຕັ້ງປະເທດກຳປູເຈຍຕັ້ງຢູ່ໃສ?
2) ເນື້ອທີ່ປະເທດກຳປູເຈຍມີເທົ່າໃດ?
3) ພົນລະເມືອງປະເທດກຳປູເຈຍມີເທົ່າໃດ?
4) ມູນເຊື້ອດ້ານວັດທະນະທຳປະເທດກຳປູເຈຍເປັນແນວໃດ?
5) ສະຖາປັດຕະຍະກຳ ໂດຍສະເພາະແມ່ນປູຊະນີຍະສະຖານທີ່ລືຊື່ຂອງກຳປູເຈຍມີແນວໃດແດ່?
(ຄຳຕອບທີ່ກ່າວມານັ້ນມີຢູ່ໃນປຶ້ມແບບຮຽນ)

- ຄູໃຫ້ນັກຮຽນສະແດງຄວາມຄິດຄວາມເຫັນຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມເຫັນຂອງນັກຮຽນ, ແລ້ວຂຽນສະຫຼຸບຈຸດສຳຄັນໂດຍຫຍໍ້ໃສ່ກະດານໃຫ້ນັກຮຽນຈົດໃສ່ປຶ້ມຂຽນ.

## 2. ການສອນສະພາບວັນນະຄະດີ

- ຄູໃຫ້ນັກຮຽນອ່ານເນື້ອໃນສະພາບວັນນະຄະດີໃນປຶ້ມແບບຮຽນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນ ດ້ວຍຄຳຖາມດັ່ງນີ້:

1) ຊາວກຳປູເຈຍມັກການປະດິດແຕ່ງວັນນະຄະດີບໍ?
2) ວັນນະດີກຳປູເຈຍມີຈັກປະເພດຄືປະເພດໃດແດ່?
3) ວັນນະຄະດີພື້ນເມືອງຂອງກຳປູເຈຍມີເນື້ອໃນເວົ້າເຖິງຫຍັງ?

- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ ແລະ ຕອບຄຳຖາມທີ່ຖືກຕ້ອງແກ່ນັກຮຽນໃຫ້ຊັດເຈນ ເຊິ່ງຄຳຕອບຢູ່ໃນປຶ້ມແບບຮຽນ.

## 3. ການສອນວິພາກເລື່ອງ "ຊາຍຂຸດກະປູ"

### 3.1 ການແບ່ງຕອນ

- ຄູໃຫ້ນັກຮຽນອ່ານເລື່ອງຊາຍຂຸດກະປູຕໍ່ກັນຈົນໝົດເລື່ອງ.
- ຄູຕັ້ງຄຳຖາມດັ່ງນີ້:

1) ເລື່ອງຊາຍຂຸດກະປູແບ່ງເປັນຈັກຕອນ ແຕ່ລະຕອນແຕ່ໃສເຖິງໃສ?
2) ເນື້ອໃນແຕ່ລະຕອນເວົ້າເຖິງຫຍັງ?
3) ເນື້ອໃນລວມເລື່ອງຊາຍຂຸດກະປູເວົ້າເຖິງຫຍັງ?

- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເໝາະສົມ.

- ຄູສະຫຼຸບຄຳຕອບຂອງນັກຮຽນ ແລະ ແນະນຳຄຳຕອບທີ່ຖືກຕ້ອງໃຫ້ແກ່ນັກຮຽນຄື: ນິທານເລື່ອງ ຊາຍຂຸດກະປູແບ່ງເປັນ 4 ຕອນແຕ່ລະຕອນມີເນື້ອໃນດັ່ງນີ້:

+ ຕອນທີ 1: ແຕ່ຕົ້ນ ເຖິງ ຈາກຄວາມລຳບາກ, ເນື້ອໃນຕອນນີ້ເວົ້າເຖິງ, ຄວາມທຸກຍາກຂອງ ຊາຍກຳພອຍເຊິ່ງມີອາຊີບຂຸດກະປູຂາຍ, ຕາມຄຳແນະນຳຂອງພໍ່ຈຶ່ງມີຊື່ວ່າ " ຊາຍຂຸດກະປູ ".

+ ຕອນທີ 2: ແຕ່ລູກຊາຍກຳພອຍ ເຖິງ ຄວາມໂສກເສົ້າເສຍໃຈ. ເນື້ອໃນຕອນນີ້ເວົ້າເຖິງຊາຍຂຸດ ກະປູນຳກະປູໄປຂາຍແລ້ວໄດ້ພົບຮັກກັບນາງປົວລູກສາວຫຼ້າຂອງເສດຖີ, ແຕ່ພໍ່ເຖົ້າເສດຖີບໍ່ເຫັນດີຈຶ່ງ ໄລ່ລູກສາວໜີ.

+ ຕອນທີ 3: ແຕ່ນາງປົວ ເຖິງ ຢູ່ແຄ້ວກະປູທຸກໆມື້. ເນື້ອໃນຕອນນີ້ເວົ້າເຖິງນາງປົວ ແລະ ທ້າວກຳພ້າໄດ້ຄອງຮັກກັນຢູ່ໃນຕູບນ້ອຍຢ່າງມີຄວາມສຸກ, ພວກເຂົາມີອາຊີບຂຸດກະປູເພື່ອລ້ຽງຊີວິດ. ສຸດທ້າຍຜົວເມຍຂຸດກະປູຮັ່ງມີຂຶ້ນເພາະແຄ້ວກະປູພິເສດ.

+ ຕອນທີ 4: ແຕ່ປີໜຶ່ງຜ່ານໄປ ເຖິງ ສຸດທ້າຍ. ເນື້ອໃນຕອນນີ້ເວົ້າເຖິງຜົວເມຍ ຊາຍຂຸດກະປູ ບໍ່ໄດ້ລືມບຸນຄຸນພໍ່ແມ່. ເມື່ອມີເງິນຄຳແລ້ວກໍກັບຄືນເມືອຫາພໍ່ແມ່ ແລະ ພໍ່ແມ່ກໍຮັບເອົາຊາຍກຳພ້າ ເປັນລູກເຂີຍ.

- ຄູແນະນຳວິທີຊອກຫາເນື້ອໃນລວມຂອງບົດເລື່ອງ, ດ້ວຍການສະຫຼຸບເນື້ອໃນຂອງແຕ່ລະຕອນ ມາເປັນເນື້ອໃນລວມຂອງເລື່ອງ. ດັ່ງນັ້ນ ເລື່ອງ "ຊາຍຂຸດກະປູ" ຈຶ່ງມີເນື້ອໃນລວມເວົ້າເຖິງຊາຍ ກຳພອຍຜູ້ທຸກຈົນຂາດທີ່ເພິ່ງພາອາໄສ, ແຕ່ລາວເປັນຄົນຄຸໝັ່ນຂຸດກະປູ ໄປຂາຍທຸກໆມື້ຈົນມີເງິນມີຄຳ ແລະ ກາຍເປັນລູກເຂີຍຂອງເສດຖີ.

- ຄູແນະນຳໃຫ້ນັກຮຽນອ່ານເລື່ອງຊາຍຂຸດກະປູອີກເທື່ອໜຶ່ງແລ້ວຕອບຄຳຖາມດັ່ງນີ້:

1) ໃນເລື່ອງຊາຍຂຸດກະປູ ມີຕົວລະຄອນຈັກຕົວ? ຕົວໃດແດ່?

2) ຕົວລະຄອນອະທຳມີຕົວໃດແດ່? ພວກເຂົາມີການກະທຳບໍ່ດີອັນໃດຈຶ່ງເປັນຕົວລະຄອນອະທຳ?

3) ຕົວລະຄອນສິນທຳມີຕົວໃດແດ່? ພວກເຂົາມີການກະທຳອັນໃດຈຶ່ງເປັນຕົວລະຄອນສິນທຳ?

- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເຂົ້າໃຈ.

- ຄູສະຫຼຸບຄຳຕອບຂອງນັກຮຽນໂດຍອີງໃສ່ເນື້ອໃນຂອງເລື່ອງເພື່ອຕອບຄຳຖາມທີ່ຖືກຕ້ອງແກ່ ນັກຮຽນ.

### 3.2 ສິລະປະການແຕ່ງ

- ຄູຈັດກຸ່ມໃຫ້ນັກຮຽນຕາມຄວາມເໝາະສົມ.

- ຄູແນະນຳໃຫ້ນັກຮຽນທຸກກຸ່ມອ່ານເລື່ອງຊາຍຂຸດກະປູແລ້ວຕອບຄຳຖາມດັ່ງນີ້:

1) ຈົ່ງຊອກຫາຄຳເວົ້າທີ່ສະແດງເຖິງຄວາມທຸກຈົນຂອງຊາຍຂຸດກະປູ?

2) ຈົ່ງຊອກຫາຄຳເວົ້າທີ່ສະແດງເຖິງຄວາມຄຸໝັ່ນຂອງຊາຍຂຸດກະປູ?

3) ຈົ່ງຊອກຫາຄຳເວົ້າທີ່ສະແດງເຖິງຄວາມຮ້າຍດ່າໃຫ້ລູກສາວຂອງພໍ່ເຖົ້າເສດຖີ?

4) ຈົ່ງຊອກຫາຄຳເວົ້າທີ່ສະແດງເຖິງຄວາມຮັກຂອງແມ່ທີ່ມີຕໍ່ລູກສາວ?

- ຄູໃຫ້ຕາງໜ້າທຸກໆກຸ່ມລາຍງານຜົນການຄົ້ນຄວ້າ.

- ຄູສະຫຼຸບການລາຍງານຂອງຕາງໜ້າກຸ່ມ, ດ້ວຍການຕຳນິຕິຊົມພ້ອມທັງອະທິບາຍຈຸດທີ່ຍັງບໍ່ທັນຄົບຖ້ວນເພີ່ມຕື່ມ ແລະ ຕອບຄຳຖາມດັ່ງນີ້:

1) ຄຳເວົ້າທີ່ສະແດງເຖິງຄວາມທຸກຈົນຂອງຊາຍຂຸດກະປູຄື:

- ຜູ້ເປັນແມ່ໄດ້ລົ້ມຫາຍຕາຍຈາກ.

- ສອງພໍ່ລູກຢູ່ນຳກັນດ້ວຍຄວາມລຳບາກ.

- ປີຕໍ່ມາພໍ່ຊ້ຳພັດລົ້ມປ່ວຍ ແລະ ເສຍຊີວິດໄປເຫຼືອພຽງແຕ່ຊາຍກຳພອຍ.

2) ຄຳເວົ້າທີ່ສະແດງເຖິງຄວາມດຸໝັ່ນຂອງຊາຍຂຸດກະປູຄື:

- ລາວຂຸດກະປູໄປຂາຍທຸກມື້.

3) ຄຳເວົ້າທີ່ສະແດງເຖິງຄວາມຢາກຮ້າຍໃຫ້ລູກສາວຂອງພໍ່ເຖົ້າເສດຖີມີຄື:

- ນັບແຕ່ນີ້ຕໍ່ໄປຫ້າມບໍ່ໃຫ້ກັບມາຢຽບເຮືອນຫຼັງນີ້ເປັນອັນຂາດ.

4) ຄຳເວົ້າທີ່ສະແດງເຖິງຄວາມຮັກຂອງແມ່ທີ່ມີຕໍ່ລູກສາວຄື:

- ແມ່ຂອງນາງເຖິງວ່າມີຄວາມບໍ່ພໍໃຈ ແລະ ຄຽດຊັງລູກສາວປານໃດກໍຕາມແຕ່ກໍຍັງຄຶດອີ່ດູລູກສາວ.

- ແມ່ຍັງອົດສາຫໍ່ເຄື່ອງໃສ່ມືໃຫ້ລູກ.

**4. ການສອນຂຽນຫຍໍ້ເຫດການໃນເລື່ອງ "ຊາຍຂຸດກະປູ"**

- ຄູແນະນຳນັກຮຽນອ່ານເລື່ອງ "ຊາຍຂຸດກະປູ".

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ເຫດການທີ່ສຳຄັນໃນເລື່ອງມີຈັກເຫດການ, ຄືເຫດການໃດແດ່?

- ຄູໃຫ້ເວລານັກຮຽນຄົ້ນຄວ້າເປັນກຸ່ມ ຫຼື ເປັນບຸກຄົນກໍໄດ້.

- ຄູໃຫ້ນັກຮຽນລາຍງານຜົນງານຂອງການຄົ້ນຄວ້າ.

- ຄູສັງເກດການລາຍງານຂອງນັກຮຽນ ແລ້ວສະຫຼຸບຄຳຕອບຂອງນັກຮຽນພ້ອມທັງອະທິບາຍຄຳຖາມໃຫ້ຈະແຈ້ງ. ຄຳຕອບຂອງຄຳຖາມມີດັ່ງນີ້:

+ ເຫດການທີ 1: ຊາຍຂຸດກະປູເປັນລູກກຳພອຍ. ພໍ່ແມ່ຕາຍປະ, ລາວນອນຝັນເຫັນພໍ່ມາບອກໃຫ້ໄປຂຸດກະປູຢູ່ໂນນໃກ້ວັດໄປຂາຍ.

+ ເຫດການທີ 2: ຊາຍຂຸດກະປູໄດ້ຂຸດກະປູໄປຂາຍທຸກໆມື້ ແລະ ໄດ້ພົບຮັກກັບນາງປ໋ວລູກສາວຫຼ້າຂອງເສດຖີ.

+ ເຫດການທີ 3: ພໍ່ເສດຖີບໍ່ມັກຊາຍຂຸດກະປູຈຶ່ງໄລ່ລູກສາວໜີ.

+ ເຫດການທີ 4: ນາງປົວລູກສາວເສດຖີໜີໄປຢູ່ນຳຊາຍຂຸດກະປູ ແລະ ພວກເຂົາໄດ້ເປັນຜົວເມຍ ຄອງຮັກນຳກັນຢ່າງມີຄວາມສຸກ. ໂດຍອາໄສການຂຸດກະປູເພື່ອລ້ຽງຊີວິດ.

+ ເຫດການທີ 5: ຊາຍຂຸດກະປູໄດ້ແຂ້ວກະປູວິເສດ, ທຸກໆມື້ຈະມີເງິນອອກມາເຕັມແຂ້ວກະປູ.

+ ເຫດການທີ 6: ຜົວເມຍຊາຍຂຸດກະປູໄດ້ເມືອຫາພໍ່ແມ່ເສດຖີ ແລະ ພໍ່ເຖົ້າເສດຖີໄດ້ຮັບຊາຍຂຸດກະປູໄປຢູ່ເຮືອນນຳເປັນລູກເຂີຍເສດຖີ.

## ✱ ຕອບຄຳຖາມທ້າຍບົດ

1. ປະເທດກຳປູເຈຍມີມູນເຊື້ອດ້ານວັດທະນະທຳຈົນມີຊື່ລືຊາໄປທົ່ວທະວີບອາຊີ ໂດຍສະເພາະສິລະປະການຄວັດ, ການແຕ້ມ, ການປັ້ນ ຈົນມີປູຊະນີຍະສະຖາທີ່ລືຊື່ຄືອັງກໍວັດ.

2. ສະພາບວັນນະຄະດີຂອງກຳປູເຈຍ ຕອບຕາມປຶ້ມແບບຮຽນ

3. ຕົວລະຄອນເອກໃນເລື່ອງຊາຍຂຸດກະປູ ແມ່ນຊາຍກຳພອຍ ແລະ ນາງປົວລູກສາວຫຼ້າຂອງເສດຖີ.

4. ນິທານເລື່ອງຊາຍຂຸດກະປູ ມີເນື້ອໃນເວົ້າເຖິງ (ຕອບຕາມເນື້ອໃນລວມເວລາວິພາກບົດ). ຄູແນະນຳນັກຮຽນໃຫ້ຮຽນອ່ານບົດຮຽນໃນຕໍ່ໄປ, ໂດຍສະເພາະແມ່ນອ່ານເລື່ອງ "ນົກແກ້ວສະວິກີ" ເພື່ອກຽມວິພາກບົດ.


## V. ການວັດ ແລະ ປະເມີນຜົນ

ສັງເກດຈາກ:

- ການອະທິບາຍບາງຈຸດກ່ຽວກັບປະເທດກຳປູເຈຍ.
- ການອະທິບາຍວັດທະນາທຳຮີດຄອງປະເພນີຂອງກຳປູເຈຍ.
- ການອະທິບາຍວັນນະຄະດີ ແລະ ເນື້ອໃນການສ່ອງແສງວັນນະຄະດີກຳປູເຈຍ.

ກວດຜົນງານຈາກ:

- ການວິພາກບົດເລື່ອງ "ຊາຍຂຸດກະປູ"
- ການຂຽນສະຫຼຸບເຫດການເລື່ອງ "ຊາຍຂຸດກະປູ"



ทุ่งซาดภำปูเจย



ธูบภะปู

# ບົດອ່ານເພີ່ມ

## ເລື່ອງ "ເຈາະຫູລູກສາວ"

ຕັ້ງແຕ່ກີ້ແຕ່ກ່ອນມີເສດຖີຜູ້ໜຶ່ງ ທີ່ມີຊັບສົມບັດຫຼາຍ, ມີສາວສະໜົມຮັບໃຊ້ ແລະ ມີຂ້ອຍ ຂ້າຫຼາຍຄົນ. ເສດຖີຜູ້ນັ້ນມີຈິດໃຈບໍ່ຊື່ສັດ ແລະ ນອກໃຈເມຍຂອງຕົນ, ລາວລັກຫຼິ້ນສາວສະໜົມທີ່ຮັບໃຊ້ຢູ່ໃນເຮືອນ. ເວລາຜ່ານໄປຍາວນານເມຍຫຼວງກໍຮູ້ຂ່າວ ແຕ່ບໍ່ຮູ້ວ່າເຮັດແນວໃດຕໍ່ຜູ້ຍິງຄົນນັ້ນ.

ມື້ໜຶ່ງເສດຖີໄດ້ເດີນທາງໄປຄ້າຂາຍຢູ່ເມືອງອື່ນໝົດມື້, ເມຍຫຼວງໄດ້ໂອກາດກໍໄດ້ພາຄົນໃຊ້ຂອງຕົນໄປຈັບເອົາສາວສະໜົມທີ່ເປັນຊູ້ກັບຜົວຂອງຕົນມາລົງໂທດ ດ້ວຍການປ້ອຍດ່າ ແລະ ຂ້ຽນຕີຢ່າງໜັກໜ່ວງ, ຫຼັງຈາກນັ້ນກໍເອົາເຫຼັກຕະປູມາເຈາະຕີນຫູທັງສອງຂອງສາວສະໜົມຄົນນັ້ນ.

ຕອນຄ່ຳເສດຖີໄປຄ້າຂາຍເມືອງອື່ນກໍກັບຄືນມາ ແລະ ໄດ້ໄປເຮືອນຂອງສາວສະໜົມຜູ້ເປັນເມຍນ້ອຍ. ລາວເຫັນເມຍນ້ອຍນອນຮ້ອງໄຫ້ຈຶ່ງຖາມວ່າ "ຮ້ອງໄຫ້ເຮັດຫຍັງ?" ນາງໄດ້ ເລົ່າເລື່ອງທຸກຢ່າງສູ່ຜົວຟັງ. ເສດຖີໄດ້ຖອນເຫຼັກຕະປູອອກ ແລະ ກໍເອົາຢາມາປິ່ນປົວ, ຈາກນັ້ນເສດຖີໄດ້ພາເມຍນ້ອຍໄປອາໄສຢູ່ເຮືອນຫຼັງອື່ນທີ່ໄກຈາກເຮືອນຂອງເມຍຫຼວງ.

ຕັ້ງແຕ່ມື້ນັ້ນມາ, ເມຍນ້ອຍຜູ້ນີ້ມີຄວາມອາຍເພື່ອນບ້ານທີ່ຢູ່ໃກ້ຄຽງກັນ ເພາະຕີນຫູຂອງຕົນເອງມີຮູບ່ອງ, ເມຍນ້ອຍໄດ້ລົມກັບຜົວຜູ້ເປັນເສດຖີເລື້ອຍໆວ່າ: ຂໍໃຫ້ພໍ່ເສດຖີພະຍາຍາມແກ້ໄຂເຮັດຈັ່ງໃດ ເພື່ອບໍ່ໃຫ້ຫູຂອງນາງມີຮອຍ, ເສດຖີກໍຮັບປະກັນວ່າຊິຊອກຫາວິທີ ເພື່ອເຮັດໃຫ້ຫູຂອງນາງບໍ່ມີຮອຍ ແລະ ມີຄວາມສວຍງາມອີກດ້ວຍ. ມີຄືນໜຶ່ງເສດຖີໄດ້ຄິດເຫັນວ່າ: ຖ້າເອົາຄຳໃຫ້ຊ່າງເຮັດເປັນສິ່ງຂອງອັນໃດອັນໜຶ່ງທີ່ມີຮູບຮ່າງຄືກັບເຫຼັກຕະປູ ແລະ ເອົາມາໃສ່ເພື່ອປິດບັງຮອຍຫູຄືຊິງາມ. ເສດຖີຄິດແລ້ວກໍໄດ້ໃຫ້ຊ່າງເຮັດເຫຼັກຕະປູໃສ່ຫູ ໂດຍນຳເອົາເມັດເພັດທີ່ສວຍງາມໃສ່ລົງໄປໃນເຫຼັກຕະປູເພື່ອເຮັດໃຫ້ເມຍນ້ອຍມີຄວາມສວຍງາມ. ຈາກນັ້ນກໍນຳໄປໃຫ້ເມຍນ້ອຍໃສ່, ຫຼັງຈາກໄດ້ໃສ່ຕຸມຫູເຫຼັກຕະປູທີ່ໃສ່ເພັດນ້ອຍໆຫຼາຍເມັດກໍເຮັດໃຫ້ລາວມີຄວາມສະຫງ່າງາມແປກປະຫຼາດໃຈ ນາງຈຶ່ງມີຄວາມດີໃຈ ແລະ ຊີວິດສົດຊື່ນຂຶ້ນ.

ມື້ຕໍ່ມາເມຍຫຼວງໄດ້ເຫັນຫູເມຍນ້ອຍ ທີ່ຖືກເຈາະດ້ວຍເຫຼັກຕະປູມີແສງສະທ້ອນອອນອອກມາຢ່າງສວຍງາມເປັນຕາຮັກ, ເມຍຫຼວງກໍໄດ້ຖາມເມຍນ້ອຍວ່າ "ເຈົ້າໄດ້ຫຍັງມາໃສ່ຕຸມຫູເຫຼັກຕາປູສວຍງາມແທ້?" ເມຍນ້ອຍ ຕອບວ່າ "ຂ້ອຍໃສ່ເຫຼັກຕະປູມີເພັດແທນເຫຼັກຕະປູທີ່ເຈົ້າໄດ້ເຈາະແຕ່ເມື່ອກ່ອນ.

ເມຍຫຼວງຄິດໃນໃຈວ່າ "ຍ້ອນຕຸມຫູເຫຼັກຕະປູມີເພັດເມັດສວຍງາມແນວນັ້ນ ຈຶ່ງເຮັດໃຫ້ຜົວຫຼົງໄຫຼນາງເມຍນ້ອຍຈຶ່ງບໍ່ກັບມາຫາຕົນເອງ. ເມຍຫຼວງຈຶ່ງຊອກຫາວິທີເຈາະຫູຕົນເອງ ແລະ ສັ່ງໃຫ້ຊ່າງເຮັດ ເຫຼັກຕະປູໃສ່ເພັດຄືກັບເມຍນ້ອຍ. ນັບແຕ່ສະໄໝນັ້ນມາແມ່ຍິງອື່ນໆ ກໍພາກັນເຈາະຫູລູກສາວຕັ້ງແຕ່ເດັກນ້ອຍປະໄວ້ສຳລັບໃສ່ເຄື່ອງເອ້ຕ່າງໆຈົນຮອດປັດຈຸບັນນີ້.

" ຮຽບຮຽງໂດຍນັກສຶກສາກຳປູເຈຍປີທີ່ 2: ຄະນະອັກສອນສາດ, ພາກວິຊາພາສາລາວ"

1. ທ້າວ ສຸທີ ມົນ
2. ເມີກ ຊາເກືອນ

# ບົດທີ 9
# ວັນນະຄະດີມຽນມາ

ເວລາ 6 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍບາງຈຸດກ່ຽວກັບປະເທດມຽນມາ.
- ອະທິບາຍສະພາບປະຫວັດສາດຂອງປະເທດມຽນມາໂດຍສັງເຂບ.
- ອະທິບາຍພາບວັນນະຄະດີມຽນມາ.
- ວິພາກເລື່ອງ "ນົກແກ້ວສະວີກີ".
- ຂຽນສະຫຼຸບເຫດການໃນເລື່ອງ "ນົກແກ້ວສະວີກີ".
- ສະແດງລະຄອນເລື່ອງ "ນົກແກ້ວສະວີກີ".

## II. ເນື້ອໃນຕົ້ນຕໍ

- ບາງຈຸດກ່ຽວກັບປະເທດມຽນມາ.
- ສະພາບປະຫວັດສາດຂອງປະເທດມຽນມາ.
- ສະພາບວັນນະຄະດີຂອງປະເທດມຽນມາ.
- ວິພາກເລື່ອງ "ນົກແກ້ວສະວີກີ".

## III. ສື່ການຮຽນ-ການສອນ

- ປຶ້ມແບບຮຽນວິຊາວັນນະຄະດີ ແລະ ຄູ່ມືຄູຊັ້ນມັດທະຍົມປີທີໜຶ່ງ.
- ປຶ້ມແບບຮຽນວິຊາພາສາລາວຊັ້ນມັດທະຍົມປີທີໜຶ່ງ.
- ຮູບພາບຕ່າງໆກ່ຽວກັບປະເທດມຽນມາ.

## IV. ກິດຈະກຳການຮຽນ-ການສອນ

### ການນຳເຂົ້າສູ່ບົດຮຽນ

- ຄູຕັ້ງຄຳຖາມສົນທະນາເພື່ອທົບທວນບົດຮຽນເກົ່າດັ່ງນີ້:

1). ບົດທີ 8 ຮຽນກ່ຽວກັບຫຍັງ, ນັກຮຽນຈື່ຈຸດສຳຄັນຫຍັງແດ່?.

2). ໃນບົດທີ 8 ໄດ້ຮຽນບົດເລື່ອງໃດແດ່?

- ຄູໃຫ້ນັກຮຽນຕອບ ແລ້ວຄູສະຫຼຸບຄືນໂດຍຫຍໍ້.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນບົດທີ 9 ດັ່ງນີ້:

1.) ນັກຮຽນເຄີຍຮຽນວັນນະຄະດີມຽນມາແລ້ວບໍ?

2.) ນັກຮຽນຮູ້ຫຍັງແດ່ກ່ຽວກັບປະເທດມຽນມາ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນ.
- ຄູພານັກຮຽນເຂົ້າສູ່ການຮຽນບົດທີ 9.

## 1. ການສອນ ບາງຈຸດກ່ຽວກັບປະເທດມຽນມາ

- ຄູໃຫ້ນັກຮຽນອ່ານບາງຈຸດກ່ຽວກັບປະເທດມຽນມາຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1). ປະເທດມຽນມາຕັ້ງຢູ່ໃສ? ມີຊາຍແດນຕິດກັບປະເທດໃດແດ່?

2). ພູທີ່ໃຫຍ່ທີ່ສຸດໃນທະວີບອາຊີຕາເວັນອອກສຽງໃຕ້ ຕັ້ງຢູ່ທາງໃດຂອງປະ ເທດມຽນມາ?

3). ປະເທດມຽນມາເຂດໃດເປັນເຂດແຫ້ງແລ້ງ ແລະ ເຂດອຸດົມສົມບູນ?

- ຄູໃຫ້ນັກຮຽນຕອບຕາມຄວາມເໝາະສົມ.
- ຄູໃຫ້ນັກຮຽນຜູ້ອື່ນປະກອບຄວາມຄິດເຫັນເພີ່ມເຕີມ.
- ຄູສະຫຼຸບການຕອບຂອງນັກຮຽນ, ແລ້ວອະທິບາຍກ່ຽວກັບທີ່ຕັ້ງພູມສັນຖານຂອງປະເທດມຽນ ມາເພີ່ມເຕີມ ພ້ອມທັງຕອບຄຳຖາມຕາມປຶ້ມແບບຮຽນ.

## 2. ການສອນ ສະພາບປະຫວັດສາດຂອງມຽນມາ

- ຄູໃຫ້ນັກຮຽນຜູ້ໃດຜູ້ໜຶ່ງອ່ານສະພາບປະຫວັດສາດປະເທດມຽນມາຕາມປຶ້ມແບບຮຽນ.
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ຍ້ອນຫຍັງປະເທດມຽນມາຈຶ່ງມີປະຫວັດສາດຍາວນານ ແລະ ສະຫຼັບສັບຊ້ອນ?

2) ເຜົ່າພັນທີ່ເກົ່າແກ່ທີ່ສຸດໃນປະເທດມຽນມາແມ່ນເຜົ່າໃດ?

3) ເຜົ່າໃດເປັນເຜົ່າສ່ວນໃຫຍ່ ແລະ ປົກຄອງປະເທດໃນປັດຈຸບັນ?

- ຄູໃຫ້ນັກຮຽນຕອບຕາມແຕ່ລະຂໍ້ຕາມຄວາມເໝາະສົມ.
- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ ແລະ ສະເໜີຄຳຕອບທີ່ຖືກຕ້ອງຕາມປຶ້ມແບບຮຽນ.

## 3. ການສອນ ສະພາບວັນນະຄະດີ

- ຄູແນະນຳໃຫ້ນັກຮຽນຜູ້ໃດຜູ້ໜຶ່ງອ່ານເນື້ອໃນບົດຮຽນຫຍໍ້ ໜ້າທີ 1ໃນປຶ້ມແບບຮຽນນັກ

ຮຽນທຸກຄົນຟັງແລ້ວຈົດບັນທຶກສິ່ງທີ່ຕົນໄດ້ຟັງ.

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ປະເທດມຽນມາ ປະກອບມີຈັກລັດ ແລະ ມີຈັກຊົນເຜົ່າສ່ວນນ້ອຍ?

2) ປະເທດມຽນມາ ມີຈັກພາສາທ້ອງຖິ່ນ?

3) ປະເທດມຽນມາ ຢູ່ຮ່ວມກັນພາຍໃຕ້ການປົກຄອງແບບໃດ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.

- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນແລ້ວອະທິບາຍ ແລະ ຕອບຄຳຖາມຕາມປຶ້ມແບບຮຽນ.

- ຄູແນະນຳໃຫ້ນັກຮຽນຜູ້ໃດຜູໜຶ່ງອ່ານເນື້ອໃນບົດຮຽນໜ້ວໜ້າທີ 2 ໃນປຶ້ມແບບຮຽນ. ນັກຮຽນທຸກຄົນຟັງ ແລະ ຈົດບັນທຶກສິ່ງທີ່ຕົນໄດ້ຟັງຕາມຄວາມສາມາດ.

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ພື້ນຖານວັດທະນະທຳ,ຮີດຄອງປະເພນີຂອງຊາວມຽນມາມີຄວາມສະໜິດຕິດພັນກັບຫຍັງ?

2) ຫຼັກຖານອ້າງອີງການກຳເນີດ ແລະ ການຂະຫຍາຍຕົວຂອງສາສະໜາໄດ້ສະແດງອອກຄື ແນວໃດ?

3). ຊາວມຽນມາປະຕິບັດຕໍ່ຮີດຄອງປະເພນີ ແລະ ແບບແຜນການດຳລົງຊີວິດຂອງເຂົາເຈົ້າຄື ແນວໃດ?

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.

- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ ແລະ ຕອບຄຳຖາມຕາມປຶ້ມແບບຮຽນ.

- ຄູແນະນຳໃຫ້ນັກຮຽນອ່ານເນື້ອໃນບົດຮຽນໜ້ວໜ້າທີ 3 ໃນປຶ້ມແບບຮຽນ. ນັກຮຽນທຸກຄົນຟັງ ແລະ ຈົດບັນທຶກສິ່ງທີ່ຕົນ ໄດ້ຍິນ.

- ຄູຕັ້ງຄຳຖາມສົນທະນາເຈາະຈີ້ມ ໜ້ວໜ້າທີ 3 ດັ່ງນີ້:

1). ມຽນມາມີວັນນະຄະດີສິລະປະກຳໃດແດ່?

2). ເນື້ອໃນທີ່ດີເດັ່ນຂອງວັນນະຄະດີພື້ນເມືອງມີແນວໃດແດ່?

- ຄູໃຫ້ນັກຮຽນຕອບຄຳຖາມຕາມຄວາມເໝາະສົມ.

- ຄູໃຫ້ນັກຮຽນຜູ້ອື່ນໆປະກອບຄວາມຄິດເຫັນເພີ່ມຕື່ມ.

- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນພ້ອມທັງອະທິບາຍ ແລະ ໃຫ້ຄຳຕອບທີ່ຖືກຕ້ອງແກ່ນັກຮຽນຊຶ່ງຄຳຕອບອີງໃສ່ປຶ້ມແບບຮຽນ.

## 4. ภาบสอบวิพาภเลื่อว "บิภแก้วสะวิภิ"

### 4.1 ภาบแบ่วตอบ

- ถูให้เวลาบักธรูบปะมาบ 10-15 บาที เพื่ออ่าบบิดเลื่อวถืบ.
- ถูให้บักธรูบแบ่วตอบ และ ซอภเบื้อใบแต่ละตอบ.
- ถูสะห฼ุบภาบแบ่วตอบของบักธรูบ และ อะทิบายภาบแบ่วตอบที่เอภะพาบให้แภ่บัก ธรูบดั่วบี้:

บิทาบเลื่อว "บิภแก้วสะวิภิ" แบ่วออภเป็บ 4 ตอบถื:

**ตอบที 1** แต่ต้บ เถิว ยากได้ถืถิบ. เบื้อใบตอบบี้ เว้าเถิวถอบถัวซาวบาล้ำว บิภแก้วซื่ "สะวิภิ" พวภเอิาธักบิภแก้วห฼าย และ สอบบิภแก้วสาบาดปากได้ถืถิบ.

**ตอบที 2** แต่เบื่องจาภ เถิว ต่ถวาบภับบับ. ตอบบี้บีเบื้อใบเว้าเถิวบิภแก้วฮู้ถี้, บ่บีบา ละยาดใบภาบปากเว้า, บับป้อยด่าท้าวพา, บางไภ่, ท้าวเผิ้ว และ ท้าวว๊วบับถืถิบ เองเกั่ว และ ธู้พิดทุภสิ่วทุภย่างจึ่วภ่าวพิ่บปะพาดผู้อื่บ.

**ตอบที 3** แต่มื้หนึ่วลูภสาวซาวบา เถิว หีไปตาย. เบื้อใบตอบบี้เว้าเถิวบิภแก้ว ได้บีโอภาดออภจาภตุ้มเลียเห็บท้าวเผิ้วเธัดธัว, บางไภ่ปีภป้องลูภ, ท้าวว๊วเธัดวรุภพัภ และ พาได้ช่วยชีวิดของบิภแก้วไว้ บิภแก้วเฮ้าใจวรุภว๊างของสัดแต่ละถ๊ว.

**ตอบที 4** แต่สะวิภิ เถิว สุดท้าย. เบื้อใบตอบบี้เว้าเถิวบิภแก้วสะวิภิเฮ้าใจชีวิด ยู่ใบตุ้มที่บีผู้อื่บล้ำวย่างสะดวภสะบาย ส่วบพา, เผิ้ว, ไภ่, ว๊ว... ต้องรับผิดชอบล้ำวถืบเอง, ต้องได้ต่ำสู้ และ ละมัดละวังต่สัดตู บิภแก้วจึ่วภ่าวขอบใจสัดทุภถ๊วที่ช่วยเห฼ือถืบ.

- ถูให้บักธรูบชอภหาเบื้อใบลวมของเลื่อว โดยอิวใส่เบื้อใบของแต่ละตอบ.
- ถูให้เวลาบักธรูบปะมาบ 10 บาที เพื่ออ่าบเบื้อใบของแต่ละตอบแล้ว สะห฼ุบเป็บเบื้อใบลวมของบิดเลื่อว.
- ถูให้บักธรูบสะแดวถวามถิดเห็บตามถวามเพาะสิม.
- ถูสะห฼ุบถวามถิดเห็บของบักธรูบ พ้อมทั่วอะทิบายวิทีสะห฼ุบเบื้อใบลวม จาภเบื้อใบแต่ละตอบแล้วสะเพิ่มเบื้อใบลวมให้เป็บเอภะพาบภับ.

เบื้อใบลวมของเลื่อว "บิภแก้วสะวิภิ" เว้าเถิวชีวิดที่แตภต่างภับของสัดที่ยู่ใบตุ้มมีผู้ล้ำวให้ถวามสะดวภสะบายภ็ภายเป็บสัดที่มีบิดไสบ่ดี. ส่วบสัดที่ยู่ข้างบอภต้องรับผิดชอบต็บเอง และ ถอยละมัดละวังสัดตูอ้อมข้าว. ดั่วบั้บ, จึ่วมีแบวถิดรักผู้อื่บ และ ช่วยเห฼ือผู้อื่บ.

- ถูแบะบำบักธรูบอ่าบเลื่อว "บิภแก้วสะวิภิ"

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ເລື່ອງນີ້ມີຕົວລະຄອນຈັກຕົວ, ຕົວໃດແດ່?

2) ໃນເລື່ອງແມ່ນໃຜເປັນຕົວລະຄອນເອກ, ຕົວລະຄອນສຳຮອງ ແລະ ຕົວລະຄອນປະກອບ?

3) ຕົວລະຄອນແຕ່ລະຕົວມີການເຄື່ອນໄຫວແນວໃດ?

- ຄູໃຫ້ເວລາແກ່ນັກຮຽນຄົ້ນຄວ້າ ແລະ ຕອບຄຳຖາມຕາມຄວາມເໝາະສົມ, ເປັນກຸ່ມ ຫຼື ເປັນບຸກຄົນກໍ່ໄດ້.

- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນພ້ອມທັງອະທິບາຍ ແລະ ຕອບຄຳຖາມດັ່ງກ່າວໃຫ້ຈະແຈ້ງ, ເຊິ່ງຄຳຕອບຂອງຄຳຖາມມີຢູ່ເລື່ອງ "ນົກແກ້ວສະວິກີ"

**4.2 ສິລະປະການແຕ່ງ**

- ຄູແນະນຳນັກຮຽນອ່ານເລື່ອງ "ນົກແກ້ວສະວິກີ" ອີກເທື່ອໜຶ່ງ.

- ຄູຕັ້ງຄຳຖາມສົນທະນາດັ່ງນີ້:

1) ຈົ່ງຊອກຫາສຳນວນພັນລະນາພາບປະມານ 2 ສຳນວນ?

2) ຈົ່ງຊອກຫາສຳນວນພັນລະນາຕົວລະຄອນປະມານ 2 ສຳນວນ?

- ຄູໃຫ້ເວລານັກຮຽນຄົ້ນຄວ້າ, ເປັນກຸ່ມ ຫຼື ບຸກຄົນ ກໍໄດ້

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມການກະກຽມ.

- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນພ້ອມທັງຂຽນສຳນວນພັນລະນາພາບ ແລະ ພັນລະນາຕົວລະຄອນໃສ່ກະດານໃຫ້ແກ່ນັກຮຽນ (ຕາມການກະກຽມຂອງຄູກ່ອນການຂຶ້ນຫ້ອງ) ຄຳຕອບຂອງຄຳຖາມຂໍ້ນີ້ແມ່ນໃຫ້ຄູອີງໃສ່ປຶ້ມແບບຮຽນພາສາລາວ (ວິທີພັນລະນາພາບ ແລະ ພັນລະນາຕົວລະຄອນ) ແລ້ວຊອກສຳນວນພັນລະນາໃນເລື່ອງນີ້ເພື່ອອະທິບາຍໃຫ້ແກ່ນັກຮຽນ.

- ຄູແນະນຳນັກຮຽນອ່ານເລື່ອງ "ນົກແກ້ວສະວິກີ" ອີກ.

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1) ຈົ່ງນຳເອົາຕົວລະຄອນສັດໃນເລື່ອງມາປຽບທຽບໃສ່ຄົນລັກສະນະໃດ?

2) ຍ້ອນຫຍັງຈຶ່ງປຽບທຽບໃສ່ຄົນຜູ້ນັ້ນ?

- ຄູໃຫ້ນັກຮຽນຄົ້ນຄວ້າ (ເປັນກຸ່ມ ຫຼື ບຸກຄົນ) ກໍໄດ້.

- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມການກະກຽມ.

- ຄູສະຫຼຸບຄວາມຄິດເຫັນຂອງນັກຮຽນ. ພ້ອມທັງອະທິບາຍຄຳຖາມໃຫ້ກະຈ່າງແຈ້ງຄື: ການປຽບທຽບນົກແກ້ວສະວິກີປຽບທຽບໃສ່ຄົນທີ່ຢູ່ເຮືອນງາມ, ພໍ່ແມ່ຍາດພີ່ນ້ອງຮັກຫຼາຍບໍ່ເຄີຍເຮັດຫຍັງ, ຢາກໄດ້ຫຍັງພໍ່ແມ່ຍາດພີ່ນ້ອງຫາໃຫ້ໄດ້ຕາມໃຈ, ອາຫານການກິນບໍ່ຂາດເຂີນຫຍັງຈັກຢ່າງ ແລະ ຄົນຜູ້ນັ້ນກໍມັກດ່າ, ດູຖູກຄົນອື່ນໂງ່ຈ້າ, ທຸກຍາກຂາດເຂີນ. ສ່ວນທ້າວເຜືອ, ນາງໄກ່,

ທ້າວງົວ ແລະ ທ້າວໝາປຽບໃສ່ປະຊາຊົນສາມັນທຳມະດາຕ້ອງທຳມາຫາກິນ, ຕ້ອງປົກປ້ອງ ຊີວິດຂອງຕົນບໍ່ໃຫ້ຜູ້ອື່ນທີ່ມີກຳລັງແຮງຂົ່ມຂູ່, ຕໍ່ສູ້ກັບສະພາບແວດລ້ອມຂ້າງນອກ.

- ຄູຕັ້ງຄຳຖາມໃຫ້ນັກຮຽນສົນທະນາວ່າ: ນິທານເລື່ອງນີ້ສອນໃຫ້ເຮົາຮູ້ຫຍັງ?
- ຄູໃຫ້ນັກຮຽນສະແດງຄວາມຄິດເຫັນຕາມຄວາມເໝາະສົມ.
- ຄູສະຫຼຸບຂໍ້ຄິດເຫັນຂອງນັກຮຽນ ພ້ອມທັງແນະນຳຄະຕິທີ່ຖອດມາເປັນບົດຮຽນໃນການດຳລົງຊີວິດໃຫ້ແກ່ນັກຮຽນຄື:

1) ບໍ່ຄວນເຫັນແກ່ຕົນເອງທີ່ຢູ່ໃນວົງເຂດນ້ອຍໆ (ຄວນເອົາໃຈເຂົ້າມາໃສ່ໃຈເຮົາ)

2) ຈົ່ງພະຍາຍາມສັງເກດໂລກອ້ອມຂ້າງ ດ້ວຍການອ່ານໜັງສື, ການເບິ່ງຂ່າວ ຫຼື ເບິ່ງຊີວິດຂອງຄົນອື່ນໃນສັງຄົມ. ເບິ່ງສະພາບແວດລ້ອມທາງທຳມະຊາດທີ່ເຮົາດຳລົງຊີວິດຢູ່. ຈຶ່ງຈະເຮັດໃຫ້ນັກຮຽນທຸກຄົນມີຄວາມຈະເລີນກ້າວໜ້າເປັນຜູ້ໃຫຍ່ທີ່ສະຫຼາດໃນອະນາຄົດ ດັ່ງຄຳສຸພາສິດລາວກ່າວໄວ້ວ່າ "ຄົນບໍ່ອອກນອກບ້ານບໍ່ເຫັນດ່ານແຄນໄກ, ຄົນບໍ່ໄປຫາຮຽນບໍ່ຮ່ອນມີຄວາມຮູ້"

## 5. ການສອນຂຽນສະຫຼຸບເຫດການໃນເລື່ອງ

- ຄູແນະນຳນັກຮຽນອ່ານເລື່ອງ "ນົກແກ້ວສະວິກີ"
- ຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:

1.) ເຫດການທີ່ສຳຄັນໃນເລື່ອງມີຈັກເຫດການ ຄືເຫດການໃດແດ່?

2.) ເຫດການສຳຮອງ ຫຼື ຂໍ້ປີກຍ່ອຍທີ່ເກີດຈາກເຫດການສຳຄັນມີຫຍັງແດ່?

- ຄູໃຫ້ເວລານັກຮຽນຄົ້ນຄວ້າເປັນກຸ່ມ ຫຼື ບຸກຄົນກໍ່ໄດ້ (ຕາມຄວາມເໝາະສົມ).
- ຄູໃຫ້ນັກຮຽນລາຍງານຜົນຂອງການຄົ້ນຄວ້າ.
- ຄູສັງເກດການລາຍງານຂອງນັກຮຽນ ແລ້ວສະຫຼຸບຄຳຕອບຂອງນັກຮຽນພ້ອມທັງສະເໜີຄຳຕອບທີ່ຖືກຕ້ອງດັ່ງນີ້:

+ ເຫດການສຳຄັນທີ1: ຊາວນາເອົານົກແກ້ວມາລ້ຽງ. ເຫດການນີ້, ມີເຫດການສຳຮອງ 3 ຢ່າງ ຄື: ຊາວນາຮັກນົກແກ້ວຫຼາຍ, ໃຫ້ອາຫານອຸດົມສົມບູນ, ສອນໃຫ້ຮູ້ປາກ.

+ ເຫດການສຳຄັນທີ2: ນົກແກ້ວປາກເກັ່ງ ແລະ ປ້ອຍດ່າດູຖູກສັດອື່ນໆ, ເຫດການນີ້ມີເຫດການສຳຮອງຄື: ນົກແກ້ວເວົ້າດ່າ ແລະ ດູຖູກທ້າວເຜົ້ງ, ນາງໄກ່, ທ້າວງົວ ແລະ ທ້າວໝາ.

+ ເຫດການສຳຄັນທີ3: ລູກສາວຊາວນາໃຫ້ອາຫານແລ້ວລືມອັດປະຕູຕຸ້ມ, ເຮັດໃຫ້ນົກແກ້ວອອກຈາກຕຸ້ມ. ເຫດການນີ້ມີເຫດການສຳຮອງຄື: ນົກແກ້ວໄດ້ເຫັນທ້າວເຜົ້ງເຮັດຮັງ, ນາງ ໄກ່ລ້ຽງ ແລະ ຮັກສາລູກ, ທ້າວງົວເຮັດວຽກໜັກ, ທ້າວໝາປົກປັກຮັກສາເຮືອນ.

+ ເຫດການທີ່ສຳຄັນທີ4: ນົກແກ້ວເຂົ້າໃຈຊີວິດ ແລະ ໜ້າທີ່ຂອງສັດແຕ່ລະຕົວ. ເຫດການນີ້ມີ

ເທດການສຳຮອງຄື: ລາວສຳນຶກຜິດ ແລ້ວກ່າວຂໍໂທດນຳສັດທຸກໂຕ ແລະ ບໍ່ດູຖູກສັດໂຕອື່ນອີກ.

## 6. ການສອນສະແດງລະຄອນເລື່ອງ "ນົກແກ້ວສະວິກິ"

- ຄູແບ່ງນັກຮຽນອອກເປັນກຸ່ມ ແຕ່ລະກຸ່ມໃຫ້ມີຈຳນວນຄົບຕາມຕົວລະຄອນໃນເລື່ອງ.
- ຄູແບ່ງ ຫຼື ໃຫ້ນັກຮຽນແບ່ງກັນເອງເພື່ອສະແດງລະຄອນຄື:

1) ຜູ້ໜຶ່ງສະແດງເປັນ ນົກແກ້ວ
2) ຜູ້ໜຶ່ງສະແດງເປັນ ພໍ່ນາ
3) ຜູ້ໜຶ່ງສະແດງເປັນ ເມຍພໍ່ນາ
4) ຜູ້ໜຶ່ງສະແດງເປັນ ລູກສາວພໍ່ນາ
5) ຜູ້ໜຶ່ງສະແດງເປັນ ທ້າວເຜົ້ງ
6) ຜູ້ໜຶ່ງສະແດງເປັນ ນາງໄກ່
7) ຜູ້ໜຶ່ງສະແດງເປັນ ລູກໄກ່
8) ຜູ້ໜຶ່ງສະແດງເປັນ ທ້າວງົວ
9) ຜູ້ໜຶ່ງສະແດງເປັນ ທ້າວໝາ

- ຄູແນະນຳໃຫ້ນັກຮຽນແຕ່ລະຄົນອ່ານ ໜ້າທີ່ທີ່ຕົນສະແດງນັ້ນໃຫ້ລະອຽດແລ້ວຝຶກການສະແດງເປັນກຸ່ມ.
- ຄູໃຫ້ນັກຮຽນຝຶກຊ້ອມຢູ່ເຮືອນ ແລ້ວໃຫ້ມາສະແດງໃນຫ້ອງເພື່ອແຂ່ງຂັນກັນ.
- ຄູສະຫຼຸບການແຂ່ງຂັນ, ການສະແດງລະຄອນຂອງແຕ່ລະກຸ່ມດ້ວຍການຍ້ອງຍໍຊົມເຊີຍກຸ່ມທີ່ສະແດງໄດ້ດີ ແລະ ຍົກຈຸດຄ້າງຄາ.

## ★ ຕອບຄຳຖາມທ້າຍບົດ

1) ປະເທດມຽນມາມີຊາຍແດນຕິດກັບບັງກະລາເທດ, ອິນເດຍ, ທິເບດ, ຈີນ, ໄທ ແລະ ລາວ.
2) ຊາວມຽນມາມີມູນເຊື້ອສິລະປະວັນນະຄະດີ, ຊາວມຽນມາມີມູນເຊື້ອສິລະປະກຳວັນນະຄະດີອັນດີເດັ່ນ ແລະ ມີສີສັນທາງສາສະໜາ, ຊາວມຽນມາໄດ້ສ້າງວັດວາອາຮາມ, ພະທາດເຈດີຫຼາຍແຫ່ງຢັ່ງຢາຍໄປທົ່ວປະເທດມຽນມາ.
3) ເລື່ອງນົກແກ້ວສະວິກິມີເນື້ອໃນເວົ້າເຖິງ (ຄຳຕອບແມ່ນຕອບຕາມເນື້ອໃນລວມຂອງເລື່ອງທີ່ໄດ້ວິພາກມາ)


## V. ภาบอัด ແລะ ปะเมิบผิบ

ສັ່ງเภดจาภ:

- ภาบอะทิบายบาๆจุดภ่ธอภับปะเทดมธูบมา.
- ภาบอะทิบายสะพาบปะหวัดสาดขอๆปะเทดมธูบมา.
- อะทิบายสะพาบอับบะละดิมธูบมา.

ภวดผิบๆาบจาภ:


- ภาบเธัดวิพาภบิดเลื่อๆ "บิภแก้ว สะวิภี"
- ภาบขธูบหย้ำเทดภาบใบเลื่อๆ "บิภแก้ว สะวิภี"
- ภาบสะแดๆละถอบเลื่อๆ "บิภแก้ว สะวิภี"



ໝາ



ນົກແກ້ວ



ງົວ



ໄກ່

# ບົດອ່ານເພີ່ມ
# ປະຫວັດຄວາມເປັນມາຂອງຊາວມຽນມາ

(ແປ ແລະ ຮຽບຮຽງໂດຍ: ນ. ຄຳຜຸຍ ພົນລືຊາ)

ນັກຄົ້ນຄວ້າຫຼາຍທ່ານໄດ້ໃຫ້ທັດສະນະວ່າ ຊົນຊາດພະມ້າບູຮານເຄີຍດຳລົງຊີວິດຢູ່ມົງໂກລີ ແລະ ຕິເບດ (ດິນແດນຂອງປະເທດຈີນ). ຊົນຊາດພະມ້ານອນໃນກຸ່ມຕິເບດ-ພະມ້າ. ພູມລຳເນົາແທ້ໆ ແມ່ນເຂດພູດອຍຢູ່ສູນກາງທະວີບເອເຊຍ. ຍ້ອນມີຫຼາຍສາເຫດຈຶ່ງອົບພະຍົບລົງມາທາງໃຕ້ຕາມແມ່ນ້ຳລຳເຊ ຕ່າງໆ, ສ່ວນຫຼາຍໃຊ້ແມ່ນ້ຳເອລາວະດີລົງມາທາງໃຕ້ ປັດຈຸບັນເປັນດິນແດນຂອງປະເທດມຽນມາ.

ເຂົ້າເຈົ້າພາກັນກໍ່ສ້າງບ້ານເມືອງຢູ່ຕາມແຄມແມ່ນ້ຳລຳເຊ, ມີການປະກອບອາຊີບປູກຝັງເປັນຫຼັກ ແລະ ຄ່ອຍໆຂະຫຍາຍເຂດແດນຂອງຕົນເອງອອກ. ກ່ອນ ຄ.ສ. 300-600 ປີ, ຊົນຊາດ ພະມ້າບູຮານ ໄດ້ສ້າງເມືອງໃຫຍ່ຂຶ້ນ 3 ເມືອງຄື: ເມືອງເບັກຕາໂນ (Vishnu), ເມືອງຫັນລິນ (Han lon) ແລະ ເມືອງຕາ ເຢຄິດຕາຢາ (Sriksetra) ສາມເມືອງນີ້ມີຄວາມຈະເລີນພໍສົມຄວນ.

ອານາຈັກທຳອິດຂອງພະມ້າ ແມ່ນອານາຈັກປາການ (Pagan) ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ ຄ.ສ. 849 ຜູ້ທ້ອນໂຮມອານາຈັກປາການ ຫຼື ມຽນມາເປັນອານາຈັກທີ່ມີຄວາມເປັນເອກະລາດ, ເອກະພາບ ແລະ ມີອຳນາດເຂັ້ມແຂງ ໂດຍສະເພາະແມ່ນໃນລາຊະການຂອງເຈົ້າອະນຸລຸດທະ (ຄ.ສ.1044-1077) ເຊິ່ງເປັນໄລຍະທີ່ເຈົ້າອະນຸລຸດທະ ສາມາດເອົາຊະນະປະເທດມອນທີ່ຢູ່ທາງໃຕ້ ແລະ ໄດ້ນຳເອົາສາສະໜາພຸດຈາກປະເທດມອນມາເຜີຍແຜ່ຢູ່ທົ່ວອານາຈັກປາການ.

ປະເທດພະມ້າເປັນປະເທດໜຶ່ງທີ່ເຂັ້ມແຂງໃນສະຕະວັດທີ XI-XII ເຖິງແມ່ນວ່າປະເທດມຽນມາ ຈະເຂັ້ມແຂງປານໃດກໍຕາມ ແຕ່ກໍຍັງຖືກການຮຸກຮານຈາກພວກມົງໂກນໃນໄລຍະໜຶ່ງ, ແຕ່ຍ້ອນປະຊາຊົນ ມີນ້ຳໃຈຮັກຊາດ, ມີຄວາມສາມັກຄີ ແລະ ບໍ່ຍອມຈຳນົນຕໍ່ສັດຕູຕ້ານກັບພວກມົງໂກນ. ນັບແຕ່ນັ້ນມາ ປະເທດມຽນມາຈຶ່ງຖືກປົກຄອງໂດຍລາຊະວົງຕ່າງໆຂອງຊາດຕົນເອງ.

ຈົນຮອດສະຕະວັດທີ XIX ພວກລ່າເມືອງຂຶ້ນອັງກິດໄດ້ເຂົ້າມາຮຸກຮານປະເທດມຽນມາ. ໃນວັນທີ 1/1/1886 ອັງກິດໄດ້ປະກາດປະເທດມຽນມາເປັນຫົວເມືອງຂຶ້ນຂອງພວກເຂົາ. ປີ 1924-1945 ຟາຊິດຍີ່ປຸ່ນໄດ້ເຂົ້າມາຮຸກຮານປະເທດມຽນມາອີກ. ສ່ວນອັງກິດໄດ້ຖອຍໜີໄປອິນເດຍ. ຫຼັງຈາກຍີ່ປຸ່ນປະ ລາໄຊໃນປີ 1945 ອັງກິດໄດ້ກັບເຂົ້າມາມຽນມາອີກເປັນເທື່ອທີສອງ. ປະຊາຊົນມຽນມາຜູ້ທີ່ຮັກຫອມປະເທດຊາດ, ບໍ່ຍອມຈຳນົນສັດຕູໄດ້ສາມັກຄີກັນຕໍ່ສູ້ກັບອັງກິດຢ່າງອົງອາດກ້າຫານ. ໃນວັນທີ 4/1/1948 ມຽນມາໄດ້ປະກາດຄວາມເປັນເອກະລາດຢ່າງສົມບູນໃຫ້ຊາວໂລກຮັບຮູ້. ປີ 1948-1959 ຊາວມຽນມາ ໄດ້ປົກຄອງປະເທດຕາມລະບອບປະຊາທິປະໄຕ. 1962 ຫາ 1988 ໄດ້ປ່ຽນຫິດໄປຕາມລະບອບສັງຄົມນິຍົມ ແຕ່ຍ້ອນສະພາບການຕ່າງໆ ແລະ

ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນນັບແຕ່ປີ1989 ຮອດປັດຈຸບັນ, ປະເທດມຽນມາກຽມໄປ ສູ່ເສັ້ນທາງປະຊາທິປະໄຕໂດຍພາຍໃຕ້ການນຳພາຂອງສະພາສັນຕິພາບ ແລະ ພັດທະນາແຫ່ງລັດ.

## ປະເພນີການແຕ່ງດອງຂອງຊາວມຽນມາ

(ແປ ແລະ ຮຽບຮຽງໂດຍ: ນ. ຄຳຜຸຍ ພົນລືຊາ)

ຄົນມຽນມາຖືວ່າການແຕ່ງດອງແມ່ນພິທີກຳອັນໜຶ່ງທີ່ສຳຄັນໃນຊີວິດ ແລະ ເປັນການຮັບຜາ ລະໜ້າທີ່ຂອງສັງຄົມ; ຍ້ອນຄົນມຽນມາມີຄວາມເຊື່ອວ່າ ຕົນເອງຕ້ອງໄດ້ຮັກສາຕະກຸນເຊື້ອຊາດ ແລະ ຕ້ອງມີຜູ້ສືບຕໍ່ປະເພນີອັນດີງາມຂອງຊາດຕົນໄວ້. ການແຕ່ງດອງຂອງຄົນມຽນມາທີ່ນິຍົມປະຕິບັດກໍ ມີຫຼາຍຂັ້ນຕອນ ເປັນຕົ້ນແມ່ນການຊອກຫາຄູ່ຄອງ, ການສູ່ຂໍ, ພິທີການແຕ່ງດອງກໍແມ່ນຂັ້ນຕອນໜຶ່ງ ທີ່ສຳຄັນໃນຊີວິດຂອງຄົນມຽນມາຈົນມີຄຳກ່າວຂານໄວ້ວ່າ: ຖ້າການແຕ່ງດອງຜິດພາດມັນບໍ່ດີສະ ເພາະແຕ່ຊາດນີ້ ຍັງຈະສົ່ງຜົນສະທ້ອນຕໍ່ຊີວິດຊາດໜ້າ. ຖ້າຫາກຄູ່ຜົວເມຍຮັກກັນ, ປອງດອງກັນ, ຄອບຄົວອົບອຸ່ນ, ລູກໆກໍຈະມີຄວາມສຸກ ເປັນຄົນດີ, ມີຄວາມຮູ້ຄວາມສາມາດ ເພື່ອປະກອບສ່ວນເຂົ້າ ໃນການພັດທະນາປະເທດຊາດ. ດັ່ງນັ້ນ, ຄົນມຽນມາຈຶ່ງໄດ້ໃຫ້ຄວາມສຳຄັນຕໍ່ການຊອກຫາຄູ່ຄອງ ໃຫ້ລູກໃຫ້ຫຼານຂອງຕົນ.

ການຊອກຫາຄູ່ຄອງຂອງຄົນມຽນມາ ໂດຍທົ່ວໄປມີສອງແບບຄື: ຊອກຫາຄູ່ຄອງດ້ວຍຕົນເອງ ແລະ ໃຊ້ແມ່ສື່ ຫຼື ພໍ່ແມ່ຫາໃຫ້. ຍ້ອນແນວນັ້ນພໍ່ແມ່ຈຶ່ງຖືວ່າເປັນຜູ້ທີ່ມີພາລະສຳຄັນຕໍ່ກັບລູກ. ຄົນມຽນມາຖືວ່າ ຜູ້ທີ່ເປັນພໍ່ແມ່ມີພາລະສຳຄັນຢູ່ຫ້າຢ່າງທີ່ຕ້ອງປະຕິບັດຕໍ່ລູກຄື:

1) ຕ້ອງຫ້າມລູກຕົນເອງບໍ່ໃຫ້ເຮັດໃນສິ່ງທີ່ບໍ່ດີ.
2) ຕ້ອງສັ່ງສອນລູກເຮັດແຕ່ສິ່ງດີງາມ.
3) ຕ້ອງໃຫ້ລູກຮຽນໜັງສື.
4) ຕ້ອງເອົາຊັບສົມບັດໃຫ້ລູກເພື່ອການດຳລົງຊີວິດ.
5) ຕ້ອງແຕ່ງດອງໃຫ້ລູກ.

ຖ້າພໍ່ແມ່ຜູ້ໃດບໍ່ປະຕິບັດຕາມພາລະຫ້າຂໍ້ທີ່ກ່າວມານັ້ນ ຖືວ່າບໍ່ສຳເລັດໜ້າທີ່ຂອງພໍ່ແມ່. ການແຕ່ງດອງໃຫ້ລູກແມ່ນໜ້າທີ່ທີ່ສຳຄັນຂອງພໍ່ແມ່ຕ້ອງໄດ້ປະຕິບັດ.

ໃນສະໄໝກ່ອນການຊອກຄູ່ຄອງໃຫ້ລູກ ແມ່ນໜ້າທີ່ຂອງພໍ່ແມ່, ພໍ່ແມ່ຈະຊອກຫາຄູ່ຄອງທີ່ດີ ໃຫ້ລູກ ຕົນເອງ. ບາງເທື່ອກໍມີຄົນຕິດຕໍ່ໃຫ້ (ເອີ້ນວ່າແມ່ສື່ສ່ວນຫຼາຍຈະມີອາຍຸປະມານ 40 ປີຂຶ້ນໄປ). ແມ່ສື່ຈະເປັນຜູ້ພົວພັນຝ່າຍຍິງ ຫຼື ຝ່າຍຊາຍໃຫ້. ຖ້າພໍ່ແມ່ທັງສອງຝ່າຍໄດ້ຂໍ້ມູນຈາກແມ່ສື່ ແລ້ວພວກເຂົາກໍຈະໄປສອບຖາມຂໍ້ມູນກ່ຽວກັບຜູ້ຊາຍ ຫຼື ຜູ້ຍິງຄົນນັ້ນຕື່ມອີກ. ທັງສອງຝ່າຍເຫັນ

ດີກັນແລ້ວກໍໃຫ້ບ່າວສາວແຕ່ງດອງກັນ, ຜູ້ໃຫຍ່ທັງສອງຝ່າຍກໍຈະສົ່ງຂອງຂວັນໄປໃຫ້ແມ່ສື່ ແລະ ບ່າວ ສາວກໍຕ້ອງໄດ້ນົບແມ່ສື່ ເພື່ອສະແດງຄວາມເຄົາລົບ ແລະ ຮູ້ບຸນຄຸນ.

ສ່ວນຫຼາຍຜູ້ໃຫຍ່ຈະນິຍົມໃຫ້ແມ່ສື່ຊອກຄູ່ຄອງໃຫ້ ແຕ່ຊາວໜຸ່ມບາງຄົນກໍໄປຫາແມ່ສື່ເອງ ໂດຍເວົ້າວ່າ: "ແມ່ເອີຍ! ລູກສົນໃຈແມ່ຍິງຄົນໜຶ່ງຊື່ວ່າ... ຊ່ວຍໄປຖາມໃຫ້ແດ່". ແມ່ສື່ ກໍໄປຫາແມ່ຍິງ ຄົນນັ້ນ ແລະ ຖາມວ່າ: "ມີຄົນຮັກແລ້ວບໍ?" ຖ້າຕອບວ່າຍັງບໍ່ທັນມີແມ່ສື່ກໍບອກວ່າ "ມີຜູ້ສົນໃຈເຈົ້າຊື່ ທ້າວ... ເປັນແນວໃດເຈົ້າສົນໃຈບໍ? ເມື່ອບ່າວສາວສົນໃຈກັນກໍຕິດຕໍ່ກັນທາງຈົດໝາຍໂດຍຜ່ານແມ່ສື່ ແລະ ເອົາຄຳຄິດຄຳເຫັນນຳແມ່ສື່ຈົນໄດ້ແຕ່ງດອງກັນກໍມີ".

ໂອກາດທີ່ບ່າວ-ສາວຈະພົບກັນ, ສ່ວນຫຼາຍແມ່ນຍາມຕັກນ້ຳ, ງານບຸນຕ່າງໆ, ໃນຍາມກ່ຽວເຂົ້າ. ເມື່ອໂດ້ໂອ້ລົມກັນບາງເທື່ອກໍມັກກັນເອງກໍມີ. ການຊອກຄູ່ຄອງເອງນັ້ນ ເຖິງແມ່ນວ່າຈະຊອກດ້ວຍຕົນ ເອງກໍຕາມແຕ່ຕ້ອງໄດ້ຜ່ານຄວາມເຫັນດີຈາກພໍ່ແມ່ ແລະ ສິ່ງສຳຄັນທັງສອງຕ້ອງຮັກກັນຢ່າງຈິງໃຈ ຈຶ່ງສາມາດໃຊ້ຊີວິດຮ່ວມກັນໄດ້ຈົນເຖົ້າຈົນແກ່. ບາງຄູ່ຮັກກັນ, ຢາກໃຊ້ຊີວິດຮ່ວມກັນ ແຕ່ພໍ່ແມ່ບໍ່ເຫັນດີ ຈົນເຮັດໃຫ້ບ່າວສາວຈຳຕ້ອງຕັດສິນໃຈພາກັນລັກໜີກໍມີ. ສ່ວນພໍ່ແມ່ຝ່າຍຍິງຖ້າບໍ່ມັກຜູ້ບ່າວຄົນນັ້ນ ແລ້ວ ຕ້ອງໄດ້ເຝົ້າລູກຕົນເອງຢູ່ສະເໝີ, ບໍ່ໃຫ້ອອກນອກເຮືອນ. ບາງຄົນເຖິງແມ່ນວ່າພໍ່ແມ່ຈະຫ້າມປາມ ໃດກໍຕາມ ແຕ່ບ່າວສາວກໍຍັງລັກໄປຫາມາສູ່ກັນ, ບາງເທື່ອເຖິງຂັ້ນໜີໄປນຳກັນ ໂດຍມີການນັດ ໝາຍ. ເມື່ອເຖິງເວລານັດໝາຍຜູ້ຊາຍກໍຈະມາກັບໝູ່ສອງສາມຄົນ ເພື່ອມາລັກເອົາຜູ້ສາວ. ເມື່ອບ່າວ-ສາວ ລັກໜີໄປນຳກັນ, ທຳອິດພໍ່ແມ່ຈະໃຈຮ້າຍສຸດທ້າຍກໍຍອມຮັບ. ຄົນມຽນມາມີຄວາມຜູກພັນ ຫຼາຍກັບລູກຫຼານ. ດັ່ງນັ້ນ, ພວກເພິ່ນຈຶ່ງມັກໃຫ້ອະໄພແກ່ລູກຫຼານ. ພວກເພິ່ນຍຶດຖືສຸພາສິດທີ່ວ່າ: "ເຄື່ອງຂອງບໍ່ດີຖິ້ມໄດ້ ລູກບໍ່ດີຖິ້ມບໍ່ໄດ້" ຕາມປະເພນີຂອງຄົນມຽນມາຕ້ອງມີການສູ່ຂໍກ່ອນການ ແຕ່ງດອງ. ການສູ່ຂໍແມ່ນຂັ້ນຕອນໜຶ່ງທີ່ສຳຄັນສຳລັບການແຕ່ງດອງ. ຖ້າບ່າວ-ສາວຮັກມັກກັນ ແລະ ພໍ່ແມ່ເຫັນດີແລ້ວ ຜູ້ໃຫຍ່ທັງຝ່າຍຊາຍຈະໄປເຮືອນຝ່າຍຍິງເພື່ອຂໍ. ເມື່ອຝ່າຍຊາຍຮອດເຮືອນ ຝ່າຍຍິງ, ຍາດຕິພີ່ນ້ອງຂອງຝ່າຍຍິງຈະມາຕ້ອນຮັບ ແລະ ເຊີນໃຫ້ເຂົ້ານັ່ງໃນເຮືອນພ້ອມທັງຫານ້ຳ ຊາ, ໝາກ, ຢາສູບມາຮັບຕ້ອນ. ເວລານັ້ນຕ້ອງມີຜູ້ເຖົ້າຜູ້ແກ່ໃນບ້ານມາຮ່ວມນຳ. ແຕ່ໃນການສູ່ຂໍຜູ້ ບ່າວຜູ້ສາວບໍ່ໄດ້ເຂົ້າຮ່ວມ, ມີແຕ່ປ່ອຍໃຫ້ເປັນໜ້າທີ່ຂອງຜູ້ໃຫຍ່ທັງສອງຝ່າຍຈະຕົກລົງກັນ.

- ທຳອິດຝ່າຍຊາຍເອີ້ນຂຶ້ນກ່ອນວ່າ "ພວກຂ້າພະເຈົ້າມີລູກຊາຍຄົນໜຶ່ງຊື່ວ່າ ທ້າວ... ເປັນ ຄົນນິໄສດີ, ເຄົາລົບຍາດຜູ້ໃຫຍ່, ເຊື່ອຖືສາສະໜາພຸດ, ໄດ້ຮັກມັກ ແລະ ຢາກສ້າງຄອບຄົວກັບລູກສາວ ຂອງພວກທ່ານ, ບໍ່ຮູ້ວ່າພວກທ່ານມີຄວາມຄິດ, ຄວາມເຫັນແນວໃດ?".

-ຝ່າຍຍິງກໍຕອບວ່າ: "ລູກສາວຂອງພວກຂ້າພະເຈົ້າກໍເປັນຄົນສຸພາບຮຽບຮ້ອຍ, ສາມາດເຮັດວຽກ ເຮືອນການຊານໄດ້, ຕ່ຳຫູກທໍໄໝກໍເປັນ, ຖ້າພວກທ່ານເຫັນດີຢາກໃຫ້ທັງສອງສ້າງຄອບຄົວນຳ ກັນທາງພວກເຮົາກໍຍິນດີ".

ເມື່ອທັງສອງຝ່າຍຕົກລົງກັນເຫັນດີໃຫ້ແຕ່ງດອງ ທາງຝ່າຍຊາຍກໍຈະປຶກສາຫາລືເລື່ອງຄ່າດອງສິນສອດອາດຈະມີເງິນ, ຄຳ, ນາ, ງົວ, ຄວາຍ ເປັນຕົ້ນ. ຫຼັງຈາກນັ້ນ ຜູ້ເຖົ້າຜູ້ແກ່ຈະຊອກຫາລືກ ງາມຍາມດີ ເພື່ອຈັດພິທີແຕ່ງດອງ.

ພາຍຫຼັງທີ່ບ່າວ-ສາວມັກຮັກກັນ ແລະ ພໍ່ແມ່ເຫັນດີແລ້ວ ກໍຈະຈັດພິທີແຕ່ງດອງຕາມຮີດຄອງປະເພນີທີ່ສືບທອດກັນມາແຕ່ດົນນານ ແລະ ຕາມກົດໝາຍບ້ານເມືອງ. ກ່ອນການແຕ່ງດອງທັງສອງຝ່າຍໄດ້ໄປເຊີນແຂກມາຮ່ວມງານ ເພື່ອເປັນສັກຂີພະຍານໃຫ້ແກ່ຄູ່ສົມລົດໃໝ່. ການເຊື່ອເຊີນແມ່ນເຊີນດ້ວຍບັດເຊີນ ແລະ ເຊີນດ້ວຍການບອກເລົ່າ. ແຕ່ເວລາໄປບອກເລົ່ານັ້ນຜູ້ບອກຕ້ອງເອົາຊາ, ໝາກ, ຫຼື ຢາສູບໄປນຳເພື່ອເອົາໄປໃຫ້ແຂກທີ່ເຊີນນັ້ນ ແລະ ພ້ອມທັງເວົ້າວ່າ: "ຂ້າພະເຈົ້າມາເຊີນທ່ານ ໄປຮ່ວມງານແຕ່ງດອງໃໝ່ລະຫວ່າງ ທ້າວ... ກັບ ນາງ... ເປັນລູກຊາຍລູກສາວຂອງທ່ານ... ຈະແຕ່ງໃນວັນ ທີ ເດືອນ ປີ... ເວລາ... ".

ເມື່ອຮອດມື້ແຕ່ງດອງ, ເຈົ້າພາບທັງສອງຝ່າຍກໍຈັດພິທີແຕ່ງດອງໂດຍຈັດຢູ່ບ້ານເຈົ້າສາວ ຢູ່ໃນພິທີຈະມີຂັນເງິນໜ່ວຍໜຶ່ງຕັ້ງໄວ້ກາງພິທີ ເຊິ່ງຢູ່ໃນຂັນນັ້ນມີເຂົ້າຕອກແຕກປົນກັບເງິນ. ແຂກທີ່ຖືກເຊີນກໍຈະມາຮ່ວມງານຕາມເວລານັດໝາຍ ພ້ອມທັງສິ່ງຂອງຂວັນໃຫ້ເຈົ້າບ່າວ-ສາວເຊັ່ນ: ເງິນ, ເຄື່ອງໃຊ້ທີ່ຈຳເປັນສຳລັບຜູ້ສ້າງຄອບຄົວໃໝ່ ແລະ ອວຍພອນໃຫ້ໄດ້ຢູ່ຮ່ວມກັນຈົນເຖົ້າຈົນແກ່. ພໍເຖິງເວລາຈັດພິທີ, ເຈົ້າບ່າວ-ສາວກໍໄປນັ່ງຢູ່ບ່ອນທີ່ກະກຽມໄວ້ ເຈົ້າສາວຈະ ນັ່ງຢູ່ເບື້ອງຊ້າຍມືເຈົ້າບ່າວ, ເຈົ້າບ່າວ-ສາວຕ້ອງກາບໄຫວ້ຍາດຜູ້ໃຫຍ່ທັງສອງເພື່ອຂໍພອນ. ຫຼັງຈາກນັ້ນຈະມີຜູ້ໃຫຍ່ຄົນໜຶ່ງເລີ່ມຈັດພິທີໃຫ້ໂດຍຈັບເອົາມືຊ້າຍເຈົ້າບ່າວນັ້ນມາຕັ້ງມືຂວາເຈົ້າສາວ (ມືເຈົ້າສາວຢູ່ລຸ່ມ) ຫຼັງຈາກນັ້ນກໍຫວ່ານເຂົ້າຕອກແຕກກັບເງິນທີ່ຢູ່ໃນຂັນນັ້ນ, ຖ້າໃຜເກັບເງິນນັ້ນໄດ້ກໍໃຫ້ຮັກສາໄວ້ດີໆ ເພາະເຊື່ອວ່າຈະເປັນເຄື່ອງນຳໂຊກ. ຫຼັງຈາກນັ້ນເຈົ້າພາບກໍເຊີນແຂກຮັບປະທານອາຫານ ແລ້ວຖືວ່າການແຕ່ງດອງໄດ້ສຳເລັດລົງ. ສ່ວນເຈົ້າບ່າວ ສາວກໍເປັນຄູ່ຜົວເມຍກັນຢ່າງຖືກຕ້ອງຕາມປະເພນີ ແລະ ກົດໝາຍບ້ານເມືອງ. ເຈົ້າບ່າວຕ້ອງໄດ້ໄປຢູ່ເຮືອນເຈົ້າສາວ, ແຕ່ກໍມີກໍລະນີຍົກເວັ້ນ, ຖ້າຫາກຄອບຄົວເຈົ້າສາວມີຫຼາຍຄົນ, ຜົວເມຍຢາກສ້າງ ຫຼື ອອກເຮືອນໃໝ່ກໍໄດ້ ເຊິ່ງອີງຕາມຄວາມເໝາະສົມ.

ຄົນມຽນມາໃນສະໄໝກ່ອນຈະນິຍົມໃຫ້ຜູ້ສາວແຕ່ງດອງກັບຄົນບ້ານດຽວກັນ. ຖ້າແຕ່ງກັບຄົນບ້ານອື່ນຕ້ອງໄດ້ອະທິບາຍໃຫ້ຊາຍໜຸ່ມຢູ່ໃນບ້ານເຂົ້າໃຈກ່ອນ. ຖ້າພວກເຂົາບໍ່ເຂົ້າໃຈ, ພວກເຂົາຈະຄິດວ່າຜູ້ບ່າວໃນບ້ານນີ້ບໍ່ມີແລ້ວ, ຈຶ່ງໄປແຕ່ງດອງກັບຜູ້ຊາຍບ້ານອື່ນ. ຖ້າເປັນແນວນັ້ນເມື່ອຕົກຮອດກາງຄືນ, ພວກເຂົາກໍຈະໄປແກວ່ງກ້ອນຫີນໃສ່ເຮືອນຂອງຜູ້ສາວ. ສະນັ້ນ, ເພື່ອບໍ່ໃຫ້ເກີດເຫດການແບບນັ້ນຂຶ້ນ ຕ້ອງອະທິບາຍໃຫ້ພວກເຂົາເຂົ້າໃຈກ່ອນ.

# ຊຸດແຕ່ງດອງຂອງຊາວມຽນມາ

(ແປ ແລະ ຮຽບຮຽງໂດຍ: ນ. ຄຳຜຸຍ ພົນລືຊາ)

ໃນບັນດາຊຸດແຕ່ງກາຍຂອງຊາວມຽນມາ, ຊຸດແຕ່ງດອງເປັນຊຸດທີ່ສວຍງາມ ແລະ ເບິ່ງສະຫງ່າ. ຊາວພະມ້າໂດຍສ່ວນໃຫຍ່ແລ້ວຈະຄອງຊີວິດຄູ່ນຳກັນໄປຕະຫຼອດຊີວິດ. ດັ່ງນັ້ນ, ງານມົງຄຸນສົມລົດ ຈະຈັດໄດ້ພຽງຄັ້ງດຽວໃນຊີວິດຈຶ່ງຕ້ອງຈັດໃຫ້ມັນຫຼູຫຼາ ແລະ ງົດງາມເທົ່າທີ່ຈະເຮັດໄດ້, ແມ່ນຈະຕ້ອງໃຊ້ເງິນຄຳຫຼາຍປານໃດກໍຕາມ. ງານແຕ່ງດອງນີ້ຍັງເປັນໂອກາດດີທີ່ພໍ່ແມ່ພີ່ນ້ອງ ແລະ ຍາດມິດໄດ້ມາພົບກັນຢ່າງພ້ອມໜ້າ ແລະ ສະໜຸກສະໜານຮ່ວມກັນ.

ໃນການຈັດງານແຕ່ງດອງນັ້ນຜູ້ມີຖານະມັກຈັດຂຶ້ນທີ່ໂຮງແຮມ. ສ່ວນຜູ້ທີ່ບໍ່ມີຖານະດີກໍນິຍົມຈັດຢູ່ວັດ ຫຼື ເຮືອນຂອງຕົນເອງ. ໃນງານແຕ່ງດອງນີ້ ສິ່ງສຳຄັນທີ່ສຸດຂອງເຈົ້າບ່າວ ແລະ ເຈົ້າສາວຊາວມຽນມານີ້ແມ່ນຊຸດແຕ່ງກາຍໃນເວລາແຕ່ງດອງ. ສີຊຸດແຕ່ງດອງທີ່ຊາວມຽນມານິຍົມກັນທີ່ສຸດແມ່ນສີຂາວ, ສີເຫຼືອງອ່ອນ ແລະ ສີບົວອ່ອນໆ. ເຈົ້າບ່າວນິຍົມໃສ່ເສື້ອໃນແມ່ນແລກະໂດງ ແລະ ເສື້ອຊັ້ນ ນອກແມ່ນເສື້ອກະໂປ່ງທີ່ເຮັດດ້ວຍໄໝ, ນຸ່ງໂສ້ງຂາຍາວ ຊາວມຽນມາເອີ້ນວ່າ ຕ່ອງເສປະໂຊ, ທີ່ເຮັດດ້ວຍຜ້າໄໝຄືກັນ, ໃສ່ໝວກ "ຄອງບອງ", ໃສ່ເກີບຄີບທີ່ເຮັດດ້ວຍຜ້າກຳມະຫຍີ່.

ຊຸດແຕ່ງດອງຂອງເຈົ້າສາວມີຄວາມສຳຄັນຫຼາຍ ເພາະແຂກທີ່ມາຮ່ວມງານດອງມັກຈະຈ້ອງຕາເບິ່ງວ່າ: ເຈົ້າສາວແຕ່ງກາຍແນວໃດ? ແຊມຫົວດ້ວຍດອກໄມ້ອັນໃດ? ຈະໃສ່ເຄື່ອງປະດັບອັນໃດແດ່? ແລະ ຈະນຸ່ງສິ້ນ "ໂຈຈີ່ເຈ້ະ" ທີ່ແຂນດ້ວຍສີທອງຫຼືບໍ່? ໃນງານດອງ ເຈົ້າສາວຈະຕ້ອງເປັນຄົນທີ່ສວຍງາມໂດດເດັ່ນທີ່ສຸດໃນງານ.

ໃນງານແຕ່ງດອງຊາວມຽນມານິຍົມໃສ່ເສື້ອທີ່ມີຊື່ເອີ້ນວ່າ ໄຖມະເຕງອິງຈີ່ ຄືເສື້ອຜ້ານໃນເປັນຄືເສື້ອເກາະເອິກ ແລະ ມີເສື້ອຜ້ານນອກເປັນແພບາງໆ, ແຂນຍາວ, ແອວລອຍ ແລະ ມີສາຍໂຄ້ງງ່ອນເລັກນ້ອຍ, ສ່ວນສິ້ນເຈົ້າສາວແມ່ນສິ້ນໄໝຊື່ວ່າ "ໂຈຈີ່ເຈ້ະ" ມີສີສັນ ແລະ ລວດລາຍດຽວກັນກັບເສື້ອເກາະເອິກ. ເວລານຸ່ງສິ້ນນີ້ຕ້ອງປ່ອຍຍາວເວລາຍ່າງຈຶ່ງຕ້ອງຍ່າງຄ່ອຍໆ. ນອກຈາກນີ້ຍັງມີຜ້າຄຸມບ່າ ເຊິ່ງເອີ້ນວ່າ "ປະຫວ່າ" ເປັນຜ້າລູກໄມ້. "ປະຫວ່າ" ແມ່ນຜ້າຄຸມຈາກບ່າລົງຮອດຕີນ.

ການແຕ່ງຜົມກໍເປັນເລື່ອງທີ່ສຳຄັນຂອງເຈົ້າສາວ. ເຈົ້າສາວຕ້ອງມ້ວນຜົມ ແລະ ມີປິ່ນປັກຜົມທີ່ປະກອບ ດ້ວຍເພັດ, ທັບທິມ, ໄພລິນ ຫຼື ມຸກ. ນອກຈາກນີ້ ຊາວມຽນມາຍັງນິຍົມແຊມມວຍຜົມດ້ວຍກ້ວຍໄມ້. ຈາກນັ້ນ ຈະຕົກແຕ່ງດ້ວຍເຄື່ອງປະດັບ, ແຫວນ, ສາຍແຂນ, ສ້ອນຄໍອັນຍະມະນີ ແລະ ໃສ່ເກີບຄີບຊຶ່ງເອີ້ນວ່າ "ໂປ່ງຕໍ່ພະນະ" ທີ່ເຮັດດ້ວຍຜ້າກຳມະຫຍີ່. ເຈົ້າສາວຕາມທີ່ດັ່ງກ່າວມານີ້ຊາວມຽມມາຖືວ່າເປັນເຈົ້າສາວທີ່ງາມສະຫງ່າ. ຄູ່ສົມລົດທີ່ແຕ່ງກາຍຖືກກັບຮີດຄອງປະເພນີ ນິຍົມນີ້ຖືວ່າເປັນຄູ່ສົມລົດທີ່ເບິ່ງແລ້ວງົດງາມທ່າມກາງຝູງຄົນ.

## ປະເພນີປີໃໝ່ (ສົງການ) ຂອງຊາວມຽນມາ

ເດືອນເມສາເປັນລະດູຮ້ອນ, ບົດກະວີຂອງຊາວມຽນມາຊື່ວ່າ "ອູບຸນຍະ" ບັນທຶກໄວ້ວ່າ: ໃນຍາມທ່ຽງເວັນຂອງເດືອນເມສາ (ຕະດູ) ໂດຍສະເພາະແມ່ນໄລຍະກາງເດືອນມາສາ, ເປັນເວລາທີ່ເງົາຂອງໂຕເອງພຽງແຕ່ 3 ບາດຕີນ, ຊຶ່ງຕ່າງຈາກເວລາໃນເດືອນອື່ນໆຄົນເຮົາຈະສາມາດເຫັນເງົາ ຂອງຕົນເອງໄກຈາກຕົວເອງເຖິງ 6 ບາດຕີນ. ສະນັ້ນ, ເດືອນເມສາເປັນເດືອນທີ່ຕາເວັນຢູ່ຊຶ່ງຫົວຫຼາຍທີ່ສຸດ. ໃນໄລຍະນີ້ນ້ຳໃນແມ່ນ້ຳລຳຄອງເລີ່ມແຫ້ງຈຶ່ງມີຄຳກ່າວຂານຂອງຊາວມຽນມາວ່າ: ຕະດູນ້ຳລົ້ງ, ກະໂສ່ງນ້ຳແລ້ງ, ເມສາສົງການມາເຖິງພື້ນດິນ ແລະ ຖະໜົນທີ່ຮ້ອນອົບເອົ້າກັບກາຍເປັນຄວາມອຸ່ມເຢັນ ດ້ວຍນ້ຳສົງການ. ດັ່ງນັ້ນ, ສົງການຈຶ່ງເປັນງານບຸນທີ່ຊ່ວຍສ້າງຄວາມສົດຊື່ນໃຫ້ກັບຊີວິດໃນຍາມຮ້ອນຂອງເດືອນເມສາ.

ຊາວມຽນມາເລີ່ມຂຶ້ນປີໃໝ່ຢູ່ໃນເດືອນເມສາ (ຕະດູ). ດັ່ງນັ້ນ, ຊາວມຽນມາສະຫຼອງປີໃໝ່ດ້ວຍປະເພນີສົງການເຊິ່ງຖືວ່າເປັນໜຶ່ງໃນປະເພນີ 12 ເດືອນ. ປະເພນີສົງການມີສີສັນງົດງາມກວ່າເທດສະການອື່ນໆເພາະຊາວມຽນມາຖືວ່າ ການສະຫຼອງບຸນສົງການເປັນເທດສະການວັນສິ້ງທ້າຍປີເກົ່າ ແລະ ຕ້ອນຮັບປີໃໝ່. ດັ່ງນັ້ນ, ວັນສົງການຈຶ່ງເປັນວັນທີ່ມີບັນຍາກາດຟົດຟື້ນມ່ວນຊື່ເປັນພິເສດ.

ສຳລັບຊາວພຸດໃນປະເທດມຽນມາຖືວ່າ ຊ່ວງເທດສະການເປັນເວລາເໝາະສົມໃນການສ້າງບຸນກຸສົນ. ສະນັ້ນ, ຊາວມຽນມາຈຶ່ງນິຍົມເຂົ້າວັດເພື່ອເຮັດບຸນກິນທານ, ຮັກສາສິນ, ຟັງທຳ ແລະ ປະກອບກິດຈະກຳຕ່າງໆທາງສາສະໜາຢ່າງເປັນຂະບວນ. ນອກຈາກນີ້ໃນໄລຍະເດືອນເມສາ ຊາວມຽນມານິຍົມຈັດງານບວດເນນ, ບວດພະໃຫ້ແກ່ລູກຊາຍ, ຈັດງານເຈາະຫູ (ບ່ອງຫູ) ແລະ ບວດຊີໃຫ້ແກ່ລູກສາວ. ໃນໄລຍະເດືອນເມສາຈະມີຂະບວນແຫ່ບວດໃຫ້ລູກຊາຍ, ລູກສາວຂອງຊາວມຽນມາຕາມຖະໜົນຫົນທາງ ແລະ ຕາມສະຖານທີ່ເຈດີຕ່າງໆຫຼາຍຂະບວນ. ສະນັ້ນ, ຫຼັງສົງການແຕ່ລະວັດຈຶ່ງເຕັມໄປດ້ວຍເນນ ແລະ ຊີຫຼາຍເປັນພິເສດ. ສົງການຢູ່ປະເທດມຽນມານອກຈາກເປັນໄລຍະເວລາແຫ່ງການສ້າງບຸນກຸສົນຂອງຊາວພຸດທົ່ວປະເທດ ແລ້ວສົງການເປັນເທດສະການສຳລັບເດັກ, ໜຸ່ມສາວ ແລະ ຄົນມັກຄວາມມ່ວນຊື່ນສະໜຸກສະໜານນຳອີກ, ເພາະວ່າສົງການເປັນໂອກາດສະແດງຄວາມເປັນອິດສະຫຼະໃນການຫຼິ້ນນ້ຳ, ຮ້ອງເພງ, ເຕັ້ນລຳຕະຫຼອດເຖິງການແຕ່ງຕົວຕາມຄວາມນິຍົມຂອງແຕ່ລະຄົນເຊິ່ງມີຄວາມປົນເປກັນລະຫວ່າງຜູ້ທີ່ມີຄ່ານິຍົມແບບເກົ່າ ແລະ ໃໝ່.

ຊາວມຽນມາມີຄຳເອີ້ນງານສົງການຢູ່ຫຼາຍຄຳເຊັ່ນ: ຕະຈັງ, ບະແວ, ຕະຈັງບະແວດ໋. ຕະຈັງ ມີຄວາມໝາຍວ່າໄລຍະເວລາເຄື່ອນຈາກປີເກົ່າສູ່ປີໃໝ່, ບະແວ ຫຼື ບະແວດ໋ແປວ່າເທດສະການ, ຄຳວ່າ "ເໜ່, ຕະເບ" ແປວ່າ "ພິທີນ້ຳ". ຊາວມຽນມານິຍົມເອີ້ນສັ້ນໆວ່າ ເໜ່ບະແວດ໋ ໃນຄວາມໝາຍທີ່ວ່າ "ເທດສະການນ້ຳ" ຕາມຕຳນານຂອງມຽນມາກ່າວວ່າເທດກຳເນີດວັນສົງການແມ່ນ

ຍ້ອນທ້າວມະຫາພົມຕອບໂຕ້ບັນຫາປິດສະໜາບໍ່ແພ້ພະອິນ. ທ້າວມະຫາພົມຈຶ່ງຕັດຫົວຕົນເອງ ເພື່ອສະແດງເຖິງສັດຈະທີ່ໄດ້ຕົກລົງສັນຍາວ່າໄວ້ກັບພະອິນ. ເນື່ອງຈາກວ່າພະອິນຢ້ານວ່າຫົວຂອງ ທ້າວມະຫາພົມ ຈະຕົກລົງໃສ່ພື້ນໂລກ ພາໃຫ້ເກີດໄພອັນຕະລາຍຕໍ່ໂລກມະນຸດ ພະອິນຈຶ່ງເອົາຫົວເກັບໄວ້ ແລະ ກຳນົດໃຫ້ນາງຟ້າ 7 ອົງຜັດປ່ຽນກັນມາຮັກສາ ແລະ ຫົດສົງຫົວຂອງທ້າວມະຫາພົມທຸກໆປີ. ນອກຈາກນີ້ ຊາວມຽນມາຍັງເຊື່ອວ່າ ໄລຍະສົງການສາມວັນພະອິນຈະລົງມາຢາມໂລກມະນຸດ ເວລາທີ່ພະອິນລົງມາໂລກມະນຸດນັ້ນ, ພະອິນຈຶ່ງຖືເອົາບັນຊີຄຳ ແລະ ບັນຊີໜັງໜາມາພ້ອມເພື່ອບັນທຶກ ຄວາມດີຄວາມ ຊົ່ວຂອງຄົນ. ຫາກຜູ້ໃດ ສ້າງຄຸນຄວາມດີເອົາໄວ້ໃນຮອບປີຊື່ກໍຈະປາກົດໄວ້ໃນບັນຊີ ຄຳ, ຫາກຜູ້ໃດສ້າງແຕ່ຄວາມບໍ່ດີເອົາໄວ້ ຊື່ກໍບັນທຶກເອົາໄວ້ໃນບັນຊີໜັງໜາ. ນອກຈາກນີ້ຊາວມຽນມາ ຍັງເຊື່ອກັນອີກວ່າ ການສະເດັດລົງມາຢາມພື້ນໂລກຂອງພະອິນເປັນນິມິດບົ່ງບອກສະພາບດິນຟ້າອາ ກາດ ແລະ ຄຳທຳນາຍປາກົດການທາງສັງຄົມນຳອີກ. ຕົວຢ່າງ: ຖ້າພະອິນຖືຫອກລົງມາຊາວມຽນ ມາຖືວ່າເປັນນິມິດບໍ່ດີອາດຈະເກີດໄພສົງຄາມ ຫຼື ມີການຜິດຖຽງກັນບໍ່ຖືກຕ້ອງປອງດອງກັນຫາກພະ ອິນຖືການ້ຳ, ໄມ້ຄ້ອນເທົ້າ ຫຼື ໂຄມໄຟລົງມາຖືວ່າເປັນນິມິດທີ່ດີ (ຜົນຜະລິດອຸດົມສົມບູນ). ຫາກພະອິນ ຂີ່ນາກລົງມາຝົນຈະຕົກແຮງ, ຖ້າຂີ່ຄຸດລົງມາຈະເກີດມີລົມແຮງ ແລະ ມີເລື່ອງຫຍຸ້ງຍາກເກີດຂຶ້ນ. ໝາຍຄວາມວ່າຊາວມຽນມາໃຫ້ຄວາມສຳຄັນແກ່ພະອິນ ເປັນເທບພະເຈົ້າແຫ່ງສົງການເຊິ່ງຕ່າງ ຈາກຊາວລາວເຮົາທີ່ໃຫ້ຄວາມສຳຄັນຕໍ່ນາງສົງການປະຈຳປີ.

ປະເທດມຽນມາຈະມີດອກໄມ້ປະຈຳສົງການ 7 ຊະນິດ. ຊາວມຽນມາຈະເອີ້ນລວມກັນວ່າ ດອກສົງ ການແຕ່ດອກໄມ້ທີ່ຫາໄດ້ງ່າຍທີ່ສຸດແມ່ນດອກປະດູ. ໃນໄລຍະສົງການຊາວມຽນມານິຍົມນຳເອົາດອກ ປະດູໄປບູຊາພະ ແລະ ນຳມາແຊມຜົມ. ດັ່ງນັ້ນ, ໃນໄລຍະສົງການດອກປະດູຈະມີລາຄາດີຊາວບ້ານກໍມັກ ຈັບຈ່ອງດອກປະດູໄວ້ເພື່ອຕັດດອກມັນຂາຍໃນໄລຍະສົງການ. ດັ່ງນັ້ນ, ດອກປະດູຈຶ່ງເປັນດອກໄມ້ແຫ່ງ ເທດສະການ, ມັນຊ່ວຍຕື່ມສີສັນສວຍງາມໃຫ້ແກ່ຊີວິດໃນໄລຍະຕົ້ນລະດູຮ້ອນ. ສ່ວນເຂົ້າໜົມປະຈຳສົງ ການຂອງຊາວມຽນມາແມ່ນເຂົ້າຕົ້ມຊາວມຽນມາເອີ້ນເຂົ້າຕົ້ມວ່າ "ເຂົ້າລອຍນ້ຳ". ໃນຍາມສົງການ ຊາວມຽນມາມັກນິຍົມເຮັດເຂົ້າຕົ້ມຫຼາຍ ເພື່ອນຳໄປແຈກຢາຍໃຫ້ເພື່ອນມິດ. ສຳລັບຊາວມອນໃນ ມຽນມານິຍົມເຮັດເຂົ້າແຊເຊິ່ງມີຄວາມໝາຍວ່າ: "ເຂົ້າສົງການ".

ການຫຼິ້ນນ້ຳສົງການຢູ່ມຽນມາມີຄວາມແຕກຕ່າງກັນຄື: ການສົງນ້ຳທີ່ສຸພາບທີ່ສຸດແມ່ນ ໃຊ້ໃບຫ້ວ້າຈຸ່ມນ້ຳຈາກຂັນເງິນແລ້ວຍົກມາພົມລົງບ່າໄຫຼ. ໃບຫ້ວ້າເປັນໃບໄມ້ທີ່ເປັນມຸງຄຸນຊາວມຽນມາ ເອີ້ນໃບຫ້ວ້າວ່າ: "ອ່ອງຕາປໍເຫຍ່" ມີຄວາມໝາຍວ່າໃບເງິນໃບຄຳ. ດັ່ງນັ້ນ ຊາວມຽນມາຈຶ່ງນິຍົມກັນ ເອົາບູຊາພະ, ປະດັບເຮືອນຊານ, ຮ້ານຄ້າ ແລະ ພາຫະນະຕ່າງໆ. ບາງຄົນກໍມັກເອົາໃບຫ້ວ້າຕິດໂຕໄປນຳ ເພາະຖືວ່າເປັນມຸງຄຸນແກ່ຜູ້ຮັກສາ. ການຫົດນ້ຳທີ່ເບິ່ງສຸພາບອີກແບບໜຶ່ງຄືການນຳນ້ຳມາຫົດລົງທີ່ ບ່າໄຫຼ. ສ່ວນການຫຼິ້ນນ້ຳທີ່ເນັ້ນຄວາມສະນຸກສະໜານເຊັ່ນ: ສາດນ້ຳໃສ່ກັນ, ໃຊ້ທໍ່ຢາງສີດໃສ່ກັນ,

ໃສ່ຖົງຖົ້ມໃສ່ກັນ ກໍເຄີຍມີແຕ່ທາງການມຽນມາໄດ້ສັ່ງຫ້າມເດັດຂາດບໍ່ໃຫ້ຫຼິ້ນນ້ຳຜິດປະເພນີ, ຖ້າຜູ້ໃດລະເມີດຜ່າຝືນ ຈະມີໂທດຢ່າງຮ້າຍແຮງເຊັ່ນ: ຖ້າຖືກຈັບໄດ້ວ່າມີຖົງນ້ຳຈະຖືກຈຳຄຸກ 1 ປີຫາກສາດນ້ຳໃສ່ຜູ້ອື່ນມີໂທດຈຳຄຸກ 3 ປີ ແລະ ເປັນຜູ້ຈຳໜ່າຍຖົງນ້ຳຈະມີໂທດຈຳຄຸກເຖິງ 5 ປີ. ຄຳສັ່ງຂໍ້ຫ້າມນີ້ໄດ້ຖືກປະກາດທາງວິທະຍຸກະຈາຍສຽງ ແລະ ໂທລະພາບ. ຜ່ານມາກໍມີຜູ້ລະເມີດທາງການມຽນມາກໍໃຫ້ປະຕິບັດໂທດແທ້ ແລະ ປະກາດປະຈານຜູ້ລະເມີດທາງໜັງສືພິມບອກຊື່ພໍ່, ຊື່ແມ່ຜູ້ກະທຳຜິດໃຫ້ຮູ້ກັນທົ່ວປະເທດ.

ບັນຍາກາດສົງການໃນມຽນມາມີຄວາມສະໜຸກສະໜານ, ໂດຍສະເພາະແມ່ນເມືອງ ຢາງກຸ້ງ ແລະ ມັນທະເລ ຕາມຖະໜົນມີບ່ອນສຳລັບການສະແດງດົນຕີ, ຮ້ອງລຳທຳເພງ ແລະ ຫົດນ້ຳ. ຕາມໜ້າກະຊວງທະບວງກົມຈະສ້າງບ່ອນໃຫ້ປະຊາຊົນຫຼິ້ນນ້ຳ ແລະ ຊົມການສະແດງ. ໂທລະທັດຈະກະຈາຍພາບ ແລະ ເພງສົງການສົ່ງສຽງດັງຄຶກຄື້ນຕະຫຼອດມື້. ການຮ້ອງລຳທຳເພງບ່ອນບັນເທີງຈະມີຢູ່ທຸກເສັ້ນທາງ. ການສີດນ້ຳໃສ່ຜູ້ຄົນໄປມາສ່ວນຫຼາຍຈະເປັນໄວໜຸ່ມ ແລະ ມັກຂີ່ລົດໄປເປັນໝູ່ຄະນະພໍໄປເຖິງບ່ອນຕັ້ນລຳ ກໍພາກັນຟ້ອນ ຫຼື ເຕັ້ນລຳດ້ວຍຫຼາຍຮູບຫຼາຍລີລາ. ສ່ວນການສະແດງເທິງເວທີສ່ວນຫຼາຍ ຈະເປັນນັກຮ້ອງ ແລະ ດາລາພາບພະຍົນໜູນວຽນກັນຮ້ອງເພງ. ສ່ວນຫຼາຍເປັນເພງສະຕິງທີ່ມີຈັງຫວະ ສະຫຼັບດ້ວຍການຟ້ອນຂອງໜຸ່ມສາວ ທີ່ແຕ່ງຕົວດ້ວຍເສື້ອຜ້າທີ່ມີສີສັນ. ໄວໜຸ່ມມັກນຸ່ງໂສ້ງຍີນ, ເສື້ອເຊີດ ແລະ ໃສ່ແວ່ນຕາດຳ. ຢູ່ມຽນມາຈະມີສິດເສລີໃນການຫົດນ້ຳແຂກຄົນແຕ່ກໍຍົກເວັ້ນການສາດນ້ຳໃສ່ພະສົງ, ແມ່ຊີ,ໂຍຄີ ແລະ ຜູ້ຖືອຸໂບສົດສິນ.

ຫຼັງຈາກຫຼິ້ນນ້ຳ 3 ມື້ກໍຈະເປັນວັນຂຶ້ນປີໃໝ່ ຊາວມຽນມາຈະພາກັນໄປຖວາຍດອກໄມ້ບູຊາ ແລະ ສົງນ້ຳໃຫ້ແກ່ພະພຸດທະຮູບ, ເຈດີຕ່າງໆ ເພື່ອຂໍພອນຈາກສິ່ງສັກສິດ ແລະ ກໍພາກັນໄປຟັງທຳຢູ່ໂຮງທຳກາງບ້ານ, ຖວາຍອາຫານແກ່ພະສົງ, ຈັດງານໄຫວ້ຄູບາອາຈານ, ສະຜົມ ແລະ ຕັດເລັບໃຫ້ແກ່ຜູ້ເຖົ້າຜູ້ແກ່ຢູ່ທີ່ເຮືອນ ແລະ ບ້ານພັກຄົນຊະລາ, ພ້ອມທັງມອບເຄື່ອງນຸ່ງຫົ່ມໃໝ່ໃຫ້ແກ່ຜູ້ທີ່ຕົບເຄົ້າລົບພ້ອມທັງເຮັດທານໄຫວ້ຊີວິດງົວ, ຄວາຍ, ປ່ອຍນົກ, ປ່ອຍປາ. ຢູ່ຕາມເຈດີ ແລະ ວັດທີ່ສຳຄັນຈະໜາແໜ້ນໄປດ້ວຍຜູ້ຄົນນັບແຕ່ເຊົ້າເທົ້າຄ່ຳ. ສຳລັບຢູ່ເມືອງຢາງກຸ້ງ ຜູ້ຄົນນິຍົມໄປໄຫວ້ຂໍພອນທີ່ເຈດີຊະເວດາກ່ອງ, ມະຫາວິໄຊເຈດີ, ເຈດີກະບາເອ້, ເຈດີສຸເທຣ່ພຣະເຊົ້າທັດຈີ, ພະງາທັດຈີ, ພະໂພທັດຈີ ແລະ ວັດແມລະນ.

ສິນຄ້າທີ່ຂາຍດີໃນຊ່ວງສົງການມັກຈະເປັນຜ້າເຊັດຕົວ, ສ່ວນເສື້ອຜ້າຂາຍດີແມ່ນເສື້ອເຊີດມີລາຍ ແລະ ໂສ້ງຂາຍາວຈາກຕ່າງປເທດໂດຍສະເພາະຈາກໄທ, ຈີນ ແລະ ສົງກະໂປ. ສຳລັບຊຸດສະຕີແມ່ນນິຍົມຜ້າທີ່ຕ່ຳຈາກເມືອງອະມະລະຢຸລະ, ສີເຫຼືອງຈະຂາຍດີກວ່າສີອື່ນ, ອຸປະກອນການຫຼິ້ນນ້ຳ ແມ່ນເຮັດດ້ວຍປລາຊະຕິກເຊັ່ນ: ກະບັ້ງສີດນ້ຳ, ປືນສີດນ້ຳ, ຂັນ ແລະ ແວ່ນຕາກໍຂາຍດີ. ກະແຊັດເພງສົງການກໍນັບວ່າຂາຍດີເປັນພິເສດ, ໂດຍສະເພາະແມ່ນເພງຕູໂປະ, ເພງໂຫຍ່ມະຍະຖືວ່າເປັນເພງສາກົນ

ยอดนิยมของชาวมรมมา. ส่วนสินค้าบริโภคเช่น: เครื่องดื่มประเพดเบย, น้ำอัดลม และ น้ำหวานขายดีจับขาดตะหลาดลาคาก็สูงขึ้นกว่าเดิมประมาน 50-100 เปิเซ็น. นอกจากนี้เอ้ำ, น้ำมัน, เกือ และ สะบูก็ขายดีแม่ค้าต้องซื้อไว้ก่อนอันสิงการประมาน 5-6 มื้ เพาะย้านว่ามันจะขาดตะหลาด.

เถิงแม่นว่างานบุนสิงการจะยังคิงเป็นประเพนิสำคันต่ชิวิดชาวพุดมรมมาก็ตามแต่ คุนค่าเดิมเพื่อการเธัดบุนกุสิน, ดวามกะตันยูตะหลอดธอดการซำละสิ่งชั่วร้ายในไลยะเหด สะการถืกท้าทายด้อยค่านิยม เม้นการบริโพกที่ดึงคินล้นใหม่ไปสู่การปิดป่อยอาลีมย่างเสลิ. ดวามเชื่อที่ว่าพะอินจะลิงมาการอดสอบเบิ่งพืดติกำของมะนุดจะบ่มีอิดทิพินดีแต่เก่า. นอกจากนี้การม่อนชื่นล้นเลิงในไลยะสิงการ ยังสะท้อนให้เห็นดวามต้องการของคินรุ้นใหม่ ที่สะแหวงหาหางเลือกของตินจึ่งปุงแต่งให้สิงการในมรมมา เป็นเหดสะการที่มีสีสัน และ เสลิหลายกว่างานบุนสิงการในอาดิด.

แปและ ธรุบธรุง โดย: บ. คำผุย พินลือชา

ໂຄງການພັດທະນາການສຶກສາຂັ້ນພື້ນຖານ (BESDP)
ສະໜັບສະໜູນໂດຍ: ທະນາຄານພັດທະນາອາຊີ (ADB)
ພິມທີ່ໂຮງພິມ: Eastern Printing Public Co. Ltd (ປະເທດໄທ)
ທະບຽນພິມ ເລກທີ: ຕາມທບ 100ພຈ22062010
ຂະໜາດ 18 x 25 ຊມ ຈຳນວນ 7.400 ຫົວ
ສະຫງວນລິຂະສິດ